

# ບົດລາຍງານຄວາມຄືບໜ້າ ປີ 2018

## ຂອບການຮ່ວມມືລະຫວ່າງ
## ສປປ ລາວ ແລະ ອົງການສະຫະປະຊາຊາດ ໄລຍະ 2017-2021
## ຄູ່ຮ່ວມມືເພື່ອການພັດທະນາແບບຍືນຍົງ

ອົງການສະຫະປະຊາຊາດ ປະຈຳ ສປປ ລາວ, 2019



# ສາລະບານ


ພາກສະເໜີ ....................................................................................1
1. ຊີວິດການເປັນຢູ່ທີ່ດີ / 2. ການປົກປ້ອງທາງສັງຄົມ ..................4
3. ການປ່ຽນແປງດິນຟ້າອາກາດ, ການຄຸ້ມຄອງໄພພິບັດ ແລະ ສິ່ງແວດລ້ອມ ....................................................................11
4. ການສຶກສາ ..................................................................................19
5. ສຸຂະພາບ, ນ້ຳໃຊ້ ແລະ ສຸຂາພິບານ .......................................27
6. ການຄ້ຳປະກັນສະບຽງອາຫານ ແລະ ໂພສະນາການ ...............37
7. ການພັດທະນາສະຖາບັນ ........................................................45
8. ການເຂົ້າເຖິງຄວາມຍຸຕິທຳ .......................................................53
ການສື່ສານຮ່ວມ ............................................................................58
ການປະຕິບັດງານ ..........................................................................63
ພາບລວມດ້ານການເງິນໂດຍປະມານ .........................................65

# ຄຳສັບຫຍໍ້

| | |
|---|---|
| ASEAN | ສະມາຄົມປະຊາຊາດແຫ່ງອາຊີຕາເວັນອອກສ່ຽງໃຕ້ |
| GIZ | ອົງການຮ່ວມມືການພັດທະນາຈາກປະເທດເຢຍລະມັນ |
| IFRC | ສະຫະພັນກາແດງສາກົນ – ສະມາຊິກອົງເດືອນແດງສາກົນ |
| IMAM | ການຄຸ້ມຄອງແບບປະສົມປະສານຕໍ່ກໍລະນີຂາດສານອາຫານຮຸນແຮງ |
| INGO | ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ |
| ISO | ອົງການມາດຕະຖານສາກົນ |
| MDGs | ເປົ້າໝາຍສະຫັດສະຫວັດເພື່ອການພັດທະນາ |
| NSEDP | ແຜນພັດທະນາເສດຖະກິດ – ສັງຄົມແຫ່ງຊາດ |
| PCB | ໂພລີຄໍຣີເນດ ໄບຟີນິວ (ສານພີຊີບີ) |
| PDNA | ການປະເມີນຄວາມຕ້ອງການຫຼັງເກີດໄພພິບັດ |
| REDD | ແຜນງານການຮ່ວມມືຂອງອົງການປະຊາຊາດ ເພື່ອຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວຈາກການທຳລາຍປ່າໄມ້ ແລະ ປ່າໄມ້ຊຸດໂຊມ ໃນປະເທດກຳລັງພັດທະນາ |
| RMNCH | ສຸຂະພາບຈະເລີນພັນ, ແມ່, ເດັກເກີດໃໝ່ ແລະ ເດັກນ້ອຍ |
| SDGs | ເປົ້າໝາຍການພັດທະນາແບບຍືນຍົງ |
| SME | ວິສາຫະກິດຂະໜາດນ້ອຍ ແລະ ກາງ |
| TVET | ອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ |
| UNFCCC | ສົນທິສັນຍາສາກົນວ່າດ້ວຍການປ່ຽນແປງດິນຟ້າອາກາດ ແຫ່ງສະຫະປະຊາຊາດ |
| UNISDR | ຍຸດທະສາດສາກົນວ່າດ້ວຍການຫຼຸດຜ່ອນໄພພິບັດ ແຫ່ງສະຫະປະຊາຊາດ |
| UXO | ລະເບີດບໍ່ທັນແຕກ |
| WASH | ນ້ຳໃຊ້, ສຸຂາພິບານ ແລະ ສຸຂະອະນາໄມ |

**ບັນດາອົງການຈັດຕັ້ງພາຍໃນລະບົບສະຫະປະຊາຊາດຢູ່ ສປປ ລາວ**

| | |
|---|---|
| FAO | ອົງການອາຫານ ແລະ ການກະເສດແຫ່ງສະຫະປະຊາຊາດ |
| IAEA | ອົງການພະລັງງານປະລາມະນູນສາກົນ |
| IFAD | ກອງທຶນສາກົນເພື່ອການພັດທະນາກະສິກຳ |
| ILO | ອົງການແຮງງານສາກົນ |
| ITC | ສູນການຄ້າສາກົນ |
| IOM | ອົງການສາກົນເພື່ອການເຄື່ອນຍ້າຍຖິ່ນຖານ |
| UN-Habitat | ອົງການສະຫະປະຊາຊາດດ້ານເຄຫາສະຖານ |
| UN Women | ອົງການສະຫະປະຊາຊາດເພື່ອສົ່ງເສີມບົດບາດຍິງ – ຊາຍ ແລະ ຄວາມກ້າວໜ້າຂອງແມ່ຍິງ |
| UNAIDS | ແຜນງານສະຫະປະຊາຊາດກ່ຽວກັບໂລກເອດສ / ເຮັດຈໄອວີ |
| UNCDF | ກອງທຶນສະຫະປະຊາຊາດເພື່ອການພັດທະນາ |
| UNCITRAL | ອົງການກົດໝາຍການຄ້າສາກົນແຫ່ງສະຫະປະຊາຊາດ |
| UNCTAD | ອົງການສະຫະປະຊາຊາດກ່ຽວກັບການຄ້າ ແລະ ການພັດທະນາ |
| UNDP | ອົງການສະຫະປະຊາຊາດເພື່ອການພັດທະນາ |
| UNEP | ອົງການສະຫະປະຊາຊາດເພື່ອສິ່ງແວດລ້ອມ |
| UNESCO | ອົງການການສຶກສາ, ວິທະຍາສາດ ແລະ ວັດທະນະທຳແຫ່ງສະຫະປະຊາຊາດ |
| UNFPA | ອົງການສະຫະປະຊາຊາດ ກອງທຶນສຳລັບປະຊາກອນ |
| UNHCR | ອົງການຂ້າຫຼວງໃຫຍ່ຂອງສະຫະປະຊາຊາດເພື່ອຜູ້ລີ້ໄພ |
| UNICEF | ອົງການສະຫະປະຊາຊາດ ກອງທຶນສຳລັບເດັກ |
| UNIDO | ອົງການສະຫະປະຊາຊາດເພື່ອການພັດທະນາອຸດສາຫະກຳ |
| UNODC | ອົງການສະຫະປະຊາຊາດເພື່ອຕ້ານຢາເສບຕິດ ແລະ ອາຊະຍາກຳ |
| UNOPS | ຫ້ອງການອົງການສະຫະປະຊາຊາດ ເພື່ອການບໍລິການໂຄງການ |
| UNV | ອາສາສະໝັກຂອງສະຫະປະຊາຊາດ |
| WFP | ອົງການອາຫານໂລກ |
| WHO | ອົງການອະນາໄມໂລກ |

ນອກຈາກນີ້ ທະນາຄານພັດທະນາອາຊີ (ADB), ອົງການກອງທຶນການເງິນສາກົນ (IMF) ແລະ ທະນາຄານໂລກ ກໍມີຫ້ອງການປະຈຳຢູ່ ສປປ ລາວ.



# ພາກສະເໜີ





ສປປ ລາວ ໄດ້ບັນລຸຄາດໝາຍການພັດທະນາທີ່ສຳຄັນຫຼາຍອັນ ໃນປີ 2018. ສປປ ລາວ ສາມາດບັນລຸເກນມາດຕະຖານຂັ້ນຕ່ຳ ກ່ຽວກັບ ຍອດລາຍຮັບແຫ່ງຊາດຕໍ່ຫົວຄົນ (GNI) ແລະ ດັດຊະນີຊັບສິນມະນຸດ (HAI) ໂດຍການທົບທວນປະເມີນຈາກ ຄະນະກຳມະການວ່າດ້ວຍນະໂຍບາຍເພື່ອການພັດທະນາ ໃນວັນທີ 12-16 ມີນາ ເຮັດໃຫ້ມີເງື່ອນໄຂຄົບຖ້ວນເປັນຄັ້ງທຳອິດ ໃນການຫຼຸດພົ້ນອອກຈາກສະຖານະພາບຂອງການເປັນປະເທດ ດ້ອຍພັດທະນາ. ສປປ ລາວ ເກືອບຜ່ານ ເກນມາດຕະຖານດັດຊະນີຄວາມອ່ອນໄຫວທາງເສດຖະກິດ ເຊິ່ງເປັນເງື່ອນໄຂທີສາມ. ແຕ່ເຖິງຢ່າງໃດກໍຕາມ, ເພື່ອໃຫ້ສາມາດຫຼຸດພົ້ນອອກຈາກ ສະຖານະພາບປະເທດດ້ອຍພັດທະນາ, ປະເທດໃດໜຶ່ງຕ້ອງບັນລຸໃຫ້ໄດ້ 2 ໃນ 3 ເກນມາດຕະຖານຂັ້ນຕ່ຳ ຂອງການທົບທວນທຸກໆ 3 ປີ 2 ຄັ້ງຕິດຕໍ່ກັນ. ສະນັ້ນ, ຖ້າຫາກ ສປປ ລາວ ສາມາດຮັກສາຂີດລະດັບການພັດທະນາໄວ້ໄດ້ ຈົນຮອດການທົບທວນໃນປີ 2021 ແລ້ວ, ສປປ ລາວ ກໍຈະສາມາດຫຼຸດພົ້ນອອກຈາກ ສະຖານະພາບປະເທດດ້ອຍພັດທະນາຢ່າງສົມບູນ ໃນປີ 2024 ຫຼັງຈາກ ຫຼັງຈາກສິ້ນສຸດໄລຍະຂ້າມຜ່ານ 3 ປີ.

ເນື່ອງຈາກມາຮອດໄລຍະກາງຂອງວົງຈອນການວາງແຜນລະດັບ ຊາດ, ລັດຖະບານ ໄດ້ເຮັດທົບທວນກາງສະໄໝ ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ – ສັງຄົມແຫ່ງຊາດ ຄັ້ງທີ VIII (2016-2020) ແລະ ແຜນການຂອງຫຼາຍຂະແໜງການ. ລັດຖະບານ ໄດ້ໃຫ້ຄວາມໄວ້ວາງໃຈ ແລະ ຂໍໃຫ້ ອົງການ ສປຊ ສະໜັບສະໜູນ ແລະ ປະສານງານກັບຄູ່ຮ່ວມພັດທະນາອື່ນໆ ໃນການທົບທວນກາງສະໄໝນີ້. ໂດຍອີງໃສ່ຜົນໄດ້ຮັບຂອງ ໜ່ວຍງານວິຊາການຫຼັກ, ການທົບທວນກາງສະໄໝ ໄດ້ກຳນົດເອົາຜົນສຳເລັດທີ່ບັນລຸໄດ້ ນັບຕັ້ງແຕ່ປີ 2016 ແລະ ໃຫ້ຄຳແນະນຳສຳລັບທິດທາງໃນຕໍ່ໜ້າ ເຊິ່ງເປັນພື້ນຖານໃນການປຶກສາຫາລືດ້ານນະໂຍບາຍໃນລະດັບສູງ ລະຫວ່າງ ລັດຖະບານລາວ ແລະ ຄູ່ຮ່ວມພັດທະນາ ທີ່ກອງປະຊຸມໂຕະມົນ ລະຫວ່າງວັນທີ 4-5 ທັນວາ ແລະ ຍັງຖືເປັນຈຸດເລີ່ມຕົ້ນ ໃນການສ້າງແຜນພັດທະນາເສດຖະກິດ – ສັງຄົມແຫ່ງຊາດ ຄັ້ງທີ IX (2021-2025), ເຊິ່ງລັດຖະບານກໍໄດ້ຂໍໃຫ້ ອົງການ ສປຊ ຊ່ວຍເຫຼືອທາງດ້ານວິຊາການ ໃນການສ້າງແຜນດັ່ງກ່າວ.

ສປປ ລາວ ໄດ້ໃຫ້ຄຳໝາຍໝັ້ນອັນສູງ ເພື່ອສືບຕໍ່ຄວາມພະຍາຍາມໃນການຜັນຂະຫຍາຍ ເປົ້າໝາຍການພັດທະນາແບບຍືນຍົງ ໃຫ້ເຂົ້າກັບສະພາບຕົວຈິງ ເຊິ່ງ ສປປ ລາວ ໄດ້ນຳສະເໜີບົດລາຍງານແຫ່ງຊາດແບບສະໝັກໃຈ ທີ່ເວທີການເມືອງລະດັບສູງຂອງອົງການ ສປຊ ໃນເດືອນກໍລະກົດ ທີ່ນະຄອນນິວຢອກ. ນອກຈາກນັ້ນ ລັດຖະບານກໍຄາດວ່າຈະຮັບຮອງເອົາ ລາຍການຕົວຊີ້ວັດທີ່ຕິດພັນ ກັບການພັດທະນາແບບຍືນຍົງໃນປີທີ່ຈະມາຮອດນີ້. ສະນັ້ນ ປີ 2019 ຈະເປັນປີທີ່ມີຄວາມສຳຄັນຫຼາຍ ໃນການສົ່ງ ເສີມການ ເຊື່ອມສານເປົ້າໝາຍການພັດທະນາແບບຍືນຍົງ. ນອກຈາກການສ້າງແຜນພັດທະນາເສດຖະກິດ – ສັງຄົມ ແຫ່ງຊາດ ຄັ້ງທີ IX ແລ້ວ, ຫຼາຍພາກ ສ່ວນກໍກຳລັງລິເລີ່ມ ສ້າງຍຸດທະສາດຂະແໜງການຂອງຕົນເອງ ເພື່ອສະໜັບສະໜູນການວາງແຜນແຫ່ງຊາດໃນໄລຍະຕໍ່ໄປ.

ການສຳຫຼວດດັດຊະນີໝາຍສັງຄົມລາວ ຄັ້ງທີ II ຖືເປັນແຫຼ່ງຂໍ້ມູນຫຼັກ ໃນການພັດທະນາເອກະສານຕ່າງໆ ທີ່ໄດ້ເວົ້າມາໃນທາງເທິງນັ້ນ. ຜົນຂອງການສຳຫຼວດດັ່ງກ່າວ ໄດ້ສະແດງໃຫ້ເຫັນເຖິງ ຄວາມຄືບໜ້າອັນສຳຄັນ ທີ່ສາມາດບັນລຸໄດ້ ໃນຫຼາຍຂົງເຂດຕິດພັນກັບການເປັນຢູ່ທີ່ດີ ເຊັ່ນ: ອັດຕາການຕາຍຂອງເດັກ, ເດັກທີ່ມີຮ່າງກາຍເຕ້ຍ, ການເກີດລູກກັບແພດທີ່ຊຳນານ, ນ້ຳສະອາດ ແລະ ສຸຂາພິບານ, ການເຂົ້າຮຽນໃນຊັ້ນປະຖົມ ແລະ ການຫຼຸດຜ່ອນການນຳໃຊ້ຄວາມຮຸນແຮງຕໍ່ກັບເດັກນ້ອຍ. ແຕ່ເຖິງຢ່າງໃດກໍຕາມ ມັນກໍຍັງມີຄວາມແຕກໂຕນກັນຢູ່ ລະຫວ່າງຄົວເຮືອນທີ່ຕັ້ງຢູ່ໃນເຂດພູມສັນຖານທີ່ຕ່າງກັນ, ລະຫວ່າງຄົວເຮືອນໃນເຂດຊົນນະບົດ ແລະ ຕົວເມືອງ, ລະຫວ່າງຄົວເຮືອນທີ່ລະດັບຄວາມຮັ່ງມີ ແລະ ລະດັບການສຶກສາຂອງແມ່ແຕກຕ່າງກັນ ແລະ ລະຫວ່າງຊົນເຜົ່າທີ່ແຕກຕ່າງກັນ.

ເນື່ອງຈາກການສ້າງລັດແຫ່ງກົດໝາຍທີ່ເຂັ້ມແຂງ ເປັນໜຶ່ງໃນວຽກງານບູລິມະສິດແຫ່ງຊາດ, ສະພາແຫ່ງຊາດໄດ້ມີບົດບາດສຳຄັນທີ່ເພີ່ມຂຶ້ນ ໃນການເສີມຂະຫຍາຍ ຄວາມຮັບຜິດຊອບຂອງລັດຖະບານລວມທັງລັດວິສາຫະກິດຕ່າງໆ. ລັດຖະບານລາວ ຍັງຮັກສາຄຳໝາຍໝັ້ນ ໃນການສົ່ງເສີມຄວາມໂປ່ງໃສ ແລະ ຕໍ່ສູ້ກັບບັນຫາການສໍ້ລາດບັງຫຼວງ.

ລັດຖະບານລາວ ຮ່ວມກັບ ອົງການ ສປຊ, ສະຫະພາບເອີຣົບ ແລະ ສະຖານທູດອົດສະຕຣາລີ ໄດ້ສະເຫຼີມສະຫຼອງ ຖະແຫຼງການສາກົນວ່າດ້ວຍສິດທິມະນຸດ ຄົບຮອບ 70 ປີ ໃນວັນທີ 10 ທັນວາ 2018. ໃນປີ 2018, ສປປ ລາວ ໄດ້ຍື່ນບົດລາຍງານຫຼາຍອັນໃຫ້ກັບ 3 ສົນທິສັນຍາຫຼັກດ້ານສິດທິມະນຸດ ແລະ ມີການປະສານງານ

ຮ່ວມກັບ 3 ຄະນະກຳມະການ ເຊັ່ນ: ຄະນະກຳ ມະການວ່າດ້ວຍສິດທິພົນລະເມືອງ ແລະ ສິດທິທາງການເມືອງ ໃນເດືອນມິຖຸນາ, ຄະນະກຳມະການວ່າດ້ວຍສິດທິເດັກ ໃນເດືອນກັນຍາ ແລະ ຄະນະກຳມາການວ່າດ້ວຍການລຶບລ້າງທຸກຮູບການຈຳແນກຕໍ່ແມ່ຍິງ ໃນເດືອນກັນຍາ ເຊັ່ນດຽວກັນ.

ຜູ້ກວດກາລາຍງານພິເສດແຫ່ງສະຫະປະຊາຊາດ ວ່າດ້ວຍການຂາຍ ແລະ ການຂູດຮີດທາງເພດເດັກນ້ອຍ ໄດ້ມາຢ້ຽມຢາມ ສປປ ລາວ ໃນ ປີ 2017 ແລະ ໄດ້ສັງເກດເຫັນວ່າ ປະເທດລາວມີຄວາມຄືບໜ້າທີ່ດີ ຕໍ່ກັບການປົກປ້ອງເດັກ ແຕ່ກໍຍັງຕ້ອງໄດ້ສຸມຄວາມພະຍາຍາມເພີ່ມຂຶ້ນອີກ ໃນການແກ້ໄຂບັນຫາຕ່າງໆ ເຊັ່ນ: ການຄ້າຂາຍເດັກ, ການບັງຄັບແຕ່ງງານ, ການຄ້າປະເວນີ, ການລ່ວງລະເມີດທາງເພດຜ່ານສື່ອອນໄລນ໌ ແລະ ການຂູດຮີດທາງເພດເດັກ ໂດຍນັກທ່ອງທ່ຽວ. ໃນ ເດືອນມີນາ 2019, ຜູ້ກວດກາລາຍງານພິເສດແຫ່ງສະຫະປະຊາຊາດ ວ່າດ້ວຍຄວາມທຸກຍາກ ແລະ ສິດທິມະນຸດ ໄດ້ມາຢ້ຽມຢາມລາວ ແລະ ໄດ້ໃຫ້ຂໍ້ສະເໜີແນະຕ່າງໆ ໃນການລຶບລ້າງຄວາມທຸກຍາກ.

ສປປ ລາວ ໄດ້ຮັບຜົນກະທົບຢ່າງໜັກໜ່ວງຈາກບັນຫາໄພນໍ້າຖ້ວມ. ໃນລະຫວ່າງ ເດືອນກໍລະກົດ ແລະ ສິງຫາໄດ້ເກີດມີໄພນໍ້າຖ້ວມເປັນບໍລິເວນກ້ວາງໃນຫຼາຍພາກ ສົ່ງຜົນກະທົບຢ່າງໃຫຍ່ຫຼວງຕໍ່ກັບປະຊາຊົນ ແລະ ເສດຖະກິດໃນຫຼາຍແຂວງທົ່ວປະເທດ.ໃນວັນທີ 23-24 ກໍລະກົດ, ຄູກັນນໍ້າອ່າງເກັບນໍ້າ ຂອງເຂື່ອນເຊປຽນ – ເຊນໍ້ານ້ອຍ ໄດ້ແຕກ ເຊິ່ງສົ່ງຜົນໃຫ້ມີນໍ້າຖ້ວມສູ ດັ່ງທີ່ບໍ່ເຄີຍມີມາກ່ອນໃນແຂວງອັດຕະປື, ນໍ້າໄດ້ໄຫຼຖ້ວມເນື້ອທີ່ດິນປະມານ 55,000 ເຮັກຕາ ເຮັດໃຫ້ຖືກປົກຄຸມດ້ວຍດິນຕົມ. ໃນເວລາ ບໍ່ຮອດໜຶ່ງເດືອນຕໍ່ມາ ໃນວັນທີ 16-18 ສິງຫາ, ພາຍຸເຂດຮ້ອນເບບິນກາໄດ້ສ້າງຜົນກະທົບໃຫ້ກັບ ເຂດພາກເໜືອຂອງ ສປປ ລາວ. ລັດຖະບານ ໄດ້ນຳພາການປະເມີນຄວາມຕ້ອງການຫຼັງເກີດໄພພິບັດ  ເຊິ່ງໄດ້ສຳຫຼວດຄວາມເສຍຫາຍ ແລະ ຄວາມສູນເສຍຂອງຂະແໜງການຜະລິດ, ພື້ນຖານໂຄງລ່າງ, ຂະແໜງສັງຄົມ ແລະ ຕິດພັນຫຼາຍຂະແໜງການ. ຜົນຂອງການປະເມີນດັ່ງກ່າວ ໄດ້ຄາດຄະເນຄວາມເສຍຫາຍ ຢູ່ທີ່ US$ 147 ລ້ານ ແລະ ຄວາມສູນເສຍ ຢູ່ທີ່ US$ 225 ລ້ານ. ຄວາມຕ້ອງການສຳລັບການຟື້ນຟູຄືນໃນທົ່ວທຸກຂະແໜງການ ຄາດວ່າຈະຕົກຢູ່ຫຼາຍກ່ວາ US$ 520 ລ້ານ. ການປະເມີນຍັງໄດ້ກຳນົດຄວາມຕ້ອງການໃນການຟື້ນຟູຄືນຈາກໄພພິບັດ ເຊິ່ງໄດ້ເນັ້ນໃຫ້ເຫັນທິດທາງໃນຕໍ່ໜ້າ ດ້ານນະໂຍບາຍ, ດ້ານສະຖາບັນ, ດ້ານການເງິນ ແລະ ການຈັດຕັ້ງປະຕິບັດຄວາມພະຍາຍາມໃນການຟື້ນຟູຄືນ.

ການເຕີບໂຕຂອງ GDP ຄາດວ່າຈະບັນລຸໄດ້ 6.5% ໃນປີ 2018 ທຽບໃສ່ຄາດໝາຍ 7%, 6.9%ໃນປີ 2017 ແລະ 7% ໃນປີ 2016. ການເຕີບໂຕສ່ວນໃຫຍ່ແມ່ນມາຈາກຂະແໜງອຸດສາຫະກຳ ແລະ ການບໍລິການ ໂດຍສະເພາະແມ່ນການຄ້າຂາຍຍົກ ແລະ ການກໍ່ສ້າງ. ການເຕີບໂຕຂອງຂະແໜງກະສິກຳ, ຂຸດຄົ້ນບໍ່ແຮ່ ແລະ ການທ່ອງທ່ຽວ ແມ່ນບໍ່ໄດ້ຕາມທີ່ຄາດໄວ້ ເຖິງແມ່ນວ່າຈະມີການເປີດປີທ່ອງທ່ຽວລາວ 2018 ກໍຕາມ. ສິ່ງທ້າທາຍຫຼັກຂອງເສດຖະກິດລາວລວມມີ ຜະລິດຕະພາບທີ່ຕໍ່າ, ການບັງຄັບໃຊ້ກົດໝາຍທີ່ຍັງຈຳກັດ ແລະ ຊັບພະຍາກອນມະນຸດທີ່ຍັງບໍ່ທັນເຂັ້ມແຂງ ເຊິ່ງເຮັດໃຫ້ບໍ່ສາມາດຕອບສະໜອງໄດ້ຕາມຄວາມຕ້ອງການຕາມຈັງຫວະຂອງເສດຖະກິດ. ເຖິງແມ່ນວ່າຈະມີການເຕີບໂຕໂດຍລວມກໍຕາມ, ແຕ່ການແຈກຢາຍຜົນປະໂຫຍດຈາກການເຕີບໂຕດັ່ງກ່າວ ກັບມີຄວາມບໍ່ເທົ່າທຽມກັນຫຼາຍຂຶ້ນ.

ເນື່ອງຈາກບັນຫາສິ່ງທ້າທາຍໃນການເກັບລາຍຮັບ, ການສຸມໃສ່ຕອບໂຕ້ສຸກເສີນຕໍ່ກັບໄພນໍ້າຖ້ວມໃນລະຫວ່າງ ເດືອນກໍລະກົດ ແລະ ສິງຫາ ແລະ ງົບປະມານສ່ວນໃຫຍ່ແມ່ນຈັດສັນໃຫ້ກັບລາຍຈ່າຍປະຈຳເຊັ່ນ: ເງິນເດືອນພະນັກງານ ແລະ ເງິນບຳນານ, ເຮັດໃຫ້ງົບປະມານຂອງປະເທດຫຼຸດໜ້ອຍລົງ ແລະ ອົງການ IMF ກໍໄດ້ຈັດປະເພດຄວາມສ່ຽງດ້ານຄວາມຍືນຍົງຂອງໜີ້ສິນຄືນໃໝ່ໃຫ້ຢູ່ໃນລະດັບສູງ. ສິ່ງນີ້ໄດ້ສົ່ງຜົນໃຫ້ ໂຄງການລົງທຶນໃໝ່ຂອງລັດພຽງ ໜ້ອຍດຽວເທົ່ານັ້ນ ທີ່ໄດ້ຮັບອະນຸມັດ ໃນຕົ້ນປີ 2019 ໂດຍຜ່ານແຜນງານການລົງທຶນຂອງລັດ ເຊິ່ງຈະເຮັດໃຫ້ການຮ່ວມມືດ້ານການພັດທະນາກັບສາກົນ ຍິ່ງມີຄວາມສຳຄັນຫຼາຍຂຶ້ນ. ການສົ່ງອອກພະລັງງານໄຟຟ້າຈາກນໍ້າ ແລະ ແຮ່ທາດ ຄາດວ່າຈະເພີ່ມສູງຂຶ້ນ ໃນປີ 2019 ເຊິ່ງຈະເປັນ ການປະກອບສ່ວນເຮັດໃຫ້ ຊ່ອງຫວ່າງທາງດ້ານງົບປະມານມີໜ້ອຍລົງ. ການຂາດດຸນງົບປະມານ ຄາດວ່າຈະຕົກຢູ່ທີ່ ປະມານ 5.7% ຂອງ GDP ໃນປີ 2018.

ເນື່ອງຈາກເຫັນໄດ້ຄວາມສຳຄັນຂອງການປັບປຸງ ສະພາບແວດລ້ອມການເຮັດທຸລະກິດຂອງພາກເອກະຊົນ, ລັດຖະບານໄດ້ຮັບຮອງເອົາກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ ແລະ ໄດ້ສ້າງຕັ້ງຄະນະກຳມະການຄຸ້ມ ຄອງການລົງທຶນຂຶ້ນມາ ໂດຍມີທ່ານຮອງນາຍົກລັດຖະມົນຕີເປັນ ປະທານ. ນອກຈາກນັ້ນ, ກໍຍັງມີການສ້າງຫ້ອງການບໍລິການປະຕູດຽວ ພາຍໃຕ້ກົມສົ່ງເສີມການລົງທຶນ ຂອງກະຊວງແຜນການ ແລະ ການລົງທຶນ. ສິ່ງເຫຼົ່ານີ້ລ້ວນແຕ່ແມ່ນບາດກ້າວອັນສຳຄັນ ເພື່ອສົ່ງເສີມ ການພັດທະນາ ວິສາຫະກິດຂະໜາດນ້ອຍ ແລະ ກາງ ໂດຍສະເພາະ ການປັບປຸງຂັ້ນຕອນການເລີ່ມທຸລະກິດໃໝ່ໃຫ້ດີຂຶ້ນ. ເຖິງແມ່ນ ວ່າຈະມີມາດຕະການຕ່າງໆເຫຼົ່ານີ້ກໍຕາມ, ດັດຊະນີການອຳນວຍ ຄວາມສະດວກໃນການດຳເນີນທຸລະກິດ ໃນ ສປປ ລາວ ຈັດໂດຍ ທະນາຄານໂລກ ກັບຕົກລົງມາ ຈາກ ອັນດັບທີ 134 ໃນປີ 2016 ແລະ ອັນດັບທີ 141 ໃນປີ 2017 ມາເປັນອັນດັບທີ 154 ໃນປີ 2018 ຈາກທັງໝົດ 190 ປະເທດ.

ຄ້າຍໆກັບປີຜ່ານໆມາ, ໃນປີ 2018 ອົງການຈັດຕັ້ງໃນລະບົບ ສປຊ ລວມທັງຫ້ອງການປະຈຳພາກພື້ນ   ແລະ ສຳນັກງານໃຫຍ່ ໄດ້ນຳໃຊ້ງົບປະມານລວມກັນທັງໝົດ ປະມານ US$ 70 ລ້ານ ເຂົ້າໃນການຈັດຕັ້ງປະຕິບັດແຜນງານ. ການສະໜັບສະໜູນຂອງຄູ່ຮ່ວມພັດທະນາພາຍໃນປະເທດ ແລະ ສາກົນ ເຊັ່ນ: ອົດສະຕຣາລີ, ການາດາ, ຈີນ, ສະຫະພາບເອີຣົບ, ໄອແລນ, ຝຣັ່ງ, ເຢຍລະມັນ, ຍີ່ປຸ່ນ, ສາທາລະນະລັດເກົາຫຼີ, ລຸກຊຳບວກ, ນີວຊີແລນ, ສະວິດເຊີແລນ, ສະຫະລັດອາເມລິກາ ແລະ ອີກຫຼາຍໆປະເທດ ແມ່ນມີຄວາມສຳຄັນຕໍ່ກັບການຮ່ວມມືລະຫວ່າງ ສປປ ລາວ ແລະ ອົງການ ສປຊ ເຊິ່ງຍັງຄົງເປັນອົງການອັນດັບໜຶ່ງ ແລະ ມີຄວາມສຳຄັນ ໃນການຮ່ວມມືດ້ານວິຊາການ  ແລະ ອຳນວຍຄວາມສະດວກການສົນທະນາທາງນະໂຍບາຍ.

ບົດລາຍງານສະບັບນີ້ ກວມເອົາທ່າອ່ຽງການພັດທະນາທີ່ສຳຄັນຫຼາຍອັນ ແລະ ບັນດາຜົນໄດ້ຮັບທີ່ສາມາດບັນລຸໄດ້ ພາຍໃຕ້ຂອບການຮ່ວມມືລະຫວ່າງ ສປປ ລາວ ແລະ ອົງການ ສປຊ ສຳລັບໄລຍະ 2017-2021, ພ້ອມກັບສິ່ງທ້າທາຍ, ບົດຮຽນທີ່ຖອດຖອນໄດ້ ແລະ ທິດທາງໃນຕໍ່ໜ້າ. ບົດລາຍງານສະບັບນີ້ ຍັງໄດ້ລວມເອົາຄວາມຄືບໜ້າທາງດ້ານການສື່ສານ ແລະ ການເຄື່ອນໄຫວວຽກງານຕ່າງໆ ຕະຫຼອດເຖິງພາບລວມຂອງການຊ່ວຍເຫຼືອດ້ານການເງິນ.



# 1. ຊີວິດການເປັນຢູ່ທີ່ດີ /
# 2. ການປົກປ້ອງທາງສັງຄົມ





**ແມ່ຍິງ ແລະ ຜູ້ຊາຍ ທຸກຄົນ ມີຊີວິດການເປັນຢູ່ທີ່ດີຂຶ້ນ ແລະ ມີໂອກາດໄດ້ວຽກເຮັດງານທຳ ທີ່ມີຄຸນຄ່າ**

**ປະຊາຊົນລາວຫຼາຍຄົນເຂົ້າເຖິງຜົນປະໂຫຍດດ້ານການປົກປ້ອງທາງສັງຄົມ ໂດຍສະເພາະແມ່ນກຸ່ມຄົນທຸກຍາກ ແລະ ຜູ້ທີ່ບໍ່ສາມາດປົກປ້ອງຕົນເອງໄດ້**

## ທ່າອ່ຽງການພັດທະນາຕົ້ນຕໍ

| ຕົວຊີ້ວັດ | ຂໍ້ມູນທຽບຖານ | ຄາດໝາຍ | ສະຖານະການປະຈຸບັນ |
|---|---|---|---|
| **1. ຊີວິດການເປັນຢູ່ທີ່ດີ** | | | |
| 1.1. ອັດຕາສ່ວນຮ້ອຍຂອງປະຊາກອນທີ່ຍັງອາໄສຢູ່ກ້ອງເສັ້ນຄວາມທຸກຍາກແຫ່ງຊາດ | 23.2% (2012-2013) | 16.2% (2020) | ຂໍ້ມູນຈະໄດ້ຮັບການປັບປຸງຄືນໃໝ່ ໂດຍ ການສຳຫຼວດການໃຊ້ຈ່າຍ ແລະ ການຊົມໃຊ້ຂອງຄົວເຮືອນ ປີ 2017/2018 |
| 1.2. ຄ່າສຳປະສິດຈີນີ | 36.2%  (2012-2013) | ຄ່າສຳປະສິດຈີນີ ສຳລັບ ສປປ ລາວ ໄດ້ຮັບການປັບປຸງດີຂຶ້ນ, ຄາດຄະເນຄ່າສຳປະສິດໃນຕົວເມືອງ ແລະ ຊົນນະບົດ ໃນປີ 2013 (ແຜນ VIII) (2020) | ຂໍ້ມູນຈະໄດ້ຮັບການປັບປຸງຄືນໃໝ່ ໂດຍການສຳຫຼວດການໃຊ້ຈ່າຍ ແລະ ການຊົມໃຊ້ຂອງຄົວເຮືອນ ປີ 2017/2018 |
| 1.3. ອັດຕາສ່ວນຮ້ອຍຂອງແຮງງານທີ່ເຮັດວຽກໃນຂະແໜງການທີ່ເປັນທາງການທຽບໃສ່ອັດຕາການຈ້າງງານທັງໝົດ, ແມ່ຍິງ / ຜູ້ຊາຍ | 15.6%<br>(ແມ່ຍິງ: 15%; ຜູ້ຊາຍ: 75%) (2010) | 30%<br>(ແມ່ຍິງ: 30%; ຜູ້ຊາຍ: 70%) (2021) | ໄປຕາມຄາດໝາຍ: ການຈ້າງງານທັງໝົດ: 26.5% (ການສຳຫຼວດແຮງງານ, 2017);<br>ການຈ້າງງານທັງໝົດຂອງເພດຊາຍ: 30.9%;<br>ການຈ້າງງານທັງໝົດຂອງເພດຍິງ: 21.4% |
| **2. ການປົກປ້ອງທາງສັງຄົມ** | | | |
| 2.1. ຈຳນວນຂອງແຮງງານທີ່ເຮັດວຽກໃນຂະແໜງການທີ່ເປັນທາງການ  ທີ່ໄດ້ເຂົ້າຮ່ວມກອງທຶນປະກັນສັງຄົມ (ບໍ່ລວມທະຫານ) | 230,000 (2015) | 300,000 (2021) | ໄປຕາມຄາດໝາຍ: 299,998 ຄົນ (ແມ່ຍິງ: 140,036);<br>ຄົນທີ່ເຮັດທຸລະກິດສ່ວນຕົວ ແລະ ເຂົ້າປະກັນສັງຄົມ: 8,080 ຄົນ (ແມ່ຍິງ: 3.714) (2018) |
| 2.2. ອັດຕາສ່ວນຮ້ອຍຂອງຄົນທຸກຍາກທີ່ໄດ້ຮັບການຄຸ້ມຄອງຈາກ ແຜນງານປົກປ້ອງທາງສັງຄົມ | 80% (2015) | 95% (2021) | ໄປຕາມຄາດໝາຍ: 91% (2017) |

ປີ 2018 ຖືເປັນອີກປີໜຶ່ງທີ່ສຳຄັນ ສຳລັບ ສປປ ລາວ ເພາະວ່າ ເປັນຄັ້ງທຳອິດ ທີ່ ຄະນະກຳມະການວ່າດ້ວຍນະໂຍບາຍເພື່ອການພັດທະນາ ໄດ້ປະກາດວ່າ ສປປ ລາວ ມີສິດໄດ້ຮັບ ຂະບວນການພິຈາລະນາ ເພື່ອຫຼຸດພົ້ນອອກຈາກສະຖານະພາບ ປະເທດດ້ອຍພັດທະນາ ໃນໄລຍະເວລາ 6 ປີ ເນື່ອງຈາກວ່າສາມາດປະຕິບັດໄດ້ 2 ໃນ 3 ເກນມາດຕະຖານຂັ້ນຕໍ່າ ຂອງອົງການ ສປຊ. ສປປ ລາວ ເກືອບຜ່ານເກນມາດຕະຖານຂັ້ນຕໍ່າທີສາມ ເຊິ່ງເວົ້າເຖິງ ດັດຊະນີຄວາມອ່ອນໄຫວທາງດ້ານເສດຖະກິດ. ຖ້າຫາກ ສປປ ລາວ ສາມາດຮັກສາຂີດລະດັບການພັດທະນາໄວ້ໄດ້ ຈົນຮອດການທົບທວນໃນປີ 2021 ແລ້ວ, ສປປ ລາວ ກໍຈະສາມາດຫຼຸດພົ້ນອອກຈາກ ສະຖານະພາບ ປະເທດດ້ອຍພັດທະນາ ໃນປີ 2024 ຫຼັງຈາກສິ້ນສຸດໄລຍະຂ້າມຜ່ານ 3 ປີ.

ການເຕີບໂຕຂອງ GDP ຍັງມີຄວາມເຂັ້ມແຂງ ແຕ່ຄາດວ່າຈະຫຼຸດລົງຈາກ 6.9% ໃນປີ 2017 ມາເປັນ 6.5% ໃນປີ 2018. ເຖິງແມ່ນວ່າຈະມີການປັບປຸງ ການຄຸ້ມຄອງເສດຖະກິດກໍຕາມ, ຄວາມອ່ອນໄຫວທາງເສດຖະກິດມະຫາພາກແມ່ນຍັງມີສູງຢູ່. ຂະແໜງອຸດສາຫະກຳ ມີການຂະຫຍາຍຕົວ ທີ່ເກີນຄາດໝາຍ ໃນ 2 ປີ ທຳອິດຂອງແຜນພັດທະນາເສດຖະກິດ – ສັງຄົມແຫ່ງຊາດ ຄັ້ງທີ VIII, ແຕ່ເບິ່ງຄືວ່າຈະຫຼຸດລົງໃນປີ 2018 ເນື່ອງຈາກຜົນກະທົບຂອງໄພນໍ້າຖ້ວມໃນໄລຍະຜ່ານມາ. ສິ່ງທ້າທາຍໃນການຈ້າງງານ ແມ່ນຍັງມີຢູ່ ໂດຍສະເພາະການສ້າງວຽກເຮັດງານທຳທີ່ບໍ່ແມ່ນຂະແໜງກະສິກຳ.

ເນື່ອງຈາກການເກັບລາຍຮັບບໍ່ໄດ້ຕາມເປົ້າ, ໄພນໍ້າຖ້ວມໃຫຍ່ ໃນລະຫວ່າງ ເດືອນກໍລະກົດ ແລະ ສິງຫາ ແລະ ງົບປະມານສ່ວນໃຫຍ່ ແມ່ນຈັດສັນໃຫ້ກັບ ລາຍຈ່າຍປະຈຳເຊັ່ນ: ເງິນເດືອນພະນັກງານ ແລະ ເງິນບຳນານ, ເຮັດໃຫ້ລັດຖະບານມີງົບປະມານຫຼຸດລົງ ແລະ ອົງການ IMF ກໍໄດ້ຈັດປະເພດຄວາມສ່ຽງຂອງຄວາມຍືນຍົງດ້ານໜີ້ສິນຄືນໃໝ່ ໃຫ້ຢູ່ໃນລະດັບສູງ. ສິ່ງນີ້ເຮັດໃຫ້ມີໂຄງການລົງທຶນໃໝ່ຂອງລັດພຽງໜ້ອຍດຽວເທົ່ານັ້ນ ທີ່ໄດ້ຮັບອະນຸມັດ ໃນຕົ້ນປີ 2019 ໂດຍຜ່ານແຜນງານການລົງທຶນຂອງລັດ. ສະນັ້ນ, ການຮ່ວມມືດ້ານການພັດທະນາກັບສາກົນ ຈະມີຄວາມສຳຄັນເພີ່ມຂຶ້ນ. ການສົ່ງອອກພະລັງງານໄຟຟ້າຈາກນໍ້າ ແລະ ແຮ່ທາດ ຄາດວ່າຈະເພີ່ມສູງຂຶ້ນ ໃນປີ 2019 ເຊິ່ງຈະເປັນການປະກອບສ່ວນເຮັດໃຫ້ຊ່ອງຫວ່າງທາງງົບປະມານມີໜ້ອຍລົງ. ໃນປະຈຸບັນ ການຂາດດຸນງົບປະມານ ແມ່ນຢູ່ທີ່ 5.7% ຂອງ GDP.

ການປັບປຸງ ສະພາບແວດລ້ອມໃນການດຳເນີນທຸລະກິດຂອງພາກເອກະຊົນ ມີຄວາມສຳຄັນຫຼາຍ. ລັດຖະບານ ໄດ້ຮັບຮອງເອົາກົດໝາຍສະບັບປັບປຸງ ວ່າດ້ວຍການສົ່ງເສີມການລົງທຶນ ແລະ ໄດ້ສ້າງຕັ້ງຄະນະກຳມະການຄຸ້ມຄອງການລົງທຶນ ໂດຍມີທ່ານຮອງນາຍົກລັດຖະມົນຕີເປັນປະທານ. ນອກຈາກນັ້ນຍັງມີການສ້າງຫ້ອງການບໍລິການປະຕູດຽວ ທີ່ຢູ່ພາຍໃຕ້ ກົມສົ່ງເສີມການລົງທຶນຂອງກະຊວງແຜນການ ແລະ ການລົງທຶນ (MPI). ສິ່ງເຫຼົ່ານີ້ລ້ວນແຕ່ເປັນບາດກ້າວອັນສຳຄັນ ເພື່ອສົ່ງເສີມການພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ ໂດຍສະເພາະການປັບປຸງຂັ້ນຕອນການເລີ່ມທຸລະກິດໃໝ່ໃຫ້ດີຂຶ້ນ. ເຖິງແມ່ນວ່າຈະມີມາດຕະການຕ່າງໆເຫຼົ່ານີ້ກໍຕາມ, ດັດຊະນີການອຳນວຍຄວາມສະດວກໃນການດຳເນີນທຸລະກິດ ໃນ ສປປ ລາວ ຈັດໂດຍທະນາຄານໂລກ ກັບຕົກລົງມາ ຈາກອັນດັບທີ 134 ໃນປີ 2016 ແລະ ອັນດັບທີ 141 ໃນປີ 2017 ມາເປັນ ອັນດັບທີ 154 ໃນປີ 2018 ຈາກທັງໝົດ 190 ປະເທດ.

ມີການນຳສະເໜີ ບົດລາຍງານແຫ່ງຊາດແບບສະໝັກໃຈຄັ້ງທຳອິດ ກ່ຽວກັບການຈັດຕັ້ງປະຕິບັດເປົ້າໝາຍການພັດທະນາແບບຍືນຍົງ ຂອງ ສປປ ລາວ ໃນກາງປີ 2018 ຢູ່ ເວທີການເມືອງລະດັບສູງ ຂອງອົງການ ສປຊ ໃນນະຄອນນິວຢອກ. ນອກຈາກນັ້ນ, ກໍຍັງມີການທົບທວນກາງສະໄໝ ຜົນຂອງການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ – ສັງຄົມແຫ່ງຊາດ ຄັ້ງທີ VIII (2016-2020) ແລະ ຂອງຫຼາຍຂະແໜງການ. ໂດຍສານຕໍ່ຄວາມຄືບໜ້າຂອງໜ່ວຍງານວິຊາການຫຼັກທີ່ປິ່ນອ້ອມກອງປະຊຸມໂຕະມົນນັ້ນ, ການທົບທວນກາງສະໄໝ ຍັງເປັນຈຸດເລີ່ມຕົ້ນສຳລັບ ການສ້າງແຜນພັດທະນາເສດຖະກິດ – ສັງຄົມແຫ່ງຊາດ ຄັ້ງທີ IX (2021-2025) ແລະ ເປັນພື້ນຖານໃຫ້ກັບການ ສົນທະນາດ້ານນະໂຍບາຍໃນລະດັບສູງ ທີ່ກອງປະຊຸມໂຕະມົນ ໃນເດືອນທັນວາ ເຊິ່ງມີອົງການ ສປຊ ເປັນປະທານຮ່ວມ (ໂດຍການສະໜັບສະໜູນຂອງອົງການ UNDP) ແລະ ມີຜູ້ເຂົ້າຮ່ວມທັງໝົດ 300 ຄົນ ລວມທັງສະມາຊິກສະພາ, ພະນັກງານລະດັບສູງຈາກລັດຖະບານ ແລະ ຄູ່ຮ່ວມພັດທະນາ, ພາກເອກະຊົນ ແລະ ອົງການຈັດຕັ້ງທາງສັງຄົມ.

> ປີ 2018 ຖືເປັນອີກປີໜຶ່ງທີ່ສຳຄັນ ສຳລັບ ສປປ ລາວ ເນື່ອງຈາກວ່າເປັນຄັ້ງທຳອິດ ທີ່ ຄະນະກຳມະ ການວ່າ ດ້ວຍນະໂຍບາຍ ເພື່ອການພັດທະນາ ໄດ້ປະກາດວ່າ ສປປ ລາວ ມີສິດໄດ້ຮັບ ຂະບວນການພິຈາລະນາ ເພື່ອຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ ໃນໄລຍະເວລາ 6 ປີ ເນື່ອງຈາກວ່າສາມາດປະຕິບັດໄດ້ 2 ໃນ 3 ເກນມາດຖານຂັ້ນຕໍ່າ ຂອງອົງການ ສປຊ.

ຫຼາຍກົດໝາຍ ແລະ ຫຼາຍນະໂຍບາຍ ໄດ້ຮັບການສ້າງຂຶ້ນມາໃໝ່, ປັບປຸງແກ້ໄຂ ແລະ ຮັບຮອງໂດຍ ສະພາແຫ່ງຊາດ. ຍົກຕົວຢ່າງ: ກົດໝາຍວ່າດ້ວຍຊີວິດການເປັນຢູ່ ແລະ ການສ້າງວຽກເຮັດງານທຳ ແລະ ກົດໝາຍວ່າດ້ວຍກອງທຶນປະກັນສຸຂະພາບ ໄດ້ຮັບການສ້າງຂຶ້ນມາໃໝ່; ກົດໝາຍວ່າດ້ວຍກອງທຶນປະກັນສັງຄົມ ແລະ ກົດໝາຍວ່າດ້ວຍການຂຶ້ນທະບຽນຄອບຄົວ ໄດ້ຮັບການປັບປຸງແກ້ໄຂ ແລະ ຍື່ນໃຫ້ກັບ ສະພາແຫ່ງຊາດ. ມີການຮ່າງຍຸດທະສາດແຫ່ງຊາດເພື່ອສົ່ງເສີມການມີວຽກເຮັດງານທຳໃນຊົນນະບົດ ເຊິ່ງຄາດວ່າຈະປັບເປັນສະບັບສຸດທ້າຍ ແລະ ຖືກຮັບຮອງໃນປີ 2019. ຍຸດທະສາດທີ່ລວມເອົາຫຼາຍຂະແໜງການ ໄດ້ເສີມສ້າງ ແລະ ເຊື່ອມໂຍງເອົາບັນດາກົດໝາຍ, ດຳລັດ ແລະ ຂໍ້ຕົກລົງຂອງລັດຖະມົນຕີທີ່ມີຢູ່ແລ້ວເຂົ້າກັນ ເພື່ອສົ່ງເສີມວຽກເຮັດງານທຳທີ່ມີຄຸນຄ່າ ແລະ ຍືນຍົງໃນຊົນນະບົດ. ນອກຈາກນັ້ນ ນະໂຍບາຍການພັດທະນາປະຊາກອນແຫ່ງຊາດ ໄລຍະ 2019-2030 ໄດ້ຮັບການທົບທວນຄືນ ແລະ ຄາດວ່າຈະຖືກຮັບຮອງເອົາໃນປີ 2019 ນີ້. ຍຸດທະສາດການເຂົ້າເຖິງດ້ານການເງິນ (Financial Inclusion) ກໍໄດ້ຖືກຮ່າງຂຶ້ນ ເພື່ອຮັບຮອງ ໃນປີ 2019.

## ຜົນໄດ້ຮັບ

ອົງການ ສປຊ / ອົງການ UNDP ໄດ້ປະກອບສ່ວນອັນສຳຄັນເຂົ້າໃນການທົບທວນກາງສະໄໝຂອງ ແຜນພັດທະນາເສດຖະກິດ – ສັງຄົມ ແຫ່ງຊາດ ຄັ້ງທີ VIII (2016-2020) ແລະ ການທົບທວນຂອງຫຼາຍຂະແໜງການ ແລະ ຍັງໄດ້ສະໜັບສະໜູນລັດຖະບານ ໃນການຮ່າງ ບົດລາຍງານແຫ່ງຊາດແບບສະໝັກໃຈສະບັບທຳອິດ ເພື່ອທົບທວນຄວາມຄືບໜ້າ ການຈັດຕັ້ງປະຕິບັດເປົ້າໝາຍການພັດທະນາແບບຍືນຍົງຂອງ ສປປ ລາວ ແລະ ນຳສະເໜີ ຢູ່ທີ່ເວທີການເມືອງລະດັບສູງຂອງອົງການ ສປຊ ໃນເດືອນ

ກໍລະກິດ.

## ສົ່ງເສີມການມີວຽກເຮັດງານທຳທີ່ມີຄຸນຄ່າໃນຊົນນະບົດ

ໂດຍການຊ່ວຍເຫຼືອຈາກ ອົງການ UNDP, ສປປ ລາວ ໄດ້ກາຍເປັນ
ປະເທດທຳອິດ ທີ່ໄດ້ຮັບຮອງເອົາ ເປົ້າໝາຍການພັດທະນາແບບຍືນ
ຍົງຂອງປະເທດ ເປັນເປົ້າໝາຍທີ 18 ກ່ຽວກັບລະເບີດບໍ່ທັນແຕກ.
ການສຳຫຼວດ ແລະ ການເກັບກູ້ລະເບີດບໍ່ທັນແຕກ ຖືເປັນວຽກງານ
ທີ່ສຳຄັນ ເນື່ອງຈາກວ່າລະເບີດບໍ່ທັນແຕກ ໄດ້ສືບຕໍ່ເປັນສິ່ງກີດຂວາງ
ການພັດທະນາ, ສົ່ງຜົນກະທົບຕໍ່ກັບຊີວິດ ແລະ ສ້າງຂໍ້ຈຳກັດໃຫ້ກັບ
ຜະລິດຕະພາບຂອງການຜະລິດກະສິກຳ. ມາຮອດເດືອນທັນວາ
2018, ໄດ້ສຳເລັດການສຳຫຼວດເບື້ອງຕົ້ນ ຢູ່ໃນ 309 ບ້ານ, ຫຼັງຈາກ
ນັ້ນກໍໄດ້ມີການສຳຫຼວດແບບວິຊາການຕື່ມອີກ ເພື່ອຢືນຢັນເຂດທີ່ມີ
ຄວາມສ່ຽງໄພອັນຕະລາຍໃນ 1,205 ເຂດ ເຊິ່ງກວມເອົາເນື້ອທີ່ດິນ
ປະມານ 20,315 ເຮັກຕາ, ໄດ້ຄົ້ນພົບລະເບີດບໍ່ທັນແຕກຈຳນວນ
26,670 ໜ່ວຍ ເຊິ່ງໃນນັ້ນ 24,107 ໜ່ວຍ ແມ່ນລະເບີດບົ່ມ
ບີ (ລະເບີດລູກຫວ່ານ). ໂດຍລວມແລ້ວ ສາມາດກວດກູ້ລະເບີດ
ບໍ່ທັນແຕກ ອອກຈາກເນື້ອທີ່ 6,003 ເຮັກຕາ ແລະ ທຳລາຍລະເບີດ
ບໍ່ທັນແຕກໄດ້ 91,468 ໜ່ວຍ ເຊິ່ງໃນນັ້ນ 72,700 ໜ່ວຍ ແມ່ນ
ລະເບີດບົ່ມບີ. ການໃຫ້ຄວາມຮູ້ກ່ຽວກັບຄວາມສ່ຽງຈາກລະເບີດບໍ່
ທັນແຕກ ໄດ້ຈັດຂຶ້ນ ໃນ 514 ບ້ານ ແລະ 287 ໂຮງຮຽນ ເຮັດ
ໃຫ້ສາມາດເຂົ້າເຖິງປະຊາຊົນໄດ້ຫຼາຍກວ່າ 190,980 ຄົນ. ມີ 42
ຄົນ ໄດ້ຮັບຂາທຽມ ແລະ ມີການຊ່ວຍເຫຼືອປິ່ນປົວທາງການແພດ
ໃຫ້ກັບຜູ້ລອດຊີວິດ ອີກ 39 ຄົນ. ນອກຈາກນັ້ນ ຍັງໄດ້ມີການ
ສ້າງເສດຖະກິດ ແລະ ຝຶກວິຊາຊີບ ໃຫ້ກັບອີກ 107 ຄົນ.

ອົງການ UN Women ໄດ້ສະໜັບສະໜູນການສ້າງວຽກເຮັດງານ
ທຳໃຫ້ກັບແມ່ຍິງ ໃນຂະແໜງລະເບີດບໍ່ທັນແຕກ ເພື່ອຮັບປະກັນ
ວ່າ ຄວາມສະເໝີພາບລະຫວ່າງຍິງ – ຊາຍ ແລະ ສິດທິເທົ່າທຽມກັນ
ຂອງແມ່ຍິງ ໄດ້ຮັບການພິຈາລະນາຢ່າງເຕັມສ່ວນ ໃນແຜນງານ ການ
ຄຸ້ມຄອງລະເບີດບໍ່ທັນແຕກ ແລະ ການຊ່ວຍເຫຼືອຜູ້ເຄາະຮ້າຍ. ພະ
ນັກງານເກັບກູ້ລະເບີດ ມີຄວາມເຂົ້າໃຈທີ່ດີຂຶ້ນ ແລະ ຮັບຮູ້ກ່ຽວກັບ
ບົດບາດຂອງແມ່ຍິງ ໃນການບໍລິຫານຄຸ້ມຄອງຂອງອົງກອນ. ໄດ້ເຮັດ
ການປະເມີນສະຖານະພາບຂອງແມ່ຍິງໃນປະຈຸບັນ ກ່ຽວກັບການເຂົ້າ
ຮ່ວມຕັດສິນໃຈດ້ານນະໂຍບາຍ, ການວາງແຜນ ແລະ ການຊຸກຊ້ອນ
ເຂົ້າໃນໂຄງຮ່າງການຈັດຕັ້ງ. ສູນກາງສະຫະພັນແມ່ຍິງລາວ ກຳລັງສະ
ໜັບສະໜູນ ຄະນະກຳມະການຄຸ້ມຄອງແຫ່ງຊາດເພື່ອແກ້ໄຂບັນຫາ
ລະເບີດບໍ່ທັນແຕກ ເພື່ອເຊື່ອມສານເອົາບົດບາດຍິງ – ຊາຍ ເຂົ້າໃນ
ການປະຕິບັດແຜນງານ. ນອກຈາກນັ້ນ ກໍຍັງມີການສ້າງ ຄູ່ມືການ
ເຊື່ອມສານບົດບາດຍິງ – ຊາຍ ເຂົ້າໃນຂະແໜງລະເບີດບໍ່ທັນແຕກ
ທີ່ເປັນພາ ສາລາວ ແລະ ພາສາອັງກິດ.

ໂດຍການສະໜັບສະໜູນຈາກ ອົງການ UNICEF ແລະ ຄູ່ຮ່ວມ
ພັດທະນາອື່ນໆ, ສູນສະຖິຕິແຫ່ງຊາດ ໄດ້ເປີດໂຕ ບົດລາຍງານການ
ສຳຫຼວດດັດຊະນີໝາຍສັງຄົມລາວ ຄັ້ງທີ II. ໂດຍອີງໃສ່ຂໍ້ມູນຈາກ
ການສຳຫຼວດ, ມີການວິເຄາະແບບມືສອງຫຼາຍອັນ ທີ່ສຸມໃສ່ດ້ານ
ຄວາມເທົ່າທຽມກັນ ລວມທັງການວິເຄາະຄວາມຂາດເຂີນແບບຫຼາຍ
ມິຕິ, ການວິເຄາະດ້ານໂພສະນາການ ແລະ ເດັກທີ່ມີຮ່າງກາຍເຕ້ຍ,
ການຂາດເຂີນທາງດ້ານການສຶກສາ. ອົງການ UNICEF ໄດ້ສະໜັບ
ສະໜູນ ກະຊວງແຜນການ ແລະ ການລົງທຶນ ເຮັດການວິເຄາະ
ຄວາມຂາດເຂີນແບບຫຼາຍມິຕິ ເຊິ່ງໄດ້ສະທ້ອນໃຫ້ເຫັນເຖິງ ສະພາບ
ປະຈຸບັນ ກ່ຽວກັບຄວາມຕ້ອງການ ແລະ ສິດທິຂອງເດັກອາຍຸຕ່ຳກວ່າ
18 ປີ ທີ່ຕິດພັນກັບຄວາມທຸກຍາກແບບຫຼາຍມິຕິ. ຜົນໄດ້ຮັບຂອງ
ການສຳຫຼວດ ໄດ້ລວມເຂົ້າຢູ່ໃນ ບົດລາຍງານແຫ່ງຊາດແບບສະໝັກ
ໃຈ ກ່ຽວກັບການຈັດຕັ້ງປະຕິບັດເປົ້າໝາຍການພັດທະນາແບບຍືນ
ຍົງ, ການທົບທວນກາງສະໄໝຂອງແຜນພັດທະນາເສດຖະກິດ – ສັງ
ຄົມແຫ່ງຊາດ ຄັ້ງທີ VIII, ການທົບທວນແຜນຍຸດທະສາດຂອງຂະ
ແໜງການຕ່າງໆ ແລະ ການສົນທະນາໃນກອງປະຊຸມໂຕະມົນ. ອີງ
ຕາມບົດລາຍງານການວິເຄາະ ເຊິ່ງມີຫົວຂໍ້ວ່າ ເປົ້າໝາຍການພັດທະ
ນາແບບຍືນຍົງ ແລະ ເດັກນ້ອຍ – ການປະເມີນຄວາມຄືບໜ້າ ຕໍ່ກັບ
ການເປັນຢູ່ທີ່ດີຂອງເດັກ ໃນ ສປປ ລາວ ໄດ້ໃຫ້ຮູ້ວ່າ ປະມານເຄິ່ງ
ໜຶ່ງຂອງເດັກອາຍຸຕ່ຳກວ່າ 18 ປີ ກຳລັງປະສົບກັບບັນຫາກັບຄວາມ
ຂາດເຂີນ 3 ຢ່າງພ້ອມໆກັນ. ປະຈຸບັນ ກໍກຳລັງມີການພິຈາລະນາ
ອັດຕາຄວາມທຸກຍາກແບບຫຼາຍມິຕິນີ້ ໃຫ້ເປັນຕົວຊີ້ວັດທຽບຖານ
ເພື່ອຕິດຕາມຄວາມຄືບໜ້າ ການຈັດຕັ້ງປະຕິບັດເປົ້າໝາຍການພັດ
ທະນາແບບຍືນຍົງ.

> “
> **ອົງການ UN Women ໄດ້ສະໜັບສະໜູນ ການສ້າງ ວຽກເຮັດງານທຳໃຫ້ກັບແມ່ຍິງໃນ ຂະແໜງລະເບີດບໍ່ທັນແຕກ ເພື່ອຮັບປະກັນ ວ່າ ຄວາມສະເໝີພາບລະຫວ່າງ ຍິງ – ຊາຍ ແລະ ສິດທິເທົ່າທຽມກັນຂອງແມ່ຍິງນັ້ນ ໄດ້ ຮັບການພິຈາລະນາຢ່າງເຕັມສ່ວນໃນແຜນ ງານ ການຄຸ້ມຄອງລະເບີດບໍ່ທັນແຕກ ແລະ ການຊ່ວຍເຫຼືອຜູ້ເຄາະຮ້າຍ. ພະນັກງານເກັບ ກູ້ລະເບີດ ມີຄວາມເຂົ້າໃຈທີ່ດີຂຶ້ນ ແລະ ຮັບຮູ້ ກ່ຽວກັບບົດບາດຂອງແມ່ຍິງ ໃນການບໍລິຫານ ຄຸ້ມຄອງຂອງອົງກອນ.**
> ”

ອົງການ ILO ໄດ້ສະໜັບສະໜູນ ການສ້າງຍຸດທະສາດແຫ່ງຊາດ
ເພື່ອສົ່ງເສີມການມີວຽກເຮັດງານທຳໃນຊົນນະບົດ ສະບັບທຳອິດ
ຂອງ ສປປ ລາວ ເຊິ່ງມີໂຄງການທົດລອງຢູ່ທີ່ ແຂວງເຊກອງ ແລະ
ສະຫວັນນະເຂດ. ຍຸດທະສາດດັ່ງກ່າວ ປະກອບມີ ຂອບວຽກ
ທີ່ກວມເອົາຫຼາຍຂະແໜງການ ຈົນຮອດປີ 2030, ການຈັດຕັ້ງປະ
ຕິບັດໂດຍລວມ ເຊິ່ງຮັບຜິດຊອບໂດຍ ຄະນະກຳມະການຊີ້ນຳ
ແຫ່ງຊາດ ໂດຍມີທ່ານຮອງນາຍົກລັດຖະມົນຕີເປັນປະທານ. ຍຸດທະ
ສາດດັ່ງກ່າວເຊື່ອມໂຍງໃສ່ ແລະ ໃຫ້ການສະໜັບສະໜູນຕໍ່ກັບ ລັດ
ຖະທຳມະນູນ, ແຜນການ ແລະ ຍຸດທະສາດຂອງປະເທດ ລວມທັງ
ແຜນພັດທະນາເສດຖະກິດ – ສັງຄົມແຫ່ງຊາດ ຄັ້ງທີ VIII. ນອກ
ຈາກນັ້ນ ຍຸດທະສາດດັ່ງກ່າວ ຍັງສະໜັບສະໜູນການຈັດຕັ້ງປະຕິ
ບັດກົດໝາຍ, ລະບຽບການ, ນະໂຍບາຍ, ຍຸດທະສາດ ແລະ ແຜນ
ການຕ່າງໆ ທີ່ສຸມໃສ່ການສ້າງວຽກເຮັດງານທຳທີ່ມີຄຸນຄ່າ, ມີຄວາມ
ຍືນຍົງ ແລະ ມີຜົນຮັບທີ່ດີໃນຊົນນະບົດ. ອົງການ ILO ໄດ້ເຮັດການ
ທົດລອງນຳໃຊ້ຍຸດທະສາດນີ້ ເພື່ອສົ່ງເສີມການມີວຽກເຮັດງານທຳ
ແລະ ການຫຼຸດຜ່ອນຄວາມທຸກຍາກ ໃນຂະແໜງກະສິກຳ, ການປັບ
ປຸງຕ່ອງໂສ້ມູນຄ່າ, ສຸຂະພາບ ແລະ ຄວາມປອດໄພໃນການປະກອບ
ອາຊີບ ທີ່ແຂວງເຊກອງ.

ເພື່ອສະໜັບສະໜູນໃຫ້ ວິສາຫະກິດຂະໜາດນ້ອຍ ແລະ ກາງ
(SME) ສາມາດເຂົ້າເຖິງແຫຼ່ງທຶນໄດ້ນັ້ນ, ອົງການ ILO ກຳລັງ
ຊ່ວຍສ້າງແຜນງານບໍລິການພັດທະນາທຸລະກິດ ໂດຍສຸມໃສ່ການ
ວາງແຜນທຸລະກິດ, ການວາງແຜນທາງການເງິນ, ການຄິດໄລ່ບັນ
ຊີເງິນສົດ, ການຕະຫຼາດ ສຳລັບທຸລະກິດຂາຍຍ່ອຍ, ການທ່ອງ
ທ່ຽວ ແລະ ທຸລະກິດກະສິກຳ. ມີການປຶກສາຫາລືກັບ ຫຼາຍພາກ
ສ່ວນທີ່ກ່ຽວຂ້ອງ ລວມທັງທະນາຄານທຸລະກິດ ເພື່ອຮັບປະກັນ
ວ່າ ແຜນງານດັ່ງກ່າວຕອບສະໜອງຕາມຄວາມຕ້ອງການຂອງທຸະກິດ
SME ໃນການເຂົ້າເຖິງແຫຼ່ງທຶນ. ໃນປີ 2018, ມີຄູຝຶກ 63 ຄົນ
ເຊິ່ງເປັນຕົວແທນຈາກ ບໍລິສັດທີ່ໃຫ້ການບໍລິການດ້ານການພັດທະນາ

ທຸລະກິດ 12 ບໍລິສັດ ໄດ້ຮັບການຝຶກອົບຮົມຈາກແຜນງານ ແລະ ມີ SME ປະມານ 42 ບໍລິສັດ ໄດ້ຮັບຜົນປະໂຫຍດຈາກການຝຶກອົບຮົມດັ່ງກ່າວ. ນອກຈາກນັ້ນຍັງມີການດັດປັບ ຄູ່ມືການຝຶກອົບຮົບຂອງອົງການ ILO ວ່າດ້ວຍການພັດທະນາທຸລະກິດຂອງແມ່ຍິງ (GET Ahead) ແລະ ແປເປັນພາສາລາວ. ມີການຈັດຝຶກອົບຮົມໃຫ້ ຄູຝຶກ 17 ຄົນ ຈາກສູນກາງ ແລະ ອີກ 26 ຄົນ ຈາກທາງແຂວງ.

ອົງການ UNCDF ໄດ້ສະໜັບສະໜູນການຂະຫຍາຍເຄືອຂ່າຍການບໍລິການດ້ານທະນາຄານ ໄປສູ່ເຂດຊົນນະບົດ ເພື່ອເປັນການກະຕຸ້ນກິດຈະກໍາທາງເສດຖະກິດ ໂດຍໃຫ້ການຊ່ວຍເຫຼືອກັບເຄືອຂ່າຍຕົວແທນບໍລິການເງິນດ່ວນຊຸມຊົນ ຂອງທະນາຄານການຄ້າຕ່າງປະເທດລາວ (ທຄຕລ) ຈໍານວນ 401 ຕົວແທນ ທີ່ ອົງການ UNCDF ໄດ້ສ້າງຕັ້ງຂຶ້ນມາກ່ອນ. ຍົກຕົວຢ່າງ, ນັບຕັ້ງແຕ່ເດືອນກັນຍາ ຕົວແທນທະນາຄານ 54 ແຫ່ງ ໄດ້ເປີດໃຫ້ບໍລິການໂອນເງິນຂ້າມທະນາຄານ, ບໍລິການຖອນເງິນສົດ ແລະ ເປີດບັນຊີທະນາຄານພື້ນຖານດ້ວຍບັດ ATM. ທຄຕລ ບໍລິການເງິນດ່ວນຊຸມຊົນ ໄດ້ກາຍມາເປັນຊ່ອງທາງທີ່ສໍາຄັນ ໃຫ້ກັບເຈົ້າຂອງຮ້ານຂາຍເຄື່ອງໃນຊົນນະບົດ ເພື່ອຈ່າຍເງິນໃຫ້ກັບຜູ້ສະໜອງ. ນັບຕັ້ງແຕ່ເລີ່ມໂຄງການໄລຍະທີສອງເປັນຕົ້ນມາ ກໍມີການຈ່າຍເງິນ ແລະ ໂອນເງິນປະມານ 43.6 ຕື້ ກີບ (ປະມານ US$ 5 ລ້ານ). ຈໍານວນຂອງການເຮັດທຸລະກໍາທາງການເງິນແມ່ນເພີ່ມຂຶ້ນ ປະມານ 2 ເທົ່າ ໃນທຸກໆ 10 ເດືອນ.

ໃນເດືອນກໍລະກົດ, ອົງການ IOM ໄດ້ຈັດກອງປະຊຸມກ່ຽວກັບຄວາມສໍາຄັນຂອງການຈ້າງງານ ແລະ ການປະຕິບັດທາງທຸລະກິດທີ່ມີຈັນຍາບັນ ເພື່ອປັບປຸງໂອກາດໃນການເຂົ້າເຖິງຕະຫຼາດແຮງງານ ເປັນການຍົກລະດັບຄວາມຮູ້ໃຫ້ກັບ ນັກສໍາມະນາກອນ ຈາກພາກລັດ ແລະ ເອກະຊົນ ຈໍານວນ 34 ຄົນ.

## ເສີມສ້າງຄວາມເຂັ້ມແຂງໃຫ້ກັບກົນໄກການເຄື່ອນຍ້າຍແຮງງານແບບປອດໄພ

ອົງການ ILO ແລະ UN Women ໄດ້ສະໜັບສະໜູນການກໍານົດຂົງເຂດບູລິມະສິດ ສໍາລັບການເຄື່ອນຍ້າຍແຮງງານແບບປອດໄພ ແລະ ເປັນທໍາ ສໍາລັບແມ່ຍິງ ແລະ ໄດ້ນໍາສະເໜີຜົນໄດ້ຮັບໃຫ້ກັບລັດຖະບານ ແລະ ອົງການຈັດຕັ້ງທາງສັງຄົມ ໃນຊ່ວງໄລຍະຂອງການປຶກສາຫາລືລະດັບຊາດ ໃນ ເດືອນພຶດສະພາ. ມີການສ້າງຕັ້ງສູນ ຂໍ້ມູນແຮງງານເຄື່ອນຍ້າຍຂຶ້ນມາຕື່ມອີກ ໜຶ່ງສູນ ທີ່ແຂວງຫຼວງພະບາງ ເພື່ອໃຫ້ບໍລິການແບບບໍ່ໄດ້ເສຍຄ່າ ໃຫ້ກັບແຮງງານເຄື່ອນຍ້າຍຄົນລາວ, ຄອບຄົວ ແລະ ຊຸມຊົນຂອງພວກເຂົາ ໃນແຂວງຫຼວງພະບາງ ແລະ ແຂວງໃກ້ຄຽງ. ພ້ອມກັນນັ້ນກໍໄດ້ສືບຕໍ່ໃຫ້ການຊ່ວຍເຫຼືອສ້າງຄວາມສາມາດໃຫ້ກັບສູນບໍລິການຂໍ້ມູນແຮງງານເຄື່ອນຍ້າຍໃນ 4 ແຂວງ. ອົງການ IOM ໄດ້ຈັດຝຶກອົບຮົມການເຄື່ອນຍ້າຍແຮງງານແບບປອດໄພ ໃຫ້ກັບ ນັກສໍາມະນາກອນ 81 ຄົນ ໃນແຂວງຫຼວງນໍ້າທາ ແລະ 31 ຄົນ ໃນແຂວງໄຊຍະບູລີ ລວມທັງພະນັກງານຂັ້ນແຂວງ, ຂັ້ນເມືອງ ແລະ ຄູອາຈານ. ຫຼັງຈາກນັ້ນ, ນັກສໍາມະນາກອນໄດ້ຈັດຝຶກອົບຮົມໃນຊຸມຊົນຂອງຕົນເອງ ເຊິ່ງເຮັດໃຫ້ສາມາດເຂົ້າເຖິງ ແຮງງານເຄື່ອນຍ້າຍໄດ້ເຖິງ 3,700 ຄົນ ລວມທັງເດັກນ້ອຍ ແລະ ຜູ້ໃຫຍ່ທີ່ຢູ່ໃນກຸ່ມສ່ຽງ. ມີການຈັດກິດຈະກໍາປຸກຈິດສໍານຶກກ່ຽວກັບ ການເຄື່ອນຍ້າຍແຮງງານແບບປອດໄພໃນໂຮງຮຽນ ແລະ ຫ້ອງການບ້ານ. ອົງການ IOM ແລະ ອົງການ UNDP ໄດ້ສະໜັບສະໜູນ ລາຍການວິທະຍຸຊຸມຊົນ ກ່ຽວກັບການເຄື່ອນຍ້າຍແຮງງານແບບປອດໄພ ແລະ ກະຈາຍສຽງ ໃນ 4 ພາສາ (ພາສາລາວ, ພາສາມົ້ງ, ພາສາຄະມຸ ແລະ ພາສາກະຕາງ) ໃນ 8 ສະຖານີ ກວມເອົາທັງ 18 ແຂວງ. ຜົນຂອງການສໍາຫຼວດໄດ້ສະແດງໃຫ້ເຫັນວ່າ 58% ຂອງຄົນທີ່ຖືກສໍາພາດ ໄດ້ຟັງ 1 ໃນ 3 ລາຍການວິທະຍຸຊຸມຊົນ ແລະ ປະຈຸບັນກໍມີຄວາມເຂົ້າໃຈທີ່ດີຂຶ້ນກ່ຽວກັບການເຄື່ອນຍ້າຍແຮງງານແບບປອດໄພ. ປະມານ 80% ຂອງປະຊາຊົນລາວ ສາມາດເຂົ້າເຖິງວິທະຍຸຊຸມຊົນຄື້ນ FM ເຮັດໃຫ້ເປັນໂອກາດດີ ແລະ ມີຄ່າໃຊ້ຈ່າຍຕໍ່າ ໃນການເຜີຍແຜ່ຂໍ້ມູນຂ່າວສານໃຫ້ກັບຊຸມຊົນທີ່ຢູ່ເຂດຫ່າງໄກສອກຫຼີກ.

## ສົ່ງເສີມການປົກປ້ອງທາງສັງຄົມ

ອົງການ ສປຊ ໄດ້ສະໜັບສະໜູນການກໍານົດ ນະໂຍບາຍການປົກປ້ອງທາງສັງຄົມແບບຮອບດ້ານ ໃນ ປີ 2014 ໂດຍການເປີດໂຕບົດລາຍງານແຫ່ງຊາດ ກ່ຽວກັບການປົກປ້ອງທາງສັງຄົມ. ບົດລາຍງານນີ້ ເປັນຂໍ້ມູນໃຫ້ກັບການພັດທະນາ ຍຸດທະສາດການປົກປ້ອງທາງສັງຄົມແຫ່ງຊາດ ສະບັບທໍາອິດ ເຊິ່ງສໍາເລັດໃນທ້າຍປີ 2018 ໂດຍໄດ້ຮັບການປຶກສາຫາລືດ້ານວິຊາການ ຈາກ ອົງການ ILO. ຍຸດທະສາດດັ່ງກ່າວມີຈຸດປະສົງເພື່ອເສີມສ້າງຄໍາໝາຍໝັ້ນທີ່ຜ່ານມາຂອງລັດຖະບານໃຫ້ເຂັ້ມແຂງຂຶ້ນ ບົນພື້ນຖານຂອງລັດຖະທໍາມະນູນຂອງ ສປປ ລາວ, ແຜນພັດທະນາເສດຖະກິດ – ສັງຄົມແຫ່ງຊາດ ຄັ້ງທີ VIII ແລະ ຍຸດທະສາດ ແລະ ແຜນການຂອງຂະແໜງການຕ່າງໆ.

ລັດຖະບານໄດ້ຮັບຮູ້ເຖິງບົດບາດຂອງການປົກປ້ອງທາງສັງຄົມ ໃນການຫຼຸດຜ່ອນຄວາມທຸກຍາກ, ຫຼຸດຜ່ອນຄວາມບໍ່ເທົ່າທຽມກັນ ແລະ ຄວາມບອບບາງ ແລະ ບົດບາດໃນການພັດທະນາເສດຖະກິດ – ສັງຄົມ ແລະ ການຢູ່ຮ່ວມກັນຂອງສັງຄົມ. ການປັບປຸງສະພາບການດໍາລົງຊີວິດຂອງຄົນທຸກນັ້ນ ຖືວ່າມີຄວາມສໍາຄັນຕໍ່ກັບຍຸດທະສາດນີ້ ເພື່ອໃຫ້ໝັ້ນໃຈວ່າ ກຸ່ມຄົນທີ່ສາມາດສ້າງລາຍຮັບໄດ້ຢ່າງພຽງພໍນັ້ນ ບໍ່ກັບໄປທຸກຍາກຄືນ. ຍຸດທະສາດການປົກປ້ອງທາງສັງຄົມແຫ່ງຊາດ ມີຄວາມມຸ່ງຫວັງຊ່ວຍກະຈາຍຜົນປະໂຫຍດຈາກການເຕີບໂຕທາງເສດຖະກິດຄືນໃໝ່ ເພື່ອລຶບລ້າງຄວາມຂາດເຂີນທາງວັດຖຸ ແລະ ດ້ານອື່ນໆ ແລະ ເພື່ອປົກປ້ອງຄົວເຮືອນທີ່ອ່ອນແອບໍ່ໃຫ້ຕົກໄປຢູ່ໃນຄວາມທຸກຍາກ ຫຼື ກັບໄປທຸກຍາກຄືນ.

**ອົງການ IOM ແລະ ອົງການ UNDP ໄດ້ສະໜັບສະໜູນສ້າງລາຍການວິທະຍຸຊຸມຊົນກ່ຽວກັບການເຄື່ອນຍ້າຍແຮງງານແບບປອດໄພ ແລະ ກະຈາຍສຽງ ໃນ 4 ພາສາ (ພາສາລາວ, ພາສາມົ້ງ, ພາສາຂະມຸ ແລະ ພາສາກະຕ່າງ) ໃນ 8 ສະຖານີ ກວມເອົາທັງ 18 ແຂວງ. ຜົນຂອງການສໍາຫຼວດໄດ້ສະແດງໃຫ້ເຫັນວ່າ 58% ຂອງຄົນທີ່ຖືກສໍາພາດ ໄດ້ຟັງ 1 ໃນ 3 ລາຍການວິທະຍຸຊຸມຊົນ ແລະ ປະຈຸບັນກໍມີຄວາມເຂົ້າໃຈທີ່ດີຂຶ້ນ ກ່ຽວກັບການເຄື່ອນຍ້າຍແຮງງານແບບປອດໄພ.**

ອົງການ ILO ໄດ້ມີ ສ່ວນຮ່ວມໃນຄວາມພະຍາຍາມລະດັບຊາດ ເພື່ອໂຮມເອົາຫຼາຍອົງ ປະກອບທີ່ຕ່າງກັນຂອງ ລະບົບປະກັນສຸຂະພາບເຂົ້ານໍາກັນ. ອົງການ ILO ໄດ້ເຮັດວຽກຮ່ວມກັບຄູ່ຮ່ວມງານອື່ນໆ ເພື່ອໃຫ້ຄໍາແນະນໍາ ໃນການອອກແບບ ແລະ ການດໍາເນີນລະບົບປະກັນສຸຂະພາບແຫ່ງ ຊາດແບບໜຶ່ງດຽວ ບົນພື້ນຖານຂອງຫຼັກການຄວາມເທົ່າທຽມກັນ ແລະ ການປົກຄອງທີ່ດີ ເພື່ອຮັບປະກັນການເຂົ້າເຖິງການບໍລິການສຸ ຂະພາບທີ່ບໍ່ແພງ, ມີຄຸນນະພາບ ແລະ ບໍ່ເປັນການສ້າງຄວາມຫຍຸ້ງ ຍາກດ້ານການເງິນ.

ອົງການ UNFPA ໄດ້ຮ່ວມກັບ ທະນາຄານໂລກ ໃຫ້ການສະໜັບ

ສະໜູນດ້ານວິຊາການ  ຕໍ່ກັບ ກະຊວງສາທາລະນະສຸກ ເພື່ອພັດທະນາ "ຊຸດບໍລິການທີ່ຈໍາເປັນ" ລວມທັງການວາງແຜນຄອບຄົວ ເຊິ່ງໄດ້ຖືກຮັບຮອງ ໃນເດືອນຕຸລາ. ອົງການປະກັນສຸຂະພາບແຫ່ງຊາດໄດ້ສໍາເລັດແຜນໄລຍະຍາວ ໃນການກໍານົດຕົ້ນທຶນ ເຊິ່ງຈະກວມເອົາ 121 ກິດຈະກໍາ. ການເກັບກໍາຂໍ້ມູນ ກັບສູນບໍລິການສາທາລະນະສຸກ 47 ແຫ່ງ ໄດ້ເລີ່ມຕົ້ນໃນເດືອນທັນວາ ແລະ ຄາດວ່າບົດລາຍງານຈະສໍາເລັດໃນ ເດືອນມິຖຸນາ 2019.

## ບົດຮຽນທີ່ຖອດຖອນໄດ້ ແລະ ທິດທາງຕໍ່ໜ້າ

ປີ 2019 ຈະເປັນປີທີ່ມີຄວາມໝາຍຄວາມສໍາຄັນຫຼາຍໃນການສົ່ງເສີມການເຊື່ອມສານ ເປົ້າໝາຍການພັດທະນາແບບຍືນຍົງ.  ນອກຈາກ ຈະເລີ່ມຕົ້ນກະກຽມສ້າງແຜນພັດທະນາເສດຖະກິດ – ສັງຄົມແຫ່ງຊາດ ຄັ້ງທີ IX ແລ້ວ, ຫຼາຍພາກສ່ວນກໍ່ກໍາລັງເລີ່ມສ້າງຍຸດທະສາດຂະແໜງການຂອງຕົນ ສໍາລັບຮອບວຽນການວາງແຜນແຫ່ງຊາດໃນຄັ້ງຕໍ່ໄປ (2021-2025). ໃນ 6 ເດືອນທໍາອິດ ຂອງ ປີ 2019, ລັດຖະບານຈະໄດ້ກະກຽມ ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ 11 ຂອງພັກປະຊາຊົນປະຕິວັດລາວ ເຊິ່ງຄາດວ່າຈະຈັດຂຶ້ນໃນປີ 2020.

ການຮ່ວມມືລະຫວ່າງ ອົງການຕ່າງໆພາຍໃນລະບົບ ສປຊ ກໍມີທ່າກ້າວດີຂຶ້ນ ເຊິ່ງສະແດງອອກໃຫ້ເຫັນໄດ້ແຈ້ງ ຈາກການປະກອບສ່ວນ ຂອງອົງການ ສປຊ ໃນການຜັນຂະຫຍາຍ ເປົ້າໝາຍການພັດທະນາແບບຍືນຍົງ ໃຫ້ເຂົ້າກັບສະພາບຕົວຈິງ, ການທົບທວນກາງສະໄໝ ແຜນພັດທະນາເສດຖະກິດ – ສັງຄົມແຫ່ງຊາດ ຄັ້ງທີ VIII  ແລະ ການສົນທະນາດ້ານນະໂຍບາຍໃນກອງປະຊຸມໂຕະມົນ ແລະ ອີກຫຼາຍໂຄງການທີ່ໄດ້ເຮັດຮ່ວມກັນ ເຊັ່ນ: ໂຄງການຫຼຸດຜ່ອນບັນຫາຄວາມຮຸນແຮງບົນພື້ນຖານບົດບາດຍິງ – ຊາຍ ສໍາລັບແຮງງານເຄື່ອນຍ້າຍເພດຍິງ  ຈັດຕັ້ງປະຕິບັດໂດຍ ອົງການ UN Women ຮ່ວມກັບ ILO ແລະ ໂຄງການສົ່ງເສີມປູກຈິດສໍານຶກກ່ຽວກັບ ການເຄື່ອນຍ້າຍແຮງງານແບບປອດໄພ ໂດຍ ອົງການ UNDP ຮ່ວມກັບ IOM.

ເຖິງແມ່ນວ່າການເຕີບໂຕທາງເສດຖະກິດຂອງ ສປປ ລາວ ຈະເຂັ້ມແຂງກໍຕາມ, ໂຄງສ້າງຂອງການຈ້າງງານ ຍັງບໍ່ທັນໄດ້ຮັບການປັບຕົວໃຫ້ເຂົ້າກັບຈັງຫວະຂອງການເຕີບໂຕ ເພື່ອສ້າງວຽກເຮັດງານທໍາທີ່ຢູ່ນອກຂະແໜງກະສິກໍາ. ສະນັ້ນຈະຕ້ອງໄດ້ມີການສຸມຄວາມເອົາໃຈໃສ່ເຂົ້າໃນວຽກງານນີ້ໃຫ້ຫຼາຍຂຶ້ນຕື່ມ.

# ລະເບີດບໍ່ທັນແຕກ

ບົດລາຍງານປະຈຳປີ 2018 ຂອງ ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ

## ອຸບັດຕິເຫດ

ຈຳນວນອຸບັດຕິເຫດທີ່ເກີດຈາກລະເບີດບໍ່ທັນແຕກ ໃນປີ 2018
ໄດ້ຫຼຸດລົງເຫຼືອ 9% ຂອງ ປີ 2008:

ຈາກ 186 — ມາເປັນ 17



2008 — 2018

ຈຳນວນຜູ້ເສຍຊີວິດທີ່ໄດ້ຮັບການລາຍງານ ໃນປີ 2018 ຖືເປັນ
ຕົວເລກຕ່ຳທີ່ສຸດ
ນັບຕັ້ງແຕ່ມີການບັນທຶກເປັນຕົ້ນມາ ແຕ່ປີ 2008:

302 — 24



2008 — 2018

## ການເກັບກູ້ລະເບີດບໍ່ທັນແຕກເພື່ອວຽກງານງານມະນຸດສະທຳ

ຈຳນວນລູກລະເບີດບໍ່ມບີ ທີ່ໄດ້ຮັບການເກັບກູ້ ຕໍ່ ເນື້ອທີ່ດິນໜຶ່ງເຮັກຕາ ໄດ້
ເພີ່ມຂຶ້ນຢ່າງຫຼາຍ ເນື່ອງຈາກມີວິທີການກຳນົດເປົ້າໝາຍໄດ້ດີຂຶ້ນ:

2,996 ເຮັກຕາ — 3,119 ເຮັກຕາ



2010 — 2018




## ການໂຄສະນາສຶກສາກ່ຽວກັບຄວາມສ່ຽງຂອງລະເບີດບໍ່ທັນແຕກ

ໃນປີ 2018 ລາຍການວິທະຍຸ ໄດ້ເຜີຍແຜ່ ຂໍ້ມູນກ່ຽວກັບລະເບີດບໍ່ທັນແຕກ ແລະ ຂໍ້ຄວາມກ່ຽວກັບຄວາມສ່ຽງຂອງລະເບີດບໍ່ທັນແຕກ 8 ຄັ້ງ / ເດືອນ ໃນ 5 ສະຖານີວິທະຍຸ.







ໃນປີ 2018 ອາສາສະໝັກ ຊາວໜຸ່ມບ້ານສຳລັບວຽກງານລະເບີດບໍ່ທັນແຕກ ຈຳນວນ 29 ຄົນ ໄດ້ຮັບການຝຶກອົບຮົມວຽກງານໂຄສະນາສຶກສາຄວາມສ່ຽງຂອງລະເບີດບໍ່ທັນແຕກ.





# 3. ການປ່ຽນແປງດິນຟ້າອາກາດ, ການຄຸ້ມຄອງໄພພິບັດ ແລະ ສິ່ງແວດລ້ອມ

**ປ່າໄມ້ ແລະ ລະບົບນິເວດອື່ນໆ ໄດ້ຮັບການປົກປ້ອງ ແລະ ປັບປຸງໃຫ້ດີຂຶ້ນ ເຮັດໃຫ້ປະຊາຊົນມີຄວາມບອບບາງ ຕໍ່ກັບເຫດການທີ່ຕິດພັນກັບ ການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດ ຕ່າງໆ ຫຼຸດລົງ**






## ທ່າອ່ຽງການພັດທະນາຕົ້ນຕໍ

| ຕົວຊີ້ວັດ | ຂໍ້ມູນທຽບຖານ | ຄາດໝາຍ | ສະຖານະການປະຈຸບັນ |
|---|---|---|---|
| 3.1. ເນື້ອທີ່ປົກຫຸ້ມປ່າໄມ້ | 46% (2015) | 70% (2020) | ການສຳຫຼວດຄັ້ງຕໍ່ໄປ ໃນປີ 2019 |
| 3.2. ຈຳນວນປະຊາກອນທີ່ໄດ້ຮັບຜົນກະທົບໂດຍກົງຈາກໄພພິບັດ ຕໍ່ 100,000 ຄົນ | ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ກຳລັງກຳນົດຂຶ້ນມາ | ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ກຳລັງກຳນົດຂຶ້ນມາ | ມີທັງໝົດ 616,000 ຄົນ ທີ່ໄດ້ຮັບຜົນກະທົບຈາກໄພພິບັດທຳມະຊາດ ຫຼື ເທົ່າກັບ 9,500 ຄົນ / 100,000 ຄົນ |
| 3.3. ມູນຄ່າກະສິກຳ ທີ່ໄດ້ຮັບຜົນກະທົບຈາກໄພພິບັດທຳມະຊາດ ແລະ ການປ່ຽນແປງດິນຟ້າອາກາດ | ກະຊວງກະສິກຳ ແລະ ປ່າໄມ້ ກຳລັງກຳນົດຂຶ້ນມາ | ກະຊວງກະສິກຳ ແລະ ປ່າໄມ້ ກຳລັງກຳນົດຂຶ້ນມາ | – |
| 3.4. (a) ລະດັບຂອງການຊົມໃຊ້ ສານໄຮໂດຼຟູໂອກາກບອນ ແລະ;<br><br>(b) ການລົງນາມ ແລະ ໃຫ້ສັດຕະຍະບັນ ຕໍ່ກັບ ສົນທິສັນຍາ ມີນາມາຕະ ວ່າດ້ວຍ ສານເມີຄິວລີ | (a) ການຊົມໃຊ້ ສານໄຮໂດຼຟູໂອກາກບອນ ທີ່ທຳລາຍຊັ້ນໂອໂຊນ ໃນປະລິມານ 2.3 ໂຕນ (2010);<br><br>(b) ຍັງບໍ່ທັນໄດ້ລົງນາມ ຕໍ່ກັບ ສົນທິສັນຍາ ມີນາມາຕະ ວ່າດ້ວຍ ສານເມີຄິວລີ (2010) | (a) ການຊົມໃຊ້ ສານໄຮໂດຼຟູໂອກາກບອນ ທີ່ທຳລາຍຊັ້ນໂອໂຊນ ໃນປະລິມານ 1.5 ໂຕນ (2020);<br><br>(b) ສົນທິສັນຍາ ມີນາມາຕະ ວ່າດ້ວຍ ສານເມີຄິວລີ ໄດ້ຮັບການລົງນາມ ແລະ ໃຫ້ສັດຕະຍະບັນ (2021) | (a) –<br><br>(b) ໃຫ້ສັດຕະຍະບັນ ຕັ້ງແຕ່ປີ 2017 |

ສປປ ລາວ ກາຍເປັນປະເທດທຳອິດ ໃນ ASEAN ທີ່ໄດ້ໃຫ້ສັດຕະຍະບັນ ສັນຍາປາຣີ ພາຍໃຕ້ ສົນທິສັນຍາສາກົນວ່າດ້ວຍການປ່ຽນແປງດິນຟ້າອາກາດແຫ່ງສະຫະປະຊາຊາດ (UNFCCC) ໂດຍຮັບຮອງເອົາ ແຜນງານແຫ່ງຊາດ ການປະກອບສວ່ນແກ້ໄຂບັນຫາການປ່ຽນແປງ ດິນຟ້າອາກາດ (INDC). ສປປ ລາວ ໄດ້ສູນເສຍ ເນື້ອທີ່ປົກຫຸ້ມປ່າໄມ້ຢ່າງຫຼວງຫຼາຍໃນທົດສະຫວັດທີ່ຜ່ານມາ ເຊິ່ງສົ່ງຜົນກະທົບດ້ານລົບ ຕໍ່ກັບການປ່ອຍທາດອາຍເຮືອນແກ້ວ. ເຖິງແມ່ນວ່າ ການປະກອບສ່ວນຂອງ ສປປ ລາວ ຕໍ່ກັບການປ່ອຍທາດອາຍເຮືອນແກ້ວ ໃນລະດັບໂລກ ຈະມີພຽງໜ້ອຍດຽວກໍຕາມ, ລັດຖະບານມີຄວາມມຸ້ງໝັ້ນ ທີ່ຈະມີສ່ວນຮ່ວມໃນການປ່ຽນແປງ ທ່າອ່ຽງຂອງການປ່ອຍ ທາດອາຍເຮືອນແກ້ວໃນໂລກ ເຊິ່ງໄດ້ລວມເອົາແຜນວຽກດ້ານການ ປ່ຽນແປງດິນຟ້າອາກາດ ເຊື່ອມເຂົ້າໃນບັນດາແຜນ ແລະ ຍຸດທະສາດຂອງປະເທດ.[1]

ການແກ້ໄຂບັນຫາການຕັດໄມ້ທຳລາຍປ່າ, ປ່າເຊື່ອມໂຊມ ແລະ ການສູນເສຍທາງຊີວະນາໆພັນ ຖືເປັນບູລິມະສິດແຫ່ງຊາດ. ລັດຖະບານ ສປປ ລາວ ໄດ້ຕັ້ງເປົ້າໝາຍເພີ່ມການປົກຫຸ້ມຂອງປ່າໄມ້ໃຫ້ໄດ້ 70% ໃນປີ 2020, ເສີມສ້າງຄວາມທົນທານຂອງຂະແໜງກະສິກຳ, ອະນຸລັກ ແລະ ຟື້ນຟູຄືນ ລະບົບນິເວດເທິງບົກ ແລະ ລະບົບນິເວດນ້ຳຈືດທີ່ມີຄຸນຄ່າ.

ການຊ່ວຍເຫຼືອໃນຄວາມພະຍາຍາມຂອງລັດຖະບານ ໃນການປັບປຸງກົດໝາຍວ່າດ້ວຍປ່າໄມ້ ແມ່ນກຳລັງດຳເນີນຢູ່ ເຊິ່ງມີການທົບທວນຄືນໃນຫຼາຍໆດ້ານຂອງກົດໝາຍ ລວມທັງມີການອ້າງອີງເຖິງ ແຜນງານຈັດຕັ້ງປະຕິບັດກົດໝາຍປ່າໄມ້, ການຄຸ້ມຄອງ ແລະ ການຄ້າໄມ້ (FLEGT) ເພື່ອກຳນົດຄວາມຖືກຕ້ອງທາງກົດໝາຍຂອງປ່າໄມ້. ປະຈຸບັນ ໄດ້ມີການຫ້າມຕັດໄມ້ຈາກປ່າ ແລະ ລັດຖະບານກໍມີຄວາມສົນໃຈ ເປີດກ້ວາງການເພີ່ມຜົນຜະລິດຂອງປ່າປູກໃຫ້ໄດ້ຫຼາຍຂຶ້ນ. ການດັດແກ້ກົດໝາຍວ່າດ້ວຍປ່າໄມ້ ແມ່ນມີເປົ້າໝາຍເພື່ອສ້າງຄວາມສົມດູນລະຫວ່າງ ເປົ້າໝາຍການຜະລິດ ແລະ ເປົ້າໝາຍການອະນຸລັກ.

ການຈັດຕັ້ງປະຕິບັດ ຄຳສັ່ງນາຍົກລັດຖະມົນຕີ ເລກທີ 15 / ນຍ (2016) ວ່າດ້ວຍການເພີ່ມທະວີຄວາມເຂັ້ມງວດ ໃນການຄຸ້ມຄອງ ແລະ ກວດກາ ການຂຸດຄົ້ນໄມ້, ເຄື່ອນຍ້າຍໄມ້ ແລະ ທຸລະກິດໄມ້ ເຊິ່ງມີການຫ້າມຕັດໄມ້ໃນປ່າຜະລິດ ແມ່ນມີປະສິດທິຜົນສູງ. ການປະຕິຮູບການຄຸ້ມຄອງປ່າໄມ້ ມີຈຸດປະສົງເພື່ອນຳໃຊ້ຕົວແບບການຄຸ້ມຄອງປ່າໄມ້ແບບມີສ່ວນຮ່ວມຫຼາຍຂຶ້ນ ລວມທັງລະບົບການຢັ້ງຢືນ ແລະ ຮັບຮອງຜະລິດຕະພັນໄມ້ທີ່ຖືກຕ້ອງຕາມກົດໝາຍ. ລັດຖະບານ ໄດ້ຄາດຄະເນວ່າ ເນື້ອທີ່ປົກຫຸ້ມປ່າໄມ້ໃນປະຈຸບັນແມ່ນບັນລຸໄດ້ເກືອບ 60% ແລ້ວ, ແຕ່ເຖິງຢ່າງໃດກໍຕາມ ຕົວເລກນີ້ຈະຕ້ອງໄດ້ຮັບການຢືນຢັນຈາກການສຳຫຼວດຂໍ້ມູນຕົວຈິງ. ສປປ ລາວ ມີຄວາມຄືບໜ້າໃນການພັດທະນາຍຸດທະສາດ ແລະ ແຜນງານ REDD+ ສຳລັບປະເທດ ແລະ ກຳລັງສ້າງໂຄງການຂຶ້ນມາ ເພື່ອຍື່ນໃຫ້ກັບ ກອງທຶນສີຂຽວດ້ານການປ່ຽນແປງດິນຟ້າອາກາດ.

ໃນຕົ້ນປີ 2018 ລັດຖະບານ ໄດ້ປະກາດ ດຳລັດນາຍົກລັດຖະມົນຕີ ເລກທີ 05 / ນຍ ວ່າດ້ວຍການຄຸ້ມຄອງ ແລະ ການກວດສອບ ພັນພືດສັດປ່າປະເພດຫວງຫ້າມ ເຊິ່ງເປັນບາດກ້າວໜຶ່ງທີ່ສຳຄັນ ໃນການຕໍ່ສູ້ກັບການຄ້າຂາຍສັດປ່າຜິດກົດໝາຍ. ນອກຈາກນັ້ນ, ສະພາແຫ່ງຊາດ ຍັງໄດ້ຮັບຮອງເອົາ ປະມວນກົດໝາຍອາຍາສະບັບປັບປຸງ

> **“ ໄພນ້ຳຖ້ວມ ໃນລະຫວ່າງ ເດືອນກໍລະກົດ ຫາເດືອນກັນຍາ ໄດ້ສ້າງໃຫ້ມີເຫດການສຸກເສີນທີ່ໃຫຍ່ທີ່ສຸດ ໃນປະຫວັດສາດຂອງ ສປປ ລາວ – ທີມງານມະນຸດສະທຳລະດັບປະເທດ ໄດ້ນຳສະເໜີແຜນຕອບໂຕ້ໄພພິບັດ ເຊິ່ງມີມູນຄ່າ US$ 43 ລ້ານ. ແຜນຕອບໂຕ້ດັ່ງກ່າວ ແມ່ນເພີ່ມເຕີມເຂົ້າໃສ່ ການຕອບໂຕ້ໄພພິບັດ ໃນທົ່ວປະເທດຂອງລັດຖະບານ ເພື່ອໃຫ້ການຊ່ວຍເຫຼືອຊີວິດປະຊາຊົນ ທີ່ໄດ້ຮັບຜົນກະທົບ ຈາກໄພນ້ຳຖ້ວມ ແລະ ສ້າງສິ່ງອຳນວຍຄວາມສະດວກຂັ້ນພື້ນຖານຄືນໃໝ່,ສະໜັບສະໜູນ ການຟື້ນຟູຊີວິການເປັນຢູ່ ແລະ ການຊ່ວຍເຫຼືອຕົນເອງ,ໃຫ້ຄວາມປອດໄພ ແລະ ການປົກປ້ອງ ປະຊາຊົນທີ່ມີຄວາມສ່ຽງ. ”**

ເຊິ່ງໄດ້ລະບຸວ່າ ການຄ້າຂາຍສັດປ່າຜິດກົດໝາຍ ຖືເປັນຄວາມຜິດທາງອາຍາ ເຊິ່ງມີການປັບໄໝ ແລະ ລົງໂທດຢ່າງເຂັ້ມງວດ. ບັນຫາການຄ້າ ຂາຍ ສັດປ່າຜິດກົດໝາຍ ຍັງສືບຕໍ່ເປັນບັນຫາທີ່ໄດ້ຖືກນຳສະເໜີໂດຍສື່ ມວນຊົນ ແລະ ບາງຄັ້ງກໍສາມາດຈັບກຸມສະມາຊິກຂອງເຄືອຂ່າຍ ການຄ້າສັດປ່າຜິດກົດໝາຍໄດ້.

ສປປ ລາວ ປະເຊີນກັບປະກົດການທາງສະພາບອາກາດ, ທາງອຸທົກກະສາດ ແລະ ທາງທໍລະນີວິທະຍາຫຼາຍອັນ ລວມທັງ ພາຍຸໄຕ້ຝຸ່ນ, ນ້ຳຖ້ວມ, ດິນເຈື່ອນ, ແຫ້ງແລ້ງ, ລົມແຮງ ແລະ ແຜ່ນດິນໄຫວຂະໜາດນ້ອຍທີ່ເກີດຂຶ້ນໃນພາກເໜືອຂອງປະເທດ. ໃນຊຸມປີຜ່ານມາ ຄວາມຖີ່ ແລະ ຄວາມຮຸນແຮງຂອງເຫດການສະພາບອາກາດຮຸນແຮງ ເຊັ່ນ: ແຫ້ງແລ້ງ ແລະ ນ້ຳຖ້ວມ ໄດ້ເພີ່ມຫຼາຍຂຶ້ນ ເຊິ່ງນ້ຳຖ້ວມສ່ວນໃຫຍ່ມັກຈະເກີດຂຶ້ນຕາມທົ່ງພຽງລຽບແມ່ນ້ຳຂອງ ໃນເຂດພາກກາງ ແລະ ພາກໃຕ້ຂອງປະເທດ.

ໃນລະຫວ່າງເດືອນກໍລະກົດ ແລະ ກັນຍາ 2018, ສປປ ລາວ ໄດ້ປະສົບກັບໄພນ້ຳຖ້ວມໃນວົງກ້ວາງ ເຊິ່ງສົ່ງຜົນກະທົບຢ່າງໜັກຕໍ່ກັບປະຊາຊົນ ແລະ ເສດຖະກິດ. ໃນວັນທີ 18-19 ກໍລະກົດ, ພາຍຸເຂດຮ້ອນ ເຊີນຕິນ ໄດ້ເຮັດໃຫ້ມີຝົນຕົກໜັກ ແລະ ນ້ຳຖ້ວມ ໃນ 55 ເມືອງ ຂອງ 13 ແຂວງ ໃນທົ່ວປະເທດ. ໃນຄືນວັນທີ 23 ກໍລະກົດ ຄູກັນນ້ຳອ່າງເກັບນ້ຳ ຂອງເຂື່ອນເຊປຽນ – ເຊນ້ຳນ້ອຍ ໄດ້ແຕກລົງ ເຮັດໃຫ້ມີນ້ຳຖ້ວມສຸແບບທີ່ບໍ່ເຄີຍມີມາກ່ອນ ໃນແຂວງອັດຕະປື ເຊິ່ງນ້ຳໄດ້ໄຫຼຖ້ວມເນື້ອທີ່ດິນປະມານ 55,000 ເຮັກຕາ ເຮັດໃຫ້ຖືກປົກຄຸມດ້ວຍດິນຕົມ ແລະ ຫຼາຍກ່ວາ 6,000 ຄົນ ບໍ່ມີເຮືອນຢູ່. ໃນເວລາ ບໍ່ຮອດໜຶ່ງເດືອນຕໍ່ມາ ໃນວັນທີ 16-18 ສິງຫາ ພາຍຸເຂດຮ້ອນ ເບບິນກາ ໄດ້ພາໃຫ້ເກີດນ້ຳຖ້ວມ ແລະ ສ້າງຜົນເສຍຫາຍ ໃນທົ່ວທຸກແຂວງຂອງ ສປປ ລາວ ສົ່ງຜົນກະທົບກັບ 116 ເມືອງ ແລະ 2,400 ບ້ານ. ຜົນກະທົບທີ່ເກີດຂຶ້ນ ລວມມີດິນເຈື່ອນ ເຊິ່ງສ້າງຄວາມເສຍຫາຍໃຫ້ກັບເຮືອນຊານ ແລະ ພື້ນຖານໂຄງລ່າງ ພ້ອມກັບສູນເສຍພື້ນທີ່ການຜະລິດກະສິກຳ ແລະ ການທຳມາຫາກິນ. ເຫດການນ້ຳຖ້ວມໃນກາງເດືອນຕຸລາ ໄດ້ສົ່ງຜົນກະທົບ ຕໍ່ກັບປະມານ 2,382 ບ້ານ ແລະ 126,736 ຄົວເຮືອນ, ຄິດເປັນປະຊາກອນທີ່ໄດ້ຮັບຜົນກະທົບທັງໝົດ 616,145 ຄົນ ໃນ 18 ແຂວງ

1 ລວມເຂົ້າໃນແຜນພັດທະນາເສດຖະກິດ–ສັງຄົມແຫ່ງຊາດຄັ້ງທີ VII ແລະ VIII (ໄລຍະ 2011-2015 ແລະ ໄລຍະ 2016-2021); ວິໄສທັດຮອດປີ 2030; ຍຸດທະສາດການປ່ຽນແປງດິນຟ້າອາກາດແຫ່ງຊາດ (2010); ຍຸດທະສາດປ່າໄມ້ຂອງ ສປປ ລາວ ຮອດປີ 2020 (2005); ຍຸດທະສາດການພັດທະນາພະລັງງານທົດແທນ (2011); ຍຸດທະສາດການພັດທະນາຂົນສົ່ງແບບຍືນຍົງ (2010), ແຜນດຳເນີນງານແຫ່ງຊາດວ່າດ້ວຍການປ່ຽນແປງດິນຟ້າອາກາດ ໄລຍະ 2013-2020 (2013), ແຜນດຳເນີນງານແຫ່ງຊາດ ໃນການປັບຕົວເຂົ້າກັບສະພາບການປ່ຽນແປງດິນຟ້າອາກາດ (2009), ບົດສື່ສານແຫ່ງຊາດກ່ຽວກັບການປ່ຽນແປງດິນຟ້າອາກາດສະບັບທີສອງໃຫ້ກັບ UNFCCC (2013), ການລົງທຶນແລະການໄຫຼວຽນທາງການເງິນເພື່ອແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ ໃນຂະແໜງພະລັງງານ, ກະສິກຳ ແລະ ນ້ຳ (2015).

ທົ່ວປະເທດ. ລະບົບນໍ້າປະປາ ແລະ ສຸຂາພິບານໄດ້ຮັບຜົນກະທົບຢ່າງໜັກ ຈາກພາຍຸໄຕ້ຝຸ່ນ ແລະ ນໍ້າຖ້ວມໃນໄລຍະ ເດືອນມິຖຸນາ ຫາເດືອນ ກັນຍາ 2018. ມີເຮືອນທັງໝົດ 1,620 ຫຼັງ ທີ່ໄດ້ຮັບການປະເມີນວ່າຖືກທຳລາຍ ແລະ ອີກ 680 ຫຼັງ ໄດ້ຮັບຄວາມເສຍຫາຍ.

ລັດຖະບານ ໄດ້ຂໍການຊ່ວຍເຫຼືອຈາກ ທະນາຄານໂລກ, ສະຫະພາບເອີຣົບ ແລະ ອົງການ ສປຊ ເພື່ອຊ່ວຍສະໜັບສະໜູນ ການປະເມີນຄວາມຕ້ອງການຫຼັງເກີດໄພພິບັດ (PDNA) ເຊິ່ງປະເມີນຄວາມເສຍຫາຍ ແລະ ຄວາມສູນເສຍທາງເສດຖະກິດ ໃນຂະແໜງ ການຜະລິດ, ພື້ນຖານໂຄງລ່າງ, ຂະແໜງສັງຄົມ ແລະ ກວມຫຼາຍຂະແໜງການ. ຜົນຂອງການປະເມີນ PDNA ໄດ້ຄາດຄະເນຄວາມເສຍຫາຍ ຢູ່ທີ່ US$ 147 ລ້ານ ແລະ ຄວາມສູນເສຍ US$ 225 ລ້ານ, ເມື່ອລວມເອົາເຂົ້າກັນແລ້ວ ຈະເຮັດໃຫ້ຜົນກະທົບຈາກໄພພິບັດມີມູນຄ່າເຖິງ US$ 371 ລ້ານ. ຄວາມຕ້ອງການໃນການຟື້ນຟູຄືນໃນໄລຍະສັ້ນ, ກາງ ແລະ ຍາວ ໃນທົ່ວທຸກ ຂະແໜງການຄາດວ່າຈະມີມູນຄ່າຫຼາຍກວ່າ US$ 520 ລ້ານ. ການປະເມີນ PDNA ຍັງໄດ້ລວມເອົາ ມາດຕະການຟື້ນຟູໄພພິບັດ ເຊິ່ງໄດ້ກຳນົດເອົາທິດທາງໃນຕໍ່ໜ້າ ດ້ານນະໂຍບາຍ, ດ້ານອົງການຈັດຕັ້ງ, ດ້ານການເງິນ ແລະ ການຈັດຕັ້ງປະຕິບັດຄວາມພະຍາຍາມໃນການຟື້ນຟູຄືນ.

## ຜົນໄດ້ຮັບ

<u>ເສີມສ້າງຄວາມສາມາດໃນການກຽມຄວາມພ້ອມ, ການຕອບໂຕ້ ແລະ ການຟື້ນຟູຄືນຈາກໄພພິບັດ</u>

ໄພນໍ້າຖ້ວມໃນເດືອນກໍລະກົດ ຫາເດືອນກັນຍາ ໄດ້ສ້າງໃຫ້ມີເຫດການສຸກເສີນທີ່ໃຫຍ່ທີ່ສຸດ ໃນປະຫວັດສາດຂອງ ສປປ ລາວ – ທີມງານມະນຸດສະທຳລະດັບປະເທດ ໄດ້ນຳສະເໜີແຜນຕອບໂຕ້ໄພພິບັດ ເຊິ່ງມີມູນຄ່າ US$ 43 ລ້ານ. ແຜນຕອບໂຕ້ດັ່ງກ່າວ ເພີ່ມເຕີມເຂົ້າໃສ່ ການຕອບໂຕ້ໄພພິບັດໃນທົ່ວປະເທດຂອງລັດຖະບານ ເພື່ອໃຫ້ການຊ່ວຍເຫຼືອຊີວິດປະຊາຊົນຈາກນໍ້າຖ້ວມ, ສ້າງສິ່ງອຳນວຍຄວາມສະດວກພື້ນຖານຄືນໃໝ່, ສະໜັບສະໜູນການຟື້ນຟູຊີວິດການເປັນຢູ່ ແລະ ການຊ່ວຍເຫຼືອຕົນເອງ, ໃຫ້ຄວາມປອດໄພ ແລະ ການປົກປ້ອງປະຊາຊົນທີ່ມີຄວາມສ່ຽງ. ມາຮອດ ເດືອນຕຸລາ ອົງການ ສປຊ ສາມາດລະດົມທຶນຮອນໄດ້ປະມານ US$ 8 ລ້ານ ລວມທັງ US$ 3.5 ລ້ານ ຈາກ ກອງທຶນຕອບໂຕ້ສຸກເສີນແຫ່ງສະຫະປະຊາຊາດ ແລະ ການປະກອບສ່ວນຈາກການຮ່ວມມືສອງຝ່າຍ ເພື່ອຈັດຕັ້ງປະຕິບັດໂດຍ ອົງການ FAO, UNDP, WFP ແລະ WHO ໃນແຂວງຄຳມ່ວນ.

ຫຼັງຈາກເກີດນໍ້າຖ້ວມສຸໃນແຂວງອັດຕະປື, ອົງການ WFP ແລະ FAO ໄດ້ໃຫ້ການສະໜັບສະໜູນ ກະຊວງກະສິກຳ ແລະ ປ່າໄມ້ ເພື່ອຮ່ວມກັນເຮັດການປະເມີນແບບເລັ່ງລັດກ່ຽວກັບ ການຄໍ້າປະກັນສະບຽງອາຫານ ແລະ ການຜະລິດກະສິກຳ ໃນຫຼາຍເມືອງ. ການປະເມີນ ໄດ້ໃຫ້ຂໍ້ມູນທີ່ສຳຄັນ ເພື່ອຕອບສະໜອງຄວາມຕ້ອງການຂອງປະຊາຊົນທີ່ໄດ້ຮັບຜົນກະທົບໃຫ້ທັນເວລາ ແລະ ໃຫ້ຂໍ້ມູນທີ່ຊັດເຈນໃນການປະເມີນຄວາມຕ້ອງການຫຼັງເກີດໄພພິບັດ ເຊິ່ງມີກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນຜູ້ນຳພາໂດຍການສະໜັບສະໜູນຈາກ ກຸ່ມພັດທະນາແຫ່ງສະຫະປະຊາຊາດ, ທະນາຄານໂລກ, ສະຫະພາບເອີຣົບ ແລະ ຄູ່ຮ່ວມງານຈາກ INGOs.

ອົງການ WFP ໄດ້ຊ່ວຍເຫຼືອເຂົ້າກິນຈຳນວນ 249 ໂຕນ, ນໍ້າມັນ 6 ໂຕນ ແລະ ອາຫານເສີມ ນິທຣີບັດເຕີ 7 ໂຕນ ໃຫ້ກັບ ແຂວງອັດຕະປື ແລະ ເງິນອີກຈຳນວນ US$ 1.7 ລ້ານ ສຳລັບການສະໜັບສະໜູນເງິນຊ່ວຍເຫຼືອແບບບໍ່ມີເງື່ອນໄຂ ໃຫ້ກັບແຂວງຄຳມ່ວນ ພາຍໃຕ້ກອງທຶນຕອບໂຕ້ສຸກເສີນແຫ່ງສະຫະປະຊາຊາດ. ອົງການ WFP ຍັງໄດ້ເຮັດວຽກຮ່ວມກັບ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ແລະ ອົງການກາແດງລາວ ເພື່ອເສີມສ້າງຄວາມສາມາດໃນການແຈກຢາຍອາຫານ ແລະ ເງິນຊ່ວຍເຫຼືອໃນຍາມສຸກເສີນ, ການຄຸ້ມຄອງວຽກງານພາລະທິການໃນເວລາສຸກເສີນ ລວມມີການເກັບຮັກສາເຄື່ອງໃນສາງ ແລະ ການຂົນສົ່ງ. ອົງການ WFP ກຳລັງສືບຕໍ່ໃຫ້ການຊ່ວຍເຫຼືອດ້ານພາລະທິການ ສຳລັບ ເຂົ້າກິນ 1,000 ໂຕນ ຈາກ ຄັງເຂົ້າສຳຮອງສຸກເສີນຂອງ ASEAN + 3 ເພື່ອນຳໄປແຈກຢາຍໃນເມືອງເປົ້າໝາຍຂອງແຂວງອັດຕະປື. ເນື່ອງຈາກເປັນຜູ້ນຳ ໃນຂະແໜງ WASH, ອົງການ UNICEF ໄດ້ມີການຕອບໂຕ້ສຸກເສີນເຊັ່ນກັນ ໂດຍເຮັດວຽກຮ່ວມກັບລັດຖະບານສະໜອງເຄື່ອງຊ່ວຍຊີວິດ ລວມມີ: ຄຸນໍ້າ, ຖັງເກັບຂອງແຫຼວ, ຜ້າກັນນໍ້າ, ເມັດຢາບຳບັດນໍ້າ ແລະ ສະບູ ໃຫ້ກັບປະຊາຊົນທີ່ໄດ້ຮັບຜົນກະທົບ ຫຼາຍກວ່າ 7,000 ຄົນ ໃນເຂດທີ່ພັກອາໄສຊົ່ວຄາວ. ອົງການ UNICEF ຍັງໃຫ້ການສະໜັບສະໜູນຕໍ່ກັບ ລັດຖະບານ ເພື່ອຊ່ວຍໃຫ້ປະຊາຊົນທີ່ໄດ້ຮັບຜົນກະທົບ ໃຫ້ສາມາດເຂົ້າເຖິງແຫຼ່ງນໍ້າສະອາດ, ວິດຖ່າຍ ແລະ ຫ້ອງອາບນໍ້າ ໃນສະຖານທີ່ພັກອາໄສທີ່ຕັ້ງຂຶ້ນມາ 6 ແຫ່ງ.

> **“ ຫຼັງຈາກເກີດນໍ້າຖ້ວມສຸໃນແຂວງອັດຕະປື, ອົງການ WFP ແລະ FAO ໄດ້ໃຫ້ການສະໜັບສະໜູນ ກະຊວງກະສິກຳ ແລະ ປ່າໄມ້ ເພື່ອຮ່ວມ ກັນເຮັດການປະເມີນແບບເລັ່ງລັດກ່ຽວກັບການຄໍ້າປະກັນສະບຽງອາຫານ ແລະ ການຜະລິດກະສິກຳ ໃນຫຼາຍເມືອງ. ”**

ໂດຍການຮ່ວມມືກັບ ພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ, ອົງການ IOM ໄດ້ສະໜອງ ຜ້າຫົ່ມຈຳນວນ 943 ຜືນ, ຊຸດເຄື່ອງມືປົວແປງທີ່ຢູ່ອາໄສ 360 ຊຸດ ແລະ ສັງກະສີ 5,000 ແຜ່ນ ສຳລັບເຮືອນຄົວລວມ ໃນບ່ອນທີ່ພັກຊົ່ວຄາວ. ນອກຈາກນັ້ນ ອົງການ IOM ຍັງໄດ້ສ້າງຄວາມສາມາດໃຫ້ກັບ ພະນັກງານລັດ ແລະ ຜູ້ຈັດການແຄ້ມທີ່ພັກ ກ່ຽວກັບການບັນທຶກຕິດຕາມການເຄື່ອນຍ້າຍຂອງປະຊາຊົນ, ການປະສານງານ ແລະ ການຄຸ້ມຄອງແຄ້ມທີ່ພັກ ແລະ ການເຮັດວຽກຮ່ວມກັບ ອາສາສະໝັກຂັ້ນບ້ານ ເພື່ອເຜີຍແຜ່ຂໍ້ຄວາມ "ການສ້າງຄືນໃໝ່ໃຫ້ປອດໄພກວ່າເກົ່າ" ໃຫ້ກັບທຸກຄົວເຮືອນ ທີ່ໄດ້ຮັບຊຸດເຄື່ອງມືປົວແປງທີ່ຢູ່ອາໄສ. ອົງການ IOM ຍັງໄດ້ເຮັດ ບົດລາຍງານການປະເມີນທີ່ພັກອາໄສຊົ່ວຄາວ 3 ບົດລາຍງານ ໂດຍການນຳໃຊ້ຕາຕະລາງຕິດຕາມການເຄື່ອນຍ້າຍຂອງປະຊາຊົນ.

ມີການສະໜັບສະໜູນການສ້າງຄວາມສາມາດ ໃຫ້ກັບສູນປະຕິບັດການຕອບໂຕ້ສຸກເສີນ. ເຖິງວ່າ ບົດລາຍງານການປະເມີນຄວາມຕ້ອງການຫຼັງເກີດໄພພິບັດ ຈະຊີ້ໃຫ້ເຫັນວ່າ ຂະແໜງກະສິກຳ ແລະ ພື້ນຖານໂຄງລ່າງການຂົນສົ່ງ ໄດ້ຮັບຜົນກະທົບໜັກທີ່ສຸດ, ແຕ່ເຮືອນຊານ ແລະ ທີ່ຢູ່ອາໄສ ກໍໄດ້ຮັບຜົນກະທົບຢ່າງໜັກເຊັ່ນດຽວກັນ ເຊິ່ງມີຄວາມເສຍຫາຍຫຼາຍ ໃນ 11 ແຂວງ. ເຖິງແມ່ນວ່າລະດັບຄວາມເສຍຫາຍຈະແຕກຕ່າງກັນໄປໃນແຕ່ລະແຂວງກໍຕາມ, ແຕ່ຄວາມເສຍຫາຍແມ່ນມີຂ້ອນຂ້າງສູງໃນແຂວງພາກໃຕ້ ເຊັ່ນ: ແຂວງອັດຕະປື ແລະ ແຂວງພາກເໜືອ ເຊັ່ນ: ແຂວງອຸດົມໄຊ, ຫຼວງພະບາງ ແລະ ຊຽງຂວາງ. ໃນຂອບວຽກຂອງການຊ່ວຍເຫຼືອສຸກເສີນດ້ານກະສິກຳໃຫ້ກັບຊຸມຊົນທີ່ໄດ້ຮັບຜົນກະທົບ ໃນແຂວງຄຳມ່ວນນັ້ນ, ອົງການ FAO ກຳລັງສຸມໃສ່ ສອງກຸ່ມເປົ້າໝາຍຫຼັກ ຄື: ຄົວເຮືອນທີ່ມີຊົນລະປະທານໃຊ້ໃນຊ່ວງລະດູແລ້ງ ຈະໄດ້ຮັບແນວພັນເຂົ້າ ແລະ ປຸຍ; ສຳລັບຄົວເຮືອນທີ່ມີເນື້ອທີ່ທຳການຜະລິດພຽງໜ້ອຍ

ດຽວ ຫຼື ບໍ່ມີເລີຍ ຈະໄດ້ຮັບແນວພັນສາລີ ແລະ ແກ່ນຜັກເພື່ອເອົາໄປປູກ. ນອກຈາກນັ້ນຍັງມີການຈັດຝຶກອົບຮົມແນະນຳລະບົບການນຳໃຊ້ໃບບິນ ໃຫ້ກັບກຸ່ມຜູ້ຜະລິດ ແລະ ພໍ່ຄ້າ ພ້ອມກັບແຈກຢາຍໃບບິນສຳລັບແນວພັນ.

ນອກເໜືອຈາກການຊ່ວຍເຫຼືອຕອບໂຕ້ສຸກເສີນແລ້ວ, ອົງການ WFP, FAO, UNICEF, ILO ແລະ UNIDSR ກຳລັງຈັດຕັ້ງປະຕິບັດແຜນງານຮ່ວມກັນ ເພື່ອເສີມສ້າງຄວາມເຂັ້ມແຂງໃຫ້ກັບປະເທດສະມາຊິກຂອງ ASEAN ໃນການອອກແບບ ແລະ ຈັດຕັ້ງປະຕິບັດ ລະບົບການປົກປ້ອງທາງສັງຄົມທີ່ເຂົ້າໃຈຄວາມສ່ຽງ ແລະ ຕອບສະໜອງຕໍ່ກັບຜົນກະທົບຕົວຈິງ ເພື່ອສ້າງຄວາມທົນທານໃຫ້ສູງຂຶ້ນ. ສຳລັບໂຄງການລະດັບພາກພື້ນນີ້, ອົງການ WFP ໄດ້ສະໜັບສະໜູນ ການຂຽນກົລະນີສຶກສາຂອງ ສປປ ລາວ ຂຶ້ນມາ ເຊິ່ງຮວບຮວມເອົາ ກິດຈະກຳປົກປ້ອງທາງສັງຄົມທີ່ມີຢູ່ໃນປະເທດ ໂດຍເນັ້ນໃຫ້ເຫັນຄວາມຈຳເປັນອັນສະເພາະ ໃນການເສີມຂະຫຍາຍກົນໄກການຕອບໂຕ້ແຫ່ງຊາດ ແລະ ການສ້າງຄວາມອາດສາມາດ.

## ສ້າງຄວາມສາມາດໃຫ້ເຂັ້ມແຂງ ເພື່ອເສີມຂະຫຍາຍຄວາມທົນທານຕໍ່ກັບການປ່ຽນແປງດິນຟ້າອາກາດ

ລັດຖະບານໄດ້ສຸມໃສ່ວຽກງານການປ່ຽນແປງດິນຟ້າອາກາດໃນຫຼາຍດ້ານພ້ອມໆກັນ. ກົດໝາຍວ່າດ້ວຍ ອຸຕຸນິຍົມ ແລະ ອຸທົກກະສາດ ໄດ້ຖືກຮັບຮອງ ໃນ ເດືອນທັນວາ 2017 ເພື່ອເປັນລະບຽບການສຳລັບການແລກປ່ຽນ ແລະ ນຳໃຊ້ຂໍ້ມູນ. ອົງການ UNDP ຮ່ວມກັບ ADB ແລະ IFRC ໄດ້ສືບຕໍ່ສະໜັບສະໜູນ ລັດຖະບານ ໃນການຮ່າງ ກົດໝາຍວ່າດ້ວຍການຄຸ້ມຄອງໄພພິບັດ ເຊິ່ງຄາດວ່າຈະໄດ້ປະກາດໃຊ້ໃນກາງປີ 2019 ນີ້. ນອກຈາກນັ້ນ ທັງ 3 ອົງການນີ້ຍັງໄດ້ສືບຕໍ່ສະໜັບສະໜູນ ລັດຖະບານ ໃນການຮ່າງ ດຳລັດວ່າດ້ວຍການປ່ຽນແປງດິນຟ້າອາກາດ ເຊິ່ງຄາດວ່າຈະໄດ້ປະກາດໃຊ້ໃນທ້າຍປີ 2019.

ອົງການ FAO ກຳລັງໃຫ້ການຊ່ວຍເຫຼືອການອອກແບບລະບົບແຈ້ງເຕືອນໄພລ່ວງໜ້າສຳລັບວຽກອຸຕຸກະເສດ ໃຫ້ກາຍເປັນລະບົບດຽວທີ່ກວມເອົາທັງກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ກະຊວງກະສິກຳ ແລະ ປ່າໄມ້ ເຊິ່ງເປັນສ່ວນໜຶ່ງໃນແຜນແມ່ບົດລວມຂອງ ກົມອຸຕຸນິຍົມ ແລະ ອຸທົກກະສາດ ພາຍໃຕ້ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ. ອົງການ FAO ໄດ້ຮ່ວມມືກັບ ທະນາຄານໂລກ ແລະ ສູນຄົ້ນຄວ້າກະສິກຳເຂດຮ້ອນ ສ້າງຄວາມເຂັ້ມແຂງດ້ານລະບົບຂໍ້ມູນຂ່າວສານ ແລະ ການຕິດຕາມສະພາບອຸຕຸກະເສດ ເພື່ອຊ່ວຍໃນການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ແລະ ການຄ້ຳປະກັນສະບຽງອາຫານ. ເຄືອຂ່າຍສະຖານີອຸຕຸກະເສດ ກຳລັງໄດ້ຮັບການປັບປຸງ ແລະ ສ້ອມແປງຄືນໃໝ່ ເຊິ່ງກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໄດ້ຕັ້ງເປົ້າສ້າງສະຖານີອັດຕະໂນມັດໃຫ້ໄດ້ 101 ສະຖານີ ໃນປີ 2021. ໃນເດືອນພະຈິກ 2018, ມີການເປີດຫ້ອງແລບ ສຳລັບວິເຄາະ ແລະ ຄິດໄລ່ຂໍ້ມູນອຸຕຸກະເສດ, ຂໍ້ມູນທາງພື້ນທີ່, ການຕິດຕາມ ແລະ ການຄຳນວນຜົນ ແລະ ຈະເລີ່ມຜະລິດ ພະຍາກອນອາກາດສຳລັບວຽກງານກະເສດ ໃຫ້ເປັນປົກກະຕິໃນລະດູການປູກພືດຂອງປີ 2019 ເປັນຕົ້ນໄປ.

ນອກຈາກນັ້ນ, ກົມຄຸ້ມຄອງທີ່ດິນກະສິກຳ ກໍກຳລັງເຮັດການຄາດຄະເນກ່ຽວກັບການປ່ຽນແປງດິນຟ້າອາກາດ ແລະ ການປູກພືດໃນໄລຍະຍາວ ເພື່ອຊ່ວຍສະໜັບສະໜູນໃນການວາງແຜນຂອງລັດຖະບານ. ລະບົບນີ້ ມີຊື່ວ່າ "ລະບົບຄຸ້ມຄອງຂໍ້ມູນຂ່າວສານຊັບພະຍາກອນທີ່ດິນ" ເຊິ່ງຈະຊ່ວຍໃຫ້ ກະຊວງກະສິກຳ ແລະ ປ່າໄມ້ ສາມາດເຮັດການຕັດສິນໃຈ ບົນພື້ນຖານຂໍ້ມູນ ແລະ ມີວິທະຍາສາດ ໃນການວາງແຜນຈັດສັນທີ່ດິນ, ການນຳໃຊ້ທີ່ດິນ ແລະ ເປົ້າໝາຍການປູກພືດ ໂດຍອີງໃສ່ ສະພາບການປ່ຽນແປງດິນຟ້າອາກາດໃນອະນາຄົດທີ່ສົມຈິງ. ຈະມີການປະເມີນ ສະຖານະການຂອງຜົນກະທົບຕໍ່ກັບນ້ຳ, ຜົນຜະລິດພືດ ແລະ ດ້ານເສດຖະກິດ – ສັງຄົມ ໃຫ້ກັບເຂດນິເວດກະສິກຳທີ່ສຳຄັນທັງໝົດ ແລະ ສ້າງເປັນຍຸດທະສາດການປັບຕົວ ເພື່ອວາງແຜນຜະລິດກະສິກຳໃນທົ່ວປະເທດ. ກິດຈະກຳອັນສຸດທ້າຍຈະເປັນບາດກ້າວສຳຄັນ ໃນການສ້າງຕັ້ງລະບົບຂຶ້ນມາ ເພື່ອປະເມີນວັດແທກມູນຄ່າຜົນກະທົບຈາກການປ່ຽນແປງດິນຟ້າອາກາດ ຕໍ່ກັບການຜະລິດກະສິກຳ.

ອົງການ FAO ກຳລັງສະໜັບສະໜູນ ໂຄງການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດໃນເຂດດິນບໍລິເວນນ້ຳ ເພື່ອຫຼຸດຜ່ອນ ຄວາມບອບບາງຈາກການປ່ຽນແປງດິນຟ້າອາກາດຂອງຊຸມຊົນທ້ອງຖິ່ນ. ຊຸມຊົນທ້ອງຖິ່ນ ໄດ້ອາໄສລະບົບນິເວດດິນບໍລິເວນນ້ຳທີ່ບອບບາງໃນເຂດເມືອງຈຳພອນ ແຂວງສະຫວັນນະເຂດ ແລະ ບຶງຂຽດໂງ້ງ ໃນແຂວງຈຳປາສັກ. ການປະເມີນຄວາມບອບບາງຕໍ່ກັບການປ່ຽນແປງດິນຟ້າອາກາດ ໃນທັງສອງສະຖານທີ່ນັ້ນ ໄດ້ປະກອບສ່ວນເສີມສ້າງຄວາມເຂົ້າໃຈກ່ຽວກັບຄວາມສ່ຽງ ແລະ ຜົນກະທົບຈາກການປ່ຽນແປງດິນຟ້າອາກາດ. ຜົນໄດ້ຮັບຂອງການປະ ເມີນໄດ້ຖືກນຳມາໃຊ້ເຂົ້າໃນການກຳນົດ ແລະ ຈັດລຽງບູລິມະສິດ ຍຸດທະສາດການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ເພື່ອຍົກລະດັບການວາງແຜນຮ່ວມກັນ ລະຫວ່າງລັດຖະບານ ແລະ ຊຸມຊົນໃນ ຂັ້ນທ້ອງຖິ່ນ ແລະ ຍັງເປັນການໃຫ້ຂໍ້ມູນກ່ຽວກັບການຄຸ້ມຄອງດິນບໍລິເວນນ້ຳໃນອະນາຄົດອີກດ້ວຍ. ເຄື່ອງມືການປະເມີນຄວາມບອບບາງໄດ້ຮັບການຢືນຢັນຄວາມຖືກຕ້ອງ ແລະ ເຜີຍແຜ່ໃຫ້ກັບຫ້ອງ ການຕ່າງໆທີ່ກ່ຽວຂ້ອງ ເພື່ອນຳເອົາໄປໃຊ້ໃນທົ່ວປະເທດ. ນອກຈາກ ນັ້ນຍັງມີການສຶກສາບັນຫາທີ່ຕິດພັນກັບການປ່ຽນແປງດິນຟ້າອາ ກາດ ນັບຕັ້ງແຕ່ການຟື້ນຟູພູມີທັດເພື່ອປັບປຸງການຄຸ້ມຄອງອ່າງໂຕ່ງ ຈົນໄປຮອດການອະນຸລັກຊີວະນາໆພັນ ເຊິ່ງການສຶກສາບັນຫາເຫຼົ່ານີ້ຈະເປັນພື້ນຖານໃຫ້ກັບການຕັດສິນໃຈທີ່ດີຂຶ້ນ. ການຈັດຕັ້ງປະຕິບັດ ມາດຕະການປັບຕົວທີ່ມີປະສິດທິພາບ ແລະ ປະສິດທິຜົນ ໃນບ້ານ ເປົ້າໝາຍໄດ້ເລີ່ມຂຶ້ນ ໂດຍການສ້າງຄວາມສາມາດ ໃຫ້ກັບກຸ່ມທີ່ຮັບຜິດຊອບວຽກງານຄຸ້ມຄອງຊັບພະຍາກອນທຳມະຊາດຂອງ ທ້ອງຖິ່ນ ເຊິ່ງນຳໄປສູ່ການສ້າງຕັ້ງ ວັງສະຫງວນປາໄດ້ 10 ວັງ. ມີການລົງທຶນໂດຍກົງ ໃສ່ການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດແບບມີຍຸດທະສາດ ເຊັ່ນ: ການເປີດດິນບໍລິເວນນ້ຳຄືນໃໝ່, ການຄຸ້ມຄອງພືດທີ່ເປັນໄພຮຸກຮານຈາກບ່ອນອື່ນ ແລະ ການສ້າງ ຄວາມທົນທານໃຫ້ກັບຊາວກະສິກອນ ໂດຍການນຳໃຊ້ວິທີການໂຮງຮຽນຊາວນາ.

> **“ອົງການ FAO ໄດ້ໃຫ້ການຊ່ວຍເຫຼືອ ດ້ານວິຊາການໃນການພັດທະນາກົດໝາຍວ່າດ້ວຍ ທີ່ດິນ ແລະ ກົດໝາຍວ່າດ້ວຍປ່າໄມ້ ເປັນການປະກອບສ່ວນຮັບປະກັນ ຄວາມຕໍ່ເນື່ອງໃນ ຂະບວນການທົບທວນປັບປຸງກົດໝາຍທັງສອງສະບັບນີ້.”**

ອົງການ UNDP, UN-Habitat, ກະຊວງໂຍທາທິການ ແລະ ຂົນສົ່ງ ແລະ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ກໍກຳລັງຮ່ວມມືກັນ ເພື່ອສ້າງຄວາມທົນທານຕໍ່ກັບການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດ ໃຫ້ກັບເຂດທີ່ຢູ່ອາໄສທີ່ມີຄວາມບອບບາງທີ່ສຸດ ໃນເຂດຊົນນະບົດ ແລະ ຕົວເມືອງໃໝ່. ການຍົກລະດັບການເຂົ້າເຖິງລະບົບພື້ນຖານໂຄງລ່າງ ແລະ ການບໍລິການທີ່ຍືນຍົງຈະຊ່ວຍເພີ່ມຄວາມທົນທານໃຫ້ກັບເຂດທີ່ຢູ່ອາໄສຂອງມະນຸດທີ່ບອບບາງທີ່

ສຸດ ໃນພາກໃຕ້ຂອງລາວ. ນອກຈາກນັ້ນ ກໍຍັງມີການປະສົມປະສານເອົາກິດຈະກໍາດ້ານໂຄງລ່າງ ແລະ ນະໂຍບາຍລະບຽບການ (hard and soft interventions) ເພື່ອສ້າງຄວາມທົນທານໃຫ້ກັບທ້ອງຖິ່ນ ລວມທັງການສ້າງຄວາມສາມາດໃຫ້ກັບຊຸມຊົນ.

ອົງການ WFP ໄດ້ສືບຕໍ່ຮ່ວມມືກັບ ສະຖາບັນຄົ້ນຄວ້າກະສິກໍາ ແລະ ປ່າໄມ້ ເພື່ອສະໜັບສະໜູນການສ້າງຄວາມສາມາດໃຫ້ກັບຊຸມຊົນທີ່ບອບບາງ ໃນເຂດພື້ນທີ່ປູກເຂົ້າທີ່ສໍາຄັນ 7 ເຂດ. ກິດຈະກໍາປະກອບມີ ວິທີການຄຸ້ມຄອງຄວາມສ່ຽງຈາກການປ່ຽນແປງດິນຟ້າອາກາດ ໂດຍການປັບປຸງການເຂົ້າເຖິງຂໍ້ມູນຂ່າວສານການປ່ຽນແປງດິນຟ້າອາກາດ ແລະ ການບໍລິການຕ່າງໆໃຫ້ດີຂຶ້ນ ແລະ ປັບປຸງເຕັກນິກການຜະລິດກະສິກໍາ ເພື່ອເພີ່ມຄວາມທົນທານຕໍ່ກັບການປ່ຽນແປງດິນຟ້າອາກາດ. ອົງການ WFP ແລະ IFAD ໄດ້ເຮັດວຽກຮ່ວມກັບ ກະຊວງກະສິກໍາ ແລະ ປ່າໄມ້ ເພື່ອສະໜັບສະໜູນການສ້າງຊັບສິນດ້ານການຜະລິດ ຂອງຊຸມຊົນທີ່ມີຄວາມທົນທານຕໍ່າ ໃນແຂວງເຊກອງ, ສາລະວັນ ແລະ ອັດຕະປື. ຊັບສິນດ້ານການຜະລິດເຫຼົ່ານີ້ ແມ່ນນໍາໃຊ້ ເພື່ອສ້າງຄວາມຫຼາກຫຼາຍໃຫ້ກັບການດໍາລົງຊີວິດ, ປັບປຸງການຄໍ້າປະກັນສະບຽງອາຫານ ແລະ ເສີມສ້າງຄວາມທົນທານໃຫ້ກັບຊຸມຊົນທີ່ມີຄວາມບອບບາງຕໍ່ກັບການປ່ຽນແປງດິນຟ້າອາກາດ.

ສ້າງຄວາມເຂັ້ມແຂງໃນການປົກປັກຮັກສາ ແລະ ຄຸ້ມຄອງປ່າໄມ້ ແລະ ລະບົບນິເວດ

ອົງການ FAO ໄດ້ໃຫ້ການຊ່ວຍເຫຼືອດ້ານວິຊາການ ໃນການພັດທະນາກົດໝາຍວ່າດ້ວຍທີ່ດິນ ແລະ ກົດໝາຍວ່າດ້ວຍປ່າໄມ້ ເປັນການປະກອບສ່ວນຮັບປະກັນ ຄວາມຕໍ່ເນື່ອງໃນ ຂະບວນການທົບທວນປັບປຸງກົດໝາຍທັງສອງສະບັບນີ້. ນອກຈາກນັ້ນ ຍັງມີການສະໜັບສະໜູນ ໃຫ້ກັບ ຫ້ອງການປະຈໍາຂອງແຜນງານການຈັດຕັ້ງປະຕິບັດກົດໝາຍປ່າໄມ້, ການຄຸ້ມຄອງ ແລະ ການຄ້າໄມ້ (FLEGT), ເຊິ່ງໃນປະຈຸບັນ ຫ້ອງການດັ່ງກ່າວສາມາດເຊື່ອມໂຍງການສະໜັບສະໜູນຂອງແຜນງານ ເຂົ້າໃນແຜນໄລຍະຍາວ ແລະ ແຜນການຮ່ວມມືລະຫວ່າງ ລາວ – ສະຫະພາບເອີຣົບ ສໍາລັບ FLEGT ໄດ້ດີຂຶ້ນ. ອົງການ FAO ຍັງໄດ້ສະໜັບສະໜູນ ເຄືອຂ່າຍ FLEGT CSO ຂອງລາວ ເພື່ອເຂົ້າຮ່ວມໃນຂະບວນການເຮັດວຽກຂອງ FLEGT.

ຂະບວນການດັ່ງກ່າວມີຄວາມຄືບໜ້າມທີ່ດີ ໂດຍຜ່ານການສະໜັບສະໜູນ ແລະ ໂຄງການຕ່າງໆ ເຊັ່ນ: ໂຄງການທົດລອງນໍາໃຊ້ມາດຕະຖານກົດໝາຍປ່າໄມ້ ສໍາລັບຊາວກະສິກອນຂະໜາດນ້ອຍ ແລະ ປ່າໄມ້ບ້ານ, ການສະໜັບສະໜູນວິສາຫະກິດປຸງແຕ່ງໄມ້ຂະໜາດນ້ອຍ ແລະ ຂະໜາດກາງ ເພື່ອເຂົ້າຮ່ວມໃນຕ່ອງໂສ້ການສະໜອງໄມ້ແບບຖືກກົດໝາຍ ແລະ ສະໜັບສະໜູນ ມະຫາວິທະຍາໄລແຫ່ງຊາດລາວ ໃນການກໍານົດພັນໄມ້. ອົງການ FAO ຍັງໄດ້ ມອບໝາຍໃຫ້ ອົງການ Forest Trends ສ້າງຂໍ້ແນະນໍາທີ່ແທດເໝາະໃນການພັດທະນານະໂຍບາຍແຫ່ງຊາດ ແລະ ຈັດຕັ້ງປະຕິບັດ REDD+ ແລະ ຍົກລະດັບຂະບວນການຄຸ້ມຄອງປ່າໄມ້.

ໃນຕົ້ນປີ 2018, ສປປ ລາວ ໄດ້ຍື່ນ ລະດັບຖານອ້າງອີງການປ່ອຍກາກບອນໃນປ່າໄມ້ ສໍາລັບ REDD+ ໃຫ້ກັບ ສົນທິສັນຍາວ່າດ້ວຍການປ່ຽນແປງດິນຟ້າອາກາດແຫ່ງສະຫະປະຊາຊາດ (UNFCCC) ແລະ ມີການປະເມີນທາງວິຊາການເພື່ອຢັ້ງຢືນຄວາມຖືກຕ້ອງ. ໃນເດືອນພຶດສະພາ ກອງທຶນກາກບອນຂອງຄູ່ຮ່ວມກາກບອນປ່າໄມ້ ໄດ້ຍອມຮັບເອົາແຜນງານຫຼຸດຜ່ອນກາກບອນຂອງ ສປປ ລາວ ເຊິ່ງກວມເອົາ 6 ແຂວງພາກເໜືອ, ນັ້ນໝາຍຄວາມວ່າ ສປປ ລາວ ໄດ້ເຂົ້າເຖິງ ການຈ່າຍເງິນຕາມຜົນໄດ້ຮັບຕົວຈິງ ສໍາລັບການຫຼຸດຜ່ອນການປ່ອຍກາກບອນ ຫຼື ການເພີ່ມການດູດຊຶມກາກບອນ ຜ່ານແຜນງານ REDD+ ໃນບັນດາແຂວງເຫຼົ່ານັ້ນ ໃນ 5 ປີຂ້າງໜ້າ. ການຍື່ນລະດັບຖານອ້າງອີງການປ່ອຍກາກບອນໃນປ່າໄມ້ ໃຫ້ກັບ UNFCCC ຍັງເປັນການປູທາງເພື່ອເຂົ້າເຖິງ ກອງທຶນສີຂຽວດ້ານການປ່ຽນແປງດິນຟ້າອາກາດ ສໍາລັບການຈ່າຍເງິນຕາມຜົນໄດ້ຮັບຕົວຈິງ. ການພັດທະນາ REDD+ ຂອງປະເທດໄດ້ຮັບການສະໜັບສະໜູນຈາກ ໂຄງການຮ່ວມມືສອງຝ່າຍ ແລະ ຮ່ວມມືຫຼາຍຝ່າຍ ລວງທັງການສະໜັບສະໜູນຈາກ ແຜນງານ REDD ຂອງສະຫະປະຊາຊາດ.

ອົງການ UNDP ໄດ້ສະໜັບສະໜູນ ການປູກຕົ້ນໄມ້ ໃນເຂດອ່າງໂຕ່ງທີ່ມີສະພາບເສື່ອມໂຊມ ໃນແຂວງສະຫວັນນະເຂດ ເຊິ່ງເປັນການປະກອບສ່ວນເຂົ້າໃນ ເປົ້າໝາຍການເພີ່ມເນື້ອທີ່ປົກຫຸ້ມປ່າໄມ້ໃນທົ່ວປະເທດໃຫ້ໄດ້ 70% ໃນປີ 2020. ທີມງານອະນຸລັກປ່າໄມ້ຂັ້ນບ້ານ ໃນເຂດຫວງຫ້າມໂຕໂອງ – ມົ່ງ ໄດ້ຮັບການສ້າງຕັ້ງຂຶ້ນມາເພື່ອປັບປຸງການຕິດຕາມພາຍໃນເຂດສະຫງວນແຫ່ງນີ້ ແລະ ຫຼຸດຜ່ອນສະພາບເສື່ອມໂຊມຂອງເຂດທີ່ຢູ່ອາໄສຂອງສັດປ່າ ໃນລະບົບນິເວດປ່າໂຄກທີ່ມີຄວາມສໍາຄັນໃນລະດັບສາກົນ. ສໍາລັບການເປີດປີທ່ອງທ່ຽວລາວ 2018 , ອົງການ UNDP ໄດ້ເປີດສູນນິເວດໂອງ – ມົ່ງ ແລະ ສູນຂໍ້ມູນນັກທ່ອງທ່ຽວ ເພື່ອສະໜັບສະໜູນການທ່ອງທ່ຽວແບບອະນຸລັກ ໃນໃຈກາງປ່າໂຄກຂອງແຂວງສະຫວັນນະເຂດ.

**“ອົງການ UNIDO ໄດ້ສະໜັບສະໜູນ ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ໃນການຫຼຸດຜ່ອນ ສານພິດຕົກຄ້າງ ໂດຍສຸມໃສ່ ສະໜາມຂີ້ເຫຍື້ອ 2 ແຫ່ງ ໃນນະຄອນຫຼວງວຽງຈັນ ແລະ ແຂວງຄໍາມ່ວນ ເພື່ອສາທິດ ການນໍາໃຊ້ເຕັກໂນໂລຊີ ແລະ ແຜນປະຕິບັດດ້ານສິ່ງແວດລ້ອມທີ່ດີເລີດ.”**

ອົງການ ສປຊ ໄດ້ປະກອບສ່ວນເຂົ້າໃນການພັດທະນາ ດໍາລັດນາຍົກລັດຖະມົນຕີ ເລກທີ 05 / ນຍ ວ່າດ້ວຍການສະກັດກັ້ນການຄ້າຂາຍສັດປ່າ ແລະ ປະກອບສ່ວນເຂົ້າໃນການປັບປຸງປະມວນກົດໝາຍອາຍາຄືນໃໝ່. ເຖິງແມ່ນວ່າທັງສອງເອກະສານ ຈະຍັງເປັນອັນໃໝ່ກໍຕາມ, ແຕ່ຖ້າໄດ້ຮັບການຈັດຕັ້ງປະຕິບັດ ແລະ ມີການບັງຄັບໃຊ້ຢ່າງເຕັມທີ່ແລ້ວ ຈະມີຜົນໄດ້ຮັບອັນໃຫຍ່ຫຼວງຕໍ່ກັບການສະກັດກັ້ນຄ້າຂາຍສັດປ່າ.

ອົງການ UNIDO ໄດ້ສະໜັບສະໜູນ ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ໃນການຫຼຸດຜ່ອນສານພິດຕົກຄ້າງ ໂດຍສຸມໃສ່ ສະໜາມຂີ້ເຫຍື້ອ 2 ແຫ່ງ ໃນນະຄອນຫຼວງວຽງຈັນ ແລະ ແຂວງຄໍາມ່ວນ ເພື່ອສາທິດ ການນໍາໃຊ້ເຕັກໂນໂລຊີ ແລະ ແຜນປະຕິບັດດ້ານສິ່ງແວດລ້ອມທີ່ດີເລີດ. ມີການທົບທວນ ແລະ ປັບປຸງ ລະບຽບການວ່າດ້ວຍການຄວບຄຸມ ສານໂພລີຄໍຣີເນດໄບຟີນິວ (PCB) ທີ່ຕົກຄ້າງໃນຜະລິດຕະພັນ ແລະ ຄາດວ່າ ລັດຖະມົນຕີກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ຈະເຊັນຮັບຮອງເອົາ ໃນປີ 2019 ນີ້. ຖານຂໍ້ມູນ PCB ໄດ້ຮັບການປັບປຸງດີຂຶ້ນ ແລະ ເວັບໄຊ໌ການຄຸ້ມຄອງ PCB ກໍສາມາດເຂົ້າເບິ່ງໄດ້ແລ້ວ. ຈາກທັງໝົດ 537 ຕົວຢ່າງ ທີ່ເກັບຈາກ 9 ຕົວເມືອງ ໃນນະຄອນຫຼວງວຽງຈັນ, ປະກົດວ່າ 127 ຕົວຢ່າງ ມີການຕົກຄ້າງຂອງ PCB ໃນລະດັບສູງ ແລະ ມີການຕິດການໝາຍໃສ່ຕົວຢ່າງທີ່ມີການຕົກຄ້າງນັ້ນ.

ໂດຍຮ່ວມມືກັບກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ແລະ ກະຊວງອຸດສາຫະກຳ ແລະ ການຄ້າ, ໄດ້ມີການສ້າງຕັ້ງ ສູນຂໍ້ມູນຂ່າວສານ ແລະ ການຮຽນຮູ້ດ້ານເຕັກໂນໂລຊີຊີວະມວນຂຶ້ນມາ ເຊິ່ງໄດ້ເປີດໂຕ ໃນເດືອນທັນວາຜ່ານມານີ້ ແລະ ຍັງມີການສ້າງຄວາມສາມາດໃຫ້ກັບພະນັກງານວິຊາການຂອງສູນນຳອີກ. ສູນການຮຽນຮູ້ນີ້ຈະໃຫ້ຂໍ້ມູນ, ເປັນບ່ອນສ້າງເຄືອຂ່າຍ ແລະ ໃຫ້ຄວາມຮູ້ວິຊາ ການໃນການນຳໃຊ້ເຕັກໂນໂລຊີຊີວະມວນ ແລະ ເຕັກໂນໂລຊີພະລັງງານທົດແທນອື່ນໆ ໃຫ້ກັບປະຊາຊົນຜູ້ທີ່ສົນໃຈ. ຄະນະເຮັດວຽກສະເພາະກິດຈາກຫຼາຍຂະແໜງການ ໄດ້ສຳເລັດແຜນດຳເນີນງານແຫ່ງຊາດສຳລັບການລຶບລ້າງພະຍາດທີ່ເກີດຈາກທາດໄຍຫີນ. ອົງການ WHO ກຳລັງສະໜັບສະໜູນ ກະຊວງສາທາລະນະສຸກ ເຂົ້າຮ່ວມການລົງມະລົງຂອງສາກົນ ເພື່ອສົ່ງເສີມ ການນຳໃຊ້ສີທາ ທີ່ບໍ່ມີສານຕະກົ່ວ ພ້ອມກັບປູກຈິດສຳນຶກ ແລະ ຍົກລະດັບບົດບາດ ຄວາມເປັນຜູ້ນຳຂອງຂະແໜງສາທາລະນະສຸກ ໃນການສ້າງແວດ ລ້ອມທາງກົດໝາຍ ສຳລັບສີທາທີ່ບໍ່ມີສານຕະກົ່ວ.

## ບົດຮຽນທີ່ຖອດຖອນໄດ້ ແລະ ທິດທາງຕໍ່ໜ້າ

ໄພນ້ຳຖ້ວມໃນປີ 2018 ໄດ້ສົ່ງຜົນກະທົບໃນທົ່ວປະເທດ ເຊິ່ງບັນດາອົງການທີ່ຢູ່ໃນລະບົບ ສປຊ ກໍສາມາດຕອບສະໜອງໄດ້ຕາມຄຳຮ້ອງຂໍຂອງລັດຖະບານ ແລະ ປະຊາຊົນທີ່ໄດ້ຮັບຜົນກະທົບ. ຄວາມເຂັ້ມແຂງພາຍໃນ ລະບົບອົງການ ສປຊ ໄດ້ສະແດງອອກໃນການເຮັດວຽກ ໃນຫຼາຍຂະແໜງການ. ກົນໄກການປະສານງານທີ່ເຂັ້ມແຂງລະຫວ່າງອົງກອນພາຍໃນລະບົບ ສປຊ ຮັບປະກັນຜົນສຳເລັດໃນການຮ່ວມມືລະຫວ່າງອົງກອນຕ່າງໆ ແລະ ການລະດົມຊັບພະຍາກອນ.

ການປັບປຸງຄວາມພ້ອມໃນສະຖານະການສຸກເສີນ ໂດຍສະເພາະການສ້າງຄວາມເຂັ້ມແຂງ ໃຫ້ກັບລະບົບແຈ້ງເຕືອນໄພລ່ວງໜ້າແຫ່ງຊາດ ຍັງເປັນວຽກງານບູລິມະສິດ. ມັນມີຄວາມສຳຄັນ ຫຼາຍທີ່ຈະຕ້ອງໄດ້ສ້າງຄວາມຮູ້ ແລະ ຄວາມສາມາດກ່ຽວກັບ ການຫຼຸດຜ່ອນຄວາມສ່ຽງໄພພິບັດ ໃຫ້ກັບພະນັກງານລັດຂັ້ນແຂວງ ແລະ ເມືອງ ໂດຍຜ່ານການສະໜັບສະໜູນ ແລະ ການຝຶກອົບຮົມ. ການປະເມີນຄວາມຕ້ອງການຫຼັງເກີດໄພພິບັດ ສຳລັບໄພນ້ຳຖ້ວມໃນ 2018 ໄດ້ສະແດງໃຫ້ເຫັນເຖິງຄວາມຈຳເປັນໃນການເສີມສ້າງຄວາມແຂັ້ມແຂງ ໃຫ້ກັບລະບົບແຈ້ງເຕືອນໄພລ່ວງໜ້າທີ່ມີຢູ່. ສະນັ້ນແລ້ວ ຄວາມສາມາດຂອງທ້ອງຖິ່ນໃນການກະກຽມຕອບໂຕ້ສຸກເສີນ ກໍຄວນໄດ້ຮັບການປັບປຸງເຊັ່ນດຽວກັນ ໂດຍຜ່ານການປູກຈິດສຳນຶກໃນຊຸມຊົນ ແລະ ຈັດຕັ້ງປະຕິບັດກິດຈະກຳອື່ນໆ ທີ່ຕິດພັນກັບການຫຼຸດຜ່ອນຄວາມສ່ຽງໄພພິບັດ. ຄວາມຕ້ອງການໃນໄລຍະກາງ ສຳລັບເຂດພື້ນທີ່ຄວາມສ່ຽງໄພພິບັດ ລວມເອົາ ການສ້າງແຜນທີ່ຄວາມສ່ຽງແບບລະອຽດ ແລະ ການວາງແຜນຈັດສັນທີ່ດິນໃນອະນາຄົດ ສຳລັບການປຸກເຮືອນ ໂດຍເອົາໃຈໃສ່ຄວາມສ່ຽງໄພພິບັດທາງທຳມະຊາດໃນຂົງເຂດນັ້ນ.

ມີຄວາມຈຳເປັນທີ່ຈະຕ້ອງພັດທະນາຄວາມສາມາດຂອງລັດຖະບານ ແລະ ຊຸມຊົນ ສຳລັບການສ້າງທີ່ພັກອາໄສໃຫ້ທົນທານຕໍ່ກັບໄພພິບັດ. ຄວາມຈຳເປັນນີ້ຍັງລວມເອົາການຮ່າງຂໍ້ແນະນຳ ກ່ຽວກັບການແຈ້ງເຕືອນລ່ວງໜ້າ, ການປຸກເຮືອນໃຫ້ປອດໄພ ແລະ ກິດຈະກຳຫຼຸດຜ່ອນຄວາມສ່ຽງໄພພິບັດອື່ນໆ. ວິທີການທີ່ນຳໃຊ້ ເພື່ອປຸກສ້າງທີ່ພັກອາໄສຄືນໃໝ່ນັ້ນ ຕ້ອງໄດ້ປະສົມປະສານເອົາ ການປະກອບສ່ວນທາງການເງິນ ແລະ ວັດຖຸສິ່ງຂອງ ທີ່ສາມາດຫາໄດ້ໃນທ້ອງຖິ່ນ ຫຼື ມີມູນຄ່າບໍ່ສູງຫຼາຍ ເຊັ່ນ: ໄມ້, ຫີນ ແລະ ຊາຍ ລວມທັງການຈັດສັນທີ່ດິນ.

ຄວາມປອດໄພຈາກສານເຄມີ ແລະ ການປົກປ້ອງສຸຂະພາບຂອງມະນຸດ ຄວນໄດ້ຮັບການແກ້ໄຂ ແລະ ຄວບຄຸມ ໂດຍການນຳໃຊ້ຍຸດທະສາດ ແລະ ນະໂຍບາຍທີ່ກວມຫຼາຍຂະແໜງການ ເນື່ອງຈາກວ່າຂະແໜງອຸດສາຫະກຳພຽງຂະແໜງການດຽວ ບໍ່ສາມາດແກ້ໄຂວຽກງານບູລິມະສິດນີ້ໄດ້ພຽງແຕ່ຝ່າຍດຽວ. "ການລວມເອົາວຽກງານສາທາລະນະສຸກເຂົ້າໃນທຸກນະໂຍບາຍ" ໃນທົ່ວທຸກຂະແໜງການ ແມ່ນມີຄວາມສຳຄັນຫຼາຍ ເພື່ອເນັ້ນໃສ່ຜົນໄດ້ຮັບທາງສຸຂະພາບຂອງການຕັດສິນໃຈຕ່າງໆ, ສ້າງຄວາມປະສົມກົມກຽວ ແລະ ຫຼີກລ້ຽງຜົນກະທົບທີ່ເປັນໄພຕໍ່ກັບສຸຂະພາບ. ກົດໝາຍວ່າດ້ວຍການສົ່ງເສີມສຸຂະພາບ ແລະ ສຸຂະອະນາໄມ ອາດຈະແກ້ໄຂບັນຫາຄວາມປອດໄພຂອງສານເຄມີໄດ້ ໂດຍການປົກປ້ອງສຸຂະພາບຂອງປະຊາຊົນ ແລະ ກຳມະກອນ ແລະ ສົ່ງເສີມສະພາບແວດລ້ອມການດຳລົງຊີວິດ ແລະ ສະພາບແວດລ້ອມການເຮັດວຽກທີ່ສະອາດ.

# ການສະໜັບສະໜູນຮ່ວມກັນຂອງ ອົງການ ສປຊ ໃນການຕອບໂຕ້ສຸກເສີນ ແລະ ການຟື້ນຟູຄືນ

ພາຍຫຼັງເກີດມີສະພາບອາດກາດຮຸນແຮງ, ຄູກັນນ້ຳຂອງເຂື່ອນແຕກໃນແຂວງອັດຕະປື ແລະ ໄພນ້ຳຖ້ວມທີ່ເກີດຂຶ້ນ ທົ່ວປະເທດ, ລັດຖະບານໄດ້ຂໍໃຫ້ ອົງການ ສປຊ ເປັນຜູ້ສະໜັບສະໜູນຫຼັກໃນການຕອບໂຕ້ສຸກເສີນທົ່ວປະເທດ.



ກຸ່ມເຮັດວຽກຊ່ວຍເຫຼືອດ້ານມະນຸດສະທຳ ປະກອບມີ: ກຸ່ມວຽກງານນ້ຳໃຊ້, ສຸຂາພິບານ ແລະ ສຸຂະອະນາໄມ; ກຸ່ມວຽກງານ ຄ້ຳປະກັນສະບຽງອາຫານ ແລະ ໂພສະນາການ; ກຸ່ມວຽກງານທີ່ພັກອາໄສ; ກຸ່ມວຽກງານການປົກປ້ອງ; ກຸ່ມວຽກງານການສຶກສາ; ກຸ່ມວຽກງານຂົນສົ່ງ; ແລະ ກຸ່ມວຽກງານຟື້ນຟູເບື້ອງຕົ້ນ. ເນື່ອງຈາກເປັນວຽກສຸກເສີນທີ່ຂ້ອນຂ້າງໃຫຍ່, ລັດຖະບານໄດ້ຮັບຮອງເອົາ ແຜນການຕອບໂຕ້ສຸກເສີນຂອງ ທີມງານມະນຸດສະທຳລະດັບປະເທດ ປະກອບມີອົງການຕ່າງໆຂອງ ສປຊ ແລະ ອົງການ INGOs ເຊິ່ງໄດ້ຮັບການຊ່ວຍເຫຼືອຈາກ ຄູ່ຮ່ວມພັດທະນາ ແລະ ພາກເອກະຊົນ ໃນມູນຄ່າຫຼາຍກ່ວາ US$ 8 ລ້ານ. ນອກຈາກນັ້ນ, ທີມງານມະນຸດສະທຳລະດັບປະເທດ ຍັງໄດ້ສະໜັບສະໜູນອຳນາດການປົກຄອງທ້ອງຖິ່ນ ໃນການຕອບສະໜອງເຄື່ອງຂອງຕ່າງໆທີ່ບໍ່ແມ່ນ ອາຫານກິນ ເຊັ່ນ: ເຄື່ອງມືອຸປະກອນ, ຜ້າກັນນ້ຳ, ອຸປະກອນຮັກສາສຸຂະອະນາໄມ, ໂປ້ມນ້ຳ, ເຄື່ອງກອງນ້ຳ, ເມັດຢາບຳບັດນ້ຳ, ເຄື່ອງຊ່ວຍເກີດລູກຢ່າງປອດໄພ ແລະ ເຕັ້ນ; ການຊ່ວຍເຫຼືອດ້ານໂພສະນາການແບບສະເພາະ ລວມທັງການກວດເບິ່ງສະພາບການ ຂາດສານອາຫານ; ນຳສົ່ງເຂົ້າກິນ, ປາກະປ໋ອງ ແລະ ອາຫານອື່ນໆ; ແລະ ໃຫ້ການຊ່ວຍເຫຼືອປະຖົມພະຍາບານເບື້ອງຕົ້ນ ແລະ ບໍລິການດ້ານສຸຂະພາບ.

ການປະເມີນສະພາບຂອງປະຊາຊົນທີ່ໄດ້ຮັບຜົນກະທົບແບບເລັ່ງລັດ ເຊິ່ງໄດ້ຮັບການຊ່ວຍເຫຼືອດ້ານວິຊາການ ແລະ ດ້ານການເງິນຈາກອົງການ ສປຊ ແລະ ອົງການ INGOs ນັ້ນ ໄດ້ສະໜັບສະໜູນການຈັດລຽງບູລິມະສິດຄວາມສຳຄັນ ແລະ ການຕັດສິນໃຈ ໂດຍອີງໃສ່ຫຼັກຖານ. ທີມງານມະນຸດສະທຳລະດັບປະເທດ ຍັງເຮັດໜ້າທີ່ປະສານງານ ແລະ ແລກປ່ຽນຂໍ້ມູນຂ່າວສານ ລະຫວ່າງລັດຖະບານ ແລະ ຄູ່ຮ່ວມພັດທະນາ ໂດຍຈັດກອງປະຊຸມປະຈຳອາທິດ ຮ່ວມກັບຄູ່ຮ່ວມພັດທະນາ ເພື່ອລາຍງານສະພາບການຕົວຈິງ ພ້ອມກັບບົດລາຍງານສະຖານະການເປັນປະຈຳ, ບົດຂ່າວເພື່ອໃຫ້ຂໍ້ມູນຂ່າວສານ ແລະ ສ້າງແຜນທີ່ແບບ 3W.

ເພື່ອຊ່ວຍໃນການວາງແຜນຟື້ນຟູຄືນເຊິ່ງນຳພາໂດຍລັດຖະບານນັ້ນ, ທີມງານຂອງອົງການ ສປຊ ໄດ້ເຮັດວຽກຢ່າງໃກ້ຊິດ ກັບ ທະນາຄານໂລກ, ສະຫະພາບເອີຣົບ ແລະ ຄູ່ຮ່ວມພັດທະນາອື່ນໆ ສະໜັບສະໜູນ ການປະເມີນຄວາມຕ້ອງການຫຼັງເກີດໄພພິບັດ ໃນທົ່ວທຸກແຂວງ ແລະ ທຸກຂະແໜງການ. ມູນຄ່າຄວາມເສຍຫາຍຈາກໄພນ້ຳຖ້ວມ ຄາດວ່າຈະຕົກຢູ່ປະມານ US$ 147 ລ້ານ. ມູນຄ່າຄວາມສູນ ເສຍທັງໝົດ ໂດຍຄຳນຶງເຖິງຜົນກະທົບຕໍ່ກັບເສດຖະກິດ, ຕົ້ນທຶນການຜະລິດທີ່ສູງຂຶ້ນ ແລະ ລາຍຮັບຂອງລັດຖະບານທີ່ຫຼຸດລົງຄາດວ່າຈະຕົກຢູ່ປະມານ US$ 225 ລ້ານ. ການປະເມີນຄວາມຕ້ອງການ ຍັງພົບອີກວ່າ ຂະແໜງກະສິກຳ ແລະ ຂະແໜງຂົນສົ່ງໄດ້ຮັບຜົນກະທົບຫຼາຍທີ່ສຸດ ເຊິ່ງກວມເອົາ 90% ຂອງຄວາມເສຍຫາຍ ແລະ ຄວາມສູນເສຍ. ນະຄອນຫຼວງວຽງຈັນ, ແຂວງຄຳມ່ວນ, ທົ່ວພັນ ແລະ ອັດຕະປື ເປັນແຂວງໄດ້ຮັບຜົນກະທົບຫຼາຍທີ່ສຸດ.

ໂດຍອີງໃສ່ການປະເມີນຄວາມຕ້ອງການຫຼັງເກີດໄພພິບັດ, ການວາງແຜນຟື້ນຟູຄືນກຳລັງດຳເນີນຢູ່ ເຊິ່ງຄາດວ່າຈະຕ້ອງການເງິນທຶນຫຼາຍກ່ວາ US$ 500 ລ້ານ ໃນການຟື້ນຟູຄືນ.
ກົດໝາຍສະບັບໃໝ່ວ່າດ້ວຍການຄຸ້ມຄອງຄວາມສ່ຽງໄພພິບັດ ເຊິ່ງໄດ້ຮັບການຊ່ວຍເຫຼືອຈາກ ADB ແລະ ອົງການ ສປຊ ຄາດວ່າຈະໄດ້ຖືກຮັບຮອງໃນກາງປີ 2019. ລະດູຝົນຂອງປີ 2019 ກໍໃກ້ເຂົ້າມາແລ້ວ ເຊິ່ງເນັ້ນໃຫ້ເຫັນເຖິງຄວາມຈຳເປັນຂອງການລົງທຶນເຂົ້າໃສ່ໃນການກຽມຄວາມພ້ອມ, ການຫຼຸດຜ່ອນ ແລະ ການຄຸ້ມຄອງໄພພິບັດ.



# 4. ການສຶກສາ

# ເດັກນ້ອຍ ແລະ ໄວໜຸ່ມ ໄດ້ເຂົ້າເຖິງການຮຽນຂັ້ນພື້ນຖານ ແລະ ການຝຶກວິຊາຊີບ ທີ່ມີຄຸນນະພາບ, ມີລັກສະນະຮຽນຮ່ວມ ແລະ ມີຄວາມເທົ່າທຽມກັນ





## ທ່າອ່ຽງການພັດທະນາຕົ້ນຕໍ

| ຕົວຊີ້ວັດ | ຂໍ້ມູນທຽບຖານ | ຄາດໝາຍ | ສະຖານະການປະຈຸບັນ |
|---|---|---|---|
| 4.1. ອັດຕາສ່ວນຮ້ອຍຂອງນັກຮຽນຊັ້ນປີໜຶ່ງທີ່ເຂົ້າໃໝ່ ໄດ້ຜ່ານໂຮງຮຽນອະນຸບານມາກ່ອນ | 51%<br>(ເດັກຍິງ: 52%; ເດັກຊາຍ: 50%)<br>(2015) | 75%<br>(ເດັກຍິງ: 75%; ເດັກຊາຍ: 75%)<br>(2021) | 64.6%<br>(ເດັກຍິງ: 65.5%; ເດັກຊາຍ: 63.7%)<br>(ລະບົບຄຸ້ມຄອງຂໍ້ມູນການສຶກສາ ຂອງກະຊວງສຶກສາທິການ ແລະ ກິລາ, 2018) |
| 4.2. ອັດຕາການລອດເຫຼືອຂອງນັກຮຽນຊັ້ນປະຖົມ (ເດັກຍິງ / ເດັກຊາຍ) | 78%<br>(ເດັກຍິງ: 80%; ເດັກຊາຍ: 77%)<br>(2015) | 75%<br>(ເດັກຍິງ: 75%; ເດັກຊາຍ: 75%)<br>(2021) | 82.2%<br>(ເດັກຍິງ: 83.5%; ເດັກຊາຍ: 81%)<br>(ລະບົບຄຸ້ມຄອງຂໍ້ມູນການສຶກສາຂອງກະຊວງສຶກສາທິການ ແລະ ກິລາ, 2018) |
| 4.3. ອັດຕາສ່ວນຂອງໄວໜຸ່ມ (ຍິງ / ຊາຍ) ທີ່ໄດ້ເຂົ້າເຮັດວຽກ ເຊິ່ງເປັນຜົນມາຈາກການເຂົ້າຮ່ວມຝຶກອົບຮົມວິຊາຊີບ | 30% (2015) | 70% (2021) | 17%<br>(ແມ່ຍິງ: 18.6%; ຜູ້ຊາຍ: 15.5%)<br>(ການສຳຫຼວດກຳລັງແຮງງານ, 2017)<br><br>34% ຂອງໄວໜຸ່ມຊາຍ ແລະ 43% ຂອງໄວໜຸ່ມຍິງ ທີ່ກຳລັງເຮັດວຽກ ໄດ້ລາຍງານວ່າ ລະດັບການສຶກສາສູງສຸດຂອງພວກເຂົາ ແມ່ນເຕັກນິກວິຊາຊີບ |

ເຖິງຈະມີຄວາມຄືບໜ້າທີ່ດີໃນປີ 2018 ກໍຕາມ, ໄພນ້ຳຖ້ວມທີ່ເກີດຂຶ້ນໃນວົງກ້ວາງ ໄດ້ສົ່ງຜົນກະທົບທາງລົບ ຕໍ່ກັບການລົງທຶນໃນຂະແໜງທາງສັງຄົມຂອງປະເທດ ໂດຍສະເພາະແມ່ນການສຶກສາ ແລະ ການພັດທະນາທັກສະວິຊາຊີບຂອງເດັກນ້ອຍ ແລະ ໄວໜຸ່ມ ແລະ ງົບປະມານລວມແຫ່ງຊາດກໍໄດ້ຖືກປັບໃຫ້ຕ່ຳລົງ. ດ້ວຍເຫດນັ້ນ ຂະແໜງການສຶກສາບໍ່ໄດ້ຮັບງົບປະມານຕາມທີ່ວາງໄວ້ ໃນແຜນພັດທະນາຂະແໜງການສຶກສາທິການ ແລະ ກິລາ ຄັ້ງທີ 8 (2016-2020) ຕາມຕົວເລກຕົວຈິງ ເຖິງແມ່ນວ່າຈະໄດ້ຮັບປະມານ 17% ຂອງ ງົບປະມານຫຼັກຂອງປະເທດ ໃນສົກປີ 2015/2016 ແລະ ປີ 2018 ກໍຕາມ.

ອີງຕາມການທົບທວນກາງສະໄໝ ແຜນພັດທະນາເສດຖະກິດ – ສັງຄົມແຫ່ງຊາດ ຄັ້ງທີ VIII (2016-2020), ມີຄົນຈຳນວນຫຼາຍ ໄດ້ຮັບປະໂຫຍດຈາກການເພີ່ມຂຶ້ນຂອງຈຳນວນໂຮງຮຽນໃນເຂດຊົນນະບົດ ໃນທຸກລະດັບຊັ້ນຂອງການສຶກສາ ເຊັ່ນ: ເດັກກ່ອນໄວຮຽນ, ປະຖົມສຶກສາ, ມັດທະຍົມສຶກສາ, ຊັ້ນສູງ ແລະ ວິຊາຊີບ. ເຖິງຢ່າງໃດກໍຕາມ ຄຸນນະພາບ ແລະ ປະສິດທິພາບຂອງການສຶກສາກໍຍັງເປັນບັນຫາທີ່ໜ້າເປັນຫ່ວງ ເຮັດໃຫ້ຜົນໄດ້ຮັບຂອງການຮຽນຍັງບໍ່ທັນໄດ້ດີເທົ່າທີ່ຄວນ ແລະ ທັກສະຂອງນັກຮຽນກໍຍັງຕ່ຳ ໂດຍສະເພາະໃນກຸ່ມຄົນທີ່ມີຄວາມບອບບາງທີ່ສຸດ. ເມື່ອທຽບໃສ່ ປະເທດໃນຂອບເຂດ ASEAN ນຳກັນແລ້ວ, ສປປ ລາວ ຍັງເອື່ອຍອີງໃສ່ການຊ່ວຍເຫຼືອຈາກສາກົນ ໂດຍສະເພາະໃນຂະແໜງການ ທາງສັງຄົມ ລວມທັງຂະແໜງການສຶກສາ.

> **ອີງຕາມການທົບທວນກາງສະໄໝ ແຜນພັດທະນາເສດຖະກິດ – ສັງຄົມແຫ່ງຊາດ ຄັ້ງທີ VIII (2016-2020), ມີຄົນຈຳນວນຫຼາຍ ໄດ້ຮັບປະໂຫຍດຈາກການເພີ່ມຂຶ້ນຂອງຈຳນວນໂຮງຮຽນໃນເຂດຊົນນະບົດໃນທຸກລະດັບຊັ້ນຂອງການສຶກສາ ເຊັ່ນ: ເດັກກ່ອນໄວຮຽນ, ປະຖົມສຶກສາ, ມັດທະຍົມສຶກສາ, ຊັ້ນສູງ ແລະ ວິຊາຊີບ.**

ກະຊວງສຶກສາທິການ ແລະ ກິລາ ໄດ້ເຮັດການປະເມີນກາງສະໄໝ ແຜນພັດທະນາຂະແໜງການສຶກສາທິການ ແລະ ກິລາ ຄັ້ງທີ 8 ເຊິ່ງໄດ້ປະກອບເຂົ້າ ໃນການທົບທວນກາງສະໄໝຂອງ ແຜນ VIII. ໜ່ວຍງານວິຊາການຫຼັກຂະແໜງການສຶກສາ ໄດ້ເຮັດວຽກປະສານງານ ແລະ ສະໜັບສະໜູນການທົບທວນຄັ້ງນີ້ ເຊິ່ງເປັນຕົວຢ່າງທີ່ດີໃນການຄຸ້ມຄອງຂອງຂະແໜງການ. ມີການປັບປຸງ ແລະ ນຳໃຊ້ແຫຼ່ງຂໍ້ມູນຫຼາຍອັນ ລວມທັງ ການສຳຫຼວດດັດຊະນີໝາຍສັງຄົມລາວຄັ້ງທີ II ເພື່ອເຮັດການຕັດສິນໃຈດ້ານນະໂຍບາຍ ແລະ ຈັດລຽງບູລິມະສິດ. ການທົບທວນກາງສະໄໝ ໄດ້ຂໍ້ສະຫຼຸບກ່ຽວກັບ ຄວາມຄືບໜ້າທີ່ດີຂຶ້ນໂດຍລວມ ເມື່ອທຽບໃສ່ເປົ້າໝາຍແຫ່ງຊາດຂອງຂະແໜງການ ລວມທັງການຮຽນຮູ້ກ່ອນໄວຮຽນ, ອັດຕາການລອດເຫຼືອຂອງນັກຮຽນໃນຊັ້ນປະຖົມ ແລະ ວຽກເຮັດງານທຳຂອງໄວໜຸ່ມເຊິ່ງເປັນຜົນມາຈາກການປັບປຸງການສຶກສາລະດັບວິຊາຊີບ. ເຖິງຢ່າງໃດກໍຕາມ ຄວາມແຕກຕ່າງໃນທຸກລະດັບຂອງການສຶກສາ ແລະການຝຶກອົບຮົມວິຊາຊີບ ກໍຍັງມີຫຼາຍຢູ່ ລວມທັງຕົວຊີ້ວັດການ ເຂົ້າເຖິງ, ການເຂົ້າຮ່ວມ, ການຮຽນຮູ້ ແລະ ການຮັບເອົາທັກສະຕ່າງໆ ງົບປະມານທີ່ມີໜ້ອຍ ໄດ້ສ້າງໃຫ້ມີຂໍ້ຈຳກັດໃນການພັດທະນາທັກສະຄວາມສາມາດທີ່ຈຳເປັນ. ສະນັ້ນຕ້ອງໄດ້ປັບປຸງການກຳນົດງົບປະມານຂອງຂະແໜງການໃຫ້ມີປະສິດທິພາບ ເພື່ອຈັດສັນງົບປະມານເຂົ້າໃນການຈັດຕັ້ງກິດປະຕິບັດຈະກຳຂອງຂະແໜງການໃຫ້ມີຄວາມເທົ່າທຽມ ແລະ ອີງໃສ່ຜົນໄດ້ຮັບຕົວຈິງຫຼາຍຂຶ້ນ. ຕ້ອງໄດ້ເນັ້ນໃສ່ການເຊື່ອມໂຍງທີ່ດີຂຶ້ນລະຫວ່າງ ການວາງແຜນ ແລະ ການຂຶ້ນງົບປະມານ ແລະ ການສ້າງຄວາມເຂັ້ມແຂງໃຫ້ກັບທ້ອງຖິ່ນ. ຂະແໜງການສຶກສາ ຈະສືບຕໍ່ນຳເອົາຂໍ້ສະເໜີແນະຕ່າງໆມາຈັດຕັ້ງປະຕິບັດໃນປີ 2019. ຂະແໜງການສຶກສາຍັງໄດ້ປະກອບສ່ວນ ເຂົ້າໃນບົດລາຍງານແຫ່ງຊາດແບບສະໝັກໃຈ ກ່ຽວກັບການຈັດຕັ້ງປະຕິບັດເປົ້າໝາຍການພັດທະນາແບບຍືນຍົງ 2030. ນີ້ກໍເປັນອີກໂອກາດໜຶ່ງທີ່ດີ ສຳລັບຂະແໜງການນີ້ ເພື່ອທົບທວນຄືນຄວາມຄືບໜ້າ ແລະ ປະກອບສ່ວນເຂົ້າໃນການເຊື່ອມສານເອົາ SDG 4 ໃຫ້ເຂົ້າກັບສະພາບການຂອງປະເທດໄດ້ຫຼາຍຂຶ້ນ.

ຫຼັງຈາກເກີດໄພນ້ຳຖ້ວມແຕ່ ເດືອນກໍລະກົດ ຫາ ກັນຍາ, ກຸ່ມວຽກງານການສຶກສາເພື່ອຊ່ວຍເຫຼືອດ້ານມະນຸດສະທຳ ໄດ້ຮັບຜິດຊອບການປະສານງານ ສຳລັບການສະໜັບສະໜູນຕ່າງໆ. ໂຄງການ "ກັບຄືນສູ່ໂຮງຮຽນ" ໄດ້ຊ່ວຍຮັບປະກັນວ່າ ເດັກນ້ອຍ ແລະ ໄວໜຸ່ມທີ່ໄດ້ຮັບຜົນກະທົບຈາກໄພນ້ຳຖ້ວມ ໄດ້ລົງທະບຽນເຂົ້າຮຽນ ແລະ ສືບຕໍ່ການຮຽນຂອງພວກເຂົາ. ປະສົບການກ່ຽວກັບເຫດສຸກເສີນຄັ້ງນີ້ ໄດ້ສະແດງໃຫ້ເຫັນເຖິງຄວາມຈຳເປັນ ໃນການສ້າງຂະແໜງການໃຫ້ທົນທານໃນທຸກລະດັບ ລວມທັງການວາງແຜນຂອງຂະແໜງການທີ່ເຂົ້າໃຈຄວາມສ່ຽງ ແລະ ເຊື່ອມສານການຫຼຸດຜ່ອນ ຄວາມສ່ຽງໄພພິບັດ ເຂົ້າໃນຍຸດທະສາດ ແລະ ແຜນການຂອງຂະແໜງການພ້ອມ ທັງການສ້າງຄວາມສາມາດ ໃຫ້ກັບພາກສ່ວນທີ່ກ່ຽວຂ້ອງ. ອີງຕາມຜົນໄດ້ຮັບຂອງ ການປະເມີນຄວາມຕ້ອງການຫຼັງເກີດໄພພິບັດ, ຈະຕ້ອງມີຄວາມພະຍາຍາມຢ່າງຕໍ່ເນື່ອງໃນປີ 2019 ເພື່ອສະໜັບສະໜູນການຂ້າມຜ່ານຈາກການຕອບໂຕ້ ໄປສູ່ການຟື້ນຟູຄືນຢ່າງມີປະສິດທິຜົນ ແລະ ການພັດທະນາໃນໄລຍະຍາວນັ້ນ.

## ຜົນໄດ້ຮັບ

ໃນໄລຍະປີທີສອງ ຂອງການຈັດຕັ້ງປະຕິບັດຂອບການຮ່ວມມືລະຫວ່າງ ສປປ ລາວ ແລະ ອົງການ ສປຊ ນັ້ນ ມີຄວາມຄືບໜ້າທີ່ດີຫຼາຍອັນ ກ່ຽວກັບເດັກນ້ອຍ ແລະ ໄວໜຸ່ມ ເຮັດໃຫ້ພວກເຂົາສາມາດເຂົ້າເຖິງ ການສຶກສາຂັ້ນພື້ນຖານທີ່ມີຄຸນນະພາບ, ມີຄວາມສະເໝີພາບ ແລະ ແບບຮຽນຮ່ວມ ແລະ ເຂົ້າເຖິງໂອກາດໃນການພັດທະນາທັກສະຕ່າງໆ. ບັນດາໝາກຜົນ ທີ່ອົງການຕ່າງໆພາຍໃນ ລະບົບ ສປຊ ໄດ້ສ້າງຂຶ້ນມາຮ່ວມກັນນັ້ນ ແມ່ນສອດຄ່ອງກັບແຜນຂອງຂະແໜງການ ແລະ ເສີມສ້າງເຂົ້າກັນເພື່ອໃຫ້ບັນລຸເປົ້າໝາຍລວມ.

<u>ເສີມສ້າງຄວາມເຂັ້ມແຂງໃຫ້ວຽກງານສາທາລະນະສຸກ, ນ້ຳໃຊ້, ສຸຂາພິບານ ແລະ ສຸຂະອະນາໄມ ແລະ ໂພສະນາການ ໃນການສຶກສາທັງໃນ ແລະ ນອກລະບົບ</u>

ໃນປີ 2018 ອົງການ ສປຊ ໄດ້ສືບຕໍ່ຮ່ວມກັນສົ່ງເສີມວຽກງານສາທາລະນະສຸກ, ນ້ຳໃຊ້, ສຸຂາພິບານ, ສຸຂະອະນາໄມ ແລະ ໂພສະນາການ ໃນໂຮງຮຽນ ໂດຍນຳໃຊ້ວິທີການແບບຮອບດ້ານ, ມີສ່ວນຮ່ວມທັງໃນລະດັບໂຮງຮຽນ ແລະ ລະດັບຊຸມຊົນ ພ້ອມທັງ ເສີມສ້າງການເຊື່ອມໂຍງລະຫວ່າງ ນະໂຍບາຍ ແລະ ການສະໜັບສະໜູນຕ່າງໆ ໃຫ້ໄດ້ດີຂຶ້ນ. ໄປຄຽງຄູ່ກັບກັບການສະໜັບສະໜູນການສ້າງຄວາມສາມາດທີ່ກ່ຽວຂ້ອງ, ວິທີການແຕ່ລຸ່ມຂຶ້ນເທິງນີ້ ແມ່ນໄດ້ຊ່ວຍສ້າງຜົນໄດ້ຮັບທີ່ມີຄວາມຍືນຍົງຫຼາຍຂຶ້ນ.

ການສະໜັບສະໜູນຂອງ ອົງການ UNICEF ໃນລະດັບໂຮງຮຽນ ແລະ ຊຸມຊົນ ໄດ້ເຮັດໃຫ້ເດັກນັກຮຽນ 2,093 ຄົນ (ລະດັບປະຖົມ 1,321 ຄົນ ແລະ ກ່ອນປະຖົມ 772 ຄົນ) ໃນ ແຂວງຜົ້ງສາລີ, ສະຫວັນນະເຂດ ແລະ ສາລະວັນ ເຂົ້າເຖິງນ້ຳໃຊ້, ສຸຂາພິບານ ແລະ ສຸຂະອະນາໄມ ເຊິ່ງເປັນການສ້າງແວດລ້ອມທີ່ເອື້ອອຳນວຍ

ໃນການຮໍ່າຮຽນ. ສິ່ງອໍານວຍຄວາມສະດວກ ແລະ ການປັບປຸງແຫຼ່ງນໍ້າໃຊ້ ໄດ້ໃຫ້ຄວາມເອົາໃຈໃສ່ ຕໍ່ກັບບັນຫາບົດບາດຍິງ – ຊາຍ ແລະ ເດັກນ້ອຍພິການ ເຮັດໃຫ້ມີການເຂົ້າເຖິງທີ່ດີຂຶ້ນ. ເພື່ອສົ່ງເສີມວຽກງານສຸຂະອະນາໄມ ໃນໂຮງຮຽນສໍາລັບເດັກກ່ອນໄວຮຽນ ໃຫ້ມີປະສິດທິຜົນນັ້ນ, ອົງການ UNICEF ໄດ້ເຮັດວຽກຮ່ວມກັບ ກະຊວງສຶກສາທິການ ແລະ ກິລາ ເພື່ອດັດປັບ ຊຸດສົ່ງເສີມສຸຂະອະນາໄມສໍາລັບໂຮງຮຽນປະຖົມ ທີ່ເອີ້ນວ່າ "ການປະຕິບັດດ້ານສຸຂະອະນາໄມໂດຍນັກຮຽນ" ຫຼື "HAPiS" ແລະ ໄດ້ພັດທະນາ ຄູ່ມືຂອງຄູຝຶກ ແລະ ຄູ່ມືແນະນໍາຂອງອາຈານ ສໍາລັບໂຮງຮຽນອະນຸບານ ແລະ ໄດ້ຈັດຝຶກອົບຮົມຄູຝຶກ. ອົງການ UNICEF ຈະສືບຕໍ່ສົ່ງເສີມພຶດຕິກໍາດ້ານສຸຂະອະນາໄມທີ່ດີໃນໂຮງຮຽນ ລວມທັງການລ້າງມືດ້ວຍສະບູ, ການອະນາໄມເດີ່ນໂຮງຮຽນ, ການນໍາໃຊ້ ແລະ ຮັກສາຫ້ອງນໍ້າ ແລະ ຮັບປະກັນມີນໍ້າດື່ມທີ່ສະອາດໃນຫ້ອງຮຽນ.

> **ການສະໜັບສະໜູນຂອງ ອົງການ UNICEF ໃນລະດັບໂຮງຮຽນ ແລະ ຊຸມຊົນໄດ້ເຮັດໃຫ້ເດັກນັກຮຽນ 2,093 ຄົນ (ລະດັບປະຖົມ 1,321 ຄົນ ແລະ ເດັກກ່ອນໄວຮຽນ 772 ຄົນ) ໃນ ແຂວງຜົ້ງສາລີ, ສະຫວັນນະເຂດ ແລະ ສາລະວັນ ເຂົ້າເຖິງນໍ້າໃຊ້, ສຸຂາພິບານ ແລະ ສຸຂະອະນາໄມ ເປັນການສ້າງແວດລ້ອມທີ່ເອື້ອອໍານວຍໃນການຮໍ່າຮຽນ.**

ພາຍໃຕ້ໂຄງການອາຫານໂຮງຮຽນ, ອົງການ WFP ໄດ້ຮ່ວມກັບຫຼາຍພາກສ່ວນ ແລະ ຊຸມຊົນທ້ອງຖິ່ນ ຕິດຕັ້ງ ບ່ອນລ້າງມືໄດ້ 100 ສະຖານີ ໃນໂຮງຮຽນຕ່າງໆ ເພື່ອໃຫ້ແນ່ໃຈວ່າ ເດັກນ້ອຍມີສຸຂະອະນາໄມທີ່ເໝາະສົມ. ເພື່ອປັບປຸງການເຂົ້າເຖິງນໍ້າໃຊ້ໃນໂຮງຮຽນ ສໍາລັບແຕ່ງກິນ, ສຸຂະອະນາໄມ, ເຮັດສວນຜັກໂຮງຮຽນ ແລະ ລ້າງມື, ອົງການ WFP ໄດ້ຮ່ວມງານກັບນໍ້າສະອາດ ເຮັດການສໍາຫຼວດແຫຼ່ງນໍ້າ ແລະ ອອກແບບລະບົບນໍ້າໃຊ້ ໃນ 220 ໂຮງຮຽນ ຂອງ 9 ເມືອງ ໃນແຂວງພາກເໜືອ.

ອົງການ UNICEF ໄດ້ສະໜັບສະໜູນການສ້າງມາດຕະຖານນໍ້າໃຊ້, ສຸຂາພິບານ ແລະ ສຸຂະອະນາໄມໃນໂຮງຮຽນ ໃນລະດັບນະໂຍບາຍ ແລະ ໃນລະບົບໂດຍລວມ ເຊິ່ງໄດ້ຊ່ວຍລັດຖະບານ ກໍານົດຂອບເຂດ ແລະ ເງື່ອນໄຂຂັ້ນຕໍ່າຂຶ້ນມາ ເພື່ອປະຕິບັດກິດຈະກໍາຢູ່ໃນລະດັບໂຮງຮຽນ ແລະ ສົ່ງເສີມວິທີການຕ່າງໆໃຫ້ເປັນມາດຕະຖານຫຼາຍຂຶ້ນ. ອົງການ UNICEF ແລະ GIZ ໄດ້ສະໜັບສະໜູນການເກັບກໍາຂໍ້ມູນໂຮງຮຽນອະນຸບານ ແລະ ໂຮງຮຽນປະຖົມ ໃນ 3 ແຂວງ ໂດຍນໍາໃຊ້ ມາດຖານ 3 ດາວ ແລະ ແບບຟອມການປະເມີນຕົນເອງ. ຜົນຂອງການເກັບກໍາຂໍ້ມູນນີ້ ຈະໃຫ້ພາບລວມກ່ຽວກັບ ສະພາບນໍ້າໃຊ້, ສຸຂາພິບານ ແລະ ສຸຂະອະນາໄມໃນໂຮງຮຽນ ໃນເມືອງທີ່ຖືກຄັດເລືອກມາ ລວມທັງຈໍານວນໂຮງຮຽນທີ່ປະຕິບັດໄດ້ຕາມມາດຖານ 3 ດາວນໍາອີກ.

ອົງການ WFP ໄດ້ສະໜັບສະໜູນ ການປັບປຸງຄູ່ມືແນະນໍາການຜະລິດກະສິກໍາຢູ່ໂຮງຮຽນ ຂອງກະຊວງສຶກສາທິການ ແລະ ກິລາ ໂດຍສະເພາະດ້ານໂພສະນາການ ແລະ ບົດບາດຍິງ – ຊາຍ. ຄູ່ມືແນະນໍານີ້ຈະໄດ້ຖືກແຈກຢາຍໃຫ້ກັບໂຮງຮຽນ ທີ່ໄດ້ຮັບການສະໜັບສະໜູນໂຄງການອາຫານໂຮງຮຽນ ຈາກ ອົງການ WFP, ອົງການບັນເທົາທຸກກາໂຕລິກ ແລະ ລັດຖະບານ. ອົງການ WFP ຍັງໄດ້ສະໜັບສະໜູນ ການອອກ ຄໍາສັ່ງຂອງລັດຖະມົນຕີ ວ່າດ້ວຍການສົ່ງເສີມການຜະລິດກະສິກໍາຢູ່ໂຮງຮຽນ ໃນທຸກລະດັບ ນັບຕັ້ງແຕ່ອະນຸບານຈົນຮອດມະຫາວິທະຍາໄລ.

ເພື່ອສົ່ງເສີມວຽກງານເພດສຶກສາແບບຮອບດ້ານໃນການສຶກສາລະດັບປະຖົມນັ້ນ, ອົງການ UNFPA ໄດ້ສະໜັບສະໜູນການ ພັດທະນາປຶ້ມ ນາງ ນ້ອຍ ສອງເຫຼັ້ມ ເພື່ອເປັນເຄື່ອງມືໃນການຮຽນການສອນ.

### ເສີມສ້າງຄວາມເຂັ້ມແຂງໃນການສ້າງຄູ ແລະ ການສ້າງຄວາມສາມາດອື່ນໆ ໃຫ້ກັບພະນັກງານລັດຖະກອນ, ຄູອາຈານ ແລະ ຊຸມຊົນ

ການຊ່ວຍເຫຼືອຂອງອົງການ ສປຊ ໃນການສ້າງຄວາມສາມາດຂອງພະນັກງານລັດໃນຫຼາຍລະດັບ, ຜູ້ບໍລິຫານໂຮງຮຽນ, ຄູອາຈານ ແລະ ຊຸມຊົນ ໄດ້ເສີມຂະຫຍາຍຄວາມຮູ້ ແລະ ທັກສະຂອງ ພາກສ່ວນທີ່ກ່ຽວຂ້ອງ ເພື່ອໃຫ້ບໍລິການທີ່ມີຄຸນນະພາບ ກັບນັກຮຽນ.

ອົງການ UNESCO ໄດ້ສະໜັບສະໜູນການສ້າງຄວາມສາມາດຂອງຄູອາຈານ ແລະ ພະນັກງານລັດ. ເພື່ອແກ້ໄຂບັນຫາສິ່ງທ້າທາຍໃນການຝຶກຄູອາຈານ ທີ່ກໍາລັງສິດສອນໃຫ້ມີຄຸນນະພາບສູງນັ້ນ, ພະນັກງານດ້ານການສຶກສາ ຈໍານວນ 72 ຄົນ ຈາກສູນພັດທະນາຄູຂັ້ນແຂວງ ແລະ ພະແນກສຶກສາທິການ ແລະ ກິລາແຂວງ ໄດ້ຮັບການຝຶກອົບຮົມທັກສະທີ່ຈໍາເປັນ ເຊັ່ນ: ການວາງແຜນຍຸດທະສາດ, ການຄຸ້ມຄອງໂຄງການ ແລະ ທັກສະການອໍານວຍຄວາມສະດວກການຝຶກອົບຮົມ ເຊິ່ງຊ່ວຍໃຫ້ພວກ ເຂົາສາມາດວາງແຜນ ແລະ ດໍາເນີນການຝຶກອົບຮົມໄດ້ຢ່າງມີປະສິດທິຜົນ ຕອບສະໜອງໄດ້ຕາມຄວາມຕ້ອງການຕົວຈິງຂອງຄູອາຈານ. ນອກຈາກນັ້ນ ຍັງມີການສ້າງກຸ່ມຄູ່ຝຶກລະດັບຊາດ 16 ຄົນ ເລັ່ງໃສ່ການສິດສອນທີ່ເອົາໃຈໃສ່ບົດບາດຍິງ – ຊາຍ ໃນວິຊາວິທະຍາສາດ, ເຕັກໂນໂລຊີ, ວິສະວະກໍາ ແລະ ເລກ (STEM) ເພື່ອສົ່ງເສີມການມີສ່ວນຮ່ວມ ແລະ ຄວາມສໍາເລັດຂອງເດັກຍິງ ໃນຂົງເຂດວິຊານີ້.

ອົງການ UNICEF ໄດ້ສະໜັບສະໜູນ ການຝຶກອົບຮົມການຊີ້ນໍາດ້ານການສິດສອນທີ່ມີປະສິດທິຜົນ ແລະ ການວາງແຜນເຂົ້າເຖິງກຸ່ມເປົ້າໝາຍ ໃຫ້ກັບພະນັກງານລັດຂັ້ນແຂວງ ແລະ ເມືອງ ລວມທັງທີ່ປຶກສາດ້ານການສິດສອນ ຈໍານວນ 70 ຄົນ. ຜົນຂອງການສະໜັບສະໜູນດັ່ງກ່າວ ນໍາໄປສູ່ການສ້າງແຜນດໍາເນີນງານ ຂອງທີ່ປຶກສາດ້ານການສິດສອນ ສໍາລັບສົກປີ 2018-2019 ແລະ ນໍາໄປຈັດຕັ້ງປະຕິບັດຢູ່ໃນ 3 ແຂວງ. ຜົນໄດ້ຮັບກໍຄື ໂຮງຮຽນປະຖົມທັງໝົດ 578 ແຫ່ງ ໃນ 6 ເມືອງຂອງທັງ 3 ແຂວງ ໄດ້ຮັບການມາຢ້ຽມຢາມຈາກທີ່ປຶກສາດັ່ງກ່າວເພື່ອສະໜັບສະໜູນການສິດສອນ ຢ່າງໜ້ອຍສຸດ 1 ຄັ້ງ ຕໍ່ ໜຶ່ງພາກຮຽນ ເປັນການຊ່ວຍເຫຼືອຄູອາຈານໄດ້ເຖິງ 1,689 ຄົນ, ເຊິ່ງໃນນັ້ນ ມີແມ່ຍິງ 979 ຄົນ. ວິທີການຮຽນ – ການສອນທີ່ໄດ້ຮັບການປັບປຸງດີຂຶ້ນນັ້ນ ໄດ້ສ້າງຜົນປະໂຫຍດໃຫ້ກັບນັກຮຽນຊັ້ນປະຖົມເຖິງ 45,791 ຄົນ, ມີເດັກຍິງ 21,356 ຄົນ.

ອົງການ UNICEF ຍັງໄດ້ສະໜັບສະໜູນ ກະຊວງສຶກສາທິການ ແລະ ກິລາ ກ່ຽວກັບໂອກາດການພັດທະນາທາງອາຊີບແບບຕໍ່ເນື່ອງໃຫ້ກັບຄູອາຈານລະດັບກ່ອນປະຖົມ ແລະ ອາຈານໃຫຍ່ ຈໍານວນ 84 ທ່ານ ໂດຍການຈັດຝຶກອົບຮົມຍົກລະດັບຄວາມຮູ້ ແລະ ກອງປະຊຸມແລກປ່ຽນປະສົບການ ໃນ 3 ແຂວງ. ສະນັ້ນ ເຮັດໃຫ້ມີ ເດັກກ່ອນໄວປະຖົມ ຈໍານວນ 1,213 ຄົນ ໄດ້ຮັບຜົນປະໂຫຍດ ຈາກທັກສະການຮຽນ – ການສອນທີ່ໄດ້ຮັບການປັບປຸງດີຂຶ້ນນີ້. ການສ້າງຄວາມສາມາດໃຫ້ກັບ ພະແນກສຶກສາທິການ ແລະ ກິລາຂອງ 3 ແຂວງ ແລະ ຫ້ອງການສຶກສາທິການ ແລະ ກິລາ ຂອງ 6 ເມືອງ ແມ່ນຈັດຂຶ້ນໃນຮູບແບບກອງປະຊຸມຝຶກອົບຮົມ ແລະ ການຝຶກຫັດຕົວຈິງ ລວມທັງການຝຶກອົບຮົບການນໍາໃຊ້ເຄື່ອງມືຕິດຕາມ. ພະນັກ

ງານທີ່ໄດ້ຮັບການຝຶກອົບຮົມ (ລວມທັງທີ່ປຶກສາດ້ານການສິດສອນ) ສາມາດໃຫ້ການສະໜັບສະໜູນໃນການຕິດຕາມ ແລະ ຊ່ວຍເຫຼືອໄດ້ຕົວຈິງ ໃນທັງໝົດ 117 ໂຮງຮຽນລະດັບກຽມກ່ອນປະຖົມ, ເຮັດໃຫ້ມີນັກຮຽນທັງໝົດ 2,563 ຄົນ ໄດ້ຮັບຜົນປະໂຫຍດຈາກການສະໜັບສະໜູນນີ້.

<u>ປັບປຸງຫຼັກສູດການສຶກສາຂອງໂຮງຮຽນ ແລະ ການສ້າງຄູ ໃຫ້ກາຍເປັນແບບຮຽນຮ່ວມ, ເອົາໃຈໃສ່ບົດບາດຍິງ – ຊາຍ, ມີຄວາມກ່ຽວຂ້ອງ ແລະ ສອດຄ່ອງ</u>

ໃນໄລຍະຂອງປີ 2018 ນັ້ນ ອົງການ ສປຊ ໄດ້ສະໜັບສະໜູນການທົບທວນປັບປຸງຫຼັກສູດການສຶກສາຂອງໂຮງຮຽນ ແລະ ຫຼັກສູດການຝຶກອົບຮົມ ພ້ອມກັບເຄື່ອງມືອຸປະກອນທີ່ກ່ຽວຂ້ອງ ເຮັດໃຫ້ຄຸນນະພາບ ແລະ ຄວາມກ່ຽວຂ້ອງຂອງເນື້ອໃນການສຶກສາ ແລະ ການຝຶກອົບຮົມ ແລະ ວິທີການສອນ ໄດ້ຮັບການປັບປຸງດີຂຶ້ນ.

ອົງການ UNESCO ໄດ້ຊ່ວຍເຫຼືອດ້ານວິຊາການ ແລະ ດ້ານການເງິນ ໃນການທົບທວນປັບປຸງ ຫຼັກສູດປະລິນຍາຕີ ສາຂາສອນເດັກນ້ອຍກ່ອນໄວຮຽນ ເພື່ອໃຫ້ສອດຄ່ອງກັບ ຫຼັກສູດອະນຸບານຂອງປະເທດ ປີ 2012 ແລະ ຂອບຄວາມຮູ້ຄວາມສາມາດຂອງຄູໃນການເບິ່ງແຍງເດັກກ່ອນໄວຮຽນ ສໍາລັບປະເທດໃນເຂດຕາເວັນ ອອກສຽງໃຕ້ ເພື່ອປັບປຸງຄຸນນະພາບຂອງແຜນການສອນ ແລະ ອາຈານສອນເດັກກ່ອນປະຖົມໃຫ້ດີຂຶ້ນ. ຫຼັກສູດທີ່ໄດ້ຮັບການປັບປຸງໃໝ່ນີ້ ໄດ້ຖືກນໍາໃຊ້ໂດຍ ວິທະຍາໄລສ້າງຄູດົງຄໍາຊ້າງ ແລະ ວິທະຍາໄລສ້າງຄູສາລະວັນ ໃນ ເດືອນຕຸລາ 2018 ແລະ ຈະໄດ້ຂະຫຍາຍອອກໄປໃຫ້ກັບ ວິທະຍາໄລສ້າງຄູອື່ນໆຕື່ມອີກ ໃນປີຕໍ່ໆໄປ.

ໃນທ້າຍປີ 2018, ອົງການ UNESCO ໄດ້ສະໜັບສະໜູນ ກະຊວງສຶກສາທິການ ແລະ ກິລາ ແລະ ກຸ່ມລັດຖະມົນຕີສຶກສາອາຊີຕາເວັນອອກສຽງໃຕ້ ພັດທະນານະໂຍບາຍຄູແບບຮອບດ້ານ ເພື່ອປັບປຸງການຈັດຈ້າງ, ການຄຸ້ມຄອງ, ການຝຶກອົບຮົມ, ເງິນເດືອນອຸດໜູນ, ການພັດທະນາວິຊາອາຊີບແບບຕໍ່ເນື່ອງ ແລະ ສະພາບການເຮັດວຽກຂອງຄູໃຫ້ດີຂຶ້ນ. ນອກຈາກນັ້ນ ຍັງໄດ້ມີການທົບທວນຄືນ ເອກະສານນະໂຍບາຍ ແລະ ຍຸດທະສາດຕ່າງໆທີ່ມີຢູ່ ເພື່ອວິເຄາະ ແລະ ນໍາໃຊ້ເປັນພື້ນຖານໃຫ້ກັບການພັດທະນາ ນະໂຍບາຍຄູແບບຮອບດ້ານ, ຮັບປະກັນຄວາມກົມກຽວ ແລະ ເຊື່ອມສານເອກະສານຕ່າງໆທີ່ມີຢູ່ແລ້ວເຂົ້າໃນນະໂຍບາຍຄູ.

ອົງການ UNICEF ໄດ້ສະໜັບສະໜູນ ການປັບປຸງ ບົດຮຽນທີ 1-3 ໃນປຶ້ມຄູ່ມືອາຈານສໍາລັບການສຶກສາເດັກກ່ອນໄວປະຖົມ ໃຫ້ສອດຄ່ອງກັບຄວາມສາມາດໃນການກຽມຄວາມພ້ອມຂອງໂຮງຮຽນ ແລະ ເນື້ອໃນຂອງຫຼັກສູດ ທີ່ດີຂຶ້ນ. ມີການທົດລອງໃຊ້ ປຶ້ມຄູ່ມືທີ່ໄດ້ຮັບການປັບປຸງໃໝ່ນີ້ ໃນໂຮງຮຽນກ່ອນລະດັບປະຖົມ 138 ແຫ່ງ ໃນ 5 ແຂວງ. ປະຈຸບັນ ກໍາລັງທົບທວນເບິ່ງຜົນໄດ້ຮັບຂອງການທົດລອງໃຊ້ປຶ້ມຄູ່ມືດັ່ງກ່າວ ເພື່ອສ້າງໃຫ້ເປັນສະບັບສຸດທ້າຍ ເຊິ່ງຈະຊ່ວຍເສີມຂະຫຍາຍຄຸນນະພາບ, ຄວາມສອດຄ່ອງ, ຄວາມເໝາະສົມຕໍ່ກັບໄວອາຍຸ ແລະ ຄວາມຕໍ່ເນື່ອງເຂົ້າສູ່ລະດັບປະຖົມສຶກສາ. ເພື່ອຮັບປະກັນຄຸນນະພາບຂອງການສຶກສາຂອງເດັກກ່ອນໄວຮຽນ ນັ້ນ, ອົງການ UNICEF ຍັງໄດ້ສະໜັບສະໜູນ ການສ້າງມາດຕະຖານຄຸນນະພາບຂອງການສຶກສາກ່ອນໄວຮຽນ ເຊິ່ງໄດ້ທົດລອງໃຊ້ ໃນ 78 ສູນ ໃນປີ 2018. ຜົນໄດ້ຮັບຂອງການທົດລອງໃຊ້ນັ້ນຈະໄດ້ປັບໃຫ້ເປັນສະບັບສຸດທ້າຍ ໃນຕົ້ນ ປີ 2019.

ການຊ່ວຍເຫຼືອຂອງອົງການ UNICEF ຮ່ວມກັບ ສະຫະພາບເອີຣົບ ຍັງລວມເອົາການເສີມຂະຫຍາຍລະບົບການພັດທະນາວິຊາອາຊີບແບບຕໍ່ເນື່ອງ ໃຫ້ກັບທີ່ປຶກສາການສິດສອນ. ການພັດທະນາຮ່າງຫຼັກສູດ ແລະ ຍົກລະດັບເຄື່ອງມືການຝຶກອົບຮົມ ໄດ້ເລີ່ມຕົ້ນຂຶ້ນ ແລະ ກໍາລັງຢູ່ໃນໄລຍະທົດລອງໃຊ້. ໂຄງການຍົກລະດັບທີ່ປຶກສາການສິດສອນ ຈະມີຄວາມພ້ອມນໍາໃຊ້ໃນທົ່ວປະເທດ ໃນຕົ້ນສົກສຶກສາ 2019 – 2020 ເຊິ່ງຈະລວມເອົາ ທີ່ປຶກສາການສິດສອນທັງໝົດ 600 ຄົນ ທີ່ມີໃນປະຈຸບັນ. ອົງການ UNICEF ຍັງໄດ້ສະໜັບສະໜູນ ການພັດທະນາ ແລະ ຮັບຮອງ ຂອບວຽກການປະເມີນການຮຽນຮູ້ຂອງນັກຮຽນທົ່ວປະເທດ. ການຈັດຕັ້ງປະຕິບັດຂອບວຽກດັ່ງກ່າວ ຈະເລີ່ມໃນ ປີ 2019 ເຊິ່ງຈະປະກອບສ່ວນເຂົ້າໃນການປັບປຸງການສ້າງ ແລະ ຝຶກອົບຮົມຄູແບບຕໍ່ເນື່ອງ.

“

**ໃນທ້າຍປີ 2018, ອົງການ UNESCO ໄດ້ສະໜັບສະໜູນ ກະຊວງສຶກສາທິການ ແລະ ກິລາ ແລະ ກຸ່ມລັດຖະມົນຕີສຶກສາອາຊີຕາເວັນອອກສຽງໃຕ້ ພັດທະນານະໂຍບາຍຄູແບບຮອບດ້ານ ເພື່ອປັບປຸງການຈັດຈ້າງ, ການຄຸ້ມຄອງ, ການຝຶກອົບຮົມ, ເງິນເດືອນອຸດໜູນ, ການພັດທະນາວິຊາອາຊີບແບບຕໍ່ເນື່ອງ ແລະ ສະພາບການເຮັດວຽກຂອງຄູໃຫ້ດີຂຶ້ນ.**

”

ໂດຍອີງໃສ່ຜົນຂອງການປະເມີນ ການນໍາໃຊ້ປຶ້ມຄູ່ມືອາຈານ ສໍາລັບວິຊາເພດສຶກສາແບບຮອບດ້ານ ເຊິ່ງໄດ້ດໍາເນີນໃນ ປີ 2016, ອົງການ UNFPA ໄດ້ຮ່ວມມືກັບ ກະຊວງສຶກສາທິການ ແລະ ກິລາ ສ້າງແຜນບົດສອນ ແລະ ຄູ່ມືແນະນໍາໃຫ້ກັບອາຈານ ກ່ຽວກັບວິຊາເພດສຶກສາແບບຮອບດ້ານ ສໍາລັບຊັ້ນມັດທະຍົມຕອນຕົ້ນ ແລະ ຕອນປາຍ ແລະ ໄດ້ນໍາສະເໜີ ໃນກອງປະຊຸມປຶກສາຫາລືລະດັບຊາດຫຼາຍຄັ້ງກັບພາກສ່ວນທີ່ກ່ຽວຂ້ອງ. ຫຼັງຈາກນັ້ນ ກໍໄດ້ປັບປຸງແຜນບົດສອນເພດສຶກສາແບບຮອບດ້ານ ສໍາລັບຊັ້ນມັດທະຍົມຕອນຕົ້ນ ແລະ ຕອນປາຍ ໃຫ້ສໍາເລັດ ແລະ ນໍາໄປສອນຢູ່ທີ່ໂຮງຮຽນມັດທະຍົມ 49 ແຫ່ງ ໃນແຂວງບໍ່ແກ້ວ ໃນປີ 2019. ນອກຈາກນັ້ນ ຍັງມີການພັດທະນາ ແລະ ຮັບຮອງເອົາ ຫຼັກສູດການຝຶກອົບຮົມເພດສຶກສາແບບຮອບດ້ານສໍາລັບ ນັກຮຽນ TVET ໃນໄລຍະ 1 ອາທິດ ເຊິ່ງເປັນຫຼັກສູດຝຶກທີ່ແຍກອອກຕ່າງຫາກ. ຈະມີການທົດລອງໃຊ້ ຫຼັກສູດສໍາລັບ 1 ອາທິດນີ້ ກັບ ນັກຮຽນ TVET ໃນຊັ້ນປີທີໜຶ່ງໃນແຂວງບໍ່ແກ້ວ.

ອົງການ WFP ໄດ້ເຮັດວຽກຮ່ວມກັບ ກະຊວງສຶກສາທິການ ແລະ ກິລາ ເພື່ອເລີ່ມຕົ້ນການສົນທະນາກ່ຽວກັບ ການພັດທະນາ "ກ່ອງສີຂຽວ" ເຊິ່ງຈະລວມເອົາເຄື່ອງມືການຮຽນ – ການສອນທີ່ຕິດພັນກັບການສຶກສາທາງໂພຊະນາການ, ການຜະລິດກະສິ ກໍາຢູ່ໂຮງຮຽນ ແລະ ການປ່ຽນແປງດິນຟ້າອາກາດ. ເຄື່ອງມືການຮຽນ – ການສອນນີ້ຈະໄດ້ປັບໃຫ້ສອດຄ່ອງກັບ ຫຼັກສູດການສຶກສາໃນຊັ້ນປະຖົມ ແລະ ຫຼັກສູດການຝຶກອົບຮົມຄູ.

<u>ປັບປຸງການເຂົ້າເຖິງ, ການມີສ່ວນຮ່ວມ ແລະ ຜົນໄດ້ຮັບຂອງການຮຽນຮູ້ ຂອງນັກຮຽນໃນເຂດຊົນນະບົດ ຫ່າງໄກສອກຫຼີກ</u>

ອົງການ ສປຊ ໄດ້ສຸມຄວາມພະຍາມໃຫ້ການສະໜັບສະໜູນລັດຖະບານ ເສີມຂະຫຍາຍ ການເຂົ້າເຖິງໂອກາດການສຶກສາທີ່ມີຄຸນນະພາບ ແລະ ການພັດທະນາທັກສະຄວາມສາມາດໃຫ້ເທົ່າທຽມກັນຫຼາຍຂຶ້ນ ເຊິ່ງເປັນການປະກອບສ່ວນໂດຍກົງ ເຂົ້າໃນຍຸດທະສາດຂອງກະຊວງສຶກສາທິການ ແລະ ກິລາ ເພື່ອຫຼຸດຄວາມແຕກໂຕນກັນໃນການສຶກສາ ແລະ ການຝຶກອົບຮົມໃຫ້ໜ້ອຍລົງ.

ເພື່ອເລັ່ງໃສ່ແກ້ໄຂບັນຫາຖານຂໍ້ມູນກ່ຽວກັບການຝຶກອົບຮົມໃຫ້ຄູທີ່ກໍາລັງສິດສອນ ແລະ ການເຂົ້າເຖິງການຝຶກອົບຮົມທີ່ຈໍາກັດຂອງຄູຊົນນະບົດຫ່າງໄກສອກຫຼີກ, ອົງການ UNESCO ໄດ້ສະໜັບສະໜູນ ການສ້າງລະບົບຖານຂໍ້ມູນຂຶ້ນມາ. ການປຶກສາຫາລື ແລະ ການສຶກສາເບື້ອງຕົ້ນເພື່ອກໍານົດລະບົບຖານຂໍ້ມູນຄູອາຈານທີ່ກໍາລັງສິດສອນໃນປະຈຸບັນ ໄດ້ເລີ່ມໃນປີ 2018. ໃນປີທີ່ຈະມານີ້ ພະນັກງານທີ່ກ່ຽວຂ້ອງ ຈະໄດ້ຮັບການຝຶກອົບຮົມ ການເກັບກໍາ, ການເຜີຍແຜ່ ແລະ ການວິເຄາະຂໍ້ມູນແບບແຍກເພດ ແລະ ຄົບຖ້ວນ ກ່ຽວກັບການຝຶກອົບຮົມຄູອາຈານທີ່ກໍາລັງສິດສອນຢູ່. ຈະມີການເປີດໃຊ້ລະບົບຖານຂໍ້ມູນດັ່ງກ່າວນີ້ ໃນປີ 2019 ເຊິ່ງຈະຊ່ວຍຮັບປະກັນໂອກາດທີ່ເທົ່າທຽມກັນຫຼາຍຂຶ້ນໃຫ້ກັບຄູອາຈານ ເພື່ອປະກອບສ່ວນເຂົ້າໃນການປັບປຸງ ຜົນໄດ້ຮັບໃນການຮຽນຮູ້ຂອງນັກຮຽນ ໃນເຂດຊົນນະບົດຫ່າງໄກສອກຫຼີກ.

ນອກຈາກນັ້ນ, ອົງການ UNESCO ຍັງໄດ້ສືບຕໍ່ເຮັດວຽກຮ່ວມກັບກະຊວງສຶກສາທິການ ແລະ ກິລາ ຜັນຂະຫຍາຍການຈັດຕັ້ງປະຕິບັດແຜນງານການສອນຫຼັກສູດທຽບເທົ່າປະຖົມ ແລະ ຂະຫຍາຍການສຶກສາລະດັບປະຖົມນອກລະບົບ ໃນອີກ 5 ແຂວງ ສໍາລັບສົກປີ 2018. ໂດຍອີງໃສ່ຜົນສໍາເລັດຂອງແຜນງານດັ່ງກ່າວ, ກະຊວງສຶກສາທິການ ແລະ ກິລາ ໄດ້ຕັດສິນໃຈ ຈັດສັນທຶນຮອນ ຈາກງົບປະມານທົ່ວໄປຂອງກະຊວງເອງ ເພື່ອຜັນຂະຫຍາຍແຜນງານນີ້ ໄປໃນເມືອງ ແລະ ແຂວງອື່ນໆ. ອົງການ UNESCO ໄດ້ສະໜັບສະໜູນການລະບຸຊອກຫານັກຮຽນທີ່ອອກໂຮງຮຽນ ໃນ 3 ແຂວງ, ສ້າງຄວາມສາມາດໃຫ້ກັບຄູອາຈານທີ່ສອນຫ້ອງຄວບ ແລະ ວິທີການດຶງເອົາເດັກນ້ອຍເຫຼົ່ານັ້ນກັບເຂົ້າມາຮຽນຄືນໃນໂຮງຮຽນ. ໂດຍລວມແລ້ວ ມີນັກຮຽນທີ່ດ້ອຍໂອກາດ ຈໍານວນ 2,046 ຄົນ ໄດ້ຮັບການສະໜັບສະໜູນຜ່ານກິດຈະກໍາເຫຼົ່ານີ້ ໃນປີ 2018.

> **ອົງການ WFP ໄດ້ເຮັດວຽກຮ່ວມກັບ ກະຊວງສຶກສາທິການ ແລະ ກິລາ ເພື່ອເລີ່ມຕົ້ນການສົນທະນາກ່ຽວກັບການພັດທະນາ "ກ່ອງສີຂຽວ" ເຊິ່ງຈະລວມເອົາເຄື່ອງມືການ ຮຽນ – ການສອນທີ່ຕິດພັນກັບການສຶກສາ ທາງໂພຊະນາການ, ການຜະລິດ ກະສິກໍາ ຢູ່ໂຮງຮຽນ ແລະ ການປ່ຽນແປງດິນ ຟ້າອາກາດ. ເຄື່ອງມືການຮຽນ – ການສອນນີ້ ຈະໄດ້ປັບໃຫ້ສອດຄ່ອງກັບຫຼັກສູດການສຶກສາໃນຊັ້ນປະຖົມ ແລະ ຫຼັກສູດການຝຶກອົບຮົມຄູ.**

ໂດຍການສະໜັບສະໜູນຂອງ ອົງການ UNICEF, ສູນກຽມຄວາມພ້ອມເດັກກ່ອນເຂົ້າໂຮງຮຽນເຊິ່ງມີຊຸມຊົນເປັນເຈົ້າ ໄດ້ຮັບການສ້າງຕັ້ງຂຶ້ນມາໃໝ່ອີກ 32 ແຫ່ງ ແລະ ກໍາລັງດໍາເນີນງານຢູ່ ໃນເຂດຫ່າງໄກສອກຫຼີກຂອງ 3 ແຂວງ. ວຽກດັ່ງກ່າວ ໄດ້ຊ່ວຍເຮັດໃຫ້ເດັກນ້ອຍຈໍານວນ 1,156 ຄົນ ຜູ້ທີ່ຂາດໂອກາດໃນການເຂົ້າເຖິງການຮໍ່າຮຽນ ສາມາດເຂົ້າຮ່ວມແຜນງານການສຶກສາຂອງເດັກກ່ອນໄວຮຽນທີ່ມີຄຸນນະພາບ.

ອົງການ WFP ໄດ້ສະໜັບສະໜູນກິດຈະກໍາອາຫານທ່ຽງໂຮງຮຽນໃຫ້ກັບ 1,450 ໂຮງຮຽນ ໃນ 7 ແຂວງ: ແຂວງຜົ້ງສາລີ, ອຸດົມໄຊ, ຫຼວງນໍ້າທາ, ຫຼວງພະບາງ, ສາລະວັນ, ເຊກອງ ແລະ ອັດຕະປື. ມີເດັກນ້ອຍໂຮງຮຽນອະນຸບານ, ຫ້ອງກຽມ ແລະ ລະດັບປະຖົມ ຈໍານວນ 140,000 ຄົນ ໃນນັ້ນມີເດັກຍິງ 63,693 ຄົນ ໄດ້ຮັບຜົນປະໂຫຍດຈາກໂຄງການອາຫານທ່ຽງນີ້. ນອກຈາກນັ້ນ ອົງການ WFP ຍັງໄດ້ເລີ່ມການຮ່ວມມືກັບ ສະມາຄົມການສຶກສາເພື່ອການພັດທະນາລາວ ສະໜັບສະໜູນ ໂຮງຮຽນປະຖົມ 15 ແຫ່ງ  ໃນເມືອງນາກາຍ ແຂວງຄໍາມ່ວນ ເພື່ອຊ່ວຍເຫຼືອກິດຈະກໍາອາຫານທ່ຽງໃນໂຮງຮຽນທີ່ປູກໂດຍຊຸມຊົນ.

ໂດຍການສະໜັບສະໜູນຈາກອົງການ UNFPA, ໂຄງການກຸ່ມເດັກຍິງ  "ນາງ ນ້ອຍ"  ໄດ້ຖືກຈັດຕັ້ງປະຕິບັດຢູ່ 9 ບ້ານ ໃນແຂວງສະຫວັນນະເຂດ. ຫຼັງຈາກນັ້ນ ໄດ້ມີການສ້າງ ເນື້ອໃນບົດຮຽນກ່ຽວກັບກຸ່ມເດັກຍິງ  ນາງນ້ອຍ  ຂຶ້ນມາ 40 ບົດ ຮ່ວມກັບສະມາຄົມການສຶກສາເພື່ອການພັດທະນາລາວ ແລະ ຮັບຮອງເອົາໃນກອງປະຊຸມປຶກສາຫາລືກັບຂະແໜງການທີ່ກ່ຽວຂ້ອງຫຼາຍຄັ້ງ ໃນຂັ້ນສູນກາງ ແລະ ຂັ້ນແຂວງ. ຄູ່ມືສະບັບສຸດທ້າຍ ໄດ້ຖືກຕີພິມ ແລະ ເປີດໂຕຢ່າງເປັນທາງການ ໃນເດືອນທັນວາ ໂດຍກົມການສຶກສານອກລະບົບ. ຜູ້ໃຫ້ຄໍາປຶກສາ 20 ຄົນ ທີ່ໄດ້ຮັບການຝຶກອົບຮົມຄູ່ມືດັ່ງກ່າວນັ້ນ ໄດ້ຈັດພາກຝຶກທັງ 40 ບົດ ໃຫ້ກັບ ເດັກຍິງ 200 ຄົນທີ່ມີອາຍຸລະຫວ່າງ 10-14 ປີ ແບບປະຈໍາອາທິດ. ໃນປີ 2019 ໂຄງການກຸ່ມເດັກຍິງນີ້ ຈະໄດ້ຖືກຂະຫຍາຍອອກໄປສູ່ບ້ານໃໝ່ໃນແຂວງສະຫວັນນະເຂດ ແລະ ເມືອງໃໝ່ໃນແຂວງບໍ່ແກ້ວ.

ໂດຍການຊ່ວຍເຫຼືອຈາກ ອົງການ IOM, ນັກສໍາມະນາກອນ ທັງໝົດ 81 ຄົນ (ໃນນັ້ນເປັນແມ່ຍິງ 23 ຄົນ) ຈາກ 8 ບ້ານ ລວມທັງພະນັກງານເມືອງ, ພະນັກງານແຂວງ ແລະ ຄູອາຈານຈາກໂຮງຮຽນມັດທະຍົມ 4 ແຫ່ງ ໃນແຂວງພາກເໜືອ ໄດ້ເຂົ້າຮ່ວມຝຶກອົບຮົມຄູຝຶກ ໃນຫົວຂໍ້ການສົ່ງເສີມການເຄື່ອນຍ້າຍແຮງງານແບບປອດໄພ ແລະ ສິດທິຂອງຜູ້ເຄາະຮ້າຍຈາກການຄ້າມະນຸດ. ຕໍ່ມາ ນັກສໍາມະນາກອນເຫຼົ່ານີ້ ໄດ້ຈັດຝຶກອົບຮົມໃນຊຸມຊົນຂອງຕົນ ໃນເມືອງລອງ ແລະ ເມືອງສິງ ຂອງແຂວງຫຼວງນໍ້າທາ ເຮັດໃຫ້ສາມາດເຂົ້າເຖິງແຮງງານເຄື່ອນຍ້າຍ ແລະ ປະຊາກອນທີ່ມີຄວາມສ່ຽງໄດ້ທັງໝົດ 2,220 ຄົນ, ເປັນແມ່ຍິງ 910 ຄົນ. ມີການຈັດກິດຈະກໍາໂຄສະນາເຜີຍແຜ່ກ່ຽວກັບການເຄື່ອນຍ້າຍແຮງງານແບບປອດໄພ ຢູ່ທີ່ໂຮງຮຽນ ແລະ ຫ້ອງການບ້ານ. ມີການຈັດຝຶກອົບຮົມຄູຝຶກ ກ່ຽວກັບການເຄື່ອນຍ້າຍແຮງງານແບບປອດໄພ ເພີ່ມເຕີມທີ່ແຂວງໄຊຍະບູລີ ໂດຍມີນັກສໍາມະນາກອນເຂົ້າຮ່ວມທັງໝົດ 31 ຄົນ.

### ເສີມສ້າງຄວາມເຂັ້ມແຂງໃນການໂຄສະນາ ແລະ ການປະຕິບັດ ໂດຍອີງໃສ່ຂໍ້ມູນຫຼັກຖານ

ຄວາມພະຍາຍາມແບບຕໍ່ເນື່ອງ ເພື່ອເຮັດການໂຄສະນາທີ່ອີງໃສ່ຫຼັກຖານ ໄດ້ຊ່ວຍໃຫ້ຄູ່ຮ່ວມງານລັດຖະບານ ສາມາດກໍານົດນະໂຍບາຍທີ່ອີງໃສ່ຂໍ້ມູນ ເປັນການປະກອບສ່ວນສ້າງຄວາມເຂັ້ມແຂງໃນການວາງແຜນ ແລະ ການພັດທະນາຂະແໜງການທີ່ເນັ້ນໃສ່ຜົນໄດ້ຮັບ.

ໂດຍການສະໜັບສະໜູນຂອງອົງການ UNICEF, ອົງການອື່ນໆໃນລະບົບ ສປຊ ແລະ ຄູ່ຮ່ວມພັດທະນາ, ຂໍ້ມູນການສໍາຫຼວດດັດຊະນີໝາຍສັງຄົມລາວ ຄັ້ງທີ II (LSIS-II) ໄດ້ຊ່ວຍໃຫ້ສາມາດວິເຄາະຄວາມແຕກໂຕນກັນໃນຫຼາຍດ້ານ ເພື່ອປະກອບຂໍ້ມູນເຂົ້າໃນການທົບທວນກາງສະໄໝ (MTR). ການວິເຄາະແບບລົງເລິກຂອງ LSIS-II ສໍາລັບຂະແໜງການສຶກສາໄດ້ເລີ່ມຕົ້ນ ແລະ ປະຈຸບັນກໍາກໍາລັງຮ່າງບົດລາຍງານການວິເຄາະ ໂດຍອີງໃສ່ຜົນຂອງກອງປະຊຸມປຶກສາຫາລືລະດັບຊາດ ໃນ ເດືອນກໍລະກົດ 2018. ບົດລາຍງານດັ່ງກ່າວຈະໄດ້ຮັບການປັບປຸງເປັນສະບັບສຸດທ້າຍ ໃນຕົ້ນປີ 2019.

ອົງການ ILO ໄດ້ສະໜັບສະໜູນໃນການສໍາຫຼວດຕະຫຼາດແຮງງານທີ່ແຂວງສະຫວັນນະເຂດ ເຊິ່ງລວມທັງໂຮງຮຽນ TVET ຂອງພາກລັດ ແລະ ເອກະຊົນ ເພື່ອຊອກຫາຊ່ອງຫວ່າງດ້ານຄວາມຕ້ອງການ

ແລະ ການສະໜອງແຮງງານທີ່ມີທັກສະຄວາມສາມາດ. ການສໍາຫຼວດນີ້ຈະປະກອບສ່ວນເຂົ້າໃນການສ້າງຄວາມເຂັ້ມແຂງໃຫ້ກັບການຝຶກອົບຮົມວິຊາຊີບ ທີ່ຕອບສະໜອງຕາມຄວາມຕ້ອງການຕົວຈິງຂອງແຮງງານ. ຜົນໄດ້ຮັບຂອງການສໍາຫຼວດ ໄດ້ໃຫ້ຂໍ້ມູນທີ່ສໍາຄັນກ່ຽວກັບ ສະຖານະການ ແລະ ສະພາບຂອງ TVET ແລະ ການພັດທະນາທັກສະຄວາມສາມາດ ໃນແຂວງສະຫວັນນະເຂດໂດຍສະເພາະ ແລະ ສະຖານນະການໂດຍລວມຂອງປະເທດ. ມີການນໍາສະເໜີຂໍ້ສະເໜີແນະຕ່າງໆ ໂດຍອີງໃສ່ຜົນໄດ້ຮັບຂອງການສໍາຫຼວດ ເຊິ່ງອົງການຈັດຕັ້ງທີ່ກ່ຽວຂ້ອງຂອງລັດຖະບານ ແລະ ພາກສ່ວນກ່ຽວຂ້ອງອື່ນໆ ຈະໄດ້ນໍາເອົາໄປຈັດຕັ້ງປະຕິບັດໃນ ປີ 2019 ເປັນຕົ້ນໄປ.

ໂດຍຜ່ານ ການຊ່ວຍເຫຼືອຂອງ ອົງການ Mastercard Foundation, ອົງການ WFP ຮ່ວມກັບ ອົງການບັນເທົາທຸກກາໂຕລິກ ໄດ້ສະໜັບສະໜູນ ການວິເຄາະຕົ້ນທຶນ – ຜົນປະໂຫຍດຂອງໂຄງການອາຫານໂຮງຮຽນ. ການວິເຄາະດັ່ງກ່າວ ໄດ້ສະແດງໃຫ້ເຫັນວ່າ ການລົງທຶນຈໍານວນ US$ 1 ໃຫ້ກັບອາຫານໂຮງຮຽນ ຈະສ້າງໃຫ້ມີຜົນໄດ້ຮັບກັບຄືນເຖິງ US$ 6 ພາຍໃນໄລຍະເວລາ 5 ປີ. ເມື່ອປຽບທຽບຂໍ້ມູນລະຫວ່າງໂຮງຮຽນທີ່ມີໂຄງການອາຫານໂຮງຮຽນ ແລະ ໂຮງຮຽນທີ່ບໍ່ມີນັ້ນ ຈະສັງເກດເຫັນໄດ້ຢ່າງຈະແຈ້ງວ່າ ເດັກນ້ອຍທີ່ໄດ້ຮັບອາຫານທ່ຽງ ຈະສືບຕໍ່ຮຽນໃນໂຮງຮຽນດົນກ່ວາ ໂດຍສະເລ່ຍ 1 ປີ.

ວັນເດັກນ້ອຍສາກົນຍິງ ໄດ້ຖືກຈັດຂຶ້ນ ໃນວັນທີ 11 ຕຸລາ ເຊິ່ງເປັນການສະເຫຼີມສະຫຼອງວັນຄົບຮອບຂອງ ນາງ ນ້ອຍ ໂດຍການທົບທວນຄວາມຄືບໜ້າທີ່ຕິດພັນ ກັບການພັດທະນາໄວໜຸ່ມຍິງລາວ ທີ່ລະບຸໄວ້ຢູ່ໃນການທົບທວນແຫ່ງຊາດແບບສະໝັກໃຈ. ນອກຈາກນັ້ນ ງານດັ່ງກ່າວຍັງເປັນໂອກາດໃນການສະແດງໃຫ້ເຫັນເຖິງຄວາມພະຍາຍາມຈາກຫຼາຍພາກສ່ວນ, ເນັ້ນໜັກການເຮັດວຽກຮ່ວມກັນ ແລະ ຮຽກຮ້ອງໃຫ້ມີການຮ່ວມມືທີ່ເຂັ້ມແຂງ ເພື່ອນໍາໄປສູ່ການປ່ຽນແປງ ໃນຊີວິດການເປັນຢູ່ທີ່ດີຂຶ້ນຂອງໄວໜຸ່ມຍິງ ແລະ ການເປັນຄູ່ຮ່ວມງານເພື່ອ ນາງ ນ້ອຍ. ມີພະນັກງານຈາກພາກລັດ, ອົງການຈັດຕັ້ງສາກົນ ແລະ ໄວໜຸ່ມເຂົ້າຮ່ວມງານທັງໝົດ ຫຼາຍກ່ວາ 200 ຄົນ.

## ບົດຮຽນທີ່ຖອດຖອນໄດ້ ແລະ ທິດທາງຕໍ່ໜ້າ

ບັນຫາສິ່ງທ້າທາຍຫຼັກກໍຍັງມີຢູ່ ເຊິ່ງຕິດພັນກັບຄວາມສາມາດທາງດ້ານສະຖາບັນ ແລະ ຊັບພະຍາກອນມະນຸດຂອງລັດຖະບານ ໃນທຸກລະດັບ. ການສ້າງຄວາມເຂັ້ມແຂງໃນລະດັບທ້ອງຖິ່ນ ແມ່ນເປັນສິ່ງທີ່ສໍາຄັນຫຼາຍ ເພື່ອນໍາໃຊ້ວິທີການໃຫ້ເປັນລະບົບ, ຮັບປະກັນຄວາມຍືນຍົງ, ມີຄວາມເປັນເຈົ້າການ ແລະ ຄວາມຮັບຜິດຊອບ ຕໍ່ກັບແຜນງານຂອງລັດຖະບານເອງ. ນອກຈາກນັ້ນ ກໍຍັງມີຄວາມຈໍາເປັນຫຼາຍອັນ ເພື່ອສ້າງຄວາມສາມາດແບບຕໍ່ເນື່ອງ ໃຫ້ກັບພະແນກສຶກສາທິການ ແລະ ກິລາແຂວງ ແລະ ຫ້ອງການສຶກສາທິການ ແລະ ກິລາເມືອງ ໃນການວາງແຜນ, ການຈັດຕັ້ງປະຕິບັດ ແລະ ການຕິດຕາມແຜນງານໃຫ້ມີປະສິດທິຜົນ.

ການປະສານງານທີ່ຍັງບໍ່ທັນເຂັ້ມແຂງ ລວມທັງການປະສານງານລະຫວ່າງກົມຕ່າງໆ ພາຍໃນກະຊວງສຶກສາທິການ ແລະ ກິລາ ແລະ ການປະສານງານໃນລະດັບສູນກາງ, ທ້ອງຖິ່ນ, ໂຮງຮຽນ ແລະ ລະດັບຊຸມຊົນ ຍັງຕ້ອງໄດ້ຮັບການແກ້ໄຂເພີ່ມເຕີມ. ການປັບປຸງການປະສານງານ ຈະສົ່ງຜົນໄດ້ຮັບທີ່ດີ ຕໍ່ກັບຄຸນນະພາບ, ຄວາມສອດຄ່ອງ ແລະ ການນໍາໃຊ້ຊັບພະຍາກອນມະນຸດ ແລະ ຊັບພະຍາກອນທາງການເງິນທີ່ມີຈໍາກັດ ຢ່າງມີປະສິດທິພາບ ທ່າມກາງການແຂ່ງຂັນດ້ານບູລິມະສິດຕ່າງໆຂອງຂະແໜງການ ແລະ ໄລຍະເວລາທີ່ມີ.

ໃນປີ 2019 ແຜນງານການສະໜັບສະໜູນຈາກ ອົງການ ສປຊ ຈະສືບຕໍ່ເສີມຂະຫຍາຍ ການໂຄສະນາແບບຮ່ວມກັນໂດຍອີງໃສ່ຫຼັກຖານ ແລະ ສົ່ງເສີມວິທີການແບບກົມກຽວກັນ ໃນການສ້າງຄວາມສາມາດໃນລະດັບຊາດ ເພື່ອໃຫ້ບັນລຸເປົ້າໝາຍຂອງຂະແໜງການ. ຈະມີການຍົກລະດັບ ການປະສານງານລະຫວ່າງ ອົງການທີ່ຢູ່ໃນ ລະບົບ ສປຊ ແລະ ການເຊື່ອມໂຍງກັບ ກົນໄກການປະສານງານ ຂອງຂະແໜງການທີ່ມີຢູ່ ເພື່ອເສີມຂະຫຍາຍຜົນໄດ້ຮັບໃຫ້ສູງຂຶ້ນ ແລະ ສ້າງຄວາມຍືນຍົງ ໃນການສະໜັບສະໜູນຂອງ ອົງການ ສປຊ.

# ການສຶກສາ

ການສຳຫຼວດດັດຊະນີໝາຍສັງຄົມລາວ ຄັ້ງທີ II ປີ 2017

## ການເຂົ້າຮຽນໃນການສຶກສາເດັກກ່ອນໄວຮຽນ (ECE)

ເດັກນ້ອຍອາຍຸຕ່ຳກວ່າ 5 ປີ
ທີ່ໄດ້ເຂົ້າເຖິງການສຶກສາເດັກກ່ອນໄວຮຽນ:




ແຕ່ເດັກນ້ອຍ 2 ໃນ 3 ຄົນ ຍັງບໍ່ສາມາດເຂົ້າເຖິງການສຶກສາເດັກກ່ອນໄວຮຽນ.

## ຄວາມແຕກໂຕນກັນ ໃນການເຂົ້າເຖິງການສຶກສາ ຂອງເດັກ

ອັດຕາການເຂົ້າຮຽນ ECE (%):




## ອັດຕາການເຂົ້າຮຽນສຸດທິ



ເດັກນ້ອຍໃນໄວຮຽນປະຖົມ 1 ໃນ 10 ຄົນ ຍັງບໍ່ທັນໄດ້ເຂົ້າໂຮງຮຽນ.

ເຫດຜົນທີ່ບໍ່ໄດ້ເຂົ້າໂຮງຮຽນ:

- ເນື່ອງຈາກບໍ່ມີອາຈານສອນ ຫຼື ໂຮງຮຽນປິດ;
- ການມີສ່ວນຮ່ວມຂອງຜູ້ປົກຄອງຍັງບໍ່ທັນເຂັ້ມແຂງໃນການບໍລິຫານຂອງໂຮງຮຽນ.





# 5. ສຸຂະພາບ, ນ້ຳໃຊ້ ແລະ ສຸຂາພິບານ

# ປະຊາຊົນເຂົ້າເຖິງການບໍລິການ ສຸຂະພາບທີ່ມີຄຸນນະພາບ, ເຂົ້າເຖິງນໍ້າໃຊ້, ສຸຂາພິບານ ແລະ ສຸຂະອະນາໄມທີ່ໄດ້ຮັບ ການປັບປຸງດີຂຶ້ນ





## ທ່າອ່ຽງການພັດທະນາຕົ້ນຕໍ

| ຕົວຊີ້ວັດ | ຂໍ້ມູນທຽບຖານ | ຄາດໝາຍ | ສະຖານະການປະຈຸບັນ |
|---|---|---|---|
| 5.1. ອັດຕາການຕາຍຂອງແມ່ | 197 ຄົນ ຕໍ່ເດັກເກີດໃໝ່ 100,000 ຄົນ (2015) | 160 ຄົນ ຕໍ່ເດັກເກີດໃໝ່ 100,000 ຄົນ (2020) | 197 ຄົນ ຕໍ່ເດັກເກີດໃໝ່ 100,000 ຄົນ (ການສໍາຫຼວດພົນລະເມືອງ, 2015) |
| 5.2. ອັດຕາການຕາຍຂອງເດັກອາຍຸ ຕໍ່າກ່ວາ 5 ປີ, ເດັກຍິງ / ເດັກຊາຍ | 64 ຄົນ ຕໍ່ເດັກເກີດໃໝ່ 1,000 ຄົນ (2016) (ເດັກຍິງ: 83 ຄົນ ຕໍ່ 1,000 ຄົນ; ເດັກຊາຍ: 95 ຄົນ ຕໍ່ 1,000 ຄົນ) | 40 ຄົນ ຕໍ່ເດັກເກີດໃໝ່ 1,000 ຄົນ (2021) (ເດັກຍິງ ແລະ ເດັກຊາຍ) | 79 ຄົນ ຕໍ່ເດັກເກີດໃໝ່ 1,000 ຄົນ (ການສໍາຫຼວດດັດຊະນີໝາຍສັງຄົມລາວ ຄັ້ງທີ II, 2018) |
| 5.3. ອັດຕາສ່ວນຮ້ອຍຂອງປະຊາກອນທີ່ນໍາໃຊ້ແຫຼ່ງນໍ້າດື່ມສະອາດ ແລະ ວິດຖ່າຍ | ການສະໜອງນໍ້າປະປາ: 76%; ວິດຖ່າຍ: 71% (2015) | ການສະໜອງນໍ້າປະປາ: 90% (2020); ວິດຖ່າຍ: 80% (2020) (ແມ່ຍິງ: 30%; ຜູ້ຊາຍ: 70%) (2021) | ອັດຕາສ່ວນຂອງປະຊາກອນທີ່ນໍາໃຊ້ແຫຼ່ງນໍ້າດື່ມສະອາດ: 83.9%<br><br>ອັດຕາສ່ວນຂອງປະຊາກອນທີ່ນໍາໃຊ້ວິດຖ່າຍທີ່ປັບປຸງ ແຕ່ບໍ່ໄດ້ຮ່ວມກັບຄົນອື່ນ: 73.8% (ການສໍາຫຼວດດັດຊະນີໝາຍສັງຄົມລາວ ຄັ້ງທີ II, 2018) |

ດັ່ງທີ່ໄດ້ລາຍງານໃນ ບົດລາຍງານແຫ່ງຊາດແບບສະໝັກໃຈ ກ່ຽວກັບການຈັດຕັ້ງປະຕິບັດ ເປົ້າໝາຍການພັດທະນາແບບຍືນຍົງ ຂອງ ສປປ ລາວ, ຄາດໝາຍຂອງ MDG ສໍາລັບການຫຼຸດຜ່ອນອັດຕາການຕາຍຂອງແມ່ ໄດ້ຮັບການບັນລຸ ແລະ ການຫຼຸດຜ່ອນອັດຕາການຕາຍຂອງເດັກອາຍຸຕໍ່າກ່ວາ 5 ປີ ແລະ ເດັກເກີດໃໝ່ ກໍມີທ່າກ້າວທີ່ດີເຊັ່ນດຽວກັນ. ເຖິງຢ່າງໃດກໍຕາມ ຜົນໄດ້ຮັບດ້ານສາທາລະນະສຸກ ຍັງມີຄວາມແຕກຕ່າງກັນຫຼາຍ ແລະ ຂຶ້ນກັບຫຼາຍປັດໄຈເຊັ່ນ: ທີ່ຕັ້ງພູມສັນຖານ, ຊົນເຜົ່າ ແລະ ສະຖານະພາບທາງເສດຖະກິດ – ສັງຄົມ. ຍິ່ງໄປກ່ວານັ້ນ ຄວາມແຕກໂຕນກັນໃນ ການບໍລິການສຸຂະພາບ ກໍຍັງມີຫຼາຍ. ການລະບາດຂອງໄຂ້ຍຸງ, ພະຍາດທີ່ບໍ່ຕິດຕໍ່ ແລະ ການບາດເຈັບຈາກອຸບັດຕິເຫດທາງຖະໜົນ ໄດ້ກາຍມາເປັນບັນຫາສິ່ງທ້າທາຍຫຼັກ. ໃນຊຸມປີທີ່ຈະມານີ້ ມັນມີຄວາມສໍາຄັນຫຼາຍ ທີ່ຈະຕ້ອງໄດ້ສຸມໃສ່ກັນພັດທະນາໄວໜຸ່ມ ເພື່ອຫຼຸດຜ່ອນອັດຕາການຖືພາຂອງໄວໜຸ່ມຍິງ ແລະ ໝູນໃຊ້ປະໂຫຍດຈາກໂຄງສ້າງຂອງປະຊາກອນ.

ມີການຄາດຄະເນວ່າ ຄົນທີ່ຕິດເຊື້ອ HIV ໃນ ສປປ ລາວໃນປີ 2018 ມີປະມານ 12,000 ຄົນ – ເປັນການແຜ່ລະບາດ ທີ່ໜ້າເປັນຫ່ວງ ເຊິ່ງອັດຕາການແຜ່ລະບາດແມ່ນເພີ່ມຂຶ້ນຫຼາຍ ໃນກຸ່ມປະຊາກອນທີ່ມີເພດສໍາພັນແບບບໍ່ປອດໄພ ເຊິ່ງເປັນພາຫະຫຼັກຂອງການສົ່ງຕໍ່ເຊື້ອພະຍາດນີ້. ການຄາດຄະເນ ໄດ້ຊີ້ໃຫ້ເຫັນ ທ່າອ່ຽງການຕິດເຊື້ອທີ່ເພີ່ມຂຶ້ນ ໃນກຸ່ມຜູ້ຊາຍທີ່ມີເພດສໍາພັນກັບຜູ້ຊາຍນໍາກັນ, ຄົນທີ່ມັກຊື້ບໍລິການທາງເພດ ແລະ ຄົນທີ່ເຄີຍເຮັດວຽກສາວບໍລິການມາກ່ອນ. ຜົນໄດ້ຮັບເບື້ອງຕົ້ນ ຈາກການສໍາຫຼວດການເຝົ້າລະວັງດ້ານພຶດຕິກໍາ ແລະ ດ້ານຊີວະສາດແບບປະສົມປະສານ ໄດ້ໃຫ້ຮູ້ວ່າ ຄວາມຮັບຮູ້ກ່ຽວກັບ ພະຍາດ HIV ໃນ ກຸ່ມສາວບໍລິການ ແລະ ຜູ້ຊາຍທີ່ມີເພດສໍາພັນກັບຊາຍນໍາກັນ ແມ່ນກໍາລັງຫຼຸດລົງ. ການສໍາຫຼວດຍັງໄດ້ລາຍງານ ການເພີ່ມຂຶ້ນຂອງ ພຶດຕິກໍາທີ່ສ້າງໃຫ້ມີຄວາມສ່ຽງສູງ.

> **ໂດຍການສະໜັບສະໜູນດ້ານວິຊາການ ຂອງ ອົງການ UNFPA, ນະໂຍບາຍດ້ານສຸຂະພາບຈະເລີນພັນ ໄດ້ຮັບການປັບປຸງຄືນ ແລະ ພັດທະນາໃຫ້ກາຍເປັນ ນະໂຍບາຍສຸຂະພາບຈະເລີນພັນ, ແມ່, ເດັກເກີດໃໝ່, ເດັກນ້ອຍ ແລະ ໄວໜຸ່ມ ເຊິ່ງມີຄວາມສອດຄ່ອງກັບຍຸດທະສາດດ້ານສຸຂະພາບຈະເລີນພັນ, ແມ່, ເດັກເກີດໃໝ່, ເດັກນ້ອຍ ແລະ ໄວໜຸ່ມ (2015-2025) ແລະ ບູລິມະສິດຂອງຊາດ ແລະ ຂອງສາກົນ.**

ແຜນງານການສີດວັກແຊັງກັນພະຍາດ ໄດ້ມີຄວາມຄືບໜ້າທີ່ດີ ເຖິງແມ່ນວ່າຈະຍັງຢູ່ໃນລະດັບທີ່ຕໍ່າກ່ວາ ຄວາມຕ້ອງການຕົວຈິງ ເພື່ອສ້າງໃຫ້ມີພູມຄຸ້ມກັນ ແລະ ຫຼຸດຜ່ອນໄພຂົ່ມຂູ່ຂອງການລະບາດກໍຕາມ. ກົດໝາຍວ່າດ້ວຍການໃຫ້ວັກແຊັງກັນພະຍາດ ແມ່ນເພື່ອບັນລຸການໃຫ້ວັກແຊັງຕ້ານພະຍາດຢ່າງທົ່ວເຖິງ ເຊິ່ງໄດ້ຖືກຮັບຮອງຈາກສະພາແຫ່ງຊາດ ໃນເດືອນມິຖຸນາ. ສປປ ລາວ ຍັງເປັນປະເທດໜຶ່ງທີ່ອີງໃສ່ການຊ່ວຍເຫຼືອຈາກ ກອງທຶນໂລກ ແລະ Gavi – ພັນທະມິດວັກແຊັງ ເພື່ອສະໜອງທຶນເຂົ້າໃນການສ້າງພູມຄຸ້ມກັນ, ໄຂ້ຍຸງລາຍ, ວັນນະໂລກ ແລະ HIV/AIDS. ສປປ ລາວ ຈະຕ້ອງໄດ້ຫັນໄປສູ່ການນໍາໃຊ້ ງົບປະມານຂອງຕົນເອງໃຫ້ຫຼາຍຂຶ້ນ ເນື່ອງຈາກວ່າການສະໜັບສະໜູນຈາກທາງນອກ ກໍາລັງຈະສິ້ນສຸດລົງ ໃນຊຸມປີທີ່ຈະມາເຖິງນີ້.

ອີງຕາມ ການສໍາຫຼວດດັດຊະນີໝາຍສັງຄົມລາວ ໃນຂົງເຂດນໍ້າສະອາດ, ສຸຂາພິບານ ແລະ ສຸຂະອະນາໄມ, ສັດສ່ວນຂອງປະຊາກອນທີ່ເຂົ້າເຖິງ ແຫຼ່ງນໍ້າດື່ມສະອາດ ໄດ້ເພີ່ມຂຶ້ນເປັນ 83.9% ແລະ ສັດສ່ວນຂອງປະຊາກອນທີ່ນໍາໃຊ້ວິດຖ່າຍທີ່ປັບປຸງ (ແຕ່ບໍ່ໄດ້ໃຊ້ຮ່ວມກັບຄົນອື່ນ) ແມ່ນ 73.8%.

ໄພນໍ້າຖ້ວມທີ່ເກີດຂຶ້ນເປັນວົງກ້ວາງໃນຫຼາຍແຂວງທົ່ວປະເທດ ລະຫວ່າງ ເດືອນກໍລະກົດ ຫາ ເດືອນກັນຍານັ້ນ ເຮັດໃຫ້ຕ້ອງໄດ້ເລື່ອນວຽກປະຈໍາອອກໄປກ່ອນ ລວມທັງກິດຈະກໍາສົ່ງເສີມດ້ານສາທາລະນະສຸກ. ການຝຶກອົບຮົມຕ່າງໆ ຖືກເລື່ອນອອກໄປ ແລະ ການລົງໄປຢ້ຽມຢາມຕິດຕາມກໍຕ້ອງເລື່ອນອອກໄປເຊັ່ນດຽວກັນ ຈົນກ່ວາວຽກງານຕອບໂຕ້ສຸກເສີນຈະໄດ້ຮັບການແກ້ໄຂ. ການປັບປຸງໂຄງຮ່າງການຈັດຕັ້ງຂອງຂະແໜງສາທາລະນະສຸກທີ່ຍັງດໍາເນີນນັ້ນ ກໍເປັນສິ່ງກີດຂວາງອີກອັນໜຶ່ງ ໃນການຈັດຕັ້ງປະຕິບັດ.

## ຜົນໄດ້ຮັບ

ດ້ານນະໂຍບາຍ

ໂດຍການສະໜັບສະໜູນດ້ານວິຊາການ ຂອງ ອົງການ UNFPA, ນະໂຍບາຍດ້ານສຸຂະພາບຈະເລີນພັນ ໄດ້ຮັບການປັບປຸງຄືນ ແລະ ພັດທະນາໃຫ້ກາຍເປັນ ນະໂຍບາຍສຸຂະພາບຈະເລີນພັນ, ແມ່, ເດັກເກີດໃໝ່, ເດັກນ້ອຍ ແລະ ໄວໜຸ່ມ ເຊິ່ງມີຄວາມສອດຄ່ອງກັບຍຸດທະສາດດ້ານສຸຂະພາບຈະເລີນພັນ, ແມ່, ເດັກເກີດໃໝ່, ເດັກນ້ອຍ ແລະ ໄວໜຸ່ມ (2015-2025) ແລະ ບູລິມະສິດຂອງຊາດ ແລະ ຂອງສາກົນຫຼາຍຂຶ້ນ.  ອົງການ UNFPA ຍັງໄດ້ຊ່ວຍເຫຼືອດ້ານວິຊາການ  ແລະ ດ້ານການເງິນ ໃຫ້ກັບ ສູນກາງຊາວ  ໜຸ່ມລາວ ເພື່ອດໍາເນີນການປຶກສາຫາລື ແລະ ພັດທະນາ ນະໂຍບາຍຊາວໜຸ່ມ ແລະ ໄວໜຸ່ມແຫ່ງຊາດສະບັບທໍາອິດ. ທັງສອງນະໂຍບາຍທີ່ກ່າວມານັ້ນ ຄາດວ່າຈະໄກ້ຮັບການຮັບຮອງໂດຍລັດຖະບານ ແລະ ນໍາໃຊ້ຢ່າງເປັນທາງການ ໃນປີ 2019.

ໂດຍການຊ່ວຍເຫຼືອດ້ານວິຊາການ ຈາກ ອົງການ WHO, ຊຸດບໍລິການສຸຂະພາບທີ່ຈໍາເປັນ ໄດ້ຮັບການພັດທະນາ ແລະ ຖືກຮັບຮອງ. ຊຸດບໍລິການດັ່ງກ່າວ ກໍານົດປະເພດຂອງການບໍລິການ ແລະ ປະເພດພື້ນຖານໂຄງລ່າງ, ຊັບພະຍາກອນມະນຸດ, ຢາປົວພະຍາດ ແລະ ອຸປະກອນທີ່ຄວນມີ ໃນລະບົບການບໍລິການສຸຂະພາບຂອງແຕ່ລະຂັ້ນ. ມີການປັບປຸງ ລາຍການຢາປົວພະຍາດທີ່ຈໍາເປັນ ແລະ ຄູ່ມືແນະນໍາການວາງແຜນຂັ້ນຈຸນລະພາກ ເພື່ອສະໜອງການບໍລິການແບບປະສົມປະສານໃຫ້ເຂົ້າເຖິງກຸ່ມເປົ້າໝາຍ ເພື່ອໃຫ້ສອດຄ່ອງກັບ ຊຸດບໍລິການສຸຂະພາບທີ່ຈໍາເປັນນັ້ນ. ເປົ້າໝາຍຂອງການປັບປຸງຄູ່ມືແນະນໍາການວາງແຜນຈຸນລະພາກ ແມ່ນ ເພື່ອເສີມສ້າງຄວາມເຂັ້ມແຂງໃນການສະໜອງການບໍລິການແບບປະສົມປະສານ ດ້ານສຸຂະພາບຈະເລີນພັນ, ແມ່, ເດັກເກີດໃໝ່ ແລະ ເດັກນ້ອຍ ແລະ ການບໍລິການດ້ານໂພສະນາການ ໃຫ້ກັບຊຸມຊົນຫ່າງໄກສອກຫຼີກ. ໃນປະຈຸບັນ ລັດຖະບານກໍາລັງກະກຽມ ສ້າງຕັ້ງຄະນະກໍາມະການຂຶ້ນມາ ເພື່ອນໍາພາການຈັດຕັ້ງປະຕິບັດ ຊຸດບໍລິການນີ້.

ນອກຈາກນັ້ນ, ຍັງມີການປັບປຸງ ຄູ່ມືແນະນໍາການປິ່ນປົວເດັກແດງ ແລະ ເດັກເກີດໃໝ່ແບບປະສົມປະສານ ແລະ ນໍາໃຊ້ ເຂົ້າໃນການບໍລິການສຸຂະພາບຂັ້ນພື້ນຖານ ສໍາລັບການປິ່ນປົວພະຍາດຖອກທ້ອງ, ປອດບວມ ແລະ ການຂາດສານອາຫານຮຸນແຮງ. ມີການພັດທະນາແຜນປະຕິບັດງານສ້າງຄວາມເຂັ້ມແຂງໃຫ້ກັບລະບົບສາທາລະນະສຸກຂອງຊຸມຊົນຢ່າງມີຍຸດທະສາດ ເຊິ່ງມີຄວາມສອດຄ່ອງກັບ ຖະແຫຼງການອັດສຕານາ. ມີການສ້າງຄວາມເຂັ້ມແຂງໃຫ້ກັບ ລະບົບການບໍລິການສາທາລະນະສຸກຂັ້ນເມືອງ ໂດຍຜ່ານການວິເຄາະບັນຫາ ແລະ ສຸມໃສ່ການວາງແຜນ ແລະ ການຕິດຕາມໃຫ້ຫຼາຍຂຶ້ນ.

ໂດຍການສະໜັບສະໜູນດ້ານວິຊາການ ຂອງ ອົງການ UNAIDS, ສູນບໍລິການ HIV/AIDS ແລະ ພະຍາດຕິດຕໍ່ທາງເພດສຳພັນ ຂອງກະຊວງສາທາລະນະສຸກ ໄດ້ສຳເລັດການທົບທວນຄືນການລະບາດຂອງເຊື້ອ HIV ແລະ ການປະເມີນຊ່ອງຫວ່າງໃນການຕອບໂຕ້ພະຍາດໂລກ AIDS ໃນລະດັບສູນກາງ ແລະ ທ້ອງຖິ່ນ. ການທົບທວນ ແລະ ການປະເມີນດັ່ງກ່າວ ໄດ້ຮັບການເຜີຍແຜ່ຢ່າງກ້ວາງຂວາງ ໃຫ້ກັບຄູ່ຮ່ວມງານໃນຂັ້ນສູນກາງ ແລະ ຂັ້ນແຂວງ ເຊິ່ງໄດ້ໃຫ້ຫຼັກຖານທີ່ດີ ເພື່ອສະໜັບສະໜູນການຈັດຕັ້ງປະຕິບັດ ແຜນຍຸດທະສາດ HIV/AIDS ແຫ່ງຊາດ ໄລຍະ 2016-2020 ໃຫ້ໄດ້ດີຂຶ້ນ ລວມທັງການຊ່ວຍເຫຼືອລ້າ ຈາກກອງທຶນໂລກ 2018-2020.

ອົງການ UNICEF ໄດ້ສະໜັບສະໜູນການພັດທະນາ ຍຸດທະສາດແຫ່ງຊາດວ່າດ້ວຍນໍ້າໃຊ້, ສຸຂາພິບານ ແລະ ສຸຂະອະນາໄມໃນຊົນນະບົດ (WASH), ມາດຕະຖານແຫ່ງຊາດ ສຳລັບວຽກງານ WASH ໃນໂຮງຮຽນ ແລະ ມາດຕະຖານການປະຕິບັດວຽກງານ ຂອງຄະນະກຳມະການ WASH ຊຸມຊົນ ເຊິ່ງທັງສາມອັນນີ້ ຄາດວ່າຈະໄດ້ຮັບການຮັບຮອງໂດຍລັດຖະບານໃນປີ 2019. ອົງການ UN-Habitat ໄດ້ສະໜັບສະໜູນ ກະຊວງໂຍທາທິການ ແລະ ຂົນສົ່ງເສີມສ້າງຄວາມເຂັ້ມແຂງໃນການຄຸ້ມຄອງຂະແໜງນໍ້າປະປາ ໂດຍການປັບປຸງຕົວຊີ້ວັດດ້ານການປະຕິບັດງານ ສຳລັບການປະເມີນມາດຕະຖານຄວາມມີປະສິດທິພາບ ແລະ ປະສິດທິຜົນ ຂອງຂະແໜງນໍ້າປະປາໃຫ້ສອດຄ່ອງກັນຫຼາຍຂຶ້ນ ແລະ ໄດ້ທົດລອງໃຊ້ກັບ ບໍລິສັດນໍ້າປະປາ 10 ແຫ່ງ. ນອກຈາກນັ້ນ ຍັງມີການນຳໃຊ້ ລະບົບການຄຸ້ມຄອງດ້ານຄຸນນະພາບ ໃນລະດັບສູນກາງ ແລະ ລະດັບແຂວງ ແລະ ລັດວິສາຫະກິດນໍ້າປະປາແຂວງອັດຕະປື ກໍເປັນບໍລິສັດນໍ້າປະປາແຫ່ງທຳອິດ ໃນລາວ ທີ່ໄດ້ຮັບການຢັ້ງຢືນ ISO 9001.

ອົງການ IOM ຮ່ວມກັບ ກະຊວງສາທາລະນະສຸກ ແລະ ກະຊວງໂຍທາທິການ ແລະ ຂົນສົ່ງ ເຮັດການປະເມີນຜົນກະທົບຈາກການກໍ່ສ້າງທາງລົດໄຟ ເພື່ອຊ່ວຍລັດຖະບານ ເສີມສ້າງຄວາມເຂັ້ມແຂງໃນການຄວບຄຸມພະຍາດຕິດຕໍ່, ຄຸ້ມຄອງຄວາມສ່ຽງ ແລະ ຜົນກະທົບທາງສຸຂະພາບ ຕໍ່ກັບແຮງງານເຄື່ອນຍ້າຍ ແລະ ຊຸມຊົນທີ່ເປັນເຈົ້າພາບ ເພື່ອໃຫ້ສອດຄ່ອງກັບຂໍ້ແນະນຳ ແລະ ຫຼັກການທາງກົດໝາຍຂອງສາກົນ.

ການສ້າງຄວາມອາດສາມາດ

ໂດຍການຊ່ວຍເຫຼືອດ້ານວິຊາການ ຂອງ ອົງການ WHO ແລະ ອົງການອື່ນໆ, ສູນສຸຂະພາບແມ່ ແລະ ເດັກ ໄດ້ເຮັດວຽກຮ່ວມກັບຄູ່ຮ່ວມງານຂອງຕົນ ໃນການວາງແຜນ, ຈັດຕັ້ງປະຕິບັດ ແລະ ຕິດຕາມການຜັນຂະຫຍາຍຍຸດທະ ສາດ RMNCH ແລະ ແຜນປະຕິບັດງານ ໄລຍະ 2016-2025. ເພື່ອເສີມສ້າງຄວາມສາມາດໃນການຄຸ້ມຄອງວຽກງານສາທາລະນະສຸກໃນລະດັບແຂວງ ແລະ ເມືອງ ສຳລັບການວາງແຜນ ແລະ ການຕິດຕາມ ການບໍລິການ RMNCH ແບບປະສົມປະສານນັ້ນ, ອົງການ WHO, UNICEF, UNFPA ແລະ ຄູ່ຮ່ວມງານອື່ນໆອີກຫຼາຍອົງການ ໄດ້ໃຫ້ການຊ່ວຍເຫຼືອດ້ານວິຊາການ ເພື່ອທົດລອງນຳໃຊ້ ຄູ່ມືການສ້າງຄວາມເຂັ້ມແຂງໃນການວາງແຜນ ແລະ ການຕິດຕາມປະຈຳປີ ໃນບັນດາແຂວງ ແລະ ເມືອງທີ່ຄັດເລືອກມາ. ການສ້າງຄວາມເຂັ້ມແຂງໃຫ້ກັບລະບົບສາທາລະນະສຸກຂັ້ນເມືອງ ຈະຊ່ວຍໃຫ້ສາມາດນຳໃຊ້ຂໍ້ມູນໄດ້ດີຂຶ້ນ ໃນການວາງແຜນການບໍລິການສຸຂະພາບ ໃຫ້ກັບຊຸມຊົນທີ່ຍັງດ້ອຍໂອກາດ ເພື່ອຊ່ວຍແກ້ໄຂຄວາມບໍ່ເທົ່າທຽມກັນ.

ໂຄງການທີ່ເຮັດຮ່ວມກັນໂດຍ ອົງການ ສປຊ ໄດ້ສະໜັບສະໜູນການເປີດນຳໃຊ້ ສູນບໍລິການທີ່ເປັນມິດຕໍ່ກັບຊາວໜຸ່ມ ແລະ ໄວໜຸ່ມ ໃນ 3 ແຂວງ ໂດຍໄດ້ຝຶກອົບຮົມໃຫ້ກັບຜູ້ໃຫ້ບໍລິການດ້ານສຸຂະພາບເກືອບ 200 ຄົນ. ມີການພັດທະນາ ເຄື່ອງມືຊ່ວຍເຮັດວຽກ ໃນການໃຫ້ບໍລິການທີ່ເປັນມິດຕໍ່ກັບໄວໜຸ່ມ ແລະ ຈະໄດ້ແຈກຢາຍໃນປີ 2019 ເພື່ອຊ່ວຍສະໜັບສະໜູນໃນການເຮັດວຽກຕົວຈິງຂອງຜູ້ໃຫ້ບໍລິການ. ໂຄງການທີ່ເຮັດຮ່ວມກັນຂອງ ອົງການ ສປຊ ຍັງໄດ້ສະໜັບສະໜູນ ການເປີດໂຕຫຼັກສູດ ການດູແລໃນເວລາເກີດລູກ / ການດູແລປະສູດສຸກເສີນ (Intra-Partum Care / Emergency Obstetric Care) ເຊິ່ງລວມມີທັງໝົດ 5 ຫຼັກສູດ ເຊັ່ນ: ການວາງແຜນ, ການຝຶກສອນ, ການໝູນວຽນ, ການທົບທວນຄືນ ແລະ ການສ້າງຄູຝຶກ. ມາຮອດປະຈຸບັນ ມີພະນັກງານສາທາລະນະສຸກ ໃນ 11 ແຂວງ ໄດ້ຮັບການຝຶກອົບຮົມຫຼັກສູດນີ້. ມີການນຳໃຊ້ ວິທີການສິດສອນແບບໃໝ່ ໃນການຊີ້ນຳ ແລະ ການຝຶກອົບຮົມທາງການແພດ ສຳລັບ ການປິ່ນປົວເດັກແດງ ແລະ ເດັກເກີດໃໝ່ແບບປະສົມປະສານ (Integrated Management of Neonatal and Childhood Illnesses) ເພື່ອປັບປຸງທັກສະຂອງ ພະນັກງານແພດໝໍທີ່ຢູ່ໃນແຖວໜ້າ ແລະ ປັບປຸງຄຸນນະພາບຂອງການເບິ່ງແຍງເດັກ ໃນ 3 ແຂວງ. ໂດຍການສະໜັບສະໜູນດ້ານວິຊາການ ຈາກ ອົງການ WHO, UNFPA, UNICEF ແລະ ຄູ່ຮ່ວມງານອື່ນໆ, ແຜນງານການບໍລິການ RMNCH ໃນລະດັບທ້ອງຖິ່ນ ປະກອບມີການວາງແຜນຄອບຄົວ, ການຝາກທ້ອງ, ການດູແລໃນໄລຍະເກີດ ແລະ ການດູແລປະສູດສຸກເສີນ ໄດ້ນຳໃຊ້ເຄື່ອງມືການປະເມີນ ແລະ ການປັບປຸງຄຸນນະພາບໃນການຈັດຕັ້ງປະຕິບັດ.

ອົງການ UNAIDS ໄດ້ຮ່ວມມືຢ່າງຫ້າວຫັນ ກັບສະມາຄົມສຳລັບຄົນທີ່ດຳລົງຊີວິດກັບພະຍາດ HIV/AIDS ສ້າງຄວາມເຂັ້ມແຂງໃຫ້ກັບຄົນທີ່ຕິດເຊື້ອ HIV ໃນ 7 ແຂວງພາກເໜືອ ເລັ່ງໃສ່ແກ້ໄຂບັນຫາຄວາມອັບອາຍ ແລະ ການຈຳແນກທີ່ພວກເຂົາກຳລັງປະເຊີນຢູ່. ອົງການ UNAIDS ຍັງໄດ້ເຮັດວຽກຢ່າງໃກ້ຊິດກັບ ສະມາຄົມບໍ່ຫວັງຜົນກຳໄລຫຼາຍສະມາຄົມ ເພື່ອຈັດກອງປະຊຸມສົນທະນາຂັ້ນສູນກາງ ແລະ ຂັ້ນແຂວງ ໃນຫົວຂໍ້ ການເຊື່ອມສານຊຸດບໍລິການປິ່ນປົວດ້ວຍຢາຕ້ານ HIV ເຂົ້າໃນງົບປະມານຂອງຂະແໜງສາທາລະນະສຸກ. ພະນັກງານຂັ້ນອາວຸໂສຫຼາຍທ່ານ ໄດ້ຕົກລົງເປັນເອກະພາບ ໃນການສ້າງແຜນການດຳເນີນງານ ເພື່ອເຊື່ອມສານຊຸດບໍລິການປິ່ນປົວດ້ວຍຢາຕ້ານ HIV ເຂົ້າໃນແຜນງົບປະມານຂອງຂະແໜງການສາທາລະນະສຸກ.

ສປປ ລາວ ໄດ້ມີຄວາມພະຍາຍາມຫຼຸດຜ່ອນບັນຫາພະຍາດເຂດຮ້ອນທີ່ຖືກປ່ອຍປະລະເລີຍ ໂດຍເຊື່ອມສານເຂົ້າໃນໂຄງການນໍ້າໃຊ້, ສຸຂາພິບານ ແລະ ສຸຂະອະນາໄມ. ອົງການ WHO ໄດ້ສະໜັບສະໜູນການຈັດຕັ້ງປະຕິບັດໂຄງການທີ່ມີຊຸມຊົນເປັນເຈົ້າການ ຢ່າງປະສົບຜົນສຳເລັດ ໃນການລຶບລ້າງ ພະຍາດໃບໄມ້ໃນເລືອດ (schistosomiasis) ໂດຍການລວມເອົາການຂ້າແມ່ທ້ອງເຂົ້າກັບກິດຈະກຳ WASH ໃນ 24 ບ້ານ ທີ່ແຂວງຈຳປາສັກ. ຈະມີການຂະຫຍາຍໂຄງການດັ່ງກ່າວ ອອກໄປຕື່ມໃຫ້ໄດ້ທັງໝົດ 202 ບ້ານ

ໂດຍການສະໜັບສະໜູນດ້ານວິຊາການ ຂອງ ອົງການ UNAIDS, ສູນບໍລິການ HIV/AIDS ແລະ ພະຍາດຕິດຕໍ່ທາງເພດສຳພັນ ຂອງກະຊວງສາທາລະນະສຸກ ໄດ້ສຳເລັດການທົບທວນຄືນການລະບາດຂອງ ເຊື້ອ HIV ແລະ ການປະເມີນຊ່ອງຫວ່າງໃນການຕອບໂຕ້ພະຍາດໂລກ AIDS ໃນລະດັບສູນກາງ ແລະ ທ້ອງຖິ່ນ.

ທີ່ຢູ່ໃນເຂດພື້ນທີ່ເປົ້າລະວັງ. ອົງການ UNICEF ແລະ ຄູ່ຮ່ວມງານ ໄດ້ສະໜັບສະໜູນການທົບທວນປັບປຸງ ຄູ່ມືແນະນຳສຸຂາພິບານໂດຍ ມີຊຸມຊົນເປັນເຈົ້າການ ເຊິ່ງລວມເອົາບົດຮຽນທີ່ຖອດຖອນໄດ້ ຈາກ ການຈັດຕັ້ງປະຕິບັດການລຶບລ້າງການຖ່າຍຊະຊາຍໃນທົ່ວເມືອງ. ບົດຮຽນທີ່ຖອດຖອນໄດ້ ແມ່ນມາຈາກຜົນສຳເລັດຂອງການລຶບລ້າງ ການຖ່າຍຊະຊາຍໃນທົ່ວເມືອງ ທີ່ແຂວງບໍລິຄຳໄຊ. ມີທັງໝົດ 103 ບ້ານ ໄດ້ຮັບການປະກາດວ່າ ປາດສະຈາກການຖ່າຍຊະຊາຍ ເຮັດໃຫ້ ປະຊາຊົນປະມານ 82,000 ຄົນ ໃນນັ້ນມີແມ່ຍິງ 41,000 ຄົນ ໄດ້ ຮັບຜົນປະໂຫຍດ.

ເພື່ອຮັບປະກັນຄວາມປອດໄພຂອງນ້ຳດື່ມ ນັບຕັ້ງແຕ່ອ່າງເກັບນ້ຳຈົນ ໄປຮອດຜູ້ຊົມໃຊ້ສຸດທ້າຍນັ້ນ, ອົງການ WHO ແລະ UNICEF ໄດ້ສືບຕໍ່ສະໜັບສະໜູນລັດຖະບານ ໃນການສົ່ງເສີມ ແຜນນ້ຳໃຊ້ ແບບປອດໄພ ໂດຍເຊື່ອມສານເຂົ້າໃນ ໂຄງການທີ່ສະໜັບສະໜູນ ວຽກງານ WASH. ມີການແນະນຳ ເຄື່ອງມືປັບປຸງສິ່ງອຳນວຍຄວາມ ສະດວກສຳລັບວຽກງານ WASH ເພື່ອປັບປຸງນ້ຳໃຊ້, ສຸຂາພິບານ ແລະ ການຄຸ້ມຄອງສິ່ງເສດເຫຼືອທາງການແພດ ໃນໂຮງໝໍ ແລະ ສຸກ ສາລາ. ເຄື່ອງມືດັ່ງກ່າວຈະໄດ້ນຳເອົາໄປຈັດຕັ້ງປະຕິບັດ ທີ່ສຸກສາລາ ບາງແຫ່ງ ໃນແຂວງສະຫວັນນະເຂດ ແລະ ເຊກອງ ໃນປີ 2019.

ອົງການ IOM ໄດ້ສະໜັບສະໜູນດ້ານວິຊາການ ໃນການຄວບຄຸມ ພະຍາດໄຂ້ຍຸງ ແລະ ພະຍາດຕິດຕໍ່ ສຳລັບກຸ່ມປະຊາກອນທີ່ມີການ ເຄື່ອນຍ້າຍ ແລະ ແຮງງານເຄື່ອນຍ້າຍ ໂດຍຊ່ວຍເຫຼືອໃຫ້ພວກເຂົາສາ ມາດເຂົ້າເຖິງການກວດຫາເຊື້ອ, ການປິ່ນປົວ ແລະ ການປ້ອງກັນໄຂ້ ຍຸງ. ໂຄງການດັ່ງກ່າວ ເລັ່ງໃສ່ສ້າງຄວາມເຂັ້ມແຂງໃຫ້ກັບຂອດການ ປະສານງານໃນລະດັບພາກພື້ນ ໃນການຄວບຄຸມໄຂ້ຍຸງ ແລະ ພະ ຍາດຕິດຕໍ່ ໃນເຂດພາກພື້ນແມ່ນ້ຳຂອງ. ນອກຈາກນັ້ນ ປະຊາກອນ ປະມານ 11,000 ຄົນ ຍັງໄດ້ຮັບຜົນປະໂຫຍດຈາກ ກິດຈະກຳໂຄ ສະນາເຜີຍແຜ່ໃນລະດັບຊຸມຊົນຫຼາຍອັນ ແລະ ມີການແຈກຢາຍ ອຸປະກອນປ້ອງກັນຍຸງ ຈຳນວນ 14,750 ຊຸດ.

ອົງການ UN-Habitat ແລະ ຄູ່ຮ່ວມງານ ໄດ້ສ້າງຄວາມເຂັ້ມແຂງ ໃຫ້ກັບບໍລິສັດນ້ຳປະປາ ກ່ຽວກັບຕົວຊີ້ວັດດ້ານການປະຕິບັດງານ, ລະບົບການຄຸ້ມຄອງການສະໜອງນ້ຳປະປາ ແລະ ຄຸນນະພາບນ້ຳປະ ປາ. ພະນັກງານວິຊາການ ແລະ ພະນັກງານລັດ ຈາກ 10 ແຂວງ ທັງໃນລະດັບສູນກາງ ແລະ ຂັ້ນແຂວງ ກໍໄດ້ເຂົ້າຮ່ວມການສ້າງຄວາມ ສາມາດນີ້.

ໂດຍການສະໜັບສະໜູນດ້ານວິຊາການ ຈາກ ອົງການ WHO, ກະຊວງສາທາລະນະສຸກ ຮ່ວມກັບກະຊວງການເງິນ ສາມາດເພີ່ມ ການເກັບອາກອນຢາສູບໄດ້ສູງຂຶ້ນ. ລະບຽບການດັ່ງກ່າວ ໄດ້ຖືກຮັບ ຮອງໂດຍ ນາຍົກລັດຖະມົນຕີ ໃນກາງປີ 2018 ແລະ ມີຜົນສັກສິດ ໃນ ເດືອນມັງກອນ 2019. ປະຈຸບັນນີ້ ຢາສູບທີ່ຂາຍໃນຕະຫຼາດ ລວມມີຮູບພາບທີ່ເປັນການເຕືອນກ່ຽວກັບບັນຫາສຸຂະພາບຈາກການ ສູບຢາຢູ່ໃນໜ້າຊອງ.

ການຄຸ້ມຄອງຂໍ້ມູນ ແລະ ຄວາມຮູ້

ໂດຍການສະໜັບສະໜູນຈາກ ອົງການ ສປຊ ເຊິ່ງນຳພາໂດຍ ອົງການ UNICEF, ຂໍ້ມູນຈາກ ການສຳຫຼວດດັດຊະນີໝາຍສັງຄົມລາວ ຄັ້ງທີ II ໄດ້ຮັບການເຜີຍແຜ່ ເຊິ່ງຂໍ້ມູນດັ່ງກ່າວຈະຊ່ວຍໃນການຕິດ ຕາມຄວາມຄືບໜ້າຂອງບັນດາຕົວຊີ້ວັດດ້ານສຸຂະພາບ 10 ຢ່າງ. ນອກຈາກນັ້ນ ກໍມີການວິເຄາະຂໍ້ມູນທາງເລິກຫຼາຍອັນ ລວມທັງການ ວິເຄາະເດັກທີ່ມີຮ່າງກາຍເຕ້ຍ ແລະ ຄວາມຂາດເຂີນແບບຫຼາຍມິຕິ. ສຳເລັດການວິເຄາະສະຖານະການຂອງໄວໜຸ່ມຍິງ ສຳລັບແຂວງ ບໍ່ແກ້ວ ແລະ ເຜີຍແຜ່ໃນກອງປະຊຸມລະດັບຊາດ ແລະ ຂັ້ນແຂວງ. ບົດລາຍງານໄດ້ນຳສະເໜີສິ່ງທີ່ຄົ້ນພົບ ແລະ ໃຫ້ຂໍ້ສະເໜີແນະ ຕ່າງໆ ກ່ຽວກັບສະພາບໃນປະຈຸບັນ ແລະ ຄວາມຕ້ອງການຂອງ ໄວໜຸ່ມຍິງ ໃນຊຸມຊົນຫ່າງໄກສອກຫຼີກ ແລະ ຊຸມຊົນຄົນຊົນເຜົ່າ ໃນຂົງເຂດການສຶກສາ, ສາທາ, ການສ້າງຄວາມເຂັ້ມແຂງທາງ ເສດຖະກິດ. ຍັງມີການເກັບກຳ ຂໍ້ມູນສຳລັບການວິເຄາະດັ່ງກ່າວ ໃນ 5 ເມືອງ ຂອງແຂວງສະຫວັນນະເຂດ ເຊິ່ງຄາດວ່າ ບົດລາຍງານຈະ ສຳເລັດ ໃນປີ 2019 ນີ້.

ອົງການ UNAIDS ໄດ້ສືບຕໍ່ເຮັດວຽກກັບຄູ່ຮ່ວມງານໃນລະດັບ ຊາດ ແລະ ຂັ້ນແຂວງ ເພື່ອສົ່ງເສີມ ກິດຈະກຳ "ຮູ້ຈັກສະຖານະພາບ HIV ຂອງທ່ານ ແລະ ຮັບການຮັກສາປິ່ນປົວ". ອົງການ UNAIDS ຮ່ວມກັບ ອົງການ WHO, ຄູ່ຮ່ວມງານອື່ນໆ ພ້ອມທັງປະຊາກອນ ທີ່ຕິດເຊື້ອ ໄດ້ປະສົບຜົນສຳເລັດ ໃນການໂຄສະນາການກວດຫາເຊື້ອ HIV. ມີບັນຊີເຟດສ໌ບຸກ (Facebook) ຫຼາຍ ກວ່າ 100 ບັນຊີ ໄດ້ເຜີຍແຜ່ຂໍ້ຄວາມທີ່ສຳຄັນ ເຮັດໃຫ້ມີຍອດເຂົ້າເບິ່ງເຖິງ 500,000 ເທື່ອ.

ອົງການ UNICEF ໄດ້ສືບຕໍ່ສະໜັບສະໜູນ ໜ່ວຍງານວິຊາການ ຫຼັກດ້ານ WASH ເຊິ່ງໄດ້ເຊີນເອົາ ພາກລັດ ແລະ ຄູ່ຮ່ວມພັດທະ ນາເຂົ້າມາສົນທະນາປຶກສາຫາລືກັນ. ອົງການ UNICEF ຍັງຮ່ວມ ກັບ ອົງການ GIZ ໃຫ້ການສະໜັບສະໜູນ ກະຊວງສຶກສາທິການ ແລະ ກິລາ ເກັບກຳຂໍ້ມູນໂຮງຮຽນກ່ອນລະດັບປະຖົມ ແລະ ໂຮງ ຮຽນຊັ້ນປະຖົມ ໃນນະຄອນຫຼວງວຽງຈັນ, ແຂວງອຸດົມໄຊ ແລະ ສາລະວັນ ໂດຍການນຳໃຊ້ ມາດຖານ 3 ດາວ ແລະ ແບບຟອມປະ ເມີນຕົນເອງ. ນອກຈາກນັ້ນ ອົງການ UNICEF ຍັງໄດ້ສະໜັບ ສະໜູນການກໍ່ສ້າງນ້ຳໃຊ້ ໃນ 26 ບ້ານ ໃນ ແຂວງຜົ້ງສາລີ, ສະຫວັນ ນະເຂດ ແລະ ສາລະວັນ ເຮັດໃຫ້ປະຊາຊົນ 9,800 ຄົນ ໄດ້ຮັບຜົນ ປະໂຫຍດ (ເປັນແມ່ຍິງ 4,900 ຄົນ). ປະຈຸບັນກຳລັງມີການວາງ ແຜນນ້ຳໃຊ້ປອດໄພ ໃນບ້ານເປົ້າໝາຍ ເພື່ອຮັບປະກັນຄຸນນະພາບ ຂອງນ້ຳໃຊ້ໃນແຫຼ່ງນ້ຳ ແລະ ຈຸດໃຊ້ນ້ຳ. ອົງການ UN-Habitat ກຳ ລັງເຮັດວຽກຢ່າງໃກ້ຊິດກັບຄູ່ຮ່ວມງານ ເພື່ອສ້າງຖານຂໍ້ມູນການ ຕິດຕາມການສະໜອງນ້ຳ ແລະ ສຸຂາພິບານໃນເຂດຕົວເມືອງ.

**ອົງການ IOM ໄດ້ໃຫ້ການຊ່ວຍເຫຼືອດ້ານວິຊາການ ໃນການຄວບຄຸມໄຂ້ຍຸງ ແລະ ພະຍາດຕິດຕໍ່ສຳລັບກຸ່ມປະຊາກອນທີ່ມີການເຄື່ອນ ຍ້າຍ ແລະ ແຮງງານເຄື່ອນຍ້າຍ ໂດຍຊ່ວຍເຫຼືອໃຫ້ພວກເຂົາ ສາມາດເຂົ້າເຖິງ ການກວດຫາເຊື້ອ, ການປິ່ນປົວ ແລະ ການປ້ອງກັນໄຂ້ຍຸງ. ໂຄງການດັ່ງກ່າວ ເລັ່ງໃສ່ສ້າງ ຄວາມເຂັ້ມແຂງໃຫ້ກັບຂອດການປະສານງານໃນລະດັບພາກພື້ນ ໃນການຄວບຄຸມ ພະຍາດໄຂ້ຍຸງ ແລະ ພະຍາດຕິດຕໍ່ ໃນເຂດ ພາກພື້ນແມ່ນ້ຳຂອງ.**

ການຕອບໂຕ້ສຸກເສີນໃນຂະແໜງສາທາລະນະສຸກ (ເຫດການນ້ຳຖ້ວມແຕ່ ເດືອນກໍລະກົດ ເຖິງ ເດືອນກັນຍາ)

ອົງການ ສປຊ ໄດ້ໃຫ້ການຊ່ວຍເຫຼືອ ກະຊວງສາທາລະນະສຸກ ພ້ອມ ທັງພະແນກສາທາລະນະສຸກແຂວງອັດຕະປື ແລະ ຫ້ອງການ ສາທາ ລະນະສຸກເມືອງສະໜາມໄຊ ໃນການຄວບຄຸມ ແລະ ປ້ອງກັນພະ ຍາດລະບາດ. ອົງການ IOM ໄດ້ຊ່ວຍບຳລຸງ ພະນັກງານສາທາລະ ນະສຸກ, ເຄື່ອງມືທາງການແພດ, ອາຫານ ແລະ ຢາ, ຢາວັກແຊັງ ແລະ ເຄື່ອງອຸປະກອນອື່ນໆທີ່ໄດ້ຮັບບໍລິຈາກ. ການຊ່ວຍເຫຼືອລວມ

ມີ ມຸ້ງກັນຍຸງ 1,200 ດາງ ແລະ ອຸປະກອນການແພດທີ່ຈຳເປັນອື່ນໆ ສຳລັບການຟື້ນຟູສຸກສາລາໃນ 3 ຊຸມຊົນ. ອົງການ IOM ຍັງໄດ້ສະໜອງເຄື່ອງມືທາງການແພດ ໃຫ້ກັບປະຊາຊົນທີ່ໄດ້ຮັບຜົນກະທົບ ແລະ ຝຶກອົບຮົມແພດປະຈຳບ້ານ ກ່ຽວກັບການຄວບຄຸມພະຍາດຕິດຕໍ່ ແລະ ການສົ່ງເສີມສຸຂະພາບທີ່ດີ. ນອກຈາກນັ້ນ, ຍັງມີການຈັດງານສົ່ງເສີມການບໍລິການສຸຂະພາບ ເພື່ອສັກຢາວັກແຊັງໃຫ້ກັບເດັກນ້ອຍ ແລະ ປະຊາກອນທົ່ວໄປ.

ໃນລະຫວ່າງເດືອນກໍລະກົດ ແລະ ທັນວາ, ຫ້ອງການສາທາລະນະສຸກເມືອງສະໜາມໄຊ ໄດ້ລາຍງານກ່ຽວກັບຄວາມປອດໄພຂອງເດັກນ້ອຍເກີດໃໝ່ 109 ຄົນ. ມີ 8 ກໍລະນີທີ່ເປັນກໍລະນີຊັບຊ້ອນ ເຊິ່ງໄດ້ຖືກສົ່ງຕໍ່ໄປໂຮງໝໍແຂວງ. ມີການສະໜອງຊຸດຊ່ວຍການເກີດລູກ 400 ຊຸດ ແລະ ອຸປະກອນຊ່ວຍເກີດລູກ 10 ຊຸດ ໃຫ້ກັບໝໍ. ມາຮອດທ້າຍປີ 2018, ໄດ້ມີການແຈກຢາຍ ຊຸດອຸປະກອນເພື່ອສຸຂະພາບຍິງ 2,550 ຊຸດ ໃຫ້ກັບແມ່ຍິງທີ່ຢູ່ໃນເກນອາຍຸໄວຈະເລີນພັນ. ອົງການ UNFPA ຍັງໄດ້ຝຶກອົບຮົມອາສາສະໝັກ ໃຫ້ມີຄວາມເຂົ້າໃຈກ່ຽວກັບການນຳໃຊ້ຄວາມຮູນແຮງບົນພື້ນຖານບົດບາດຍິງ – ຊາຍ ເພື່ອສະໜັບສະໜູນ ການສ້າງຕັ້ງສູນທີ່ເປັນມິດຕໍ່ກັບແມ່ຍິງ ໃນເມືອງສະໜາມໄຊ.

ແຜນງານ WASH ໄດ້ຮັບປະກັນ ຄຸນນະພາບຂອງນ້ຳໃຊ້ໃນສະຖານທີ່ພັກອາໄສຊົ່ວຄາວ ແລະ ໃຫ້ການສະໜັບສະໜູນ ພະແນກສາທາລະນະສຸກແຂວງ ໃນການຄຸ້ມຄອງສິ່ງເສດເຫຼືອທາງການແພດ ໃນສະຖານທີ່ບໍລິການສາທາລະນະສຸກແບບຊົ່ວຄາວ ແລະ ໂຮງໝໍເມືອງສະໜາມໄຊ.

## ບົດຮຽນທີ່ຖອດຖອນໄດ້ ແລະ ທິດທາງຕໍ່ໜ້າ

ການເຮັດວຽກຮ່ວມກັນຢ່າງໃກ້ຊິດໃນຂະແໜງການຕ່າງໆ ເຊັ່ນ: WASH, ສຸຂະພາບ ແລະ ໂພສະນາການ ແລະ ລະຫວ່າງຂັ້ນສູນກາງກັບທ້ອງຖິ່ນ ຈະເພີ່ມປະສິດທິພາບຂອງການຈັດຕັ້ງປະຕິບັດກິດຈະກຳ ໃນລະດັບຊຸມຊົນໄດ້ ເພື່ອຫຼີກລ້ຽງຄວາມຊ້ຳຊ້ອນ ແລະ ເສີມສ້າງຄວາມຍືນຍົງໃຫ້ດີຂຶ້ນ. ການມີສ່ວນຮ່ວມຂອງຊຸມຊົນໃນການວາງແຜນ, ການຈັດຕັ້ງປະຕິບັດ ແລະ ການຕິດຕາມ ສາມາດປັບປຸງໃຫ້ດີຂຶ້ນໄດ້ ໂດຍການນຳໃຊ້ເຄື່ອງມືສື່ສານໃນພາສາຊົນເຜົ່າໃຫ້ຫຼາຍຂຶ້ນ.

ອົງການ ສປຊ ຈະສືບຕໍ່ສະໜັບສະໜູນ ການປະສານງານດ້ານສາທາລະນະສຸກ ລວມທັງການສ້າງຄວາມສາມາດ ໃນການໃຫ້ບໍລິການແບບປະສົມປະສານໃນລະດັບທ້ອງຖິ່ນ ໂດຍສະເພາະຊຸມຊົນທີ່ດ້ອຍໂອກາດໃນເຂດທີ່ເຂົ້າເຖິງຍາກ. ການເຂົ້າເຖິງຊຸມຊົນຫ່າງໄກສອກຫຼີກຍັງມີຂໍ້ຈຳກັດຫຼາຍດ້ານ ເຊັ່ນດຽວກັບຄວາມສາມາດຂອງພະນັກງານໃນທ້ອງຖິ່ນ ແລະ ຄູ່ຮ່ວມຈັດຕັ້ງປະຕິບັດ ກໍຍັງມີຈຳກັດ ເຮັດໃຫ້ຜົນໄດ້ຮັບດ້ານສຸຂະພາບໃນເຂດ ຫ່າງໄກສອກຫຼີກຍັງບໍ່ທັນໄດ້ດີເທົ່າທີ່ຄວນ.

ການສຶກສາແບບເພື່ອນສອນເພື່ອນ ແລະ ພໍ່ຄ້າ / ແມ່ຄ້າແບບເຄື່ອນທີ່ເປັນເຄື່ອງມືໃນການເຂົ້າເຖິງແຮງງານເຄື່ອນຍ້າຍ ແລະ ປະຊາກອນເຄື່ອນຍ້າຍໄດ້ດີ ເນື່ອງຈາກວ່າພວກເຂົາສາມາດເຂົ້າເຖິງເຂດຫ່າງໄກສອກຫຼີກໄດ້ດີກ່ວາ ເມື່ອທຽບໃສ່ແພດອາສາຂັ້ນບ້ານ. ກິດຈະກຳໃນອະນາຄົດ ຄວນພິຈາລະນາຄວາມຫຼາກຫຼາຍ ໃນການຮັບເອົາອາສາສະໝັກ ເຊັ່ນ: ການສຶກສາແບບເພື່ອນສອນເພື່ອນທີ່ບໍ່ແມ່ນຄົນລາວຂຶ້ນກັບສັນຊາດຂອງແຮງງານເຄື່ອນຍ້າຍນັ້ນ. ກິດຈະກຳໃນອະນາຄົດຄວນກຳນົດ ຄູ່ຮ່ວມງານທີ່ມີທ່າແຮງບົ່ມຊ້ອນ ທີ່ບໍ່ກ່ຽວຂ້ອງກັບຂະແໜງສາທາລະນະສຸກ ເຊັ່ນ: ກອງທັບໃນເຂດຊາຍແດນ, ຜູ້ນຳຊຸມຊົນ ແລະ ໂຮງຮຽນ. ຄວນສ້າງຂໍ້ມູນຂ່າວສານ, ເຄື່ອງມືການສຶກສາ ແລະ ການສື່ສານ ໃຫ້ມີຫຼາກຫຼາຍພາສາ ແລະ ມີຄວາມແປກໃໝ່ໃຫ້ຫຼາຍຂຶ້ນ.

ເພື່ອປັບປຸງນ້ຳໃຊ້ໃຫ້ໄດ້ດີຂຶ້ນນັ້ນ ມັນຮຽກຮ້ອງໃຫ້ສຸມຫຼາຍກ່ວາການສະໜອງນ້ຳແຕ່ພຽງຢ່າງດຽວ (ປະລິມານ). ການສຳຫຼວດດັດຊະນີໝາຍສັງຄົມລາວ ຄັ້ງທີ II ໄດ້ໃຫ້ຮູ້ວ່າ ຫຼາຍກ່ວາ 80% ຂອງຕົວຢ່າງນ້ຳທີ່ທົດສອບ ໃນຄົວເຮືອນ ແລະ ແຫຼ່ງນ້ຳໃຊ້ ມີການປົນເປື້ອນຂອງ ອີໂຄລາຍ. ສະນັ້ນ ມັນຈຶ່ງມີຄວາມຈຳເປັນ ທີ່ຈະຕ້ອງໄດ້ສຸມໃສ່ການວາງແຜນນ້ຳໃຊ້ແບບປອດໄພ ເຊັ່ນດຽວກັນກັບການບຳບັດນ້ຳ ແລະ ການເກັບຮັກສານ້ຳໃນຄົວເຮືອນ. ນອກຈາກນັ້ນ ກິດຈະກຳບາງອັນທີ່ໄດ້ຮັບການສະໜັບສະໜູນໂດຍອົງການ / ພາກສ່ວນຕ່າງໆ ຍັງມີຄວາມຊ້ຳຊ້ອນກັນ. ຂໍ້ມູນແຍກເພດໃນລະດັບເມືອງແມ່ນຈຳກັດ ແລະ ຂໍ້ມູນກ່ຽວກັບການເຮັດວຽກຂອງ ສິ່ງອຳນວຍຄວາມສະດວກຂອງ WASH ແມ່ນບໍ່ມີເລີຍ.

ອຸບັດຕິເຫດທາງຖະໜົນ ຍັງເປັນອີກຂົງເຂດໜຶ່ງທີ່ໜ້າເປັນຫ່ວງເຊິ່ງຄະນະຮັບຜິດຊອບວຽກດ້ານສາທາລະນະສຸກ ແລະ ຄະນະຮັບຜິດຊອບວຽກດ້ານການພັດທະນາສະຖາບັນ ຂອງອົງການ ສປຊ ຈະໄດ້ເອົາໃຈໃສ່ຫຼາຍຂຶ້ນ ໃນປີ 2019 ເນື່ອງຈາກວ່າເປັນວຽກທີ່ກວມເອົາຫຼາຍຂະແໜງການ ແລະ ຮຽກຮ້ອງໃຫ້ການເຮັດວຽກຂອງລັດຖະບານໄປໃນທິດທາງດຽວກັນ.

# ສຸຂະພາບ

ການສຳຫຼວດດັດຊະນີໝາຍສັງຄົມລາວ ຄັ້ງທີ II ປີ 2017

## ອັດຕາການຕາຍຂອງເດັກອາຍຸຕ່ຳກ່ວາ 5 ປີ ໄດ້ຫຼຸດລົງ

ອັດຕາການຕາຍຂອງເດັກອາຍຸຕ່ຳກ່ວາ 5 ປີ ໄດ້ຫຼຸດລົງມາຢູ່ທີ່:

46 ຄົນ ຕໍ່ ເດັກທີ່ເກີດໃໝ່
1000 ຄົນ

87% ໃນອັດຕາການຕາຍຂອງເດັກອາຍຸຕ່ຳກ່ວາ 5 ປີ ແມ່ນເກີດຂຶ້ນໃນຊ່ວງປີທຳອິດຂອງຊີວິດ.

## ຄວາມແຕກໂຕນກັນ ໃນການເກີດລູກຢູ່ໂຮງໝໍ ຫຼື ສຸກສາລາ



ຕົວເມືອງ
88%

ຊົນນະບົດທີ່ບໍ່ມີເສັ້ນທາງເຂົ້າເຖິງ
38%

## ອັດຕາການຈະເລີນພັນ

ຈຳນວນເດັກນ້ອຍທີ່ເກີດກັບແມ່ຍິງໜຶ່ງຄົນ ໂດຍສະເລ່ຍໄດ້ ຫຼຸດລົງ:



ຈາກ 3.2 (2011) ມາເປັນ 2.7 (2017)

## ອັດຕາການເກີດລູກຂອງໄວໜຸ່ມ

ອັດຕາການເກີດລູກຂອງໄວໜຸ່ມໂດຍສະເລ່ຍ ແມ່ນ ຫຼຸດລົງ:



ຈາກ 94 (2011) ມາເປັນ 83 (2017) ຕໍ່ 1,000

ແຕ່ຍັງມີຄວາມແຕກໂຕນກັນ ລະຫວ່າງ ເຂດຕົວເມືອງ (42) ແລະ ເຂດຊົນນະບົດບໍ່ມີເສັ້ນທາງເຂົ້າເຖິງ (136).

## ການວາງແຜນຄອບຄົວ

75% ແມ່ຍິງທີ່ບໍ່ທັນແຕ່ງງານ



14% ແມ່ຍິງທີ່ແຕ່ງງານແລ້ວ

ຄວາມຕ້ອງການທີ່ຍັງບໍ່ທັນໄດ້ຮັບການຕອບສະໜອງສຳລັບການວາງແຜນຄອບຄົວໃນປະຈຸບັນ ແມ່ນມີສູງ ສຳລັບແມ່ຍິງທີ່ຍັງບໍ່ທັນໄດ້ແຕ່ງງານ.





ຈາກ 42 (2011) ມາເປັນ 54 (2017)

ການນຳໃຊ້ວິທີການຄຸມກຳເນີດແບບທັນສະໄໝສຳລັບແມ່ຍິງທີ່ແຕ່ງງານແລ້ວ ເຊິ່ງມີອາຍຸລະຫວ່າງ 15–49 ປີ ໄດ້ເພີ່ມຂຶ້ນ.

ໄວໜຸ່ມ:



18% ຂອງໄວໜຸ່ມທີ່ແຕ່ງງານແລ້ວ ເຊິ່ງມີອາຍຸລະຫວ່າງ 15–19 ປີ ຍັງບໍ່ທັນໄດ້ຮັບການຊ່ວຍເຫຼືອໃນການວາງແຜນຄອບຄົວ.

# ນ້ຳໃຊ້ ແລະ ສຸຂາພິບານ

ການສຳຫຼວດດັດຊະນີໝາຍສັງຄົມລາວ ຄັ້ງທີ II ປີ 2017




● ຕົວເມືອງ

● ຊົນນະບົດທີ່ບໍ່ມີເສັ້ນທາງເຂົ້າເຖິງ

ການສະໜອງນ້ຳປະປາມີຄວາມຄືບໜ້າທີ່ດີ. ອັດຕາສ່ວນຮ້ອຍຂອງຄົນທີ່ນຳໃຊ້ແຫຼ່ງນ້ຳດື່ມທີ່ໄດ້ຮັບການປັບປຸງດີຂຶ້ນ ແມ່ນ: 84%

86% ຂອງຕົວຢ່າງນ້ຳ ທີ່ໄດ້ຮັບການທົດສອບໃນລະດັບຄົວເຮືອນໃນທົ່ວປະເທດ ພົບວ່າມີ ອີໂຄລາຍ ເຊິ່ງເປັນສາເຫດຂອງການລະບາດພະຍາດຖອກທ້ອງຮຸນແຮງ ແລະ ການຕິດເຊື້ອຮ້າຍແຮງອື່ນໆ.

81% ຕົວເມືອງ

89% ຊົນນະບົດທີ່ບໍ່ມີເສັ້ນທາງເຂົ້າເຖິງ



ມີການທົດສອບເປັນຄັ້ງທຳອິດໃນປີ 2017.

## ການນຳໃຊ້ວິດຖ່າຍ

74% ຂອງປະຊາກອນ ໃນທົ່ວປະເທດ ນຳໃຊ້ວິດຖ່າຍທີ່ໄດ້ປັບປຸງ.

94% ຕົວເມືອງ

52% ຊົນນະບົດທີ່ບໍ່ມີເສັ້ນທາງເຂົ້າເຖິງ



24% ຂອງປະຊາກອນຍັງຖ່າຍຊະຊາຍ.

1% ນະຄອນຫຼວງວຽງຈັນ

65% ແຂວງສາລະວັນ ມີອັດຕາການຖ່າຍຊະຊາຍທີ່ສູງທີ່ສຸດ.

## ການລ້າງມື



54% ຂອງຄົວເຮືອນ ມີບ່ອນລ້າງມື ພ້ອມກັບນ້ຳລ້າງ ແລະ ສະບູ.

73% ຕົວເມືອງ

31% ຊົນນະບົດທີ່ບໍ່ມີເສັ້ນທາງເຂົ້າເຖິງ

# ສຸຂະພາບຈະເລີນພັນ, ແມ່, ເດັກເກີດໃໝ່ ແລະ ເດັກນ້ອຍ ໃນ ສປປ ລາວ

ການສຳຫຼວດດັດຊະນີໝາຍສັງຄົມລາວ ຄັ້ງທີ II (2017) ໄດ້ສະແດງໃຫ້ເຫັນ ຄວາມຄືບໜ້າທີ່ດີ ດ້ານສຸຂະພາບຈະເລີນພັນ, ແມ່, ເດັກເກີດໃໝ່, ເດັກນ້ອຍ ແລະ ໄວໜຸ່ມ ນັບຕັ້ງແຕ່ປີ 2011 ເປັນຕົ້ນມາ. ປະຈຸບັນ ອັດຕາການຕາຍຂອງເດັກອາຍຸຕໍ່າກ່ວາ 5 ປີ ແມ່ນປະມານ 46 ຄົນ ຕໍ່ເດັກເກີດໃໝ່ 1,000 ຄົນ ເຊິ່ງຍັບເຂົ້າໃກ້ຄາດໝາຍ ໃຫ້ເຫຼືອ 40 ຄົນ ພາຍໃນປີ 2020. ອັດຕາການຕາຍຂອງແມ່ ແມ່ນ 190 ຄົນ ເຊິ່ງປຶ້ນກັບຄາດໝາຍທີ່ຕັ້ງໄວ້ທີ່ 160 ຄົນ ພາຍໃນປີ 2020. ຈຳນວນແມ່ຍິງທີ່ໄປເກີດລູກຢູ່ໂຮງໝໍ ແລະ ສຸກສາລາ ເຊິ່ງໄດ້ຮັບການຊ່ວຍເຫຼືອຈາກແພດຜູ້ຊ່ຽວຊານ ໄດ້ເພີ່ມຂຶ້ນ ແລະ ແມ່ຫຼາຍຄົນກໍເອົານົມຕົນເອງໃຫ້ລູກທີ່ເກີດໃໝ່ກິນ. ການນຳໃຊ້ວິທີການຄຸມກຳເນີດທີ່ທັນສະໄໝ ໃນກຸ່ມແມ່ຍິງທີ່ແຕ່ງງານແລ້ວ ໄດ້ເພີ່ມຂຶ້ນ ແລະ ອັດຕາການເກີດລູກຂອງໄວໜຸ່ມຍິງກໍຫຼຸດລົງ. ການໃຫ້ວັກຊີນກັນພະຍາດກັບເດັກນ້ອຍຢ່າງຄົບຖ້ວນໄດ້ເພີ່ມຂຶ້ນ ແລະ ຈຳນວນເດັກທີ່ມີຮ່າງກາຍເຕ້ຍ ແລະ ຂາດສານອາຫານຮຸນແຮງ ກໍຫຼຸດລົງໂດຍລວມ.



ແຕ່ເຖິງຢ່າງໃດກໍຕາມ ຜົນໄດ້ຮັບທາງດ້ານສຸຂະພາບ ແມ່ນຍັງມີຄວາມແຕກຕ່າງກັນຢູ່ ຂຶ້ນກັບສະຖານທີ່ຕັ້ງທາງພູມສັນຖານ, ພາສາປາກເວົ້າ, ລະດັບການສຶກສາຂອງແມ່ ແລະ ຖານະທາງເສດຖະກິດ – ສັງຄົມ. ການສຳຫຼວດດັດຊະນີໝາຍສັງຄົມລາວ ໄດ້ຊີ້ໃຫ້ເຫັນວ່າ ແມ່ຍິງ 9 ໃນ 10 ຄົນ ທີ່ອາໄສຢູ່ໃນເມືອງ ໄດ້ໄປເກີດລູກຢູ່ໂຮງໝໍ, ແຕ່ມີແມ່ຍິງ ຊົນນະບົດພຽງແຕ່ 4 ໃນ 10 ຄົນ ເທົ່ານັ້ນ ທີ່ໄປເກີດຢູ່ໂຮງໝໍ ຫຼື ສຸກສາລາ. ແມ່ຍິງ 1 ໃນ 5 ຄົນ ທີ່ມີອາຍຸລະຫວ່າງ 20–24 ປີ ໄດ້ເກີດລູກກ່ອນຈະມີອາຍຸຄົບ 18 ປີເຕັມ ແລະ ການເກີດລູກແຕ່ຍັງເດັກໃນກຸ່ມຄົນທີ່ທຸກຍາກທີ່ສຸດ 20% ຂອງປະຊາກອນທັງໝົດ ແມ່ນມີສູງເຖິງ 9 ເທົ່າ.

ຄວາມຕ້ອງການທີ່ຍັງບໍ່ທັນໄດ້ຮັບການຕອບສະໜອງສຳລັບການວາງແຜນຄອບຄົວແມ່ນຍັງມີສູງ ໂດຍສະເພາະໃນກຸ່ມແມ່ຍິງທີ່ຍັງ ບໍ່ທັນໄດ້ແຕ່ງງານ. ເຖິງແມ່ນວ່າວິທີການລ້ຽງລູກດ້ວຍນົມແມ່ ຈະມີທ່າກ້າວດີກໍຕາມ, ມີເດັກເກີດໃໝ່ພຽງແຕ່ 44% ເທົ່ານັ້ນ ທີ່ໄດ້ກິນນົມແມ່ພຽງຢ່າງດຽວເປັນເວລາ 6 ເດືອນ.

ເນື່ອງຈາກວ່າການສັກຢາປ້ອງກັນພະຍາດຍັງບໍ່ທັນໄດ້ຕາມຄາດໝາຍແຫ່ງຊາດ ເຮັດໃຫ້ເດັກນ້ອຍຫຼາຍຄົນ ຍັງມີຄວາມສ່ຽງຕໍ່ກັບພະຍາດຕິດຕໍ່. ຄວາມແຕກໂຕນກັນລະຫວ່າງບັນດາແຂວງຕ່າງໆ ກໍຍັງມີຢູ່ ເຊິ່ງອັດຕາສ່ວນຂອງເດັກທີ່ມີຮ່າງກາຍເຕັ້ຍແມ່ນມີສູງໃນ 8 ແຂວງ. ມີ 6 ແຂວງ ສະແດງໃຫ້ເຫັນ ການເພີ່ມຂຶ້ນໃນອັດຕາສ່ວນຂອງເດັກອາຍຸຕໍ່າກ່ວາ 5 ປີ ທີ່ຂາດສານອາຫານຮຸນແຮງ.

**ແຜນງານຮ່ວມຂອງອົງການ ສປຊ ແລະ ການປະກອບສ່ວນຂອງ ສປຊ ໃນການປັບປຸງສຸຂະພາບຈະເລີນພັນ, ແມ່, ເດັກເກີດໃໝ່ ແລະ ເດັກນ້ອຍ.**

ກະຊວງສາທາລະນະສຸກ, ລັດຖະບານປະເທດລຸກຊໍາບວກ, ອົງການ UNFPA, UNICEF ແລະ WHO ກຳລັງເຮັດວຽກຮ່ວມກັນເພື່ອປັບປຸງ ສຸຂະພາບຈະເລີນພັນ, ແມ່, ເດັກເກີດໃໝ່ ແລະ ເດັກນ້ອຍ (RMNCH) ໃຫ້ກ້າວໜ້າຂຶ້ນ ໂດຍຜ່ານແຜນງານຮ່ວມຂອງອົງການ ສປຊ. ແຜນງານນີ້ ຈະປະກອບສ່ວນເຂົ້າໃນ ແຜນພັດທະນາເສດຖະກິດ – ສັງຄົມແຫ່ງຊາດ (2016–2020), ແຜນພັດທະນາ ຂະແໜງສາທາລະນະສຸກແຫ່ງຊາດ (2016–2020), ຍຸດທະສາດ ການປັບປຸງ ຂະແໜງສາທາລະນະສຸກ (2013–2025) ແລະ ຍຸດທະສາດ RMNCH ແລະ ໂພສະນາການແຫ່ງຊາດ. ແຜນງານນີ້ ຍັງໄດ້ປະກອບສ່ວນໂດຍກົງ ເຂົ້າໃສ່ ເສົາຄ້ຳຫຼັກທີ 2 ກ່ຽວກັບການພັດທະນາບຸກຄະລາກອນມະນຸດ ໃນຂອບການຮ່ວມມືເພື່ອການພັດທະນາລະຫວ່າງ ສປປ ລາວ ແລະ ອົງການ ສປຊ (2017–2021).

ຈຸດປະສົງຂອງ ແຜນງານຮ່ວມຂອງອົງການ ສປຊ ແມ່ນເພື່ອປັບປຸງສຸຂະພາບຂອງແມ່ຍິງ, ເດັກເກີດໃໝ່ ແລະ ໄວໜຸ່ມ ໂດຍການສະໜັບສະໜູນ ການຈັດຕັ້ງປະຕິບັດຍຸດທະສາດ ແລະ ແຜນດຳເນີນງານແຫ່ງຊາດ ເພື່ອໃຫ້ການບໍລິການແບບປະສົມປະສານ ດ້ານສຸຂະພາບຈະເລີນພັນ, ແມ່, ເດັກເກີດໃໝ່ ແລະ ເດັກນ້ອຍ (2016–2025). ແຜນງານນີ້ ໄດ້ໃຫ້ຄຳແນະນຳທາງນະໂຍບາຍ ແລະ ການຊ່ວຍເຫຼືອດ້ານວິຊາການ ໃນລະດັບສູນກາງ ບວກກັບການສະໜັບສະໜູນໃນລະດັບທ້ອງຖິ່ນ ເພື່ອນຳເອົາຫຼັກຖານຈາກການຈັດຕັ້ງ ປະຕິບັດຕົວຈິງ ມາປັບປຸງຄຸນນະພາບຂອງການບໍລິການ RMNCH.

“ການສ້າງເປັນຕົວແບບ” ຖືເປັນ ອົງປະກອບຫຼັກຂອງ ຍຸດທະສາດໃນການຈັດຕັ້ງປະຕິບັດ ເຊິ່ງໄດ້ເວົ້າເຖິງການພັດທະນາ, ການທົດສອບ ແລະ ການປັບປຸງຊຸດການໃຫ້ບໍລິການ RMNCH ແລະ ວິທີການຈັດຕັ້ງປະຕິບັດຕົວຈິງ.  ແຂວງ ແລະ ເມືອງທີ່ໄດ້ຄັດເລືອກມາເຂົ້າຮ່ວມກິດຈະກໍານັ້ນ ໄດ້ໃຫ້ ຫຼັກຖານ ແລະ ເປັນຂໍ້ມູນຕົວຈິງ ໃນການຂະຫຍາຍການ ບໍລິ ການ RMNCH ໃຫ້ກ້ວາງຂື້ນຕື່ມໃນທົ່ວປະເທດ. ເຖິງແມ່ນວ່າແຂວງບໍ່ແກ້ວ, ບໍລິຄໍາໄຊ ແລະ ສະຫວັນນະເຂດ ຈະເປັນແຂວງຈຸດສຸມເພື່ອສ້າງເປັນຕົວແບບກໍຕາມ, ແຜນງານນີ້ໄດ້ສ້າງຜົນໄດ້ຮັບທີ່ຢູ່ນອກເໜືອ 3 ແຂວງນີ້.

ການຈັດຕັ້ງປະຕິບັດແຜນງານ ແມ່ນເປັນໄປຕາມຄາດ ເຊິ່ງສາມາດບັນລຸຜົນໄດ້ຮັບທີ່ສໍາຄັນ ໃນປີ 2017 ແລະ 2018 ໃນການສ້າງຄູ່ມືແນະນໍາ, ວິທີການ, ຫຼັກສູດການຝຶກອົບຮົມທີ່ເປັນມາດຕະຖານ ແລະ ເຄື່ອງມືໃນການຈັດຕັ້ງປະຕິບັດ ເພື່ອປັບປຸງການອັດຕາຄອບຄຸມ ແລະ ຄຸນນະພາບຂອງການບໍລິການ RMNCH ໃຫ້ກັບແມ່ຍິງ, ເດັກເກີດໃໝ່, ເດັກນ້ອຍ ແລະ ໄວໜຸ່ມ ໃນ ສປປ ລາວ.

ນອກຈາກນັ້ນ ຍັງມີການສ້າງຕັ້ງກົນໄກການວາງແຜນ ແລະ ການຕິດຕາມການບໍລິການ RMNCH ໃນລະດັບສູນກາງ ແລະ ກົນໄກດັ່ງກ່າວກໍກໍາລັງມີຄວາມເຂັ້ມແຂງຂື້ນ. ປະຈຸບັນ ກໍາລັງສ້າງຄວາມເຂັ້ມແຂງໃຫ້ກັບແຂວງ, ເມືອງ ແລະ ຊຸມຊົນ ໃນການວາງແຜນ, ຈັດຕັ້ງປະຕິບັດ ແລະ ຕິດຕາມ ການບໍລິການ RMNCH ທີ່ເປັນທໍາ ແລະ ຈະໄດ້ສຸມໃສ່ ວຽກງານນີ້ ໃຫ້ຫຼາຍຂື້ນໃນໄລຍະເວລາທີ່ເຫຼືອຂອງແຜນງານ (2019–2020).

ການຈັດຕັ້ງປະຕິບັດມາຮອດປະຈຸບັນ ໄດ້ສະແດງໃຫ້ເຫັນເຖິງຄວາມສໍາພັນ ແລະ ການເພີ່ມມູນຄ່າ ຂອງແຜນງານຮ່ວມຂອງອົງການ ສປຊ ເຊິ່ງສະແດງອອກຢູ່ໃນການສະໜັບສະໜູນທີ່ສອດຄ່ອງ ໃນການສ້າງຄວາມເຂັ້ມແຂງດ້ານນະໂຍບາຍ ແລະ ຍຸດທະສາດ RMNCH ແຫ່ງຊາດ, ການປັບປຸງຄຸນນະພາບຂອງການບໍລິການ RMNCH ແລະ ການສ້າງຄວາມເຂັ້ມແຂງໃຫ້ກັບການບໍລິການ RMNCH ແບບປະສົມປະສານ ໃນທຸກລະດັບຂອງລະບົບສາທາລະນະສຸກ ນັບຕັ້ງແຕ່ລະດັບຊຸມຊົນຈົນໄປເຖິງການເບິ່ງແຍງໃນໂຮງໝໍ. ແຜນງານຮ່ວມຂອງອົງການ ສປຊ ຄາດວ່າ ຈະໄດ້ຮັບຜົນປະໂຫຍດ ຈາກການປັບປຸງຂະ ບວນການພາຍໃນຂອງອົງການ ສປຊ ເອງ ເພື່ອເປັນແບບຢ່າງ ໃນການສະໜັບສະໜູນແບບປະ ສົມປະສານ ແລະ ມີຄວາມແທດເໝາະກັບບູລິມະສິດແຫ່ງຊາດ  ບົນພື້ນຖານຄວາມຫຼາກ ຫຼາຍຂອງຄວາມຊໍານານງານຂອງອົງການ ສປຊ.



# 6. ການຄໍ້າປະກັນສະບຽງອາຫານ ແລະ ໂພສະນາການ

# ຄົນທີ່ມີຄວາມບອບບາງທີ່ສຸດ ໄດ້ຮັບຜົນປະໂຫຍດຈາກ ການປັບປຸງການຄໍ້າປະກັນ ສະບຽງອາຫານ ແລະ ໂພສະນາການທີ່ດີຂຶ້ນ






## ທ່າອ່ຽງການພັດທະນາຕົ້ນຕໍ

| ຕົວຊີ້ວັດ | ຂໍ້ມູນທຽບຖານ | ຄາດໝາຍ | ສະຖານະການປະຈຸບັນ |
|---|---|---|---|
| 6.1. ຄວາມບໍ່ໝັ້ນຄົງທາງດ້ານສະບຽງອາຫານໃນລະດັບປານກາງ ແລະ ຮຸນແຮງ | FIES ໃນ ການສຳຫຼວດການໃຊ້ຈ່າຍ ແລະ ການຊົມໃຊ້ຂອງຄົວເຮືອນ ປີ 2017-2018 | ຈະໄດ້ຮັບການຢືນຢັນ | ກຳລັງດຳເນີນການສຳຫຼວດ FIES ເຊິ່ງຄາດວ່າຈະມີຜົນໄດ້ຮັບໃນປີ 2019 |
| 6.2. ອັດຕາສ່ວນຮ້ອຍຂອງເດັກທີ່ມີອາຍຸ 6-23 ເດືອນ ໄດ້ຮັບຄວາມຄວາມຫຼາກຫຼາຍຂອງອາຫານທີ່ດີຂຶ້ນ | ຈະໄດ້ກຳນົດຂຶ້ນມາ ຈາກການສຳຫຼວດດັດຊະນີ ໝາຍສັງຄົມລາວ ຄັ້ງທີ II | ຈະໄດ້ຮັບການຢືນຢັນ | 45.3% ຂອງເດັກ ອາຍຸ 6-23 ເດືອນ ໄດ້ຮັບຄວາມຫຼາກຫຼາຍຂອງອາຫານໃນຂັ້ນຕໍ່າສຸດ (ການສຳຫຼວດດັດຊະນີ ໝາຍສັງຄົມລາວ ຄັ້ງທີ II, 2018) |
| 6.3. ພາວະການຂາດໂພສະນາການ ໃນເດັກອາຍຸຕໍ່າກວ່າ 5 ປີ | 9.6%<br>(LCAAS 2015) | < 5% | 9% ຂອງເດັກທີ່ມີອາຍຸຕໍ່າກວ່າ 5 ປີ ເຊິ່ງມີນໍ້າໜັກຕໍ່າເມື່ອທຽບໃສ່ກັບລວງສູງ ຕໍ່າກວ່າ -2SD (ພາວະການຂາດໂພສະນາການ) |
| 6.4. ຂໍ້ມູນປະຈຳປີດ້ານໂພສະນາການທີ່ໄດ້ຈາກ ລະບົບເຝົ້າລະວັງໂພສະນາການແຫ່ງຊາດ | ບໍ່ມີ | ບົດລາຍງານປະຈຳປີ | ລະບົບເຝົ້າລະວັງໂພສະນາການແຫ່ງຊາດ ໄດ້ຮັບການອອກແບບ ແລະ ຮັບຮອງເອົາໂດຍ<br><br>ກອງເລຂາສູນໂພສະນາການແຫ່ງຊາດ ການເກັບກຳຂໍ້ມູນຈະເລີ່ມຕົ້ນໃນປີ 2019 |

ການທົບທວນກາງສະໄໝ ແຜນພັດທະນາເສດຖະກິດ – ສັງຄົມແຫ່ງຊາດ ຄັ້ງທີ VIII ປະສົມປະສານກັບ ຂະບວນການທົບທວນແຫ່ງຊາດແບບສະໝັກໃຈ ເປັນໂອກາດທີ່ດີ ໃຫ້ກັບ ອົງການ ສປຊ ແລະ ລັດຖະບານ ໄດ້ສົນທະນາປຶກສາຫາລືແບບມີໂຄງສ້າງ ກ່ຽວກັບ ຄວາມຄືບໜ້າ ໃນການບັນລຸເປົ້າໝາຍການພັດທະນາແບບຍືນຍົງ 2030 ພ້ອມທັງຄວາມຄືບໜ້າໃນການຫຼຸດພົ້ນອອກຈາກສະຖານະພາບ ປະເທດດ້ອຍພັດທະນາ. ການສຳຫຼວດດັດຊະນີໝາຍສັງຄົມລາວ ຄັ້ງທີ II ໄດ້ອຳນວຍຄວາມສະດວກໃນການລາຍງານ ແລະ ຢືນຢັນ ຄວາມຄືບໜ້າຂອງຫຼາຍຕົວຊີ້ວັດ ໂດຍສະເພາະໃນຂົງເຂດການຄ້ຳປະກັນອາຫານ ແລະ ໂພສະນາການ. ອັດຕາສ່ວນຂອງເດັກທີ່ມີຮ່າງກາຍເຕັ້ຍ ໄດ້ຫຼຸດລົງຈາກ 44% ມາເປັນ 33% ໃນໄລຍະເວລາ 5 ປີ ໃນທົ່ວປະເທດ ແຕ່ຄວາມແຕກຕ່າງກັນລະຫວ່າງພາກຕ່າງໆຂອງປະເທດຍັງສືບຕໍ່ເປັນບັນຫາຢູ່. ເຖິງຢ່າງໃດກໍຕາມ 8 ຈາກ 18 ແຂວງ ຍັງມີບັນຫາອັດຕາເດັກທີ່ມີຮ່າງກາຍເຕັ້ຍສູງກ່ວາ 40%.

ອີງໃສ່ຜົນໄດ້ຮັບຈາກການທົບທວນກາງສະໄໝຂອງແຜນປະຕິບັດງານໂພສະນາການແຫ່ງຊາດ (2016-2020) ໄດ້ໃຫ້ຮູ້ວ່າ ອັດຕາສ່ວນຂອງເດັກທີ່ມີພາວະຂາດໂພສະນາການ ແລະ ເດັກທີ່ມີນ້ຳໜັກຕຸ້ຍເກີນໄປ ໄດ້ເພີ່ມຂຶ້ນ  ໃນໄລຍະຂອງການລາຍງານ ແລະ ເຮັດໃຫ້ການບັນລຸຄາດໝາຍແມ່ນຍັງໄກຢູ່. ສິ່ງນີ້ ຖືເປັນການຢືນຢັນວ່າບັນຫາທັງສອງຢ່າງນີ້ ມີທ່າອ່ຽງເພີ່ມຂຶ້ນ ໃນທົ່ວ ອາຊີຕາເວັນອອກສຽງໃຕ້. ການທົບທວນໃນ 22 ກິດຈະກຳຫຼັກຂອງ ແຜນປະຕິບັດງານດັ່ງກ່າວ ຂອງຂະແໜງສາທາລະນະສຸກ, ກະສິກຳ ແລະ ການສຶກສາ ໄດ້ໃຫ້ຮູ້ວ່າ ເຖິງແມ່ນວ່າອັດຕາເດັກທີ່ມີຮ່າງກາຍເຕັ້ຍຈະຫຼຸດລົງກໍຕາມ, ຫຼາຍຕົວຊີ້ວັດ ເຊັ່ນ: ການເຂົ້າເຖິງຈຸນລະສານອາຫານເສີມ, ການຂ້າແມ່ທ້ອງ ແລະ ການຄຸ້ມຄອງພາວະການຂາດສານອາຫານໃນລະດັບຊຸມຊົນ ຍັງບໍ່ທັນມີຄວາມຄືບໜ້າທີ່ດີເທົ່າທີ່ຄວນ. ເມື່ອເບິ່ງຈາກມຸມມອງຂອງການຜະລິດກະສິກຳແລ້ວ, ການທົບທວນກາງສະໄໝນີ້ ຈະເປັນພື້ນຖານໃຫ້ກັບການສົນທະນາກັນໃຫ້ຫຼາຍຂຶ້ນ ກ່ຽວກັບການຜະລິດກະສິກຳທີ່ອຸດົມໄປດ້ວຍສານອາຫານແບບຍືນຍົງ ແລະ ການລົງທຶນເຂົ້າໃສ່ຕ່ອງໂສ້ມູນຄ່າກະສິກຳທີ່ເອົາໃຈໃສ່ໂພສະນາການ. ອີກຂໍ້ສະເໜີແນະໜຶ່ງແມ່ນ ກ່ຽວກັບການສະໜັບສະໜູນການວິເຄາະ ແລະ ການວາງແຜນກະສິກຳທີ່ເອົາໃຈໃສ່ໂພສະນາການແບບມີສ່ວນຮ່ວມ. ເມື່ອເບິ່ງຈາກມຸມມອງຂອງການສຶກສາແລ້ວ, ເຫັນໄດ້ວ່າໂຄງການອາຫານໂຮງຮຽນ ລວມທັງໃນລະດັບເດັກກ່ອນໄວປະຖົມ ແລະ ການຜະລິດກະສິກຳຢູ່ໂຮງຮຽນ ສາມາດສ້າງຜົນໄດ້ຮັບທີ່ດີ. ບູລິມະສິດທີ່ສຳຄັນ ສຳລັບທຸກຂະແໜງການ ແມ່ນການລົງທຶນໃສ່ໃນການສື່ສານດ້ານການປ່ຽນແປງພຶດຕິກຳ ເພື່ອໃຫ້ໂພສະນາການ ແລະ ການສຶກສາທາງໂພສະນາການ ກາຍເປັນສ່ວນໜຶ່ງຂອງການຜະລິດກະສິກຳທີ່ເອົາໃຈໃສ່ໂພສະນາການ, ການສະໜັບສະໜູນວຽກງານສາທາລະນະສຸກ ແລະ ການສຶກສາຊັ້ນປະຖົມ.

ໂດຍອີງໃສ່ຜົນໄດ້ຮັບຂອງ ການສຳຫຼວດດັດຊະນີໝາຍສັງຄົມລາວ, ອົງການ UNICEF ໄດ້ເຜີຍແຜ່ບົດລາຍງານເບື້ອງຕົ້ນ ກ່ຽວກັບ SDGs ແລະ ເດັກນ້ອຍ: ການວັດແທກຄວາມຄືບໜ້າຕໍ່ກັບຄວາມເປັນຢູ່ທີ່ດີຂອງເດັກນ້ອຍ ໃນ ສປປ ລາວ  ເຊິ່ງໄດ້ວິເຄາະຄວາມຕ້ອງການຂອງເດັກອາຍຸຕ່ຳກ່ວາ 18 ປີ. ການວິເຄາະໄດ້ລະບຸວ່າ ຖ້າເດັກຄົນໜຶ່ງມີຄວາມຂາດເຂີນຢ່າງໜ້ອຍ 3 ດ້ານ ຂອງການເປັນຢູ່ທີ່ດີແລ້ວ ຈະຖືວ່າເດັກນ້ອຍຄົນນັ້ນຢູ່ໃນຄວາມທຸກຍາກແບບຫຼາຍມິຕິ. ການເປັນຢູ່ທີ່ດີ ລວມມີດ້ານ: ການສຶກສາ, ສຸຂະພາບ, ນ້ຳໃຊ້ ແລະ ສຸຂາພິບານ, ໂພສະນາການ ແລະ ເຮືອນຢູ່. ຂໍ້ມູນທຽບຖານປີ 2018 ໄດ້ສະແດງໃຫ້ເຫັນວ່າ ມີເດັກນ້ອຍເຖິງ 50.4% ທີ່ຍັງຢູ່ໃນຄວາມທຸກຍາກແບບຫຼາຍມິຕິ ແລະ ຍັງຂາດການເຂົ້າເຖິງການບໍລິການຂັ້ນພື້ນຖານຫຼາຍຢ່າງ. ໂດຍລວມແລ້ວ ມີເດັກນ້ອຍລາວພຽງແຕ່ 12% ເທົ່ານັ້ນ ທີ່ມີຄວາມພຽບພ້ອມໃນຊີວິດການເປັນຢູ່ທີ່ດີ ແລະ ຫຼາຍກ່ວາ 77% ຍັງມີຄວາມຂາດເຂີນຢ່າງໜ້ອຍ 2 ດ້ານ ຫຼືຫຼາຍກ່ວານັ້ນ. ການສຶກສາຄັ້ງນີ້ ຍັງສະແດງໃຫ້ເຫັນເຖິງຄວາມແຕກໂຕນກັນໃນພາກຕ່າງໆ ເຊິ່ງຄວາມຂາດເຂີນແມ່ນມີຂ້ອນຂ້າງຫຼາຍຢູ່ໃນພາກໃຕ້ຂອງປະເທດ.

ສິ່ງທ້າທາຍທີ່ໃຫຍ່ທີ່ສຸດຂອງປີ 2018 ແມ່ນ  ເຫດການເຂື່ອນແຕກທີ່ແຂວງອັດຕະປື ເຊິ່ງເກີດຂຶ້ນຢ່າງໄວວາ ແລະ ບໍ່ໄດ້ຄາດຄິດມາກ່ອນ ແລະ ລະດູຝົນທີ່ມີຝົນຕົກຫຼາຍ ພ້ອມກັບລົມພາຍຸຫຼາຍຫົວ ໄດ້ທຳລາຍເນື້ອທີ່ກະສິກຳຫຼາຍກ່ວາ 100,000 ເຮັກຕາ ພ້ອມກັບຖະໜົນຫົນທາງ ແລະ ຂົວຂ້າມ. ສະພາບອາກາດທີ່ຮ້າຍແຮງ ໄດ້ສົ່ງຜົນກະທົບຕໍ່ກັບປະຊາຊົນລາວ ເກືອບ 10% ໃນ 4 ແຂວງ. ການປະເມີນຄວາມຕ້ອງການຫຼັງເກີດໄພພິບັດ  ໄດ້ປະເມີນຄ່າຄວາມເສຍຫາຍ ແລະ ຄວາມສູນເສຍ ເຖິງ US$ 371 ລ້ານ. ເຖິງແມ່ນວ່າຈະມີການສະໜັບສະໜູນຢ່າງໄວ ແລະ ສືບຕໍ່ຈົນຮອດປີໃໝ່ກໍຕາມ, ພື້ນທີ່ຜະລິດກະສິກຳທີ່ຖືກທຳລາຍ ແລະ ຊີວິດການເປັນຢູ່ທີ່ສູນເສຍໄປນັ້ນ ຈະສົ່ງຜົນກະທົບຕໍ່ກັບ ການຄ້ຳປະກັນສະບຽງອາຫານ ແລະ ໂພສະນາການ ໃນເຂດທີ່ໄດ້ຮັບຜົນກະທົບ ໃນປີ 2019 ນີ້.

> **ມີເດັກນ້ອຍລາວ ພຽງແຕ່ 12% ເທົ່ານັ້ນທີ່ມີຄວາມພຽບພ້ອມ ໃນຊີວິດການເປັນຢູ່ທີ່ດີ ແລະ ຫຼາຍກ່ວາ 77% ແມ່ນຍັງມີຄວາມ ຂາດເຂີນ ຢ່າງໜ້ອຍ 2 ດ້ານ ຫຼືຫຼາຍກ່ວານັ້ນ. ການສຶກສາຄັ້ງນີ້ ຍັງສະແດງໃຫ້ເຫັນ ຄວາມແຕກໂຕນກັນ ໃນພາກຕ່າງໆ ເຊິ່ງຄວາມຂາດເຂີນ ແມ່ນມີຂ້ອນຂ້າງ ຫຼາຍຢູ່ໃນພາກໃຕ້ ຂອງປະເທດ.**

ເຖິງແມ່ນວ່າງົບປະມານຂອງລັດຖະບານຈະຖືກຕັດລົງກໍຕາມ, ລັດຖະບານເອງ ແລະ ຄູ່ຮ່ວມພັດທະນາຍັງມີຄວາມມຸ່ງໝັ້ນທີ່ຈະລົງທຶນເຂົ້າໃສ່ວຽກງານການຄ້ຳປະກັນສະບຽງອາຫານ ແລະ ໂພສະນາການ. ລະດັບຂອງການລົງທຶນໃນວຽກງານໂພສະນາການ ເມື່ອປຽບທຽບໃສ່ກັບຄວາມຕ້ອງການແລ້ວ ຍັງຖືວ່າຕ່ຳ ແລະ ການລົງທຶນສ່ວນໃຫຍ່ແມ່ນເລັ່ງໃສ່ກິດຈະກຳທີ່ເອົາໃຈໃສ່ດ້ານໂພສະນາການແບບກວມລວມຫຼາຍກ່ວາ ແລະ ກິດຈະກຳໂພສະນາການແບບສະເພາະແມ່ນຍັງມີໜ້ອຍຢູ່.

## ຜົນໄດ້ຮັບ

ການພັດທະນາຄວາມສາມາດ

ການສະໜັບສະໜູນ ເພື່ອເສີມສ້າງຄວາມສາມາດ ແລະ ສ້າງຄວາມເຂັ້ມແຂງໃຫ້ກັບລະບົບຂອງລັດຖະບານ ໃນການສົ່ງເສີມ 1,000 ມື້ທຳອິດ ສຸມໃສ່ການລ້ຽງລູກດ້ວຍນົມແມ່ ແລະ ວິທີການລ້ຽງເດັກແດງ ແລະ ເດັກນ້ອຍ. ຍົກຕົວຢ່າງ: ໄດ້ສຳເລັດການສ້າງປຶ້ມຄູ່ມືການລ້ຽງລູກດ້ວຍນົມແມ່ສຳລັບພະນັກງານສາທາລະນະສຸກ ເຊິ່ງຖືກຮັບຮອງໂດຍລັດຖະມົນຕີ ແລະ ພິມອອກມາເພື່ອແຈກຢາຍໃຫ້ກັບ ໂຮງໝໍ ແລະ ສຸກສາລາໃນທົ່ວປະເທດ. ຄູ່ມືສຳລັບພະນັກງານສາທາລະນະສຸກນີ້ ຈະຊ່ວຍສົ່ງເສີມແມ່ຍິງ ໃຫ້ ສາມາດລ້ຽງລູກດ້ວຍນົມແມ່ ແລະ ໃຫ້ການເບິ່ງແຍງແບບຕໍ່ເນື່ອງ ເຖິງວ່າຈະຢູ່ໃນສະຖານະການທີ່ຫຍຸ້ງຍາກກໍຕາມ.  ການສ້າງຄູ່ມືແນະນຳການຝາກທ້ອງ ແລະ ຫຼັງເກີດລູກ ພ້ອມກັບການຝຶກອົບຮົມ ຊ່ວຍໃຫ້ຜູ້ໃຫ້ບໍລິການດ້ານສາທາລະນະສຸກ ສາມາດພັດທະນາທັກສະທີ່ຈຳເປັນໃນການໃຫ້ຄຳປຶກສາ ເພື່ອປ່ຽນແປງພຶດຕິດກຳດ້ານໂພສະນາການຢ່າງມີປະສິດທິຜົນ ໃນໄລຍະຂອງການຖືກພາ ແລະ ຫຼັງເກີດລູກ.

ອົງການ UNICEF ພ້ອມກັບອົງການອື່ນໆ ໃນລະບົບ ສປຊ ແລະ ຄູ່ຮ່ວມພັດທະນາ ໄດ້ສະໜັບສະໜູນການສ້າງຕັ້ງ ຄະນະກຳມະການໂພສະນາການແຫ່ງຊາດ ແລະ ໃນຂັ້ນແຂວງ. ການສະໜັບສະໜູນດັ່ງກ່າວ ໄດ້ຊ່ວຍປັບປຸງຄວາມສາມາດຂອງຄະນະກຳມະການ ແລະ ຄວາມສາມາດຂອງກອງເລຂາຂອງຄະນະກຳມະການໂພສະນາການແຫ່ງຊາດ ໃນການຕິດຕາມຄວາມຄືບໜ້າ ບັນດາຄາດໝາຍທີ່ໄດ້ກຳນົດໄວ້ຢູ່ໃນຍຸດທະສາດໂພສະນາການແຫ່ງຊາດ. ລັດຖະບານ ແລະ ຄູ່ຮ່ວມພັດທະນາ ໄດ້ຈັດການສົນທະນາປຶກສາຫາລືດ້ານນະໂຍບາຍທີ່ກອງປະຊຸມໂພສະນາການແຫ່ງຊາດ ຄັ້ງທີ 4 ໃນວັນທີ 7 ທັນວາ.

> **ອົງການ IFAD ໄດ້ຊ່ວຍເຫຼືອ ກະຊວງກະສິກຳ ແລະ ປ່າໄມ້ ໃນການສະໜັບ ສະໜູນ ການເຮັດສວນຄົວ ເພື່ອປັບປຸງ ຄວາມຫຼາກຫຼາຍ ຂອງອາຫານ ແລະ ໂພສະນາການ ໃນຄົວເຮືອນ ໃຫ້ກັບ ຊາວກະສິກອນ ຂະໜາດນ້ອຍ ໂດຍສະເພາະ ກຸ່ມແມ່ຍິງ ໃນ 175 ບ້ານ ໃນ 3 ແຂວງເປົ້າໝາຍ.**

ຜົນສຳເລັດທີ່ສຳຄັນລວມມີ ການເຜີຍແຜ່ຂໍ້ມູນໂພສະນາການ ທີ່ໄດ້ຈາກການສຳຫຼວດດັດຊະນີໝາຍສັງຄົມລາວ ຄັ້ງຫຼ້າສຸດ ແລະ ຂໍ້ສະເໜີແນະທີ່ໄດ້ຈາກ ການທົບທວນຄືນກາງສະໄໝ ແຜນປະຕິບັດງານໂພສະນາການແຫ່ງຊາດ. ທ່ານຮອງປະທານຄະນະກຳມະການໂພສະນາການແຫ່ງຊາດ ໄດ້ຖະແຫຼງຜົນໄດ້ຮັບ ເຊິ່ງເປັນການຢືນຢັນຄືນຄຳໝັ້ນສັນຍາຂອງລັດຖະບານ ແລະ ຄູ່ຮ່ວມພັດທະນາ ເພື່ອສະໜັບສະໜູນການສ້າງຄວາມສາມາດ ແລະ ຂະບວນການຕ່າງໆເພື່ອຂະຫຍາຍການປະຕິບັດງານດ້ານໂພສະນາການ ໄປສູ່ຂັ້ນແຂວງ ແລະ ຂັ້ນເມືອງ. ກອງປະຊຸມໂພສະນາການແຫ່ງຊາດ ຄັ້ງທີ 4 ໄດ້ເປັນເວທີໃນການແລກປ່ຽນຂໍ້ມູນຂ່າວສານ ແລະ ເສີມສ້າງຄຳໝາຍໝັ້ນຂອງພາກສ່ວນຕ່າງໆທີ່ກ່ຽວຂ້ອງ ເພື່ອຕິດຕາມການຈັດຕັ້ງປະຕິບັດກິດຈະກຳໃນຂັ້ນແຂວງ. ສະຫະພາບເອີຣົບ ແລະ ອົງການ UNICEF ໃນຖານະເປັນປະທານຮ່ວມຂອງ ກຸ່ມຄູ່ຮ່ວມພັດທະນາໃນວຽກງານການຄໍ້າປະກັນສະບຽງອາຫານ ແລະ ໂພສະນາການ ໄດ້ຈັດກອງປະຊຸມປະຈຳໄຕມາດ ເພື່ອສົ່ງເສີມການແລກປ່ຽນຂໍ້ມູນ ແລະ ປະສານງານຮ່ວມກັບຫຼາຍຂະແໜງການໃນຕະຫຼອດປີ ເປັນການປັບປຸງຄວາມກົມກຽວຂອງການສະໜັບສະໜູນດ້ານວິຊາການ ແລະ ການເງິນ ເຂົ້າໃນຍຸດທະສາດ ແລະ ແຜນດຳເນີນງານໂພສະນາການແຫ່ງຊາດ.

ພາຍໃຕ້ແຜນງານການຜະລິດກະສິກຳ ເພື່ອໂພສະນາການ, ອົງການ WFP ແລະ IFAD ໄດ້ສະໜັບສະໜູນ ກະຊວງກະສິກຳ ແລະ ປ່າໄມ້ ຈັດຕັ້ງປະຕິບັດ ໂຮງຮຽນຊາວນາເພື່ອໂພສະນາການຫຼາຍແຫ່ງ ເຊິ່ງມີເປົ້າໝາຍເພື່ອສ້າງການປ່ຽນແປງດ້ານພຶດຕິກຳໃນລະດັບ ຄົວເຮືອນ ສຳລັບການຄໍ້າປະກັນສະບຽງອາຫານ ແລະ ໂພສະນາການ. ກິດຈະກຳທີ່ໄດ້ຈັດຕັ້ງປະຕິບັດ ລວມມີ ການສ້າງຄວາມສາມາດໃຫ້ກັບຜູ້ອຳນວຍຄວາມສະດວກຂັ້ນບ້ານ ໃນການນຳພາຝຶກສອນບົດຮຽນກ່ຽວກັບໂພສະນາການ ແລະ ວິທີການແຕ່ງກິນ. ແມ່ຍິງຖືພາ ແລະ ແມ່ຍິງກຳລັງໃຫ້ນົມລູກ ແລະ ແມ່ຍິງມີລູກນ້ອຍອາຍຸຕໍ່າກ່ວາ 2 ປີ ທີ່ໄດ້ເຂົ້າຮ່ວມໂຮງຮຽນຊາວນາ ເພື່ອໂພສະນາການນັ້ນ ຈະຖືວ່າມີຄວາມພ້ອມ ເພື່ອຮັບການຊ່ວຍເຫຼືອໃນການເຮັດສວນຄົວ ຫຼື ລ້ຽງສັດ ເປັນການສ້າງຄວາມຫຼາຍຫຼາຍໃນອາຫານການກິນຂອງຄົວເຮືອນໄດ້ດີຂຶ້ນ. ໂຮງຮຽນຊາວນາເພື່ອໂພສະນາການ ໄດ້ໃຫ້ການສະໜັບສະໜູນດ້ານວິຊາການ ເພື່ອປັບປຸງຄວາມຫຼາກຫຼາຍຂອງອາຫານ ນັບຕັ້ງແຕ່ການປູກ, ການລ້ຽງສັດນ້ອຍທີ່ມີໂປຼຕີນ, ການປົກປັກຮັກສາອາຫານ ແລະ ຂະບວນການປຸງແຕ່ງອາຫານ. ການຝຶກແບບມີສ່ວນຮ່ວມກັບຊຸມຊົນ ໄດ້ປະກອບສ່ວນເຂົ້າໃສ່ຍຸດທະສາດແຫ່ງຊາດ ວ່າດ້ວຍການສື່ສານ ເພື່ອປ່ຽນແປງພຶດຕິກຳທາງສັງຄົມ. ກິດຈະກຳນີ້ ຈະໄດ້ຮັບການຂະຫຍາຍຈາກ 61 ບ້ານ ໄປສູ່ 142 ບ້ານໃໝ່ ໃນ 12 ເມືອງ ຂອງ 4 ແຂວງເປົ້າໝາຍຄື: ຊຽງຂວາງ, ຫົວພັນ, ອຸດົມໄຊ ແລະ ຜົ້ງສາລີ. ໂດຍລວມແລ້ວ ແມ່ນມີທັງໝົດ 400 ບ້ານ ທີ່ຈະໄດ້ຮັບການຊ່ວຍເຫຼືອ ໃນກິດຈະກຳດັ່ງກ່າວ. ພາຍໃຕ້ແຜນງານດຽວກັນນີ້ ອົງການ FAO ໄດ້ສຳເລັດແຜນຍຸດທະສາດການລົງທຶນສຳລັບຜະລິດຕະພັນ 7 ຊະນິດ ທີ່ມີທ່າແຮງບົ່ມຊ້ອນ ໂດຍສະເພາະຜະລິດຕະພັນທີ່ຢູ່ໃນແຂວງເປົ້າໝາຍ. ແຜນຍຸດທະສາດນີ້ ຈະໃຫ້ຂໍ້ແນະນຳກັບ ກົມສົ່ງເສີມ ແລະ ປຸງແຕ່ງກະສິກຳ, ພະແນກກະສິກຳ ແລະ ປ່າໄມ້ແຂວງ, ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ແລະ ກຸ່ມຊາວກະສິກອນ ໃນການພັດທະນາແຜນທຸລະກິດ ເພື່ອເພີ່ມລາຍຮັບໃຫ້ກັບຄອບຄົວ. ແຜນຍຸດທະສາດການລົງທຶນນີ້ ໄດ້ຖືກນຳໃຊ້ເຂົ້າເປັນສ່ວນ ໜຶ່ງໃນການວາງແຜນພັດທະນາບ້ານ ແລະ ສະໜັບສະໜູນການລົງທຶນ ລະຫວ່າງຊາວກະສິກອນຂະໜາດນ້ອຍ ແລະ ນັກທຸລະກິດ ເພື່ອສົ່ງເສີມການລົງທຶນໃນຊົນນະບົດ. ໂດຍຜ່ານການສະໜັບສະໜູນຂອງ ອົງການ IFAD, ແຜນງານດຽວກັນນີ້ ຍັງໄດ້ຊ່ວຍເຫຼືອການກໍ່ສ້າງຈຸດນໍ້າໃຊ້ 54 ຈຸດ ເຮັດໃຫ້ 9,044 ຄົວເຮືອນໄດ້ຮັບຜົນປະໂຫຍດ.

ນອກຈາກນັ້ນ, ອົງການ IFAD ຍັງໄດ້ຊ່ວຍເຫຼືອ ກະຊວງກະສິກຳ ແລະ ປ່າໄມ້ ໃນການສະໜັບສະໜູນການເຮັດສວນຄົວ ເພື່ອປັບປຸງການສ້າງຄວາມຫຼາກຫຼາຍໃນອາຫານ ແລະ ໂພສະນາການໃນຄົວເຮືອນ ໃຫ້ກັບຊາວກະສິກອນຂະໜາດນ້ອຍ ໂດຍສະເພາະກຸ່ມ ແມ່ຍິງ ໃນ 175 ບ້ານ ໃນ 3 ແຂວງເປົ້າໝາຍ. ກຸ່ມແມ່ຍິງບ້ານ ໄດ້ຮັບການຝຶກອົບຮົມ ວິທີການປະຕິບັດທາງໂພສະນາການທີ່ດີ ແລະ ການແຕ່ງກິນ ພ້ອມກັບການສະໜັບສະໜູນດ້ານເຕັກນິກການຜະລິດທີ່ດີຂຶ້ນ. ແຜນງານດັ່ງກ່າວ ຍັງໄດ້ສົ່ງເສີມ ການເຊື່ອມສານບົດບາດຍິງ – ຊາຍ ແລະ ການມີສ່ວນຮ່ວມຂອງແມ່ຍິງ ເຂົ້າໃນການ ເປັນຄູ່ຮ່ວມທຸລະກິດ ແລະ ການພັດທະນາຕ່ອງໂສ້ມູນຄ່າ ເພື່ອຊ່ວຍໃຫ້ແມ່ຍິງໄດ້ເຂົ້າເຖິງການສະໜັບສະໜູນດ້ານການຜະລິດກະສິກຳ ແລະ ການບໍລິການທາງການເງິນຢ່າງເທົ່າທຽມກັນ ແລະ ຍັງຊ່ວຍໃຫ້ພວກເຂົາມີບົດບາດຫຼາຍຂຶ້ນ ໃນກຸ່ມຊາວກະສິກອນ. ການສົ່ງເສີມການຜະລິດກະສິກຳຢູ່ໂຮງຮຽນ ໃນ 64 ບ້ານເປົ້າໝາຍທີ່ຄັດເລືອກມາ ລວມມີການປູກຜັກຂະໜາດນ້ອຍ, ການປະສົມພັນປາ, ການລ້ຽງໄກ່ ແລະ ລ້ຽງກົບ ເພື່ອສ້າງຜົນໄດ້ຮັບທາງໂພສະນາການໃນໂຮງຮຽນໃຫ້ດີຂຶ້ນ. ມີການສ້າງຄະນະໂພສະນາການຂອງໂຮງຮຽນຂຶ້ນມາ ໃນໂຮງຮຽນທົດລອງທຸກແຫ່ງ ເຊິ່ງລວມເອົາພໍ່ແມ່ຜູ້ປົກຄອງຂອງນັກຮຽນເຂົ້າໃນຄະນະນັ້ນນຳ. ພາຍໃຕ້ແຜນງານອັນດຽວກັນນີ້ ອົງການ IFAD ໄດ້ສະໜັບສະໜູນ ໜ່ວຍງານຂັ້ນແຂວງ ແລະ ເມືອງ ເພື່ອສ້າງຈຸດສະໜອງນໍ້າສະອາດ 147 ຈຸດ.

ອົງການ WFP ຍັງໄດ້ສະໜັບສະໜູນ ກະຊວງສຶກສາທິການ ແລະ ກິລາ ປັບປຸງຄູ່ມືແນະນຳການຜະລິດກະສິກຳຢູ່ໂຮງຮຽນ ເພື່ອເສີມສ້າງດ້ານໂພສະນາການ ແລະ ບົດບາດຍິງ – ຊາຍໃຫ້ເຂັ້ມແຂງຂຶ້ນ ແລະ ປະກອບສ່ວນເຂົ້າໃນການອອກຄຳສັ່ງລັດຖະມົນຕີ ວ່າດ້ວຍການສົ່ງເສີມການຜະລິດກະສິກຳຢູ່ໂຮງຮຽນ ໃນທຸກລະດັບນັບຕັ້ງແຕ່ອະນຸບານຈົນໄປຮອດມະຫາວິທະຍາໄລ. ຄູ່ມືແນະນຳນີ້ ຈະໄດ້ນຳໄປແຈກຢາຍຄືນໃຫ້ກັບໂຮງຮຽນ ທີ່ໄດ້ເຂົ້າຮ່ວມໂຄງການອາຫານທ່ຽງ. ອົງ ການ WFP ໄດ້ຮ່ວມມືກັບຫຼາຍພາກສ່ວນ ແລະ ຊຸມຊົນທ້ອງຖິ່ນ ຕິດຕັ້ງບ່ອນລ້າງມືໄດ້ 100 ສະຖານີ ເພື່ອຮັບປະກັນວ່າ ເດັກນັກຮຽນຊັ້ນປະຖົມ ມີສຸຂະອະນາໄມທີ່ຖືກຕ້ອງ. ໂດຍການຮ່ວມມືກັບນໍ້າສະອາດ, ອົງການ WFP ໄດ້ສະໜັບສະໜູນ ການສຳຫຼວດ

ແລະ ອອກແບບລະບົບນ້ຳໃຊ້ໃນ 220 ໂຮງຮຽນ ໃນ 9 ເມືອງຂອງແຂວງພາກເໜືອ ເພື່ອປັບປຸງການເຂົ້າເຖິງນ້ຳໃຊ້ໃນໂຮງຮຽນ ສໍາລັບແຕ່ງກິນ, ສຸຂະອະນາໄມ, ການເຮັດສວນຄົວໃນໂຮງຮຽນ, ການລ້າງມື ແລະ ອື່ນໆ.

ອົງການ FAO ໄດ້ສະໜັບສະໜູນ ສະຖານບັນຄົ້ນຄວ້າກະສິກໍາ ແລະ ປ່າໄມ້ ສ້າງຄວາມສາມາດດ້ານລະບົບການຜະລິດກະສິກໍາທີ່ເປັນນະວັດຕະກໍາໃໝ່ ເຊິ່ງສຸມໃສ່ 5 ວຽກງານຫຼັກເຊັ່ນ: ການປູກເຂົ້າ, ການລ້ຽງປາໃສ່ນາເຂົ້າ, ການປູກຜັກປອດສານພິດ, ການລ້ຽງງົວ ແລະ ການລ້ຽງໝູ. ມີການຈັດຝຶກອົບຮົມໃຫ້ກັບ ພະນັກງານທີ່ມາຈາກຫຼາຍກົມ ພາຍໃນກະຊວງກະສິກໍາ ແລະ ປ່າໄມ້ ທັງໝົດ 15 ຄົນ ເພື່ອໃຫ້ກາຍເປັນຄູຝຶກ ແລະ ຝຶກອົບຮົມໃຫ້ກັບຜູ້ທໍາການຜະລິດອີກ 160 ຄົນ ກ່ຽວກັບການນໍາໃຊ້ ແລະ ການດັດປັບວິທີການຜະລິດທີ່ເປັນນະວັດຕະກໍາດັ່ງກ່າວ.

ອົງການ FAO ໄດ້ຊ່ວຍກະຊວງ ກະສິກໍາ ແລະ ປ່າໄມ້ ສ້າງຕັ້ງກົມນະໂຍບາຍ ແລະ ນິຕິກໍາຂຶ້ນມາໃໝ່ ເຊິ່ງໄດ້ຮັບການສະໜັບສະໜູນຢ່າງເຕັມທີ່ໃນການພັດທະນາ ຄວາມສາມາດ ໃນລະດັບສູນກາງ, ແຂວງ ແລະ ເມືອງ ລວມທັງການກະກຽມດໍາເນີນການຄົ້ນຄວ້າ ແລະ ເອກະສານດ້ານນະໂຍບາຍຕ່າງໆ. ກົມທີ່ຕັ້ງຂຶ້ນມາໃໝ່ນີ້ ຈະເຮັດໜ້າທີ່ຫຼັກ ໃນການສັງລວມບົດ ຄົ້ນຄວ້າ ແລະ ພັດທະນາບົດສັງລວມຫຍໍ້ ເພື່ອໃຫ້ຂໍ້ມູນກັບຜູ້ກໍານົດນະໂຍບາຍ.

ນອກຈາກນັ້ນ, ອົງການ FAO ຍັງໄດ້ສະໜັບສະໜູນ ກະຊວງກະສິກໍາ ແລະ ປ່າໄມ້ ສົ່ງເສີມການຜະລິດກະສິກໍາທີ່ປາດສະຈາກການນໍາໃຊ້ຢາປາບສັດຕູພືດ ໂດຍການສ້າງຕັ້ງໂຮງຮຽນຊາວນາ ແລະ ສ້າງຄວາມສາມາດ ໃນ 6 ແຂວງ ເຊິ່ງເປັນສ່ວນໜຶ່ງຂອງການປາບສັດຕູພືດແບບປະສົມປະສານ ແລະ ການສະໜັບສະໜູນ ການຮັກສາ ແລະ ການປູກ (Save & Grow) ໂດຍການເກັບຮັກສາປັດໃຈການຜະລິດກະສິກໍາໄວ້ ແລະ ສ້າງສະມັດຕະພາບການຜະລິດໃຫ້ສູງຂຶ້ນ. ການເກັບຮັກສາແນວພັນພືດໄວ້ ຈະຮັບປະກັນວ່າ ປະຊາຊົນສາມາດ ເຂົ້າເຖິງອາຫານທີ່ມີໂພສະນາການທີ່ດີໄດ້.

ເພື່ອສົ່ງເສີມຄວາມ ປອດໄພຂອງອາຫານ, ອົງການ FAO ໄດ້ສະໜັບສະໜູນ ກົມລ້ຽງ ສັດ ແລະ ການປະມົງ ທົດລອງສ້າງຕັ້ງກຸ່ມລ້ຽງໄກ່ແບບເປັນຕ່ອງ ໂສ້ ໃນແຂວງຫຼວງພະບາງ ໂດຍຊ່ວຍສ້າງຄວາມສາມາດກ່ຽວກັບຄວາມ ປອດ ໄພຈາກພະຍາດ ໃນການລ້ຽງໄກ່, ສ້າງຕັ້ງກຸ່ມຜະລິດລູກ ໄກ່ ນ້ອຍ, ກຸ່ມລ້ຽງໄກ່ ແລະ ການປຸງແຕ່ງແບບປອດໄພ.

ອົງການ UNICEF ແລະ WHO ໄດ້ຊ່ວຍເຫຼືອດ້ານວິຊາການ ແລະ ດ້ານການເງິນ ໃຫ້ກັບກະຊວງສາທາລະນະສຸກ ປັບປຸງຄວາມສາມາດຂອງ ພະນັກງານສາທາລະນະສຸກ ແລະ ຜູ້ບໍລິຫານ ເພື່ອຈັດຕັ້ງປະຕິບັດ ແລະ ຕິດຕາມການຈັດຕັ້ງປະຕິບັດໂຄງການດ້ານໂພສະນາການແບບສະເພາະ. ມີການສ້າງຂໍ້ແນະນໍາວ່າດ້ວຍການຄຸ້ມຄອງແບບປະສົມປະສານຕໍ່ກໍລະນີຂາດສານອາຫານ (IMAM) ສໍາລັບເດັກອາຍຸຕ່ຳກ່ວາ 5 ປີ ເພື່ອຊ່ວຍປັບປຸງຄວາມສາມາດຂອງພະນັກງານສາທາລະນະສຸກ ໃນການປິ່ນປົວເດັກທີ່ຂາດສານອາຫານຮຸນແຮງ. ຂະບວນການສ້າງ ຂໍ້ແນະນໍາ IMAM ສະບັບນີ້ ໄດ້ໃຊ້ເວລາເຖິງ 15 ເດືອນ ແລະ ມີພະນັກງານວິຊາການ ລວມທັງອາຈານວິທະຍາໄລສຸຂະພາບ, ໝໍເດັກຈາກໂຮງໝໍ ແລະ ສູນໂພສະນາການ ແລະ ພະນັກງານກະຊວງສາທາລະນະສຸກເຂົ້າຮ່ວມ. ນອກຈາກຈະມີຂໍ້ແນະນໍາອັນໃໝ່ແລ້ວ ຍັງມີການສ້າງເຄື່ອງມືຊ່ວຍໃນການເຮັດວຽກ ແລະ ການສື່ສານຂຶ້ນມານໍາອີກ ເຊິ່ງເປັນສ່ວນໜຶ່ງຂອງ IMAM. ເຄື່ອງມືນີ້ຈະຊ່ວຍສະໜັບສະໜູນ ພະນັກງານສາທາລະນະສຸກໃນການນໍາໃຊ້ ວິທີການປິ່ນປົວເດັກທີ່ຂາດສານອາຫານຮຸນແຮງໄດ້ດີຂຶ້ນ. ລັດຖະມົນຕີກະຊວງສາທາລະນະສຸກ ໄດ້ເຊັນຮັບຮອງເອົາຄູ່ມືແນະນໍາດັ່ງກ່າວ ໃນປີ 2018 ແລະ ໄດ້ແຕ່ງຕັ້ງຄູຝຶກຫຼັກ ຈໍານວນ 25 ທ່ານ. ຈະມີການທົດລອງ ການຝຶກກັບທີ່ຢູ່ບ່ອນເຮັດວຽກ ໃນແຂວງທີ່ຄັດເລືອກມາ ກ່ອນຈະສ້າງເປັນແຜນນໍາໃຊ້ທົ່ວປະເທດໃນປີ 2019. ກະຊວງສາທາລະນະສຸກ ຈະຂໍງົບປະມານຂອງລັດຖະບານໃຫ້ສູງຂຶ້ນ ເພື່ອໃຊ້ໃນການປິ່ນປົວກໍລະນີຂາດສານອາຫານຮຸນແຮງ.

ອົງການ WFP ໄດ້ສະໜອງອາຫານເສີມທາງໂພສະນາການ ໃຫ້ກັບເດັກອາຍຸລະຫວ່າງ 6 ຫາ 23 ເດືອນ ໃນ 1,100 ບ້ານ ໃນແຂວງອຸດົມໄຊ, ຫຼວງນ້ຳທາ ແລະ ເຊກອງ. ອາຫານເສີມທາງໂພສະນາການນີ້ ລວມເອົາຈຸນລະສານອາຫານທີ່ຈໍາເປັນ ເຊິ່ງໄດ້ແຈກຢາຍໃຫ້ກັບເດັກນ້ອຍ ເພື່ອປ້ອງກັນບໍ່ໃຫ້ເດັກມີຮ່າງກາຍເຕ້ຍ. ນອກນັ້ນ ຍັງມີການໂຄສະນາປູກຈິດສໍານຶກກ່ຽວກັບໂພສະນາການ ໃຫ້ກັບແມ່ຍິງຖືພາ, ແມ່ທີ່ກໍາລັງລ້ຽງລູກດ້ວຍນົມແມ່ ແລະ ຜູ້ເບິ່ງແຍງເດັກນ້ອຍ.

> **ອົງການ UNICEF ແລະ WHO ໄດ້ຊ່ວຍເຫຼືອດ້ານວິຊາການ ແລະ ດ້ານການເງິນໃຫ້ ກັບກະຊວງສາທາລະນະສຸກປັບປຸງຄວາມສາມາດຂອງ ພະນັກງານ ສາທາລະນະສຸກ ແລະ ຜູ້ບໍລິຫານ ເພື່ອຈັດຕັ້ງປະຕິບັດ ແລະ ຕິດຕາມການ ຈັດຕັ້ງປະຕິບັດ ໂຄງການ ດ້ານໂພສະນາການ ແບບສະເພາະ.**

ການເສີມທາດເຫຼັກ ແລະ ອາຊິດໂຟລິກ ໃຫ້ກັບແມ່ຍິງຖືພາ ແລະ ແມ່ທີ່ລ້ຽງລູກດ້ວຍນົມ ເປັນສ່ວນໜຶ່ງຂອງຊຸດກິດຈະກໍາສົ່ງເສີມສຸຂະພາບແບບປະສົມປະສານ. ມີການແຈກຢາຍ ທາດເຫຼັກ ແລະ ອາຊິດໂຟລິກ ໃຫ້ກັບແມ່ຍິງທີ່ເຂົ້າມາຝາກທ້ອງໃນໂຮງໝໍ ແລະ ສຸກສາລາ. ໜຶ່ງໃນບັນຫາສໍາຄັນ ທີ່ເຮັດໃຫ້ບໍ່ສາມາດບັນລຸເປົ້າການຢາຍທາດເຫຼັກ ແລະ ອາຊິດໂຟລິກໃຫ້ທົ່ວເຖິງໄດ້ນັ້ນ ແມ່ນຍ້ອນວິທີການບໍລິການດ້ານສາທາລະນະສຸກ. ມີຫຼາຍບ້ານບໍ່ສາມາດເຂົ້າເຖິງໄດ້ໃນລະດູຝົນ ເຮັດໃຫ້ທີມງານສາທາລະນະສຸກບໍ່ສາມາດເຂົ້າເຖິງ ບັນດາບ້ານທີ່ຢູ່ຫ່າງໄກສອກຫຼີກໄດ້ ສ້າງໃຫ້ມີຂໍ້ຈໍາກັດໃນການໃຫ້ບໍລິການທີ່ຈໍາເປັນຕໍ່ກັບສຸຂະພາບຂອງແມ່. ລະບົບຂໍ້ມູນສາທາລະນະສຸກຂອງເມືອງໄດ້ໃຫ້ຮູ້ວ່າ ແມ່ຍິງຖືພາທີ່ເຂົ້າມາຮັບບໍລິການຝາກທ້ອງທັງໝົດ ຈະໄດ້ຮັບທາດເຫຼັກ ແລະ ອາຊິດໂຟລິກເມືອນໍາ. ແຕ່ດັ່ງທີ່ກ່າວໄວ້ໃນທາງເທິງນັ້ນ ບໍ່ແມ່ນວ່າແມ່ຍິງທີ່ຖືພາ ຈະໄດ້ຮັບສານອາຫານເສີມດັ່ງກ່າວໝົດທຸກຄົນ ເນື່ອງຈາກຄວາມຫຍຸ້ງຍາກໃນການເຂົ້າເຖິງ. ຕົວຊີ້ວັດຂອງການເສີມທາດອາຫານ ຈະໄດ້ຖືກລວມເຂົ້າໃນການ ສໍາຫຼວດດັດຊະນີໝາຍສັງຄົມລາວ ໃນອະນາຄົດ. ເພື່ອປັບປຸງການຈັດຕັ້ງປະຕິບັດ ແລະ ການຕິດຕາມໂຄງການເສີມຈຸນລະສານອາຫານ ລວມທັງທາດເຫຼັກ ແລະ ອາຊິດໂຟລິກ ສໍາລັບແມ່ຍິງຖືພາ ແລະ ແມ່ທີ່ກໍາລັງລ້ຽງນົມລູກນັ້ນ, ອົງການ UNICEF ໄດ້ສະໜັບສະໜູນ ກະຊວງສາທາລະນະສຸກ ພັດທະນາຄູ່ມືແນະນໍາການເສີມຈຸນລະສານອາຫານຊຸດທໍາອິດ ເຊິ່ງໄດ້ຖືກຮັບຮອງໂດຍລັດຖະມົນຕີກະຊວງສາທາລະນະສຸກ ໃນເດືອນກໍລະກົດ. ປະຈຸບັນກໍກໍາລັງສ້າງແຜນການເຜີຍແຜ່ ເພື່ອນໍາໃຊ້ຄູ່ມືດັ່ງກ່າວ ໃນປີ 2019.

## ການສ້າງຫຼັກຖານເພື່ອການໂຄສະນາ, ການຕັດສິນໃຈ ແລະ ການປະສານງານ ສໍາລັບການຄ້ຳປະກັນສະບຽງອາຫານ ແລະ ໂພສະນາການ

ຫຼາຍອົງການໃນລະບົບ ສປຊ ໄດ້ຮ່ວມກັນສະໜັບສະໜູນ ກອງເລ

ຂາຂອງຄະນະກຳມະການໂພສະນາການແຫ່ງຊາດ ເພື່ອສ້າງຕັ້ງ ລະບົບເຝົ້າລະວັງດ້ານໂພສະນາການ ພ້ອມກັບວາງແຜນຈັດຕັ້ງປະຕິບັດ ໃນ ປີ 2019. ຫຼັງຈາກເລີ່ມນຳໃຊ້ລະບົບ ເຝົ້າລະວັງດ້ານໂພສະນາການນີ້, ຂໍ້ມູນຈະໄດ້ຮັບການສ້າງຂຶ້ນມາທຸກໆ 2 ຄັ້ງຕໍ່ປີ ເຊິ່ງລວມເອົາຫຼາຍຕົວຊີ້ຂອງຫຼາຍຂະແໜງການ ທີ່ຕິດພັນກັບການຄໍ້າປະກັນສະບຽງອາຫານ ແລະ ໂພສະນາການ. ຂໍ້ມູນດັ່ງກ່າວຈະຖືກນຳມາໃຊ້ສະໜັບສະໜູນ ຜູ້ເຮັດການຕັດສິນໃຈ ດັດປັບທິດທາງຂອງໂຄງການໃຫ້ຖືກຕ້ອງ ແລະ ເປັນຫຼັກຖານໃຫ້ກັບ ການໂຄສະນາກ່ຽວກັບການຄໍ້າປະກັນສະບຽງອາຫານ ແລະ ໂພສະນາການ.

ມີການເປີດໂຕ ຖານຂໍ້ມູນໂພສະນາການແຫ່ງຊາດ (NIPN) ເຊິ່ງຖືກອອກແບບມາເພື່ອ ດຶງເອົາຂໍ້ມູນທີ່ມີຢູ່ແລ້ວ ເຊັ່ນ: ຂໍ້ມູນຈາກການສຳຫຼວດຄົວເຮືອນ, ຂໍ້ມູນຂອງຂະແໜງການທີ່ເກັບເປັນປະຈຳ ແລະ ຂໍ້ມູນເຝົ້າລະວັງ ເພື່ອສ້າງເປັນຂໍ້ມູນຂ່າວສານສຳລັບການສົນທະນາດ້ານນະໂຍບາຍ ວ່າດ້ວຍການຄໍ້າປະກັນສະບຽງອາຫານ ແລະ ໂພສະນາການ. ການພັດທະນາ ລະບົບການເຝົ້າລະວັງດ້ານໂພສະນາການແບບຫຼາຍຂະແໜງການ ດັ່ງທີ່ກ່າວໄວ້ໃນທາງເທິງນັ້ນ ຈະກາຍເປັນແຫຼ່ງຂໍ້ມູນທີ່ສຳຄັນ.

ອົງການ WHO ໄດ້ສະໜັບສະໜູນ ການອອກແບບກະດານຂໍ້ມູນ[1] ເພື່ອສະແດງຕົວຊີ້ວັດໃນຂົງເຂດທີ່ສຳຄັນ ລວມທັງການເຂົ້າເຖິງການບໍລິການສຸຂະພາບແບບທົ່ວເຖິງ, ເປົ້າໝາຍການພັດທະນາແບບຍືນຍົງ ແລະ 10 ຕົວຊີ້ວັດຂອງສະພາແຫ່ງຊາດ ເຊິ່ງລວມມີເດັກທີ່ມີຮ່າງການເຕ້ຍ ແລະ ເດັກທີ່ຂາດສານອາຫານ. ກະດານຂໍ້ມູນ ຍັງໃຫ້ພາບລວມກ່ຽວກັບສະຖານະການໃນປະຈຸບັນ ແລະ ທ່າອ່ຽງໃນອະນາຄົດ ກັບຜູ້ບໍລິຫານ ແລະ ຜູ້ນຳ ເສີມເຂົ້າໃສ່ໃນບົດລາຍງານສະຖິຕິສຸຂະພາບແຫ່ງຊາດ. ຈະມີການຈັດຝຶກອົບຮົມຄືນ ໃໝ່ ຢູ່ໃນຂັ້ນສູນກາງ, ຂັ້ນແຂວງ ແລະ ຂັ້ນເມືອງ ກ່ຽວກັບການວິເຄາະ ແລະ ການນຳໃຊ້ຂໍ້ມູນ.

ອົງການ FAO ໄດ້ມີການແນະນຳທາງນະໂຍບາຍ ໃຫ້ກັບກະຊວງກະສິກຳ ແລະ ປ່າໄມ້ ແລະ ສະໜັບສະໜູນ ການປຶກສາຫາລືແບບຫຼາຍຂະແໜງການກ່ຽວກັບບັນຫາໂພສະນາການ. ນອກຈາກນັ້ນ ອົງການ FAO ຍັງເປັນປະທານຮ່ວມ ໜ່ວຍງານວິຊາການຫຼັກດ້ານກະສິກຳ ແລະ ການພັດທະນາຊົນນະບົດ ເຊິ່ງເຮັດໜ້າທີ່ເປັນຜູ້ປະສານງານຫຼັກ ເພື່ອອຳນວຍຄວາມສະດວກໃນການສົນທະນາທາງນະໂຍບາຍດ້ານກະສິກຳ, ການຄໍ້າປະກັນສະບຽງອາຫານ ແລະ ໂພສະນາການ.

## ບົດຮຽນທີ່ຖອດຖອນໄດ້ ແລະ ທິດທາງຕໍ່ໜ້າ

ໃນປີ 2019 ຈະມີການເປີດໂຕ ຊຸດບໍລິການເບິ່ງແຍງການຝາກທ້ອງໃນທົ່ວປະເທດ ແລະ ມີແຜນຈະປັບປຸງນະໂຍບາຍ ການເບິ່ງແຍງຫຼັງເກີດລູກ ເພື່ອແກ້ໄຂບັນຫາຊ່ອງຫວ່າງໃນການຕິດຕາມຫຼັງຈາກທີ່ແມ່ກັບເມືອເຮືອນ ໂດຍສະເພາະ ການສະໜັບສະໜູນການລ້ຽງລູກດ້ວຍນົມແມ່.

ເຖິງແມ່ນວ່າຈະມີການປັບປຸງໃນບາງຂົງເຂດຂອງທັກສະ ແລະ ຄວາມສາມາດຂອງພະນັກງານສາທາລະນະສຸກ ແລະ ຜູ້ບໍລິຫານສຸກສາລາ ໃນການວາງແຜນ, ຈັດຕັ້ງປະຕິບັດ ແລະ ການຕິດຕາມໂຄງການກ່ຽວກັບໂພສະນາການແບບສະເພາະກໍຕາມ, ຊ່ອງຫວ່າງດ້ານຄວາມສາມາດຂອງບຸກຄະລະກອນມະນຸດ ແມ່ນຍັງມີຫຼາຍຢູ່ ແລະ ລະບົບສາທາລະນະສຸກທີ່ຍັງບໍ່ທັນເຂັ້ມແຂງເປັນສິ່ງກີດຂວາງທີ່ສຳຄັນໃນການບໍລິການສຸຂະພາບ ແລະ ໂພສະນາການທີ່ມີຄຸນນະພາບ. ການ ປະສານງານລະຫວ່າງ ບັນດາກົມຕ່າງໆພາຍໃນກະຊວງສາທາລະນະສຸກ ເປັນບັນຫາໃຈກາງຂອງລະບົບການບໍລິການດ້ານສຸຂະພາບ ແລະ ໂພສະນາການທີ່ມີຄຸນນະພາບ ເນື່ອງຈາກວ່າ ພາລະບົດບາດຂອງກົມ ຍັງເປັນແບບກະແຈກກະຈາຍໃນທຸກລະດັບ. ຫຼາຍອົງ

1 www.hmis.gov.la/lao

> **ອົງການ WHO ໄດ້ສະໜັບສະໜູນ ການອອກແບບກະດານຂໍ້ມູນ ເພື່ອສະແດງ ຕົວຊີ້ວັດໃນຂົງເຂດທີ່ສຳຄັນ ລວມທັງ ການເຂົ້າເຖິງການບໍລິການສຸຂະພາບ ແບບທົ່ວເຖິງ, ເປົ້າໝາຍການພັດທະນາ ແບບຍືນຍົງ ແລະ 10 ຕົວຊີ້ວັດ ຂອງສະພາແຫ່ງຊາດ ເຊິ່ງລວມ ເອົາເດັກທີ່ມີ ຮ່າງການເຕ້ຍ ແລະ ເດັກທີ່ຂາດສານອາຫານ.**

ການໃນລະບົບ ສປຊ ທີ່ເຮັດວຽກການຄໍ້າປະກັນສະບຽງອາຫານ ແລະ ໂພສະນາການ ໄດ້ເຮັດວຽກຮ່ວມກັນພາຍໃຕ້ ຂອບການຮ່ວມມືລະຫວ່າງ ສປປ ລາວ ແລະ ອົງການ ສປຊ (2017-2021) ເພື່ອກຳນົດ ແລະ ແກ້ໄຂບັນຫາສິ່ງທ້າທາຍຂອງລະບົບສາທາລະນະສຸກຮ່ວມກັນ. ການພັດທະນາຄູ່ມືແນະນຳການຄຸ້ມຄອງ ແບບປະສົມປະສານຕໍ່ກໍລະນີຂາດສານອາຫານຮຸນແຮງ ແລະ ຄູ່ມືແນະນຳການເສີມຈຸລະສານອາຫານ ເປັນອີກຕົວຢ່າງໜຶ່ງຂອງຂອບການຮ່ວມມືນີ້ ເຊິ່ງໄດ້ຊ່ວຍອຳນວຍຄວາມສະດວກ ການລະດົມການຊ່ວຍເຫຼືອດ້ານວິຊາການ ແລະ ຊັບພະຍາກອນທາງການເງິນ ເພື່ອບັນລຸຜົນໄດ້ຮັບເຫຼົ່ານີ້.

ໃນປີ 2019 ອົງການ UNICEF ແລະ WHO ຈະໄດ້ສຸມໃສ່ ກຳນົດບັນຫາທີ່ຍັງຄົງຄ້າງຂອງລະບົບສາທາລະນະສຸກໂດຍການປະເມີນການໃຫ້ບໍລິການດ້ານສຸຂະພາບເດັກ. ຜົນໄດ້ຮັບ ຂອງການປະເມີນນີ້ ຈະໄດ້ຖືກນຳໃຊ້ໂດຍ ພະແນກສາທາລະນະສຸກ ແຂວງ ແລະ ຫ້ອງການສາທາລະນະສຸກເມືອງ ເພື່ອສ້າງເປັນແຜນ ປະຕິບັດງານໃຫ້ຜູ້ບໍລິຫານດ້ານສາທາລະນະສຸກໄດ້ນຳໃຊ້ ແລະ ຕິດ ຕາມ. ການປະເມີນການໃຫ້ບໍລິການດ້ານສຸຂະພາບເດັກ ຈະຊ່ວຍກຳນົດຂົງເຂດທີ່ສຳຄັນທີ່ຕ້ອງໄດ້ປັບປຸງໃຫ້ດີຂຶ້ນ ໃນການເບິ່ງແຍງເດັກ.

ເພື່ອຍົກລະດັບການເຂົ້າເຖິງໂພສະນາການໃຫ້ສູງຂຶ້ນນັ້ນ, ອົງການ WFP ໂດຍຜ່ານ ເຄືອຂ່າຍທຸລະກິດ SUN ແລະ ຄູ່ຮ່ວມພັດທະນາ ໄດ້ສະໜັບສະໜູນຄວາມພະຍາຍາມ ໃນການແກ້ໄຂບັນຫາ ຢູ່ທ້ອງຖິ່ນ ແລະ ການເຂົ້າເຖິງອາຫານທີ່ອຸດົມໄປດ້ວຍສານອາຫານໃນເຂດຊົນນະບົດຫ່າງໄກສອກຫຼີກ. ອົງການ WFP ຈະສືບຕໍ່ສະໜັບສະໜູນ ສູນໂພສະນາການແຫ່ງຊາດ ສ້າງແຜນດຳເນີນງານເພື່ອເພີ່ມວິຕະມິນແຮ່ທາດໃສ່ອາຫານ ເຊິ່ງມີເປົ້າໝາຍສົ່ງເສີມ ການບໍລິໂພກຈຸນລະສານອາຫານໃນທຸກຄົວເຮືອນ.

ເນື່ອງຈາກວ່າຂໍ້ມູນມີຄວາມສຳຄັນຫຼາຍ ໃນການຕັດສິນໃຈ, ໃນສົກປີ 2019-2020 ອົງການ FAO ຈະສະໜັບສະໜູນ ສູນສະຖິຕິແຫ່ງຊາດ ແລະ ກະຊວງກະສິກຳ ແລະ ປ່າໄມ້ ດຳເນີນການສຳຫຼວດກະສິກຳທົ່ວປະເທດຄັ້ງທີ 3 ເຊິ່ງຈະໃຫ້ຂໍ້ມູນທຽບຖານໃນການວາງແຜນຂະແໜງກະສິກຳໃນລະດັບຊາດ.

ພວກເຮົາຈະບໍ່ສາມາດວັດແທກຄວາມຄືບໜ້າໄດ້ ໂດຍປາດສະຈາກການຕິດຕາມ. ລະບົບເຝົ້າລະວັງໂພສະນາການແບບຫຼາຍຂະ ແໜງການໄດ້ຖືກອອກແບບມາ ເພື່ອຕອບສະໜອງຄວາມຕ້ອງການກອງເລຂາຄະນະກຳມະການໂພສະນາການແຫ່ງຊາດ ແລະ ຄູ່ຮ່ວມພັດທະນາ. ການສຳຫຼວດລະດັບຄົວເຮືອນ ເຊັ່ນ: ການສຳຫຼວດ ດັດຊະນີ

ໝາຍສັງຄົມລາວ ແລະ ການສຳຫຼວດການໃຊ້ຈ່າຍ ແລະ ການຊົມໃຊ້ຂອງຄົວເຮືອນ ໄດ້ສ້າງຂໍ້ມູນທີ່ມີຄຸນນະພາບສູງ, ແຕ່ດົນໆຈຶ່ງຈະໄດ້ເຮັດເທື່ອໜຶ່ງ ປົກກະຕິແມ່ນທຸກໆ 5 ປີ. ລະບົບຂໍ້ມູນຂອງຂະແໜງການທີ່ເກັບເປັນປະຈຳ ເຊັ່ນ: ລະບົບຂໍ້ມູນສາທາລະນະສຸກຂອງເມືອງ ແລະ ລະບົບຄຸ້ມຄອງຂໍ້ມູນການສຶກສາ ໄດ້ເກັບຂໍ້ມູນກ່ຽວກັບການບໍລິການທີ່ເກີດຂຶ້ນປະຈຳ ແຕ່ບໍ່ສາມາດເປັນຕົວແທນໃຫ້ກັບ ປະຊາກອນທັງໝົດໄດ້ ແລະ ມັກຈະບໍ່ສົມບູນ ເນື່ອງຈາກຄວາມຜິດພາດທີ່ເກີດຂຶ້ນຕາມສາຍການລາຍງານຂໍ້ມູນ. ຄວາມພະຍາຍາມແບບຮ່ວມກັນຂອງ ອົງການ ສປຊ ໃນການສະໜັບສະໜູນລັດຖະບານປັບປຸງການສ້າງ ແລະ ຕີຄວາມໝາຍຂໍ້ມູນ ເພື່ອນຳໃຊ້ໃນການສົນທະນາດ້ານນະໂຍບາຍ ແລະ ສ້າງແຜນງານຄ້ຳປະກັນສະບຽງອາຫານ ແລະ ໂພສະນາການໃຫ້ດີຂຶ້ນນັ້ນ ເປັນການປະກອບສ່ວນທີ່ສຳຄັນເຂົ້າໃນເປົ້າໝາຍລວມຂອງ ການຫຼຸດຜ່ອນການຂາດສານອາຫານທຸກຮູບແບບ. ບາດກ້າວຕໍ່ໄປແມ່ນ ການນຳໃຊ້ລະບົບເຝົ້າລະວັງດ້ານໂພສະນາການແບບຫຼາຍຂະແໜງການ ແລະ ສ້າງຜົນໄດ້ຮັບທາງນະໂຍບາຍ ຈາກຖານຂໍ້ມູນໂພສະນາການແຫ່ງຊາດ ເພື່ອໃຫ້ຄະນະກຳມະການໂພສະນາການແຫ່ງຊາດໄດ້ນຳເອົາໄປພິຈາລະນາ.

ຄວາມເຂົ້າໃຈໃນການນຳໃຊ້ຂໍ້ມູນໃນລະດັບສູນກາງ ແມ່ນຂ້ອນຂ້າງດີແລ້ວ ແຕ່ໃນລະດັບແຂວງ ແລະ ເມືອງແມ່ນຍັງມີຈຳກັດຢູ່. ນອກຈາກນັ້ນ ກໍຍັງມີຊ່ອງຫວ່າງດ້ານຄວາມຮູ້ກ່ຽວກັບການນຳໃຊ້ຄອມພິວເຕີ, ດ້ານພື້ນຖານໂຄ່ງລ່າງ ແລະ ການຄອບຄຸມຂອງອິນເຕີເນັດທີ່ຍັງບໍ່ທັນທົ່ວເຖິງ. ອີກອັນໜຶ່ງ ກົນໄກການສະໜັບສະໜູນ ຈາກສູນກາງຫາຂັ້ນແຂວງ ແລະ ຂັ້ນແຂວງລົງສູ່ຂັ້ນເມືອງ ກໍຍັງເປັນບັນຫາສິ່ງທ້າທາຍຢູ່. ເພື່ອເອົາຊະນະຕໍ່ກັບບັນຫາເຫຼົ່ານີ້ ຍຸດທະສາດສາທາລະນະສຸກແບບອີເລັກໂຕຼນິກ ກຳລັງຖືກຮ່າງຂຶ້ນມາ ເຊິ່ງຈະນຳໃຊ້ເປັນເຄື່ອງມືອັນໜຶ່ງ ເພື່ອປັບປຸງ ແລະ ແກ້ໄຂຊ່ອງຫວ່າງເຫຼົ່ານີ້ ໃນ 5 ປີ ຂ້າງໜ້າ.

ໂດຍປະຕິບັດຕາມວິທີການແບບລວງດຽວຂອງລັດຖະບານໃນວຽກໂພສະນາການນັ້ນ, ໃນປີ 2019 ອົງການ IFAD ຈະສືບຕໍ່ສະໜັບສະໜູນ ການພັດທະນາໂຄງການຜະລິດກະສິກຳຕົວແບບດ້ານການປ່ຽນແປງດິນຟ້າອາກາດ ແລະ ປັບປຸງການຜະລິດອາຫານໃນຄົວເຮືອນ, ຄຸນນະພາບຂອງອາຫານສຳລັບກຸ່ມຄົນທີ່ຂາດໂພສະນາການ ແລະ ການບໍລິໂພກອາຫານສຳລັບເດັກກ່ອນໄວຮຽນ ແລະ ນັກຮຽນໃນ 4 ແຂວງ ເປົ້າໝາຍ.

# ໂພສະນາການ

ການສຳຫຼວດດັດຊະນີໝາຍສັງຄົມລາວ ຄັ້ງທີ II ປີ 2017

## ເຕ້ຍ (ຕ່ຳ ເມື່ອທຽບໃສ່ອາຍຸ)

ອັດຕາສ່ວນຂອງເດັກອາຍຸຕ່ຳກ່ວາ 5 ປີ ທີ່ມີຮ່າງກາຍເຕ້ຍ ໄດ້ຫຼຸດລົງ:




ອີງຕາມ ອົງການອະນາໄມໂລກ, ຖ້າອັດຕາສ່ວນຮ້ອຍຂອງເດັກທີ່ມີຮ່າງກາຍເຕ້ຍ ມີຮອດ 40% ຫຼື ສູງກ່ວາ ຈະຖືວ່າມີບັນຫາດ້ານສຸຂະພາບທີ່ໜ້າເປັນຫ່ວງ.




**8 ໃນ 18 ແຂວງ** ມີອັດຕາສ່ວນຂອງເດັກທີ່ມີຮ່າງກາຍເຕ້ຍຂ້ອນຂ້າງສູງ ໃນປີ 2017, ທຽບໃສ່ປີ 2011 ແມ່ນມີ 13 ແຂວງ (ໃນທັງໝົດ 17 ແຂວງ).

ເດັກນ້ອຍໃນເຂດຊົນນະບົດບໍ່ມີເສັ້ນທາງເຂົ້າເຖິງ ທີ່ແມ່ຂອງພວກເຂົາບໍ່ມີການສຶກສາ ແລະ ມາຈາກກຸ່ມຄົນທຸກຍາກທີ່ສຸດນັ້ນ ມີໂອກາດທີ່ຈະມີຮ່າງກາຍເຕ້ຍ ຫຼາຍກ່ວາເດັກນ້ອຍໃນຕົວເມືອງ ທີ່ແມ່ມີລະດັບການສຶກສາທີ່ສູງກ່ວາ ແລະ ມາຈາກຄອບຄົວທີ່ຮັ່ງມີ **ປະມານ 3 ເທື່ອ**.




## ຈ່ອຍຜອມ (ນ້ຳໜັກໜ້ອຍ ເມື່ອທຽບໃສ່ລວງສູງ)

ອັດຕາສ່ວນຂອງເດັກນ້ອຍອາຍຸຕ່ຳກ່ວາ5ປີ ທີ່ມີຮ່າງກາຍຈ່ອຍຜອມ ຫຼື ຂາດສານອາຫານຮຸນແຮງ (ນ້ຳໜັກໜ້ອຍ ເມື່ອທຽບໃສ່ລວງສູງ) ໄດ້ຫຼຸດລົງໜ້ອຍໜຶ່ງ ລະຫວ່າງປີ 2015 (ການປະເມີນກ່ຽວກັບຮ່າງກາຍຂອງເດັກນ້ອຍລາວ) ແລະ ປີ 2017.






**6 ໃນ 18 ແຂວງ** ໄດ້ສະແດງໃຫ້ເຫັນການເພີ່ມຂຶ້ນຂອງອັດຕາສ່ວນຮ້ອຍ ຂອງເດັກອາຍຸຕ່ຳກ່ວາ 5 ປີ ທີ່ມີການຂາດສານອາຫານຮຸນແຮງ (ນ້ຳໜັກໜ້ອຍ ເມື່ອທຽບໃສ່ລວງສູງ).




# 7. ການພັດທະນາສະຖາບັນ

# ສະຖາບັນ ແລະ ນະໂຍບາຍທີ່ເຂັ້ມແຂງ ທັງໃນ ລະດັບຊາດ ແລະ ທ້ອງຖິ່ນ ໃຫ້ການ ສະໜັບສະໜູນ ການບໍລິການ ທີ່ມີຄຸນນະພາບ ທີ່ຕອບສະໜອງ ຕໍ່ກັບ ຄວາມຕ້ອງການ ຂອງປະຊາຊົນໄດ້ດີຂຶ້ນ





## ທ່າອ່ຽງການພັດທະນາຕົ້ນຕໍ

| ຕົວຊີ້ວັດ | ຂໍ້ມູນທຽບຖານ | ຄາດໝາຍ | ສະຖານະການປະຈຸບັນ |
|---|---|---|---|
| 7.1. ຈຳນວນຄົວເຮືອນໃໝ່ ທີ່ໄດ້ຮັບການບໍລິການພື້ນຖານຈາກເມືອງຂອງພວກເຂົາ ຢ່າງໜ້ອຍ 2 ຊະນິດ ຫຼື ຫຼາຍກ່ວາ | 373,948 (2015) | 600,000 (2021) | 386,115 (ຄາດຄະແນໃນ ປີ 2018) |
| 7.2. ອັດຕາສ່ວນຮ້ອຍຂອງຄະແນນຄວາມມີປະສິດທິຜົນຂອງລັດຖະບານໂດຍລວມ | 39.4% (2014) | 45% (2021) | 38.46% (2016) |
| 7.3. ຜົນຈາກການຕິດຕາມແຜນພັດທະນາເສດຖະກິດ – ສັງຄົມແຫ່ງຊາດ ທີ່ໄດ້ນຳໃຊ້ເຂົ້າໃນການກຳນົດນະໂຍບາຍທີ່ອີງໃສ່ຫຼັກຖານ | ຂ້ອນຂ້າງຈຳກັດ (2015) | ຢູ່ໃນລະດັບດີ (2021) | ເຖິງແມ່ນວ່າ ສູນສະຖິຕິແຫ່ງຊາດ ກຳລັງຈັດຕັ້ງປະຕິບັດແຜນດຳເນີນງານຂອງຕົນເອງກໍຕາມ, ແຕ່ເວັບໄຊ໋ LaoInfo ບໍ່ໄດ້ສືບຕໍ່ນຳໃຊ້ ແລະ ຫຼາຍກະຊວງກໍສະໜອງຂໍ້ມູນ ຕົວຊີ້ວັດທີ່ຢູ່ໃນ ແຜນ 8 ຢ່າງຈຳກັດ |

ໂດຍປະຕິບັດຕາມທິດຊີ້ນຳ ຈາກກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດຂອງພັກຄັ້ງທີ 10 ໃນເດືອນມັງກອນ 2016 ເຮັດໃຫ້ມີຄວາມພະຍາຍາມທີ່ເປັນຈຸດສຸມທີ່ຫຼາຍຂຶ້ນໃນການບູລະນະການປົກຄອງ. ນະໂຍບາຍ 3 ສ້າງ ໄດ້ສືບຕໍ່ເປັນ ແນວທາງອັນສຳຄັນ ໃນການແບ່ງຂັ້ນຄຸ້ມຄອງ ແລະ ປັບປຸງໂຄງຮ່າງຂອງລັດຖະບານ, ການບໍລິຫານລັດ ແລະ ກົດໝາຍ ທັງໃນລະດັບສູນກາງ ແລະ ທ້ອງຖິ່ນ ເພື່ອເສີມຂະຫຍາຍການບໍລິການໃຫ້ກັບປະຊາຊົນ ແລະ ການຫຼຸດຜ່ອນຄວາມທຸກຍາກ. ໃນປີ 2018 ລັດຖະບານ ໄດ້ສ້າງຕັ້ງ ຄະນະກຳມະການລະຫວ່າງກະຊວງ (Inter-Ministerial Committee) ນຳໂດຍກະຊວງແຜນການ ແລະ ການລົງທຶນ, ກະຊວງການເງິນ ແລະ ກະຊວງພາຍໃນ ເຊິ່ງຈະໄດ້ຜັນຂະຫຍາຍຂະບວນການແບ່ງຂັ້ນຄຸ້ມຄອງ ແລະ ເສີມສ້າງການວາງແຜນ, ການຈັດສັນງົບປະມານ ແລະ ການບໍລິຫານໃນລະດັບທ້ອງຖິ່ນໃຫ້ເຂັ້ມແຂງ ເພື່ອໃຫ້ບໍລິການປະຊາຊົນໄດ້ດີຂຶ້ນກ່ວາເກົ່າ.

ອີງຕາມການປະເມີນໂຄງຮ່າງການຈັດຕັ້ງຂອງລັດຖະບານ ໂດຍກະຊວງພາຍໃນ ເຮັດໃຫ້ມີການໂຮມເອົາບັນດາໜ້າທີ່ຕ່າງໆທີ່ຄ້າຍກັນແຕ່ຢູ່ໃນຫຼາຍກະຊວງເຂົ້າເປັນອັນດຽວກັນ ແລະ ໜ້າທີ່ບາງອັນທີ່ຢູ່ກັບສຳນັກງານນາຍົກມາກ່ອນ ໄດ້ຖືກມອບໝາຍໃຫ້ກັບບັນດາກະຊວງຄືນໃໝ່. ອີງຕາມ ດຳລັດນາຍົກລັດຖະມົນຕີ ເລກທີ 03 / ນຍ, ບັນດາກະຊວງ ແລະ ອົງການຈັດຕັ້ງຂອງລັດ ໄດ້ຮັບການຊຸກຍູ້ ໃຫ້ປັບປຸງໂຄງຮ່າງການຈັດຕັ້ງ ແລະ ລາຍລະອຽດໜ້າວຽກຂອງຕົນໃຫ້ດີຂຶ້ນ.

ເວັບໄຊ໌ LaoInfo ເຊິ່ງເປັນເວທີຫຼັກໃນການເຜີຍແຜ່ຂໍ້ມູນສະຖິຕິໃນຜ່ານມາ ບໍ່ໄດ້ສືບຕໍ່ນຳໃຊ້ ຫຼັງຈາກການຢຸດເຊົາການສະໜັບສະໜູນ ຕໍ່ກັບ ແພຼດຟອມ DevInfo ໃນທົ່ວໂລກ. ສູນສະຖິຕິແຫ່ງຊາດກຳລັງຊອກຫາວິທີປ່ຽນແທນ LaoInfo ແລະ ເຄື່ອນຍ້າຍຂໍ້ມູນເຂົ້າສູ່ລະບົບໃໝ່.

## ຜົນໄດ້ຮັບ

### ປັບປຸງການເຂົ້າເຖິງການບໍລິການຂັ້ນພື້ນຖານ ທີ່ຕອບສະໜອງຕໍ່ກັບຄວາມຕ້ອງການຂອງປະຊາຊົນໄດ້ດີຂຶ້ນ

ອົງການ UNDP ແລະ UNCDF ໄດ້ສືບຕໍ່ໃຫ້ການສະໜັບສະໜູນການຜັນຂະຫຍາຍນະໂຍບາຍສາມສ້າງ ເພື່ອປັບປຸງການເຂົ້າເຖິງ ການບໍລິການຂັ້ນພື້ນຖານທີ່ຕອບສະໜອງຕໍ່ກັບຄວາມຕ້ອງການຂອງປະຊາຊົນໄດ້ດີຂຶ້ນ. ກອງທຶນພັນທະນາເມືອງ ມີຄວາມສອດຄ່ອງກັບນະໂຍບາຍການພັດທະນາສາມສ້າງຫຼາຍຂຶ້ນ ແລະ ກອງທຶນດັ່ງກ່າວກໍໄດ້ຖືກເຊື່ອມສານເຂົ້າໃນການວາງແຜນລະດັບຊາດ ແລະ ລະບົບການເງິນໃນຂັ້ນທ້ອງຖິ່ນ. ນອກຈາກນັ້ນ ຍັງມີການນຳໃຊ້ຂະບວນການ ແລະ ຮູບແບບການປະຕິບັດໃໝ່ ເພື່ອສ້າງຄວາມໂປ່ງໃສ ແລະ ຄວາມຮັບຜິດຊອບໃຫ້ສູງຂຶ້ນ ໃນເວລາໂອນເງິນໃຫ້ກັບບັນດາເມືອງຜ່ານລະບົບຄັງເງິນແຫ່ງຊາດ. ຄະນະກຳມະການລະຫວ່າງກະຊວງມີການຕິດຕາມຄວບຄຸມ ການເຊື່ອມສານເອົາກອງທຶນພັດທະນາເມືອງ ເຂົ້າໃນລະບົບຂອງຊາດ ພ້ອມທັງການຈັດຕັ້ງປະຕິບັດ. ຄະນະ ກຳມະການລະຫວ່າງກະຊວງ ຍັງໄດ້ຄັດເລືອກເອົາ ທັງໝົດ 12 ໂຄງການ ຕິດພັນກັບການບໍລິການໃນລະດັບທ້ອງຖິ່ນ ເພື່ອຈັດຕັ້ງປະຕິບັດໃນປີ 2019.

ອົງການ UNDP ໄດ້ສະໜັບສະໜູນ ການບູລະນະການປົກຄອງຂອງລັດ ໂດຍເສີມຂະຫຍາຍຂອບເຂດຄວາມຮັບຜິດຊອບ ລວມທັງຊ່ອງທາງໃນການໃຫ້ຄຳຄິດເຫັນຂອງປະຊາຊົນກ່ຽວກັບການບໍລິການຂອງລັດ ເຂົ້າໃນຂະບວນການຕັດສິນໃຈໃນລະດັບທ້ອງຖິ່ນ. ມີການສ້າງຂອບວຽກການໃຫ້ບໍລິການແບບປະຕູດຽວ ແລະ ອີງໃສ່ຂອບວຽກດັ່ງກ່າວ ເລືອກເອົາສູນບໍລິການຕົວແບບ ໃນ 2 ແຂວງ. ນອກຈາກນັ້ນ ຍັງມີການຍົກລະດັບ ລະບົບຕິດຕາມການໃຫ້ບໍລິການຂອງເມືອງ ແລະ ການສຳຫຼວດຄວາມຄິດເຫັນຂອງຜູ້ໃຊ້ບໍລິການ ທີ່ໄດ້ເລີ່ມທົດລອງໃນ ປີ 2015 ໂດຍຜ່ານການປຶກສາຫາລືກັບພາກສ່ວນກ່ຽວຂ້ອງ ແລະ ການໝູນໃຊ້ບົດຮຽນທີ່ຖອດຖອນໄດ້. ລະບົບຕິດຕາມທີ່ດີຂຶ້ນນີ້ ຈະໄດ້ຖືກນຳໃຊ້ເຂົ້າໃນການປະເມີນການປະຕິບັດວຽກງານຂອງເມືອງ ເປັນປະຈຳແບບປົກກະຕິ. ການສຳຫຼວດຄວາມຄິດເຫັນຂອງຜູ້ໃຊ້ບໍລິການ ຈະຊ່ວຍເກັບກຳ, ສັງລວມ ແລະ ບັນທຶກຄວາມຮັບຮູ້ ແລະ ຄວາມເຂົ້າໃຈຂອງປະຊາຊົນ ຕໍ່ກັບການບໍລິການຂອງເມືອງ ອີງໃສ່ແຜນການໃຊ້ຈ່າຍຂອງເມືອງ.

ນອກຈາກນັ້ນ, ອົງການ UNDP ຍັງໄດ້ສະໜັບສະໜູນ ວຽກງານການປັບປຸງການບໍລິການລັດ ເພື່ອສົ່ງເສີມວິທີການແບບມີສ່ວນຮ່ວມຫຼາຍຂຶ້ນ ໃນການບໍລິການຂອງລັດໃນຂັ້ນທ້ອງຖິ່ນ. ວຽກງານດັ່ງກ່າວມີຈຸດປະສົງ ເພື່ອເສີມຂະຫຍາຍ ການຮ່ວມມືຂອງອຳນາດການປົກຄອງທ້ອງຖິ່ນ ໃນທຸກຂະແໜງການ ລວມທັງອົງການຈັດຕັ້ງທາງສັງຄົມ ແລະ ພາກເອກະຊົນ. ກະຊວງພາຍໃນ, ການຊວງແຜນການ ແລະ ການລົງທຶນ ແລະ ກະຊວງການເງິນ ພ້ອມທັງຄູ່ຮ່ວມພັດທະນາໄດ້ແຕ່ງຕັ້ງສະມາຊິກເຂົ້າໄປຢູ່ໃນ ຄະນະກຳມະການຮັບຜິດຊອບວຽກງານປັບປຸງການບໍລິການລັດ ທີ່ຫາກໍສ້າງຕັ້ງຂຶ້ນໃໝ່ນີ້.

> **ອົງການ UNDP ແລະ UNCDF ໄດ້ສືບຕໍ່ໃຫ້ການສະໜັບ ສະໜູນ ການຜັນຂະຫຍາຍ ນະໂຍບາຍສາມສ້າງ ເພື່ອປັບປຸງການເຂົ້າເຖິງ ການບໍລິການຂັ້ນພື້ນຖານ ທີ່ຕອບສະໜອງ ຕໍ່ກັບຄວາມຕ້ອງການຂອງປະຊາຊົນໄດ້ດີຂຶ້ນ. ກອງທຶນພັນທະນາເມືອງ ມີຄວາມສອດຄ່ອງ ກັບນະໂຍບາຍການພັດທະນາ ສາມສ້າງ ຫຼາຍຂຶ້ນ ແລະ ກອງທຶນດັ່ງກ່າວກໍໄດ້ຖືກ ເຊື່ອມສານເຂົ້າໃນການວາງແຜນລະດັບຊາດ ແລະ ລະບົບການເງິນໃນຂັ້ນທ້ອງຖິ່ນ.**

### ສ້າງຄວາມເຂັ້ມແຂງໃນການເກັບກຳ ແລະ ການຄຸ້ມຄອງຂໍ້ມູນ ເພື່ອກຳນົດນະໂຍບາຍທີ່ອີງໃສ່ຫຼັກຖານ

ຂະບວນການວາງແຜນ ແລະ ການລາຍງານລະດັບຊາດ ໄດ້ຮັບການປັບປຸງຢ່າງຫຼວງຫຼາຍ. ການທົບທວນກາງສະໄໝ ແຜນພັດທະນາເສດຖະກິດ – ສັງຄົມແຫ່ງຊາດ ຄັ້ງທີ VIII ໂດຍການສະໜັບສະໜູນ ຂອງອົງການ UNDP ໄດ້ສະແດງໃຫ້ເຫັນຜົນໄດ້ຮັບທີ່ສຳ ຄັນ ແລະ ໃຫ້ຂໍ້ສະເໜີແນະຫຼາຍອັນສຳລັບໄລຍະເວລາທີ່ເຫຼືອຂອງການຈັດຕັ້ງປະຕິບັດແຜນດັ່ງກ່າວ ແລະ ການສ້າງແຜນພັດທະນາ ເສດຖະກິດ – ສັງຄົມແຫ່ງຊາດ ຄັ້ງທີ IX. ການທົບທວນ ໄດ້ດຳເນີນໂດຍຜ່ານການປຶກສາຫາລືຢ່າງກ້ວາງຂວາງ ແລະ ການເຂົ້າຮ່ວມຂອງພາກສ່ວນກ່ຽວຂ້ອງຈາກທັງພາກລັດ ແລະ ສາກົນ. ສະນັ້ນ, ຂະບວນການ ແລະ ວິທີການທົບທວນຄືນ ພ້ອມກັບການກະກຽມແຜນແຫ່ງຊາດມີໂຄງສ້າງທີ່ດີຂຶ້ນ ພາຍໃຕ້ແນວຄວາມຄິດ ການຄຸ້ມຄອງທີ່ເນັ້ນໃສ່ຜົນໄດ້ຮັບ.

ຫຼາຍອົງການໃນລະບົບ ສປຊ ໄດ້ສືບຕໍ່ສະໜັບສະໜູນການສ້າງຄວາມເຂັ້ມແຂງໃນລະດັບຊາດ ສຳລັບການເກັບກຳ ແລະ ຄຸ້ມຄອງຂໍ້ມູນ ເພື່ອການກຳນົດນະໂຍບາຍທີ່ອີງໃສ່ຫຼັກຖານ. ການສຳຫຼວດລະດັບຊາດ ໂດຍການສະໜັບສະໜູນຈາກ ອົງການ ສປຊ ເຊັ່ນ: ການສຳຫຼວດ ກຳລັງແຮງງານຄັ້ງທີ II ໃນ ສປປ ລາວ (ສະໜັບສະໜູນຈາກອົງການ ILO) ແລະ ການສຳຫຼວດດັດຊະນີໝາຍສັງຄົມລາວ (ສະໜັບສະໜູນຈາກອົງການ UNICEF) ໄດ້ຊ່ວຍປັບປຸງຂໍ້ມູນ

ການພັດທະນາທີ່ສຳຄັນຫຼາຍອັນ ເປັນການປະກອບສ່ວນເຂົ້າໃນການສ້າງບົດລາຍງານແຫ່ງຊາດແບບສະໝັກໃຈ ກ່ຽວກັບການ ຈັດຕັ້ງປະຕິບັດ ເປົ້າໝາຍການພັດທະນາແບບຍືນຍົງ ຂອງ ສປປ ລາວ, ການທົບທວນກາງສະໄໝ ແຜນພັດທະນາເສດຖະກິດ – ສັງຄົມແຫ່ງຊາດຄັ້ງທີ VIII ແລະ ຜົນສຳເລັດອື່ນໆຂອງການພັດທະນາ. ຜົນໄດ້ຮັບຂອງການສຳຫຼວດທັງສອງອັນ ໄດ້ຮັບການເຜີຍແຜ່ໃນປີ 2018.

ຜົນໄດ້ຮັບຂອງການສຳຫຼວດກຳລັງແຮງງານ ປີ 2017 ໄດ້ລະບຸເອົາບັນຫາສິ່ງທ້າທາຍ ທີ່ແຮງງານກຳລັງພົບພໍ້ຢູ່ ໂດຍສະເພາະແມ່ນແຮງງານທີ່ຢູ່ໃນເຂດຊົນນະບົດ ລວມທັງກິດຈະກຳການຜະລິດ ເພື່ອຊົມໃຊ້ເອງ ເຊິ່ງມີຄົນຈຳນວນຫຼາຍກຳລັງດຳເນີນຢູ່. ການສຳຫຼວດ ໄດ້ນຳສະເໜີແນວຄວາມຄິດໃໝ່ກ່ຽວກັບການເຮັດວຽກ, ການຈ້າງງານ ແລະ ການໃຊ້ແຮງງານທີ່ຍັງບໍ່ທັນໄດ້ຕາມທ່າແຮງທີ່ມີ ເຊິ່ງແນວຄວາມຄິດດັ່ງກ່າວ ໄດ້ຖືກຮັບຮອງ ທີ່ກອງປະຊຸມສາກົນວ່າດ້ວຍນັກສະຖິຕິດ້ານແຮງງານຄັ້ງທີ 19 ໃນປີ 2013 ແລະ ໄດ້ໃຫ້ທັດສະນະຄະຕິອັນໃໝ່ໆ ກ່ຽວກັບຕະຫຼາດແຮງງານໃນປະເທດ. ຄວາມແຕກຕ່າງອັນສຳຄັນ ຈາກການສຳຫຼວດທີ່ຜ່ານມາ ໃນປີ 2010 ແມ່ນ: ຄົນທີ່ເຮັດການຜະລິດແບບກຸ້ມຢູ່ກຸ້ມກິນ (ສ່ວນໃຫຍ່ແມ່ນເພື່ອຊົມໃຊ້ເອງພຽງຢ່າງດຽວ ໃນຊ່ວງໄລຍະເວລາອ້າງອີງ) ຈະຖືວ່າເປັນກຸ່ມຄົນທີ່ບໍ່ໄດ້ຢູ່ໃນການຈ້າງງານ ແຕ່ໄດ້ຖືກຈັດປະເພດອອກມາຢູ່ນອກກຳລັງແຮງງານ ໃນການສຳຫຼວດໃນປະຈຸບັນ.

ການສຳຫຼວດດັດຊະນີໝາຍສັງຄົມລາວ ຄັ້ງທີ II ແມ່ນການສຳຫຼວດຄົວເຮືອນທົ່ວປະເທດ ເຊິ່ງມີຕົວຢ່າງເຖິງ 23,400 ຄົວເຮືອນ ແລະ ກວມເອົາທັງໝົດ 18 ແຂວງ. ການສຳຫຼວດນີ້ ແມ່ນປະຕິບັດ ຕາມການສຳຫຼວດຫຼາຍກຸ່ມຕົວຊີ້ວັດໃນທົ່ວໂລກຄັ້ງທີ 6 ເພື່ອສ້າງຂໍ້ມູນວັດແທກ ຄວາມຄືບໜ້າການຈັດຕັ້ງປະຕິບັດເປົ້າໝາຍການພັດທະນາແບບຍືນຍົງ. ການສຳຫຼວດໄດ້ລວມເອົາຂໍ້ມູນກ່ຽວກັບຄົວເຮືອນ, ແມ່ຍິງອາຍຸລະຫວ່າງ 15-49 ປີ, ຜູ້ຊາຍອາຍຸລະຫວ່າງ 15-49 ປີ, ເດັກນ້ອຍອາຍຸລະຫວ່າງ 5-17 ປີ, ເດັກນ້ອຍອາຍຸຕ່ຳກວ່າ 5 ປີ (ໂດຍຜ່ານການສຳພາດແມ່ ຫຼື ຜູ້ເບິ່ງແຍງ) ລວມທັງການວັດແທກຂະໜາດຂອງເດັກ, ການທົດສອບຄຸນນະພາບຂອງແຫຼ່ງນ້ຳໃຊ້ ແລະ ນ້ຳກິນຂອງຄົວເຮືອນ. ນອກຈາກນັ້ນ ການສຳຫຼວດຍັງໄດ້ເຈາະຈົງເອົາຂໍ້ມູນກ່ຽວກັບ ການເອົາລູກອອກ ແລະ ການກວດເບິ່ງພະຍາດເລືອດຈາງຂອງເດັກອາຍຸ 6-59 ເດືອນ ແລະ ແມ່ຍິງອາຍຸລະຫວ່າງ 15-49 ປີ. ຜົນຂອງການສຳຫຼວດໄດ້ສະແດງໃຫ້ເຫັນ ຄວາມຄືບໜ້າອັນສຳຄັນ ໃນຫຼາຍຂົງເຂດຂອງການເປັນຢູ່ທີ່ດີ ເຊັ່ນ: ອັດຕາການຕາຍຂອງເດັກ, ເດັກທີ່ມີຮ່າງກາຍເຕ້ຍ, ການເກີດລູກກັບແພດທີ່ຊຳນານງານ, ນ້ຳໃຊ້ ແລະ ສຸຂາພິບານ, ການເຂົ້າຮຽນຊັ້ນປະຖົມ ແລະ ຍັງລວມທັງການຫຼຸດຜ່ອນການນຳໃຊ້ຄວາມຮຸນແຮງຕໍ່ກັບເດັກນ້ອຍ. ແຕ່ເຖິງຢ່າງໃດກໍຕາມ ມັນຍັງມີຄວາມແຕກໂຕນກັນຫຼາຍຢູ່ ລະຫວ່າງຄົວເຮືອນທີ່ຢູ່ໃນເຂດພູມສັນຖານທີ່ແຕກຕ່າງກັນ, ລະຫວ່າງຄົວເຮືອນໃນເຂດຊົນນະບົດ ແລະ ຕົວເມືອງ, ລະຫວ່າງຄົວເຮືອນທີ່ລະດັບຄວາມຮັ່ງມີ ແລະ ລະດັບການສຶກສາຂອງແມ່ແຕກຕ່າງກັນ ແລະ ລະຫວ່າງຊົນເຜົ່າທີ່ແຕກຕ່າງກັນ.

ອົງການ UNFPA ໄດ້ສະໜັບສະໜູນ ສູນສະຖິຕິແຫ່ງຊາດເຮັດການວິເຄາະແບບລົງເລິກ ໃນຫົວຂໍ້ ທີ່ເລືອກມາ ເພື່ອຂຽນເປັນບົດຄວາມ ໂດຍນຳໃຊ້ຂໍ້ມູນຈາກການສຳຫຼວດດັດຊະນີໝາຍສັງຄົມ ລາວ ແລະ ຂໍ້ມູນການສຳຫຼວດປະຊາ ກອນທົ່ວປະເທດ. ນີ້ເປັນຄັ້ງທຳອິດທີ່ມີການເກັບກຳຂໍ້ມູນ ການເອົາ ລູກອອກ ຈຶ່ງເປັນການໃຫ້ຫຼັກຖານທີ່ດີໃນການສ້າງນະໂຍບາຍ, ຍຸດທະສາດ ແລະ ໂຄງການ ເພື່ອຫຼຸດຜ່ອນຄວາມສ່ຽງທີ່ຕິດພັນກັບການ ເອົາລູກອອກແບບບໍ່ປອດໄພ, ຄວາມເຈັບເປັນ ແລະ ການຕາຍຂອງ ແມ່ ແລະ ເດັກຍິງ. ອົງການ UNFPA ໄດ້ຊ່ວຍສ້າງ ບົດລາຍງານ ຄາດຄະເນການເຕີບໂຕຂອງປະຊາກອນລາວໃນລະດັບຊາດ ແລະ ລະດັບແຂວງ ແຕ່ປີ 2015-2045 ເຊິ່ງເປັນທັງພາສາລາວ ແລະ ພາສາອັງກິດ. ປະຈຸບັນ ສູນສະຖິຕິແຫ່ງຊາດ ໄດ້ປະສານງານກັບ ຫ້ອງການສະຖິຕິແຂວງ ເຮັດການຄາດຄະເນການເຕີບໂຕຂອງປະຊາກອນ ໃນລະດັບເມືອງຂອງທັງ 18 ແຂວງ. ການຄາດຄະເນດັ່ງກ່າວ ຈະໄດ້ສືບຕໍ່ ໃນປີ 2019. ເນື່ອງຈາກວ່າການຄາດຄະເນປະຊາກອນ ໃນຂັ້ນເມືອງໄດ້ເຮັດສຳເລັດໃນ ຫຼາຍກວ່າ 10 ແຂວງ ແລ້ວ, ສະນັ້ນການຂຽນບົດລາຍງານທີ່ກວມເອົາໝົດທຸກເມືອງ ຄາດວ່າຈະສຳເລັດ ໃນປີ 2019. ອົງການ UNFPA, UNICEF ແລະ WFP ຈະສືບຕໍ່ເຮັດວຽກຮ່ວມກັບສູນສະຖິຕິແຫ່ງຊາດ ນຳໃຊ້ຂໍ້ມູນຈາກການສຳ ຫຼວດດັດຊະນີໝາຍສັງຄົມລາວ ເພື່ອເຮັດການວິເຄາະເພີ່ມເຕີມ ກ່ຽວກັບໄວໜຸ່ມ ແລະ ຊາວໜຸ່ມ, ການວາງແຜນຄອບຄົວ, ການຖື ພາໄວໃນກຸ່ມແມ່ຍິງໜຸ່ມ ແລະ ອາການເລືອດຈາງຂອງແມ່ຍິງໄວຈະ ເລີນພັນ. ນອກຈາກນັ້ນກໍຈະສືບຕໍ່ ວິເຄາະຕົວແທນຂອງຕົວຊີ້ວັດ ດ້ານການຄ້ຳປະກັນສະບຽງອາຫານ ເຊັ່ນ: ຄະແນນການບໍລິໂພກ ອາຫານ ແລະ ຄະແນນຄວາມຫຼາກຫຼາຍຂອງອາຫານ ເພື່ອໃຫ້ຂໍ້ມູນກ່ຽວກັບຄວາມຫຼາກຫຼາຍຂອງອາຫານ, ຄວາມຖີ່ຂອງການບໍລິໂພກອາຫານ ແລະ ແຫຼ່ງອາຫານ.

> **ອົງການ ILO ໄດ້ສະໜັບສະໜູນຄວາມພະຍາຍາມ ຂອງລັດຖະບານໃນການປັບປຸງດ້ານສຸຂະພາບ ແລະ ຄວາມປອດໄພໃນການປະກອບອາຊີບ ໂດຍຜ່ານການຈັດຕັ້ງປະຕິບັດກິດຈະກຳຕ່ອງໂສ້ການສະໜອງໃນ 2 ຂະແໜງ ການທີ່ເລືອກມາ: ການຜະລິດເຄື່ອງນຸ່ງຫົ່ມ ແລະ ການປຸງແຕ່ງຜະລິດຕະພັນກະສິກຳ.**

ອົງການ UNIDO ໄດ້ຊ່ວຍເຫຼືອດ້ານວິຊາການ ໃນການສຳຫຼວດການຜະລິດຂອງໂຮງຈັກໂຮງງານ. ມີທັງໝົດ 300 ຄົນ ເຊິ່ງໃນນັ້ນ 2/3 ແມ່ນພະນັກງານພາກລັດ ແລະ ຜູ້ກຳນົດນະໂຍບາຍ ໄດ້ຮັບການຝຶກອົບຮົມ ເພື່ອຊ່ວຍໃຫ້ພວກເຂົາສາມາດເຮັດການສຳຫຼວດໄດ້ຢ່າງມີປະສິດທິພາບ. ຫຼັງຈາກນັ້ນ ກໍມີການກະກຽມບົດລາຍງານຂໍ້ສະເໜີແນະທາງນະໂຍບາຍ ພ້ອມກັບສະຖິຕິອຸດສາຫະກຳ ແລະ ນຳສະເໜີໃຫ້ກັບຜູ້ກຳນົດນະໂຍບາຍໄດ້ຮັບຮູ້. ລະບົບຖານຂໍ້ມູນສະຖິຕິອຸດສາຫະກຳ ໄດ້ຖືກສ້າງຂຶ້ນມາ ແລະ ນຳໃຊ້. ມີການເອົາຂໍ້ມູນສະຖິຕິອຸດສາຫະກຳ ສປປ ລາວ ລົງຢູ່ໃນປຶ້ມສະຖິຕິປະຈຳປີຂອງໂລກ ແລະ ກະຊວງອຸດສາຫະກຳ ແລະ ການຄ້າ ກຳລັງສຳຫຼວດປະຈຳໄຕມາດ ເພື່ອຮັບປະກັນວ່າຖານຂໍ້ມູນດັ່ງກ່າວໄດ້ຮັບການປັບປຸງ.

ອົງການ ILO ໄດ້ສະໜັບສະໜູນ ຄວາມພະຍາຍາມຂອງລັດຖະບານ ໃນການປັບປຸງດ້ານສຸຂະພາບ ແລະ ຄວາມປອດໄພໃນການປະກອບອາຊີບ ໂດຍຜ່ານການຈັດຕັ້ງປະຕິບັດກິດຈະກຳຕ່ອງໂສ້ການສະໜອງໃນ 2 ຂະແໜງການທີ່ເລືອກມາ: ການຜະລິດເຄື່ອງນຸ່ງຫົ່ມ ແລະ ການປຸງແຕ່ງຜະລິດຕະພັນກະສິກຳ. ມີການນຳໃຊ້ວິທີການປະເມີນຕ່ອງໂສ້ການສະໜອງ ເພື່ອກຳນົດບັນຫາດ້ານສຸຂະພາບ ແລະ ຄວາມປອດໄພໃນການປະກອບອາຊີບ ລວມທັງຄວາມສ່ຽງ, ຂໍ້ຈຳກັດ ແລະ ແຮງຈູງໃຈທາງດ້ານຕະຫຼາດ.

ອົງການ IOM ໄດ້ຊ່ວຍປະສານງານ ໃນການເກັບກຳ ແລະ ຄຸ້ມຄອງຂໍ້ມູນການເຄື່ອນຍ້າຍຖິ່ນຖານ ລວມທັງຈັດກອງປະຊຸມແລກປ່ຽນເພື່ອທົບທວນຄືນຂໍ້ມູນການເຄື່ອນຍ້າຍຖິ່ນຖານ ເກັບກຳໂດຍຫຼາຍພາກສ່ວນຂອງລັດຖະບານ ແລະ ກຳນົດຊ່ອງຫວ່າງຂອງຂໍ້ມູນດັ່ງ

ກ່າວ. ມີການຕົກລົງເຫັນດີນຳກັນວ່າ ຂໍ້ມູນຍັງມີຊ່ອງຫວ່າງຫຼາຍ ໂດຍ ສະເພາະຂໍ້ມູນກ່ຽວກັບການເຄື່ອນຍ້າຍທີ່ຜິດປົກກະຕິ ເຊັ່ນ: ການເຄື່ອນຍ້າຍແຮງງານໄປຕ່າງປະເທດແບບບໍ່ເປັນທາງການ, ການຄ້າຂາຍມະນຸດ ແລະ ການລັກລອບນຳເຂົ້າແຮງງານ. ສາເຫດທີ່ພາໃຫ້ມີຊ່ອງຫວ່າງ ແມ່ນຍ້ອນບໍ່ທັນມີລະບົບການລົງທະບຽນພົນລະເມືອງທີ່ຄົບຊຸດ ແລະ ທັນສະໄໝ.

ອົງການ UNODC ໄດ້ເຮັດວຽກຢ່າງໃກ້ຊິດກັບລັດຖະບານເພື່ອປັບປຸງການຕອບໂຕ້ອາດຊະຍາກຳຂ້າມຊາດ ໂດຍໄດ້ຈັດກອງປະຊຸມລະດັບສູງ ຮ່ວມກັບກະຊວງປ້ອງກັນຄວາມສະຫງົບ ໃນເດືອນພະຈິກ ເຊິ່ງໄດ້ເຊີນພະນັກງານລັດຈາກ ສປປ ລາວ ແລະ ປະເທດເພື່ອນບ້ານ ເຂົ້າຮ່ວມສົນທະນາກ່ຽວກັບການຕອບໂຕ້ບັນຫາອາດຊະຍາກຳຂ້າມຊາດ ທີ່ພາກພື້ນກຳລັງປະເຊີນຢູ່. ກອງປະຊຸມດັ່ງກ່າວໄດ້ມີການຕົກລົງ ເປັນເອກະພາບກັນໃນຫຼາຍຂໍ້ສະເໜີແນະ ເວົ້າລວມການຄຸ້ມຄອງຊາຍແດນ ແລະ ປະເພດຂອງອາດຊະຍາກຳເວົ້າສະເພາະ. ອົງການ UNODC ຈະສືບຕໍ່ເຮັດວຽກຮ່ວມກັບລັດຖະບານໃນການຜັນຂະຫຍາຍຂໍ້ສະເໜີແນະເຫຼົ່ານີ້ໃນປີ 2019. ນອກຈາກນັ້ນ ອົງການ UNODC ໄດ້ສືບຕໍ່ເຮັດວຽກກັບກົມພາສີ ແລະ ອົງການອື່ນໆທີ່ກ່ຽວຂ້ອງ ເພື່ອປັບປຸງຄວາມສາມາດຂອງ ໜ່ວຍງານຄວບຄຸມຕູ້ຄອນເທນເນີ້ ທີ່ໄດ້ສ້າງຕັ້ງຂຶ້ນຢູ່ທີ່ດ່ານຊາຍແດນລາວ – ໄທ ໃນປີ 2017. ໜ່ວຍງານນີ້ ຖືກສ້າງຕັ້ງຂຶ້ນມາເພື່ອເກັບກຳຂໍ້ມູນການກວດສອບຕູ້ຄອນເທນເນີ້. ອົງການ UNODC ຍັງໄດ້ມອບອຸປະກອນ, ຈັດຊຸດຝຶກອົບຮົມ ແລະ ຕິດຕາມສະໜັບສະໜູນໃນການເຮັດວຽກຂອງພະນັກງານຂອງໜ່ວຍງານດັ່ງກ່າວ. ອົງການ UNODC ໄດ້ສືບຕໍ່ສະໜັບສະໜູນ ການຝຶກອົບຮົມ ແລະ ມອບອຸປະກອນ ໃຫ້ກັບເຄືອຂ່າຍຫ້ອງການປະສານງານປະຈຳດ່ານ 15 ຫ້ອງການ ເຊິ່ງໄດ້ຮັບການສ້າງຕັ້ງຂຶ້ນມາເພື່ອປັບປຸງວຽກງານຕອບໂຕ້ອາດຊະຍາກຳຂ້າມຊາດຕາມຊາຍແດນ ໂດຍການຍົກລະດັບການຮ່ວມມື ແລະ ແລກປ່ຽນຂໍ້ມູນຂ່າວສານ. ນອກຈາກນັ້ນ ອົງການ UNODC ຍັງໄດ້ເຮັດວຽກຢ່າງໃກ້ຊິດກັບກົມຕຳຫຼວດສິ່ງແວດລ້ອມ, ກົມພາສີ ແລະ ກົມປ່າໄມ້ ເພື່ອປັບປຸງຄວາມສາມາດໃນການແກ້ໄຂບັນຫາການຄ້າຂາຍສັດປ່າຜິດກົດໝາຍ ໂດຍໃຫ້ການຕິດຕາມສະໜັບສະໜູນໃນຕະຫຼອດປີ.

ອາດຊະຍາກຳຫຼາຍປະເພດ ໄດ້ຮັບການອຳນວຍຄວາມສະດວກ ຈາກການປະພຶດສໍ້ລາດບັງຫຼວງຂອງພະນັກງານ. ອົງການ UNODC ໄດ້ສະໜັບສະໜູນ ອົງການກວດສອບແຫ່ງລັດ ແລະ ການຕໍ່ຕ້ານການສໍ້ລາດບັງຫຼວງ ໃນຂະບວນການກວດສອບ ພາຍໃຕ້ ສົນທິສັນຍາຕໍ່ຕ້ານການສໍ້ລາດບັງຫຼວງແຫ່ງສະຫະປະຊາຊາດ. ອົງການ UNODC ຍັງໄດ້ຈັດຝຶກອົບຮົມ ລວມທັງສ້າງຕັ້ງກົນໄກການຕຳນິສິ່ງຂ່າວກ່ຽວກັບການສໍ້ລາດບັງຫຼວງ.

## ບົດຮຽນທີ່ຖອດຖອນໄດ້ ແລະ ທິດທາງຕໍ່ໜ້າ

ການຍົກລະດັບການປະສານງານ, ຄວາມກົມກຽວເປັນໜຶ່ງດຽວ ແລະ ການຈັດລຽງບູລິມະສິດ ລະຫວ່າງອົງການ ສປຊ ນຳກັນເອງ ແລະ ຄູ່ຮ່ວມງານຈາກພາກລັດ ຈະສ້າງໃຫ້ມີຜົນໄດ້ຮັບທີ່ດີຂຶ້ນສຳລັບການພັດທະນາ ແລະ ກາຍເປັນຄູ່ຮ່ວມງານທີ່ເຂັ້ມແຂງຂຶ້ນ.

ສິ່ງທ້າທາຍໃນປະຈຸບັນ ແມ່ນການສ້າງຄວາມສົມດູນລະຫວ່າງຂະບວນການ ປຶກສາຫາລືກັບຄູ່ຮ່ວມງານຈາກພາກລັດ ແລະ ປະສິດທິພາບທາງ ດ້ານເວລາ ໃນການກຳນົດ ແລະ ຈັດຕັ້ງປະຕິບັດ ກິດຈະກຳໂຄງການ ເນື່ອງຈາກຫຼາຍຝ່າຍອາດຈະມີຄວາມສົນໃຈທີ່ແຕກຕ່າງກັນ ແລະ ຍັງຂາດຄວາມເຂົ້າໃຈທີ່ເປັນອັນດຽວກັນ.

ເຖິງແມ່ນວ່າຈະມີຄວາມຄືບໜ້າທີ່ດີໃນຫຼາຍດ້ານກໍຕາມ, ບັນຫາສິ່ງທ້າທາຍກໍຍັງມີຢູ່ ໂດຍສະເພາະການຈັດສັນຊັບພະຍາກອນທາງການເງິນ ແລະ ການສ້າງຄວາມສາມາດໃນທ້ອງຖິ່ນ ເພື່ອໃຫ້ອົງການບໍລິຫານໃນທ້ອງຖິ່ນ ສາມາດປະຕິບັດໜ້າທີ່ຄວາມຮັບຜິດຊອບຂອງຕົນໄດ້ຢ່າງເຕັມທີ່. ສະນັ້ນ ປັດໃຈທີ່ສຳຄັນທັງສອງດ້ານນີ້ ຕ້ອງໄດ້ຮັບການແກ້ໄຂ ເພື່ອສະໜັບສະໜູນການຈັດຕັ້ງປະຕິບັດນະໂຍບາຍສາມສ້າງໃຫ້ໄດ້ດີຂຶ້ນ.

> **ອົງການ UNODC ໄດ້ສືບຕໍ່ເຮັດວຽກກັບກົມພາສີ ແລະ ອົງການອື່ນໆທີ່ກ່ຽວຂ້ອງ ເພື່ອປັບປຸງຄວາມສາມາດ ຂອງ ໜ່ວຍງານຄວບຄຸມຕູ້ຄອນເທນເນີ້ ທີ່ໄດ້ສ້າງຕັ້ງຂຶ້ນຢູ່ທີ່ດ່ານຊາຍແດນລາວ – ໄທ ໃນປີ 2017.**

ນອກຈາກນັ້ນ ຍັງສັງເກດເຫັນໄດ້ວ່າ ອຳນາດໃນການຕັດສິນໃຈຖືກແບ່ງເປັນແບບກະແຈກກະຈາຍຫຼາຍກ່ວາຈະເປັນແບບການແບ່ງຂັ້ນຮັບຜິດຊອບທີ່ຈະແຈ້ງ ລະຫວ່າງຂັ້ນປົກຄອງລະດັບທີ່ຕ່າງກັນ. ການໃຫ້ບໍລິການ ຈະສາມາດປັບປຸງໃຫ້ດີຂຶ້ນຕື່ມໄດ້ ໂດຍການສ້າງຄວາມເຂັ້ມແຂງໃຫ້ກັບພະນັກງານລັດ ຫຼື ທີມງານບໍລິການ ໃຫ້ມີອຳນາດ, ມີພື້ນທີ່ໃນການເຮັດວຽກ ແລະ ມີຄວາມຮັບຜິດຊອບຫຼາຍຂຶ້ນ ເພື່ອປະຕິບັດໜ້າທີ່ຂອງພວກເຂົາ ແລະ ມີຄວາມຮັບຜິດຊອບຕໍ່ກັບການຕັດສິນໃຈຂອງພວກເຂົາເອງ.

ສິ່ງທ້າທາຍຫຼັກໃນການຈັດຕັ້ງປະຕິບັດກອງທຶນພັດທະນາເມືອງທີ່ປັບປຸງໃໝ່ ລວມມີ: ລະດັບຄວາມເຂົ້າໃຈ, ຄວາມເປັນເຈົ້າການ ແລະ ຄວາມໝາຍໝັ້ນຂອງໜ່ວຍງານທີ່ຮັບຜິດຊອບດ້ານນະໂຍບາຍ ແລະ ການຕັດສິນໃຈກ່ຽວກັບກອງທຶນດັ່ງກ່າວລວມທັງຫ້ອງວ່າ ການ ເມືອງ; ງົບປະມານທີ່ຍັງຈຳກັດ ເພື່ອສະໜອງໃຫ້ກັບທັງ 148 ເມືອງ; ແລະ ລະດັບການໝູນວຽນພະນັກງານທີ່ຂ້ອນ ຂ້າງສູງໃນອຳນາດການປົກຄອງຂອງຫຼາຍເມືອງ. ທິດທາງໃນຕໍ່ໜ້າ ຈະລວມເອົາການຝຶກອົບຮົມແບບຕໍ່ເນື່ອງ, ການນຳໃຊ້ກົນໄກການຄຸ້ມຄອງກອງທຶນພັດທະນາເມືອງໃນທຸກລະດັບໂດຍການຫັນເອົາເຂົ້າສູ່ລະບົບ ແລະ ສ້າງໃຫ້ເປັນນິຕິກຳ, ການປ່ຽນແປງທາງດ້ານວິທີການຈາກລັດຖະບານຮ່ວມປະກອບເງິນເຂົ້າໃນກອງທຶນ ມາເປັນກອງທຶນຮ່ວມການເງິນຂອງລັດຖະບານ.

ການສຳຫຼວດດັດຊະນີໝາຍສັງຄົມລາວ ຄັ້ງທີ II ສະແດງໃຫ້ເຫັນຄວາມແຕກໂຕນກັນລະຫວ່າງ ຄົວເຮືອນທີ່ຢູ່ໃນເຂດພູມສັນຖານທີ່ຕ່າງກັນ, ລະຫວ່າງຄົວເຮືອນໃນເຂດຊົນນະບົດ ແລະ ຕົວເມືອງ, ລະຫວ່າງຄົວເຮືອນທີ່ລະດັບຄວາມຮັ່ງມີ ແລະ ລະດັບການສຶກສາຂອງແມ່ແຕກຕ່າງກັນ ແລະ ລະຫວ່າງຊົນເຜົ່າທີ່ແຕກຕ່າງກັນ. ເພື່ອແກ້ໄຂບັນຫາຄວາມແຕກໂຕນກັນນີ້, ມັນມີຄວາມສຳຄັນຫຼາຍ ທີ່ຈະຕ້ອງໄດ້ສ້າງຄວາມເຂັ້ມແຂງໃນການວາງແຜນຂອງຂັ້ນແຂວງ, ໃນກົນໄກການປະສານງານ ແລະ ການຕິດຕາມປະເມີນຜົນ ຂອງບັນດາຂະແໜງການທາງສັງຄົມທີ່ສຳຄັນ ເພື່ອໃຫ້ບໍລິການກັບເດັກນ້ອຍແບບປະສົມປະສານ ແລະ ນຳໃຊ້ຫຼັກຖານເຂົ້າໃນການຕັດສິນໃຈ. ສົ່ງເສີມການຈັດສັນ, ການນຳໃຊ້ ແລະ ການແຈກຢາຍງົບປະມານໃຫ້ດີຂຶ້ນໃນຂະແໜງການບູລິມະສິດ ເຊັ່ນ: ຂະແໜງສາທາ ແລະ ຂະແໜງການສຶກສາ. ການແຈກຢາຍງົບປະມານຄືນໃໝ່ໃຫ້ກັບ ບັນດາແຂວງກໍມີຄວາມສຳຄັນເຊັ່ນດຽວກັນ ເຊິ່ງສາມາດເຮັດໄດ້ ໂດຍການເຊື່ອມໂຍງເຂົ້າກັບເປົ້າໝາຍລວມຂອງ ແຜນພັດທະນາ ເສດຖະກິດ – ສັງຄົມແຫ່ງຊາດ ຄັ້ງທີ VIII ເນື່ອງຈາກວ່າການບັນລຸ ຕົວຊີ້ວັດຂອງຄາດໝາຍລວມ ມີຄວາມສຳຄັນຫຼາຍ ແລະ ຕ້ອງການຊັບພະຍາກອນທາງການເງິນທີ່ພຽງພໍ ແລະ ມີການນຳໃຊ້ຢ່າງມີປະສິດທິພາບ.

# ການຊ່ວຍເຫຼືອຮ່ວມຂອງອົງການ ສປຊ ຕໍ່ກັບການວາງແຜນແຫ່ງຊາດ, ການປຶກສາຫາລືດ້ານນະໂຍບາຍ ແລະ ການຜັນຂະຫຍາຍ ວາລະການພັດທະນາ ຮອດປີ 2030 ໃຫ້ເຂົ້າກັບສະພາບຕົວຈິງຂອງປະເທດ



### ການວາງແຜນແຫ່ງຊາດ

ການທົບທວນກາງສະໄໝ ແຜນພັດທະນາເສດຖະກິດ – ສັງຄົມແຫ່ງຊາດ ຄັ້ງທີ VIII (2016–2020) ໄດ້ກຳນົດເອົາ ຜົນສຳເລັດທີ່ສາມາດບັນລຸໄດ້ ນັບຕັ້ງແຕ່ປີ 2016 ແລະ ຂໍ້ສະເໜີແນະ ສຳລັບການຈັດຕັ້ງປະຕິບັດໃນໄລຍະເວລາທີ່ເຫຼືອ ແລະ ການສ້າງແຜນພັດທະນາເສດຖະກິດ – ສັງຄົມແຫ່ງຊາດ ຄັ້ງທີ IX (2021–2025). ທີມງານຂອງອົງການ ສປຊ ເຊິ່ງນຳໂດຍ ອົງການ UNDP ໄດ້ເຮັດວຽກຢ່າງໃກ້ຊິດກັບລັດຖະບານ ແລະ ຄູ່ຮ່ວມພັດທະນາສາກົນ ລວມທັງໜ່ວຍງານວິຊາການຫຼັກ ເພື່ອສະໜັບສະໜູນການທົບທວນກາງສະໄໝນີ້. ອົງການຕ່າງໆໃນລະບົບ ສປຊ ຍັງໄດ້ໃຫ້ການສະໜັບສະໜູນ ການທົບທວນກາງສະໄໝຂອງຂະແໜງການ ລວມທັງຂະແໜງສຶກສາ ເຊິ່ງນຳໂດຍ ອົງການ UNICEF ແລະ ຂະແໜງສາທາລະນະສຸກ ນຳໂດຍ ອົງການ WHO. ລັດຖະບານລາວ ໄດ້ໃຫ້ຄວາມໄວ້ວາງໃຈ ແລະ ຂໍໃຫ້ ອົງການ ສປຊ / ອົງການ UNDP ສະໜັບສະໜູນ ການສ້າງແຜນພັດທະນາເສດຖະກິດ – ສັງຄົມແຫ່ງຊາດ ຄັ້ງທີ IX.

### ການຜັນຂະຫຍາຍ ເປົ້າໝາຍການພັດທະນາແບບຍືນຍົງ ໃຫ້ເຂົ້າກັບສະພາບຕົວຈິງຂອງປະເທດ

ໂດຍການສະໜັບສະໜູນຮ່ວມກັນຂອງອົງການ ສປຊ, ລັດຖະບານໄດ້ນຳສະເໜີ ບົດລາຍງານແຫ່ງຊາດແບບສະໝັກໃຈກ່ຽວກັບ ການຈັດຕັ້ງປະຕິບັດເປົ້າໝາຍການພັດທະນາແບບຍືນຍົງ ຂອງ ສປປ ລາວ ທີ່ເວທີການເມືອງລະດັບສູງຂອງອົງການ ສປຊ ໃນເດືອນກໍລະກົດ ທີ່ນະຄອນນິວຢອກ. ບົດລາຍງານໄດ້ລວມເອົາ ເອກະສານຊ້ອນທ້າຍສອງອັນ ເຊິ່ງມີລາຍການຕົວຊີ້ວັດ SDG ສະເພາະຂອງປະເທດ ແລະ ລາຍການຕົວຊີ້ວັດທີ່ມີທ່າແຮງບໍ່ມຂ້ອນ ລວມທັງ SDG 18 ກ່ຽວ ກັບ ຊີວິດປອດໄພຈາກລະເບີດທີ່ຍັງບໍ່ທັນແຕກ.

ຄະນະກຳມະການຊີ້ນຳ SDG ແຫ່ງຊາດ ໂດຍມີທ່ານນາຍົກລັດຖະມົນຕີເປັນປະທານ ຄາດວ່າຈະຮັບຮອງເອົາ ຕົວຊີ້ວັດ SDG ສະເພາະ ຂອງປະເທດ ໃນປີ 2019 ເຊິ່ງຈະມີຂໍ້ມູນກ່ຽວກັບຕົວຊີ້ວັດທຸກອັນ. ການຝຶກອົບຮົມແບບສະເພາະ ແລະ ຂະບວນການປຶກສາຫາລືກັບບັນດາກະຊວງຕ່າງໆ ໄດ້ສະໜັບສະໜູນຄວາມເປັນເຈົ້າການ, ສ້າງການເຊື່ອມໂຍງພາຍໃນຂະແໜງການ ແລະ ສ້າງຄວາມເຂົ້າໃຈກ່ຽວກັບ SDGs ໄດ້ດີຂຶ້ນ. ສະນັ້ນຈຶ່ງຖືໄດ້ວ່າ ມີການສ້າງພື້ນຖານທີ່ດີ ສຳລັບການເຊື່ອມສານເປົ້າໝາຍການພັດທະນາແບບຍືນຍົງ ເຂົ້າໃນແຜນພັດທະນາເສດຖະກິດ – ສັງຄົມແຫ່ງຊາດ ຄັ້ງທີ IX ແລະ ຍຸດທະສາດຂອງຂະແໜງການໃນໄລຍະຕໍ່ໄປ.

### ຂະບວນການປະສານງານກອງປະຊຸມໂຕະມົນ

ອົງການ ສປຊ / ອົງການ UNDP ໄດ້ສືບຕໍ່ສະໜັບສະໜູນການສົນທະນາທາງດ້ານນະໂຍບາຍແຫ່ງຊາດ ໂດຍຜ່ານຂະບວນການໂຕະມົນ. ໃນຕະຫຼອດໄລຍະປີ 10, ໜ່ວຍງານວິຊາການຫຼັກ ແລະ 30 ໜ່ວຍງານຂະແໜງການຍ່ອຍ ເຊິ່ງມີຫຼາຍອົງການໃນລະບົບ ສປຊ ເປັນປະທານຮ່ວມ ໄດ້ເຮັດວຽກຮ່ວມກັນ ຜັນຂະຫຍາຍຂໍ້ແນະນຳທີ່ໄດ້ຮັບ ຈາກກອງປະຊຸມໂຕະມົນປະຈຳປີ 2017 ແລະ ຍາດໄດ້ຜົນສຳເລັດຫຼາຍອັນ ທີ່ຕິດພັນກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ VIII. ຂະບວນການໂຕະມົນ ໄດ້ເຊີນເອົາພະນັກງານລະດັບສູງ ຫຼາຍກ່ວາ 300 ຄົນ ຈາກພາກລັດຖະບານ ແລະ ຄູ່ຮ່ວມພັດທະນາ ເພື່ອເຂົ້າຮ່ວມກອງປະຊຸມແບບມີສ່ວນຮ່ວມ ໃນວັນ 4-5 ທັນວາ. ຫຼັງຈາກນັ້ນ, ນາຍົກລັດຖະມົນຕີ ໄດ້ອອກ ຂໍ້ແນະນຳໃຫ້ກັບກະຊວງຕ່າງໆ ປະຕິບັດຕາມຂໍ້ສະເໜີແນະດ້ານນະໂຍບາຍທີ່ໄດ້ຮັບຈາກຂະບວນການນີ້. ເຖິງແມ່ນວ່າຈະຍັງມີຫຼາຍອັນທີ່ຕ້ອງໄດ້ປັບປຸງ, ແຕ່ຂະບວນການໂຕະມົນ ໄດ້ເສີມຂະຫຍາຍການປະສານງານ ແລະ ການສົນທະນາ ລະຫວ່າງລັດຖະບານ ແລະ ຄູ່ຮ່ວມພັດທະນາ, ຮັບປະກັນວ່າຜູ້ເຂົ້າຮ່ວມໄດ້ຮັບແນວ ຄວາມຄິດໃໝ່ໆ ແລະ ວິທີການປະຕິບັດທີ່ດີ, ສົ່ງເສີມການຮ່ວມມືພາຍໃນຂະແໜງການ ແລະ ການຮ່ວມມືກັນຂອງຂະແໜງການຕ່າງໆ.

# ການຂຶ້ນທະບຽນແຈ້ງເກີດ

ການສຳຫຼວດດັດຊະນີໝາຍສັງຄົມລາວ ຄັ້ງທີ II ປີ 2017

ໃນ 5 ປີ ຜ່ານມາ ຖືວ່າ
**ບໍ່ມີຄວາມຄືບໜ້າອັນໃດເລີຍ**
ໃນການຂຶ້ນທະບຽນແຈ້ງເກີດຂອງເດັກ ຕໍ່າກວ່າ 5 ປີ:




ມີແມ່ / ຜູ້ດູແລ ພຽງແຕ່ **1 ໃນ 10 ຄົນ** ເທົ່ານັ້ນ ທີ່ຮູ້ຈັກວິທີຂຶ້ນທະບຽນແຈ້ງເກີດ ກັບອຳນາດການປົກຄອງ:



# ການແຕ່ງງານແຕ່ໄວເດັກ

ການສຳຫຼວດດັດຊະນີໝາຍສັງຄົມລາວ ຄັ້ງທີ II ປີ 2017




ອັດຕາສ່ວນຮ້ອຍຂອງແມ່ຍິງ ອາຍຸລະຫວ່າງ 20-49 ປີ ໄດ້ແຕ່ງງານ ກ່ອນຈະມີອາຍຸຄົບ 15 ປີ ແມ່ນ **ຫຼຸດລົງ**.




ອັດຕາສ່ວນຮ້ອຍຂອງແມ່ຍິງ ອາຍຸລະຫວ່າງ 20-49 ປີ ໄດ້ແຕ່ງງານ ກ່ອນຈະມີອາຍຸຄົບ 18 ປີ ແມ່ນ **ຫຼຸດລົງ**.

## ຄວາມແຕກໂຕນກັນ







ອັດຕາສ່ວນຂອງແມ່ຍິງ ອາຍຸລະຫວ່າງ 20-49 ປີ ໄດ້ແຕ່ງງານກ່ອນຈະມີອາຍຸຄົບ 18 ປີ ມີສູງທີ່ສຸດ ໃນຄົວເຮືອນທີ່ມີຫົວໜ້າຄອບຄົວເປັນຄົນມົ້ງ – ມຽນ.

# ການມີສ່ວນຮ່ວມຂອງແມ່ຍິງໃນ ການຕັດສິນບັນຫາ

ບົດລາຍງານດ້ານບົດບາດຍິງ – ຊາຍ ຂອງສູນກາງສະຫະພັນແມ່ຍິງລາວ ປີ 2018

## ອັດຕາສ່ວນຂອງແມ່ຍິງໃນສະພາແຫ່ງຊາດ




ສປປ ລາວ ເປັນປະເທດໜຶ່ງທີ່ມີ ອັດຕາສ່ວນແມ່ຍິງ ທີ່ເປັນສະມາຊິກສະພາແຫ່ງຊາດ ສູງທີ່ສຸດ ໃນພາກພື້ນ.

## ແມ່ຍິງໃນການບໍລິຫານລັດ




ແມ່ຍິງທີ່ໄດ້ຮັບ ຕຳແໜ່ງຂັ້ນສູງໃນລັດຖະບານຍັງມີໜ້ອຍ.




# 8. ການເຂົ້າເຖິງຄວາມຍຸຕິທຳ

# ປະຊາຊົນໄດ້ເຂົ້າເຖິງຄວາມຍຸຕິທຳ ແລະ ການປະຕິບັດດ້ານ ສິດທິມະນຸດດີຂຶ້ນ





## ທ່າອ່ຽງການພັດທະນາຕົ້ນຕໍ

| ຕົວຊີ້ວັດ | ຂໍ້ມູນທຽບຖານ | ຄາດໝາຍ | ສະຖານະການປະຈຸບັນ |
|---|---|---|---|
| 8.1. ຈຳນວນຄະດີຂອງປະຊາຊົນ ໄດ້ຮັບການແກ້ໄຂຜ່ານສານ ແລະ ໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານໂດຍ ນຳໃຊ້ການບໍລິການຊ່ວຍເຫຼືອທາງ ກົດໝາຍ | ແກ້ໄຂຜ່ານສານແບບເປັນທາງການ 4,000 ກໍລະນີ; ຜ່ານໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງ ຂັ້ນບ້ານ: 4,746 ກໍລະນີ (2015) | ແກ້ໄຂຜ່ານສານແບບເປັນທາງ: 7,000 ກໍລະນີ; ຜ່ານ ໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງ ຂັ້ນບ້ານ: 8,000 ກໍລະນີ (2021) | ແກ້ໄຂຜ່ານສານແບບເປັນທາງ: 4,644 ກໍລະນີ; ຜ່ານໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ: 5,320 ກໍລະນີ<br><br>ຈະມີການເກັບກຳຂໍ້ມູນປັບປຸງໃໝ່ ຈາກການສຳຫຼວດ ຄວາມຍຸຕິທຳຂອງສັງຄົມ ເຊິ່ງມີແຜນຈະດຳເນີນ ໃນປີ 2020 |
| 8.2. ຈຳນວນກົດໝາຍທີ່ໄດ້ຮັບ ການຢັ້ງຢືນໂດຍ ກະຊວງຍຸຕິທຳ ປະຕິບັດຕາມຂະບວນການຮ່າງ / ແກ້ໄຂ ແລະ ປຶກສາຫາລືກັບສັງຄົມ | 0 (2014) | 8 (2021) | ໄປຕາມຄາດໝາຍ: 7 ສະບັບ (2018) ປະມວນກົດໝາຍອາຍາ, ກົດໝາຍວ່າດ້ວຍ ທະນາຍຄວາມ, ກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດ ຄຳຕັດສິນຂອງສານ, ກົດໝາຍວ່າດ້ວຍ ສົນທິສັນຍາ ແລະ ຂໍ້ຕົກລົງລະຫວ່າງປະເທດ, ກົດໝາຍວ່າດ້ວຍໄອຍະການປະຊາຊົນສູງສຸດ, ກົດໝາຍວ່າດ້ວຍໄພພິບັດ ແລະ ການປ່ຽນແປງດິນຟ້າອາກາດ, ກົດໝາຍແພ່ງ |
| 8.3. ອັດຕາສ່ວນຮ້ອຍຂອງ ການຈັດ ຕັ້ງປະຕິບັດຄຳແນະນຳທີ່ໄດ້ຮັບການ ຍອມຮັບຈາກການທົບທວນປະຈຳ ໄລຍະ ຄັ້ງທີ 2 | 0 (2015) | 60% / 70 ຂອງ 116 (2021) | ໄປຕາມຄາດໝາຍ: ປະຈຸບັນຍັງຢູ່ໃນຂັ້ນຕອນ ສ້າງແຜນດຳເນີນງານແຫ່ງຊາດ ກ່ຽວກັບ ການທົບ ທວນປະຈຳໄລຍະ |

**ໃນປີ 2018, ສປປ ລາວ ໄດ້ເຂົ້າຮ່ວມການປຶກສາຫາລືກັບ ໜ່ວຍງານຮັບຜິດຊອບສົນທິສັນຍາ ກ່ຽວກັບ ບົດລາຍງານເບື້ອງຕົ້ນ ຕໍ່ກັບສົນຍາສາກົນວ່າດ້ວຍສິດທິພົນລະເມືອງ ແລະ ສິດທິທາງການເມືອງ, ບົດລາຍງານຕໍ່ກັບສົນທິສັນຍາວ່າດ້ວຍສິດທິເດັກສໍາບັບທີ 3 ຮອດ ສະບັບທີ 6 ແລະ ບົດລາຍງານຕໍ່ກັບສົນທິສັນຍາວ່າດ້ວຍ ການລຶບລ້າງທຸກຮູບການຈໍາແນກຕໍ່ກັບແມ່ຍິງ ສະບັບທີ 8 ແລະ 9.**

ໄດ້ມີຄວາມຄືບໜ້າຢ່າງຕໍ່ເນື່ອງ ໃນການສ້າງລັດແຫ່ງກົດໝາຍ ພາຍໃຕ້ແຜນແມ່ບົດຂະແໜງຍຸຕິທໍາ. ຖະແຫຼງການຂອງນາຍົກລັດຖະມົນຕີ ເພື່ອສ້າງລັດແຫ່ງກົດໝາຍ ພາຍໃນ ປີ 2020 ເປັນສິ່ງທີ່ໜ້າຊື່ນຊົມ. ການປະກາດໃຊ້ປະມວນກົດໝາຍອາຍາ ແລະ ປະມວນກົດໝາຍແພ່ງ ຖືເປັນຜົນສໍາເລັດທີ່ໂດດເດັ່ນໃນປີ 2018 ເຊິ່ງເປັນຈຸດເຊື່ອມຕໍ່ທີ່ສໍາຄັນ ໃນການພັດທະນາຂະແໜງ ກົດໝາຍ ເນື່ອງຈາກວ່າກົດໝາຍເຫຼົ່ານີ້ ໄດ້ນໍາສະເໜີບົດບັນຍັດໃໝ່ໆ ແລະ ຈະສ້າງຄວາມປ່ຽນແປງທີ່ສໍາຄັນ ໃຫ້ກັບລະບົບກົດໝາຍຂອງປະເທດ. ການເຊື່ອມສານເອົາ ບັນດາພັນທະສາກົນ ເຂົ້າໃນກົດໝາຍຂອງປະເທດ ແມ່ນມີຄວາມສໍາຄັນຫຼາຍ.

ການເຂົ້າຮ່ວມຂອງລັດຖະບານ ໃນກົນໄກດ້ານສິດທິມະນຸດຂອງອົງການ ສປຊ ມີເພີ່ມຫຼາຍຂຶ້ນ ແລະ ສ້າງແນວທາງທີ່ມີຄຸນຄ່າ ໃນການ ໃຫ້ຂໍ້ສັງເກດ ແລະ ຂໍ້ສະເໜີແນະ ວ່າດ້ວຍການຈັດຕັ້ງປະຕິບັດສົນທິສັນຍາດ້ານສິດທິມະນຸດ. ໃນປີ 2018, ສປປ ລາວ ໄດ້ເຂົ້າຮ່ວມການປຶກສາຫາລືກັບໜ່ວຍງານຮັບຜິດຊອບສົນທິສັນຍາ ກ່ຽວກັບບົດລາຍງານເບື້ອງຕົ້ນ ຕໍ່ກັບສົນຍາສາກົນວ່າດ້ວຍສິດທິພົນລະເມືອງ ແລະ ສິດທິທາງການເມືອງ, ບົດລາຍງານຕໍ່ກັບສົນທິສັນຍາວ່າດ້ວຍສິດທິເດັກສໍາບັບທີ 3 ຮອດ ສະບັບທີ 6 ແລະ ບົດລາຍງານຕໍ່ກັບສົນທິສັນຍາວ່າດ້ວຍການລຶບລ້າງທຸກຮູບການຈໍາແນກຕໍ່ກັບແມ່ຍິງ ສະບັບທີ 8 ແລະ 9.

ການປັບປຸງກົດໝາຍວ່າດ້ວຍທີ່ດິນ ແມ່ນກໍາລັງດໍາເນີນການຢູ່. ໃນເດືອນພະຈິກ, ສະພາແຫ່ງຊາດ ໄດ້ເນັ້ນໜັກກ່ຽວກັບວິທີການແບ່ງດິນລະຫວ່າງພາກລັດ ແລະ ພາກເອກະຊົນ. ຮ່າງກົດໝາຍສະບັບປັບປຸງ ໄດ້ຖືກຍົກມາສົນທະນາໃນກອງປະຊຸມສະໄໝສາມັນ ໃນເດືອນທັນວາ. ສິ່ງນີ້ແມ່ນຂົງເຂດທີ່ສໍາຄັນຫຼາຍສໍາລັບການປະຕິຮູບພາຍໃນປະເທດ ເນື່ອງຈາກວ່າຈໍານວນໂຄງການລົງທຶນຈາກຕ່າງປະເທດກໍາລັງເພີ່ມສູງຂຶ້ນ.

ເຖິງແມ່ນວ່າຈະມີຜົນສໍາເລັດໃນຫຼາຍດ້ານ ແຕ່ສິ່ງທ້າທາຍຫຼາຍອັນກໍຍັງມີຢູ່. ການຂະຫຍາຍຕົວດ້ານການບໍລິການທາງກົດໝາຍຍັງມີຂໍ້ຈໍາກັດ ເນື່ອງຈາກປັດໄຈດ້ານບຸກຄະລາກອນມະນຸດ ແລະ ດ້ານການເງິນ ເຊັ່ນ: ຂໍ້ຈໍາກັດດ້ານຕົ້ນທຶນການດໍາເນີນງານຂອງສູນຊ່ວຍເຫຼືອທາງກົດໝາຍ, ຈໍານວນທະນາຍ ແລະ ຜູ້ພິພາກສາທີ່ມີຄຸນວຸດທິ ຍັງບໍ່ທັນພຽງພໍ, ຄວາມເຂົ້າໃຈຂອງຜູ້ຊາຍ ແລະ ແມ່ຍິງ ກ່ຽວກັບການເຂົ້າເຖິງຄວາມຍຸຕິທໍາຍັງມີຈໍາກັດ. ການສ້າງຄວາມເຂັ້ມແຂງຂອງການປົກຄອງ ແລະ ການແກ້ໄຂບັນຫາສໍ້ລາດບັງຫຼວງ ແມ່ນຈໍາເປັນເພື່ອສ້າງໃຫ້ເສດຖະກິດ ມີຄວາມສາມາດໃນການແຂ່ງຂັນທີ່ສູງຂຶ້ນ.

## ຜົນໄດ້ຮັບ

### ປັບປຸງການເຂົ້າເຖິງຄວາມຍຸຕິທໍາ ແລະ ການໃຫ້ບໍລິການທາງກົດໝາຍ

ການເຂົ້າເຖິງຄວາມຍຸຕິທໍາ ແລະ ການໃຫ້ບໍລິການທາງກົດໝາຍ ໄດ້ຮັບການປັບປຸງດີຂຶ້ນ ໂດຍການສະໜັບສະໜູນຂອງອົງການ UNDP ຕໍ່ກັບ ສູນຊ່ວຍເຫຼືອທາງກົດໝາຍ ເພື່ອເຜີຍແຜ່ບັນດາກົດໝາຍຕ່າງໆ ແລະ ໃຫ້ບໍລິການຊ່ວຍເຫຼືອທາງກົດໝາຍໃນຂັ້ນບ້ານ. ມີການເຜີຍແຜ່ ດໍາລັດວ່າດ້ວຍການຊ່ວຍເຫຼືອທາງກົດໝາຍ ແລະ ຂໍ້ແນະນໍາໃນການຈັດຕັ້ງປະຕິບັດດໍາລັດດັ່ງກ່າວ ທີ່ ແຂວງຊຽງຂວາງ, ສະຫວັນນະເຂດ ແລະ ເຊກອງ. ສູນຊ່ວຍເຫຼືອທາງກົດໝາຍ ທັງ 3 ສູນ ໄດ້ຮັບການສະໜັບສະໜູນການທົບທວນຄືນ ເພື່ອແລກປ່ຽນຄວາມຮູ້ ແລະ ບົດຮຽນທີ່ຖອດຖອນໄດ້ຮ່ວມກັນ.

ອົງການ UNICEF ໄດ້ສະໜັບສະໜູນ ກອງເລຂາຄະນະກໍາມະການປະສານງານຄວາມຍຸຕິທໍາສໍາລັບເຍົາວະຊົນ  ພາຍໃຕ້ອົງການໄອຍະການປະຊາຊົນສູງສຸດ ເພື່ອຂະຫຍາຍການຊ່ວຍເຫຼືອທາງກົດໝາຍ ແລະ ທາງສັງຄົມ ໃຫ້ກັບເດັກນ້ອຍທີ່ພົວພັນດ້ານກົດໝາຍ ໃນ 10 ບ້ານ ໃນແຂວງຊຽງຂວາງ ແລະ ອີກ 10 ບ້ານ ໃນແຂວງສະຫວັນນະເຂດ. ໂຄງການໄດ້ເຊີນເອົາຜູ້ມີສ່ວນກ່ຽວຂ້ອງຈາກຂະແໜງຍຸຕິທໍາ, ສະຫວັດດີການສັງຄົມ ແລະ ຄູ່ຮ່ວມພັດທະນາ ເພື່ອມາແລກປ່ຽນຂໍ້ມູນ ແລະ ສົນທະນາກ່ຽວກັບ ການໃຫ້ການຊ່ວຍເຫຼືອ ກັບເດັກນ້ອຍທີ່ພົວພັນກັບກົດໝາຍ. ສິ່ງນີ້ ຖືເປັນການປະຕິບັດທີ່ດີເລີດສໍາລັບການຮ່ວມມື ແລະ ການປະສານງານ ລະຫວ່າງຂະແໜງຍຸຕິທໍາ ແລະ ຂະແໜງການອື່ນໆ.

ອົງການ UNCITRAL ໄດ້ໃຫ້ການຊ່ວຍເຫຼືອດ້ານວິຊາການໃນການສ້າງ ຂອບກົດໝາຍໃຫ້ເຂັ້ມແຂງຂຶ້ນ ເຊິ່ງຈະຊ່ວຍພັດທະນາພາກເອກະຊົນ ແລະ ສົ່ງເສີມການຄ້າຂາຍຂ້າມຊາຍແດນທີ່ອີງໃສ່ກົດລະບຽບ. ນອກຈາກສະໜັບສະໜູນຊ່ວຍໃຫ້ລັດຖະບານເຂົ້າເປັນພາຄີ ໃນ ອົງການກົດໝາຍການຄ້າສາກົນແຫ່ງສະຫະປະຊາຊາດ ແລ້ວ, ໃນປີນີ້ ອົງການ UNCITRAL ຍັງໄດ້ໃຫ້ການຊ່ວຍເຫຼືອດ້ານວິຊາການ  ເພື່ອປະຕິຮູບ ກົດໝາຍວ່າດ້ວຍອະນຸຍາໂຕຕຸລາການ ສປປ ລາວ (Lao PDR Arbitration Act).

ອົງການ UN Women ໄດ້ຮ່ວມມືກັບ ອົງການ UNDP ເຜີຍແຜ່ຂໍ້ມູນກ່ຽວກັບ ຄວາມຮຸນແຮງຕໍ່ກັບແມ່ຍິງ ແລະ ກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍ ຜ່ານລາຍການວິທະຍຸຊຸມຊົນຂອງອົງການ UNDP ເຊິ່ງສາມາດເຂົ້າເຖິງປະຊາຊົນໄດ້ເຖິງ 89,600 ຄົນ ໃນ ແຂວງສາລະວັນ, ອຸດົມໄຊ ແລະ ໄຊຍະບູລີ.

### ເສີມສ້າງຄວາມສາມາດຂອງພະນັກງານກົດໝາຍ ແລະ ຂອງສະຖາບັນ

ການພັດທະນາຄວາມສາມາດຂອງພະນັກງານ ແລະ ສະຖາບັນດ້ານກົດໝາຍ ໄດ້ສ້າງຜົນຮັບທີ່ມີຄວາມສໍາຄັນ. ການສ້າງຄວາມສາມາດໃຫ້ກັບຜູ້ພິພາກສາ ລວມທັງສານປະຊາຊົນສູງສຸດ, ສານປະຊາຊົນນະຄອນຫຼວງ ແລະ ສານປະຊົນຊົນລະດັບພາກ ໄດ້ເສີມສ້າງຄວາມເຂົ້າໃຈ ໃນການເຂົ້າເຖິງ ແລະ ການບໍລິຫານຂະບວນການຍຸຕິທໍາ ແລະ ຄວາມເຂົ້າໃຈຕໍ່ກັບສານເຄື່ອນທີ່. ນອກຈາກນັ້ນ ຍັງມີການເຜີຍແຜ່ ຄູ່ມືການເກັບຫຼັກຖານຄະດີອາຍາ. ອົງການ UNDP ໄດ້ສະໜັບສະໜູນ ການປູກຈິດສໍານຶກກ່ຽວກັບ ເປົ້າໝາຍ SDG ເປົ້າໝາຍທີ 16 ວ່າດ້ວຍ ການມີສັນຕິພາບ, ຄວາມຍຸຕິທໍາ ແລະ ສະຖາບັນທີ່ເຂັ້ມແຂງ ໃຫ້ກັບພະນັກງານຂອງກະຊວງຍຸຕິທໍາ.

ຫຼັງຈາກໄດ້ຍື່ນບົດລາຍງານເບື້ອງຕົ້ນ ໃຫ້ກັບສັນຍາສາກົນວ່າດ້ວຍສິດທິພົນລະເມືອງ ແລະ ສິດທິທາງການເມືອງ, ລັດຖະບານໄດ້ຮັບການສະໜັບສະໜູນຈາກ ອົງການ ສປຊ ເພື່ອເຂົ້າຮ່ວມເຮັດວຽກກັບຄະນະກໍາມະທິການໃຫຍ່ສິດທິມະນຸດ ທີ່ ນະຄອນເຊີແນວປະເທດ

ສະວິດສະແລນ. ຄະນະກຳມະການໃຫຍ່ນີ້ ໄດ້ສະແດງຄວາມຂອບໃຈ ສຳລັບການສົນທະນາປຶກສາຫາລືທີ່ມີໝາກຜົນ ກັບຜູ້ແທນຂັ້ນສູງຈາກລາວ ກ່ຽວກັບມາດຕະການທີ່ ສປປ ລາວ ໄດ້ນຳໃຊ້ ເພື່ອຈັດຕັ້ງປະຕິບັດຂໍ້ບັນຍັດຂອງສົນທິສັນຍາສາກົນ ນັບຕັ້ງແຕ່ມີຜົນສັກສິດເປັນຕົ້ນມາ. ສປປ ລາວ ໄດ້ສຳເລັດການສ້າງມາດຕະການດ້ານນິຕິກຳ, ດ້ານສະຖາບັນ ແລະ ດ້ານນະໂຍບາຍ ແລະ ໄດ້ໃຫ້ສັດຕະຍະບັນຕໍ່ກັບສົນທິສັນຍາສາກົນສະບັບນີ້.

ໂດຍການສະໜັບສະໜູນຈາກ ອົງການ UNICEF, ກະຊວງຍຸຕິທຳ ໄດ້ຂະຫຍາຍໂຄງການແກ້ໄຂບັນຫາດ້ວຍກົດໝາຍໃຫ້ກັບເດັກທີ່ຢູ່ໃນຄວາມຂັດແຍ່ງໂດຍມີຊຸມຊົນເປັນເຈົ້າ ໄປສູ່ ແຂວງຊຽງຂວາງ ແລະ ສະຫວັນນະເຂດ. ສິ່ງນີ້ ໄດ້ສ້າງຄວາມສາມາດໃຫ້ກັບອຳນາດການປົກຄອງບ້ານ ໂດຍສະເພາະສະມາຊິກໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານໃນການເກັບກຳຂໍ້ມູນເດັກນ້ອຍ ໂດຍສະເພາະເດັກທີ່ມີຄວາມສ່ຽງ, ເຮັດການປະເມີນຄວາມສ່ຽງ ແລະ ເຮັດການແຊກແຊງແຕ່ຕົ້ນ ເພື່ອປ້ອງກັນບໍ່ໃຫ້ເດັກນ້ອຍເຮັດຜິດກົດໝາຍ.

ນອກຈາກນັ້ນ, ອົງການ UNICEF ຍັງໄດ້ສືບຕໍ່ສະໜັບສະໜູນການສ້າງຄວາມສາມາດໃຫ້ກັບພະນັກງານຈາກຂະແໜງຍຸຕິທຳ ແລະ ຂະແໜງການອື່ນໆທີ່ກ່ຽວຂ້ອງ ທັງໃນສູນກາງ ແລະ ທ້ອງຖິ່ນ ໂດຍການເຮັດປະຖົມນິເທດ ກ່ຽວກັບສົນທິສັນຍາວ່າດ້ວຍສິດທິເດັກ ແລະ ການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍຂັ້ນຕອນການດຳເນີນຄະດີເຍົາວະຊົນ; ການຝຶກອົບຮົມ, ການຊ່ວຍເຫຼືອທາງກົດໝາຍ ແລະ ທາງສັງຄົມ, ການເຂົ້າຫາທະນາຄວາມ, ຕຳຫຼວດບ້ານ, ຕຳຫຼວດເຂດ, ຂັ້ນເມືອງ ແລະ ຂັ້ນແຂວງ; ແລະ ການພັດທະນາຄູ່ມືການຝຶກອົບຮົມ ກ່ຽວກັບສິດທິເດັກ ແລະ ຄວາມຍຸຕິທຳສຳລັບເດັກ ໃຫ້ກັບໂຮງຮຽນຕຳຫຼວດ, ສະຖາບັນຄົ້ນຄວ້າ ແລະ ຝຶກອົບຮົມໄອຍະການ, ສະຖາບັນຄົ້ນຄວ້າ ແລະ ຝຶກອົບຮົມສຳລັບຜູ້ພິພາກສາ ແລະ ສະຖາບັນຍຸຕິທຳ.

> **ອົງການ UNCITRAL ໄດ້ໃຫ້ການຊ່ວຍເຫຼືອດ້ານວິຊາການ ໃນການສ້າງຂອບກົດໝາຍໃຫ້ເຂັ້ມແຂງຂຶ້ນ ເຊິ່ງຈະຊ່ວຍພັດທະນາ ພາກເອກະຊົນ ແລະ ສົ່ງເສີມການຄ້າຂາຍຂ້າມຊາຍແດນທີ່ອີງໃສ່ກົດລະບຽບ.**

ອົງການ UNFPA ແລະ UN Women ໄດ້ຮ່ວມມືກັບ ສູນກາງສະຫະພັນແມ່ຍິງລາວ ແລະ ຄະນະກຳມະທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ ສ້າງຕັ້ງສູນທີ່ເປັນມິດຕໍ່ກັບແມ່ຍິງຂຶ້ນມາ 2 ແຫ່ງ ໃນເຂດທີ່ໄດ້ຮັບຜົນກະທົບຈາກໄພນ້ຳຖ້ວມ ໃນແຂວງອັດຕະປື ເພື່ອປ້ອງກັນ ແລະ ແກ້ໄຂບັນຫາ ການນຳໃຊ້ຄວາມຮຸນແຮງບົນພື້ນຖານບົດບາດຍິງ – ຊາຍ ໃນການຕອບໂຕ້ສຸກເສີນ ແລະ ເພື່ອໃຫ້ໝັ້ນໃຈວ່າ ແມ່ຍິງທີ່ຕົກເປັນເຍື່ອຂອງຄວາມຮຸນແຮງນັ້ນ ໄດ້ຮັບການສະໜັບສະໜູນ ແລະ ຖືກສົ່ງຕໍ່ເພື່ອເຂົ້າຮັບການບໍລິການ. ມີການສ້າງຕັ້ງ ວິທີການສົ່ງຕໍ່ເບື້ອງຕົ້ນຂຶ້ນມາ ເພື່ອສົ່ງຕໍ່ຄະດີທີ່ກ່ຽວກັບການນຳໃຊ້ຄວາມຮຸນແຮງບົນພື້ນຖານບົດບາດຍິງ – ຊາຍ ພາຍໃນແຂວງ ແລະ ໄປຫາຂັ້ນອື່ນໆ.

ອົງການ UN Women ໄດ້ສະໜັບສະໜູນການຝຶກອົບຮົມ ໃຫ້ກັບຄະນະກຳມະການຫຼຸດຜ່ອນຄວາມສ່ຽງໄພພິບັດ ແລະ ໜ່ວຍງານໄກ່

> **ໂດຍການສະໜັບສະໜູນຈາກອົງການ UNICEF, ກະຊວງຍຸຕິທຳ ໄດ້ຂະຫຍາຍໂຄງການແກ້ໄຂບັນຫາດ້ວຍ ກົດໝາຍໃຫ້ກັບເດັກທີ່ຢູ່ໃນຄວາມຂັດແຍ່ງ ໂດຍມີຊຸມຊົນເປັນເຈົ້າໄປສູ່ ແຂວງຊຽງຂວາງ ແລະ ສະຫວັນນະເຂດ.**

ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ, ມີການນຳໃຊ້ຄູ່ມືຝຶກອົບຮົມ ເພື່ອສ້າງຄວາມເຂົ້າໃຈຕໍ່ກັບສາເຫດ, ຂະບວນການໄກ່ເກ່ຍ ແລະ ຜົນກະທົບຂອງການນຳໃຊ້ຄວາມຮຸນແຮງຕໍ່ກັບແມ່ຍິງ; ແລະ ມີການປະເມີນຄວາມບອບບາງ ແລະ ຄວາມສາມາດ ໃນການແກ້ໄຂ ຄະດີກ່ຽວກັບການນຳໃຊ້ຄວາມຮຸນແຮງຕໍ່ກັບແມ່ຍິງ. ມີການສ້າງ ຄູ່ມືຂະບວນການໄກ່ເກ່ຍ ແລະ ນຳໃຊ້ເຂົ້າໃນການຝຶກອົບຮົມ ພະນັກງານຍຸຕິທຳ, ພະນັກງານສານ, ພະນັກງານສະຫະພັນແມ່ຍິງລາວ ແລະ ຕຳຫຼວດ ຈາກ 5 ເມືອງ ໃນແຂວງຫຼວງນ້ຳທາ ແລະ 8 ເມືອງ ໃນແຂວງສາລະວັນ, ເປັນການເສີມຂະຫຍາຍຄວາມຮູ້, ທັກສະ ແລະ ຄວາມໝັ້ນໃຈ ກ່ຽວກັບບົດບາດຍິງ – ຊາຍ, ການນຳໃຊ້ຄວາມຮຸນແຮງຕໍ່ກັບແມ່ຍິງ ແລະ ເດັກຍິງ ແລະ ສິດທິຂອງຜູ້ຖືເຄາະຮ້າຍ ເຂົ້າໃນຂະບວນການໄກ່ເກ່ຍ.

ອີງຕາມບົດລາຍງານການຄ້າມະນຸດປີ 2018 ໄດ້ໃຫ້ຮູ້ວ່າ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ແມ່ນມີ 86 ຄົນ. ຜູ້ຖືກເຄາະຮ້າຍເຫຼົ່ານີ້ ໄດ້ຖືກສົ່ງຕໍ່ໄປຫາຜູ້ໃຫ້ບໍລິການ ແລະ ໜ່ວຍງານຂອງລັດຖະບານ ຕາມຄວາມເໝາະສົມ ເພື່ອຮັບການຊ່ວຍເຫຼືອໂດຍກົງ ເຊັ່ນ: ການຊ່ວຍເຫຼືອທາງດ້ານຈິດໃຈ ແລະ ການປິ່ນປົວ, ການໃຫ້ຄຳປຶກສາທາງກົດໝາຍ, ການຝຶກອົບຮົມວິຊາຊີບ ແລະ ການກັບຄືນສູ່ສັງຄົມ. ໃນໄລຍະຂອງການລາຍງານນັ້ນ, ອົງການ IOM ໄດ້ສະໜັບສະໜູນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ແລະ ແຮງງານເຄື່ອນຍ້າຍທີ່ມີຄວາມສ່ຽງ ທັງໝົດ 201 ຄົນ ໂດຍການເຂົ້າຊ່ວຍເຫຼືອໂດຍກົງ. ການຊ່ວຍເຫຼືອໂດຍກົງລວມມີ ການກວດສຸຂະພາບ, ການໃຫ້ອາຫານ ແລະ ເຄື່ອງນຸ່ງ, ອຸປະກອນຊ່ວຍເຫຼືອທາງດ້ານຈິດໃຈ, ທີ່ພັກອາໄສໃນສູນຂອງສະຫະພັນແມ່ຍິງລາວ, ໃຫ້ເງິນຕິດຖົງ ໃນເວລາພວກເຂົາກັບຄືນໄປບ້ານທີ່ຈາກມາ. ໃນທັງໝົດ 201 ກໍລະນີນີ້, ມີແຮງງານທີ່ກັບມາແຕ່ປະເທດໄທ 122 ຄົນ, ຖືກຄ້າມະນຸດໄປຈີນ 5 ຄົນ ແລະ ຖືກຄ້າມະນຸດໄປໄທ 32 ຄົນ. ປະເພດຂອງການຫາຜົນປະໂຫຍດຈາກເຍື່ອຖືກເຄາະຮ້າຍນີ້ ມີນັບຕັ້ງແຕ່ການບັງຄັບຂາຍໂສເພນີ, ການຂູດຮີດແຮງງານ ໄປຮອດການບັງຄັບແຕ່ງງານ ຫຼື ການແຕ່ງງານແບບປິດບັງ. ອົງການ IOM ໄດ້ສະໜັບສະໜູນ ອົງການໄອຍະການປະຊາຊົນສູງສຸດ ພັດທະນາຄູ່ມືການດຳເນີນຄະດີການຄ້າມະນຸດ ແລະ ຄູ່ມືແນະນຳສຳລັບຄູຝຶກ. ທັງສອງຢ່າງນີ້ ຈະເປັນເຄື່ອງມືທີ່ສຳຄັນ ໃນການເສີມຂະຫຍາຍຄວາມສາມາດຂອງໄອຍະການໃນການສືບສວນສອບສວນ ແລະ ດຳເນີນຄະດີຜູ້ກະທຳຜິດໃນຂໍ້ຫາຄ້າມະນຸດ.

## ບົດຮຽນທີ່ຖອດຖອນໄດ້ ແລະ ທິດທາງຕໍ່ໜ້າ

ເຖິງແມ່ນວ່າ ສປປ ລາວ ຈະມີຄວາມຄືບໜ້າທີ່ດີ ໃນການລາຍງານໃຫ້ກັບອົງການສົນທິສັນຍາກໍຕາມ, ແຕ່ຂໍ້ສະເໜີແນະທີ່ໄດ້ນັ້ນ ຈະຕ້ອງໄດ້ຮັບການຈັດຕັ້ງປະຕິບັດ ແລະ ຕິດຕາມຢ່າງໃກ້ຊິດ. ສິ່ງນີ້ ໄດ້ຮຽກຮ້ອງໃຫ້ມີການສະໜັບສະໜູນເພີ່ມເຕີມ ໃຫ້ກັບລັດຖະບານ ພ້ອມກັບອົງການທີ່ຮັບຜິດຊອບດ້ານກົດໝາຍ ແລະ ອົງການບໍລິ

ຫານ, ສະມາຄົມບໍ່ຫວັງຜົນກຳໄລ ແລະ ປະຊາຊົນທົ່ວໄປ.

ຄວາມສາມາດກ່ຽວກັບຄວາມສະເໝີພາບລະຫວ່າງຍິງ – ຊາຍ ແລະ ສິດທິມະນຸດ ໃນຂະແໜງກົດໝາຍ ຍັງຕ້ອງໄດ້ຮັບການປັບປຸງໃຫ້ເຂັ້ມແຂງຕໍ່ໄປ ເນື່ອງຈາກຈຳນວນຄູຝຶກທີ່ມີຄຸນວຸດທິຍັງມີຈຳກັດ.

ຍັງຕ້ອງໄດ້ສ້າງ ກົນໄກການສົ່ງຕໍ່ແຫ່ງຊາດໃຫ້ສົມບູນ ເພື່ອຊ່ວຍເຫຼືອ ແລະ ປົກປ້ອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ. ອົງການ IOM ຮ່ວມກັບ ອົງການຈັດຕັ້ງອື່ນໆ ທີ່ເຂົ້າຮ່ວມໃນການຕໍ່ສູ້ການຄ້າມະນຸດ ຈະສືບຕໍ່ໃຫ້ການສະໜັບສະໜູນໃນດ້ານນີ້.



# ການສື່ສານຮ່ວມ

## ເບິ່ງຄືນຫຼັງ

ໃນປີ 2018, ກຸ່ມສື່ສານຮ່ວມຂອງອົງການ ສປຊ ໄດ້ສືບຕໍ່ເຮັດວຽກເພື່ອຍົກສູງບົດບາດຂອງອົງການ ສປຊ ໃນ ສປປ ລາວ. ກຸ່ມສື່ສານຮ່ວມຂອງອົງການ ສປຊ ໄດ້ອີງໃສ່ ຍຸດທະສາດການສື່ສານຮ່ວມຂອງອົງການຕ່າງໆໃນລະບົບ ສປຊ ໄລຍະ 2017-2021, ບົດແນະນໍາການສື່ສານແບບເປັນໜຶ່ງດຽວຂອງອົງການ ສປຊ, ຂອບການຮ່ວມມືເພື່ອການພັດທະນາ ລະຫວ່າງ ສປປ ລາວ ແລະ ອົງການ ສປຊ ໄລຍະ 2017-2021 ແລະ ຖະແຫຼງການວຽງຈັນວ່າດ້ວຍການພັດທະນາທີ່ມີປະສິດທິຜົນ.

> **ປີ 2018 ໄດ້ມີການນໍາໃຊ້ ຄໍາເວົ້າ #IamDevelopment ໃນການນໍາສະເໜີຂໍ້ຄວາມບໍ່ວ່າຈະເປັນ ທາງອອນໄລ໌ນ ແລະ ເອກະສານຕ່າງໆ ເພື່ອປູກຝັງ ຄວາມຮູ້ສຶກຂອງການມີສ່ວນຮ່ວມຂອງໝົດທຸກຄົນ ໃນການບັນລຸ SDGs ແລະ ເປົ້າໝາຍ ການພັດທະນາຂອງຊາດ.**

ໃນປີ 2018 ສປປ ລາວ ໄດ້ບັນລຸຄາດໝາຍການພັດທະນາຫຼາຍອັນທີ່ສໍາຄັນ. ສປປ ລາວ ໄດ້ຮັບການຢືນຢັນວ່າມີເງື່ອນໄຂຄົບຖ້ວນເພື່ອຫຼຸດພົ້ນອອກຈາກສະຖານະພາບການເປັນປະເທດດ້ອຍພັດທະນາ[1] ຈາກຄະນະກໍາມະການວ່າດ້ວຍນະໂຍບາຍການພັດທະນາ ໃນເດືອນມີນາ 2018. ກຸ່ມສື່ສານອົງການ ສປຊ ໄດ້ເຂົ້າຮ່ວມການລາຍງານ ຂ່າວດັ່ງກ່າວນີ້ ໃນສື່ສິ່ງພິມ ແລະ ສື່ສັງຄົມອອນໄລ໌ນ. ການອອກແບບ ບົດລາຍງານແຫ່ງຊາດແບບສະໝັກໃຈກ່ຽວກັບການຈັດຕັ້ງປະຕິບັດເປົ້າໝາຍການພັດທະນາແບບຍືນຍົງ 2030[2] ສະບັບທໍາອິດ ຂອງ ສປປ ລາວ ໄດ້ຮັບການສະໜັບສະໜູນຈາກ ກຸ່ມສື່ສານອົງການ ສປຊ ເຊັ່ນດຽວກັບເວລານໍາ ສະເໜີບົດລາຍງານດັ່ງກ່າວທີ່ເວທີການເມືອງລະດັບສູງ ຂອງອົງການສະຫະປະຊາຊາດສໍາລັບການພັດທະນາແບບຍືນຍົງ ໃນ ເດືອນກໍລະກົດ[3], ກຸ່ມສື່ສານອົງການ ສປຊ ຍັງໄດ້ເຮັດການໂຄສະນາແບບສະເພາະ[4] tເພື່ອຍົກລະດັບຄວາມ ເຂົ້າໃຈກ່ຽວກັບການລາຍງານດັ່ງກ່າວໃນໂລກອອນໄລ໌ນໃຫ້ຫຼາຍຂຶ້ນ. ມີການຊ່ວຍເຫຼືອດ້ານການອອກແບບ ແລະ ປູກຈິດສໍານຶກ ກ່ຽວກັບ ການທົບທວນກາງສະໄໝແຜນພັດທະນາເສດຖະກິດ – ສັງຄົມແຫ່ງຊາດ ຄັ້ງທີ VIII ໂດຍຜ່ານການນໍາສະເໜີຂ່າວກ່ຽວກັບກອງ ປະຊຸມໂຕະມົນ. ເມື່ອພິຈາລະນາເຖິງຈໍານວນຜູ້ໃຊ້ໂທລະສັບມືຖືທີ່ ເພີ່ມຂຶ້ນ ແລະ ອິນເຕີເນັດທີ່ມີຄວາມໄວສູງຂຶ້ນເຮັດໃຫ້ຜູ້ອ່ານສາ ມາດເຂົ້າເຖິງເນື້ອຫາຂອງການສື່ສານໄດ້ກ້ວາງຂຶ້ນ. ຄໍາໝັ້ນສັນຍາຂອງລັດຖະບານ ຕໍ່ກັບການພັດທະນາ ແລະ ປັບປຸງ ດ້ານໂທລະຄົມມະນາ ຄົມ ຈະຊ່ວຍສ້າງພື້ນຖານທີ່ດີ ໃຫ້ກັບກຸ່ມສື່ສານອົງການ ສປຊ ນໍາ ສະເໜີ ເນື້ອຫາໃໝ່ໆໃຫ້ກັບຜູ້ອ່ານຈາກຫຼາກຫຼາຍກຸ່ມຄົນ.

ເພີ່ມເຕີມໃສ່ການນໍາສະເໜີຂ່າວໄພນໍ້າຖ້ວມໃນທົ່ວປະເທດ ລະຫວ່າງ ເດືອນກໍລະກົດ ແລະ ກັນຍາແລ້ວ, ກຸ່ມສື່ສານອົງການ ສປຊ ຍັງໄດ້ເຂົ້າຮ່ວມຢ່າງຫ້າວຫັນ ກັບກຸ່ມສື່ສານວຽກສຸກເສີນ ເພື່ອຮັບປະກັນການນໍາສະເໜີຂໍ້ມູນຫຼ້າສຸດຢູ່ເທິງເວັບໄຊ໋ຂອງອົງການ ສປຊ ໃນ ສປປ ລາວ ໂດຍນໍາໃຊ້ ໜ້າເວັບໄຊ໋ເພື່ອຕິດຕາມສະຖານະການນໍ້າຖ້ວມແບບສະເພາະ[5] ແລະ ໃຫ້ຂໍ້ມູນໃນສື່ສັງຄົມອອນໄລ໌ນ. ການປະເມີນຫຼັງເກີດໄພພິບັດ ທີ່ເຮັດຮ່ວມກັນລະຫວ່າງ ລັດຖະບານ, ທະນາຄານໂລກ, ສະຫະພາບເອີຣົບ ແລະ ອົງການ ສປຊ ໄດ້ຮັບ ການສະໜັບສະໜູນດ້ານການສື່ສານແບບສະເພາະ[6], ລວມທັງການ ນໍາສະເໜີຂໍ້ມູນກ່ຽວກັບຜົນຂອງການປະເມີນ[7]. ຫຼັງຈາກທີ່ ສປປ ລາວ ໄດ້ຮັບທຶນຊ່ວຍເຫຼືອຈາກ ກອງທຶນຕອບໂຕ້ສຸກເສີນແຫ່ງສະ ຫະປະຊາຊາດ[8] (CERF), ຈັດຕັ້ງປະຕິບັດໂດຍ 4 ອົງການ ທີ່ມີຫ້ອງການປະຈໍາປະເທດແລ້ວ, ກຸ່ມສື່ສານອົງການ ສປຊ ໄດ້ສະໜັບສະໜູນໃນການລະດົມຊັບພະຍາກອນ ໂດຍອີງໃສ່ແຜນປະຕິບັດງານການສື່ສານທີ່ສ້າງຂຶ້ນມາແບບສະເພາະ. ແຕ່ກໍໜ້າເສຍດາຍ ທີ່ໂອກາດໃນການສື່ສານດ້ານມະນຸດສະທໍາໄດ້ປິດລົງ ກ່ອນທີ່ຈະມີການສື່ສານທີ່ກ່ຽວຂ້ອງອອກໄປເຖິງທາງນອກ ເນື່ອງຈາກກົນໄກການອະນຸມັດທີ່ຊັບຊ້ອນ ພາຍໃນ ອົງການ ສປຊ ເອງ.

ປີ 2018 ໄດ້ນໍາໃຊ້ຄໍາເວົ້າ #IamDevelopment ໃນການນໍາ ສະເໜີຂໍ້ຄວາມບໍ່ວ່າຈະເປັນທາງອອນໄລ໌ນ ແລະ ເອກະສານຕ່າງໆ ເພື່ອປູກຝັງຄວາມຮູ້ສຶກຂອງການມີສ່ວນຮ່ວມຂອງໝົດທຸກຄົນ ໃນການບັນລຸ SDGs ແລະ ເປົ້າໝາຍການພັດທະນາຂອງຊາດ.ຂະບວນການດັ່ງກ່າວ ເລີ່ມຈາກການແນະນໍາຕົວລະຄອນ ທີ່ອອກແບບໂດຍອົງການ UNFPA: ນາງນ້ອຍ[9] ໃນເທິງໜ້າ ເຟດສ໌ບຸກ ຂອງອົງການ ສປຊ ໃນ ສປປ ລາວ. ງານສະເຫຼີມສະຫຼອງວັນ ສປຊ ໃນປີນີ້ແມ່ນຈັດຂຶ້ນພາຍໃຕ້ຄໍາຂວັນ ທາງເລືອກຂອງຂ້ອຍ ຄືອະນາຄົດຂອງພວກເຮົາ[10] ທີ່ ສູນກາງຊາວໜຸ່ມ ປະຊາຊົນ ປະຕິວັດລາວ ເຊິ່ງໄດ້ຍົກລະດັບຄວາມເຂົ້າໃຈໃຫ້ກັບຊາວໜຸ່ມລາວຈໍານວນ 150 ຄົນຈາກນະຄອນຫຼວງວຽງຈັນ ກ່ຽວກັບການດໍາລົງຊີວິດແບບມີຄວາມຮັບຜິດຊອບ ແລະ ຍືນຍົງ. ນອກຈາກນັ້ນຍັງມີການຈັດແຂ່ງຂັນອອນໄລ໌ນວ່າດ້ວຍ ການຫຼຸດຜ່ອນຂີ້ເຫຍື້ອປຼາສຕິກ[11], ການປະພຶດດ້ານສຸຂະພາບ[12] ແລະ ການຮັບມືກັບການປ່ຽນແປງດິນຟ້າອາກາດ[13], ເຊິ່ງສາມາດເຂົ້າເຖິງໄດ້ຫຼາຍກ່ວາ 400,000 ຄົນ ແລະ ມີຫຼາຍກ່ວາ 28,000 ຄົນ ເຂົ້າຮ່ວມການແຂ່ງຂັນດັ່ງກ່າວເທິງເຟດສ໌ບຸກ. ການແຂ່ງຂັນໃນສື່ສັງຄົມອອນໄລ໌ນ ແມ່ນເຮັດຮ່ວມກັບ Global Shapers Vientiane ແລະ Green Vientiane ເຊິ່ງເປັນກຸ່ມທີ່ເຮັດວຽກເພື່ອຫຼຸດຜ່ອນຂີ້ເຫຍື້ອ ໃນ ສປປ ລາວ.

ໄດ້ມີການຜັກດັນຂໍ້ຄວາມເພື່ອສົ່ງເສີມການຫຼຸດຜ່ອນຂີ້ເຫຍື້ອປຼາສຕິກອອກໄປຕື່ມອີກ ໂດຍມີທີມງານເຄື່ອນໄຫວໃນງານບຸນຊ່ວງເຮືອນະຄອນຫຼວງວຽງຈັນປະຈໍາປີ 2018 ແລະ ໃນຮູບເງົາທີ່ກ່ຽວຂ້ອງ[14] ເຮັດໃຫ້ສາມາດເຂົ້າເຖິງຫຼາຍກ່ວາ 7,600 ຄົນ ໃນສື່ສັງຄົມອອນໄລ໌ນ ແລະ ມີການແຊຣ ເຖິງ 50 ຄັ້ງ. ລັດຖະບານຍັງໄດ້ຮັບເອົາຂໍ້ຄວາມດັ່ງກ່າວ ເຊິ່ງເຮັດໃຫ້ກອງປະຊຸມໂຕະມົນປະຈໍາປີ 2018[15] ກາຍເປັນງານກອງປະຊຸມທີ່ຫຼຸດຜ່ອນການໃຊ້ປຼາສຕິກ ແລະ ເຈ້ຍພ້ອມທັງເປັນມິດຕໍ່ກັບສິ່ງ ແວດລ້ອມ. ນອກຈາກນັ້ນ ກໍມີການຫຼຸດຜ່ອນການນໍາໃຊ້ປຼາສຕິກ ໃນ ງານສະເຫຼີມສະຫຼອງວັນສິດທິມະນຸດປະຈໍາປີ 2018 ແລະ ງານຖະແຫຼງການສາກົນວ່າດ້ວຍສິດທິມະນຸດ

1 goo.gl/r8roMv

2 goo.gl/3pjDkh

3 goo.gl/TSEhcq

4 goo.gl/WLhPkJ

5 www.la.one.un.org/flood-tracker

6 goo.gl/nsNMHP

7 goo.gl/sJQ8qq

8 goo.gl/kv5Xo6

9 goo.gl/R39f3U

10 goo.gl/wxkCYs

11 goo.gl/bD9pvn

12 goo.gl/sqYa4k

13 goo.gl/xFYFWh

14 goo.gl/n9acu9

15 goo.gl/XTQx7p

ຄົບຮອບ 70 ປີ[16], ເຊິ່ງຈັດຂຶ້ນໂດຍລັດຖະບານ, ສະຫະພາບເອີຣົບ ແລະ ສະຖານທູດອົດສະຕຣາລີ.

ກຸ່ມສື່ສານອົງການ ສປຊ ໄດ້ເຂົ້າຮ່ວມງານທີ່ສຳຄັນຫຼາຍອັນ ທີ່ຈັດຂຶ້ນທຸກໆປີ ໃນນັ້ນງານທີ່ໂດດເດັ່ນແມ່ນ ກອງປະຊຸມໂຕະມົນປະຈຳປີ 2018[17] ທີ່ ນະຄອນຫຼວງວຽງຈັນ (ລວມທັງການຖ່າຍທອດສົດພິທີເປີດງານຜ່ານໜ້າເວັບໄຊ້[18]) ແລະ ຮັບປະກັນວ່າ ຄົນຮັບຮູ້ ເຖິງການປະກອບສ່ວນຂອງອົງການ ສປຊ ໃນການວາງສະແດງກ່ຽວກັບການພັດທະນາ ໃນຊ່ວງໄລຍະຂອງກອງປະຊຸມ. ສິ່ງນີ້ຍັງລວມເຖິງການໂຄສະນາແບບສະເພາະ ເນື່ອງໃນໂອກາດວັນອາສາສະໝັກສາກົນ ພາຍໃຕ້ຄຳຂວັນ "ອາສາສະໝັກເພື່ອສ້າງຊຸມຊົນໃຫ້ມີຄວາມທົນທານ"[19].

ມີການຈັດງານສະເຫຼີມສະຫຼອງ ວັນແມ່ຍິງສາກົນ[20], ວັນອາຫານໂລກ[21] ແລະ ວັນສາກົນຕ້ານເອດ[22] ແລະ ກຸ່ມສື່ສານອົງການ ສປຊ ກໍໄດ້ໃຫ້ການຊ່ວຍເຫຼືອໃນການລາຍງານກ່ຽວກັບງານດັ່ງກ່າວ.

ໃນໄລຍະປີ 2018 ໄດ້ມີການພິມເຜີຍແຜ່ບົດຄວາມປະມານ 100 ບົດຄວາມ ຜ່ານສຳນັກຂ່າວສື່ພິມແຫ່ງຊາດທັງ 7 ແຫ່ງ ເຊິ່ງເຂົ້າເຖິງຜູ້ອ່ານໄດ້ເຖິງ 70,000 ຄົນ ໃນ ສປປ ລາວ ພ້ອມກັບຫຼາຍບົດຄວາມທີ່ໄດ້ຕີພິມໃນສຳນັກຂ່າວອື່ນໆ ເຊິ່ງມີທີ່ມາຈາກອົງການຕ່າງໆໃນລະບົບ ສປຊ. ໂທລະພາບແຫ່ງຊາດລາວ ໄດ້ອອກຂ່າວ ຢ່າງໜ້ອຍ 7 ເຫດການ ແລະ ກອງປະຊຸມ ທີ່ກຸ່ມສື່ສານອົງການ ສປຊ ໄດ້ມີສ່ວນຮ່ວມນຳ. ສື່ໃນລະດັບພາກພື້ນ ລວມທັງ ສຳນັກຂ່າວຊິນຫົວ (Xinhua) ແລະ ສຳນັກຂ່າວສານຫວຽດນາມ (Vietnam News) ໄດ້ເຜີຍແຜ່ຢ່າງໜ້ອຍ 3 ເລື່ອງ ທີ່ກຸ່ມສື່ສານອົງການ ສປຊ ຜະລິດອອກມາ.

ໃນປີ 2018, ຈຳນວນຜູ້ນຳໃຊ້ສື່ດິຈິຕ໋ອນ ຂອງອົງການ ສປຊ ຢູ່ ສປປ ລາວ ໄດ້ເພີ່ມຂຶ້ນເປັນຈຳນວນຫຼາຍ:

**ເວັບໄຊ໋**[23]: ມີການເຂົ້າຊົມ 106,856 ຄັ້ງ (ຜູ້ເຂົ້າມາຢ້ຽມຊົມ ທັງໝົດ), (ຮອດເດືອນທັນວາ 2017 ມີ 63,039 ຄັ້ງ; ແລະ 53,992 ຄັ້ງ ໃນປີ 2016). ເວລາສະເລ່ຍຂອງການເຂົ້າອ່ານຕໍ່ໜ້າ ແມ່ນ: 3:10 ນາທີ (ໃນປີ 2017 ແມ່ນ 3:26 ນາທີ; ປີ 2016 ແມ່ນ 1:44 ນາທີ – ຫຼາຍກ່ວາ 1:00 ນາທີ ຖືວ່າເປັນເວລາສະເລ່ຍທີ່ດີ ສຳລັບເວັບໄຊ໋ທີ່ເຜີຍແຜ່ຂໍ້ມູນຂ່າວສານ). ອັດຕາການຕີກັບ (ຜູ້ເຂົ້າເບິ່ງເວັບໄຊ໋ພຽງໜ້າດຽວ, ຖ້າມີອັດຕາສ່ວນຮ້ອຍສູງ ແມ່ນຍິ່ງເປັນການດີ ເພາະວ່າຄົນສາມາດຊອກຫາສິ່ງທີ່ເຂົາຕ້ອງການຢາກອ່ານໄດ້ໄວ) ແມ່ນ: 61.65% (2017: 60.15%; 2016: 51%). ໜ້າເວບໄຊ໋ທີ່ມີຄົນເຂົ້າເບິ່ງຫຼາຍແມ່ນ: ໜ້າຂໍ້ມູນຕຳແໜ່ງງານຫວ່າງ (Vacancies), ໜ້າຫຼັກ (Home page), ໜ້າກ່ຽວກັບເປົ້າໝາຍການພັດທະນາແບບຍືນຍົງ (SDGs).

**ເຟດສ໌ບຸກ**[24]: ມີຄົນກົດມັກ (Likes) ເຖິງ 10,643 ຄັ້ງ ເພີ່ມຂຶ້ນຈາກ 7,384 ຄັ້ງ ໃນເດືອນທັນວາ ປີ 2017 ແລະ 4,791 ຄັ້ງ ໃນປີ 2016. ຕົວເລກທີ່ເຂົ້າເຖິງສູງສຸດແມ່ນ: 168,248 ຄັ້ງ ໂດຍການຈ່າຍຄ່າໂຄສະນາໂພ໌ສວີດີໂອ ການຮັບມືກັບ ການປ່ຽນແປງດິນຟ້າອາກາດ[25], ເຊິ່ງໃນນັ້ນມີປະມານ 7,000 ຄັ້ງທີ່ເຫັນໂພ໌ສດ້ວຍຕົນເອງ (ໃນປີ 2017: ມີທັງໝົດ 471,100 ຄັ້ງ ໃນນັ້ນມີປະມານ 4,227 ຄັ້ງ ທີ່ເຫັນໂພ໌ສຮູບເງົາການພັດທະນາແບບຍືນຍົງດ້ວຍຕົນເອງ ແລະ ມີການຈ່າຍຄ່າໂຄສະນາເພື່ອໃຫ້ເຂົ້າເຖິງຄົນໄດ້ຫຼາຍຂຶ້ນ; ໃນປີ 2016: ມີທັງໝົດ 51,900 ຄັ້ງ ຈາກການປະກາດ ການມາຢ້ຽມຢາມເຮັດວຽກຢູ່ລາວຂອງເລຂາທິການໃຫຍ່ອົງການ ສປຊ, ທ່ານ ບັນ ຄີ – ມູນ). ຕົວເລກມັກສູງສຸດແມ່ນ: 7,707 ຄັ້ງ (5,021 ຄັ້ງ ໃນປີ 2017; 3,220 ຄັ້ງ ໃນປີ 2016), ເຊິ່ງ ອັດຕາສ່ວນຮ້ອຍສູງສຸດຂອງເພດຍິງ (22%) ແມ່ນ ແມ່ຍິງອາຍຸລະຫວ່າງ 18-24 ປີ ແລະ ອັດຕາສ່ວນຮ້ອຍສູງສຸດຂອງເພດຊາຍ (21%) ແມ່ນ ຜູ້ຊາຍອາຍຸລະຫວ່າງ 25-34 ປີ. ໂດຍລວມແລ້ວ ມີຜູ້ຊາຍເຂົ້າມາໃຊ້ຫຼາຍກ່ວາແມ່ຍິງ ພຽງໜ້ອຍດຽວ (ຜູ້ຊາຍ: 51%).

> “ເລີ່ມຕັ້ງແຕ່ປີ 2017 ເປັນຕົ້ນມາ, ກຸ່ມສື່ສານອົງການ ສປຊ ໄດ້ມີຜົນສຳເລັດ ໃນການນຳສະເໜີ ອົງການ ສປຊ ໃນ ສປປ ລາວ ເປັນອົງກອນ ທີ່ເປີດເຜີຍ ແລະ ເຂົ້າເຖິງໄດ້ງ່າຍ ທີ່ດຶງເອົາການມີສ່ວນ ຮ່ວມຂອງຊາວໜຸ່ມ ແລະ ຊຸກຍູ້ການປະກອບສ່ວນຂອງໝົດທຸກຄົນໃນທົ່ວປະເທດ ເຂົ້າໃນເປົ້າໝາຍແຫ່ງຊາດ.”

**ທະວິດເຕີ**[26]: ມີຜູ້ຕິດຕາມທັງໝົດ 1,013 ຄົນ ເຊິ່ງເພີ່ມຂຶ້ນຈາກ 696 ຄົນ ໃນເດືອນທັນວາ 2017 ແລະ 352 ຄົນ ໃນເດືອນ ທັນວາ 2016.

ທະວິດທີ່ໄດ້ຮັບຄວາມສົນໃຈສູງທີ່ສຸດແມ່ນ: 2,678 ຄັ້ງ ເຊິ່ງເວົ້າກ່ຽວກັບ ການປະກາດທຶນຊ່ວຍເຫຼືອຈາກ CERF ສຳລັບແຂວງຄຳມ່ວນ[27] (ໃນປີ 2017 ແມ່ນ 7,487 ຄັ້ງ ຈາກການເປີດໂຕບົດລາຍງານພາລະທີ່ເບິ່ງບໍ່ເຫັນຂອງແມ່ຍິງ).

**ເອັກສ໌ໂປດສ໌ເຊີ (Exposure)**[28]: ມີເລື່ອງໃໝ່ 5 ເລື່ອງ ໃນປີ 2018, ມື້ໜຶ່ງໃນຊີວິດຂອງຂ້ອຍໃນຖານະທີ່ເປັນອາສາສະໝັກຂອງ ສປຊ[29] ໄດ້ຮັບການເຂົ້າເບິ່ງ 4,655 ຄັ້ງ (ບໍ່ມີເລື່ອງໃໝ່ໃນປີ 2017. ການເຂົ້າເບິ່ງ ການມາຢ້ຽມຢາມຂອງ ທ່ານ ບັນ ຄີ – ມູນ[30] 1,083 ຄັ້ງ ໃນປີ 2016).

## ບັນດາຍຸດທະສາດໃນອະນາຄົດ

ເລີ່ມຕັ້ງແຕ່ ປີ 2017 ເປັນຕົ້ນມາ, ກຸ່ມສື່ສານອົງການ ສປຊ ໄດ້ມີຜົນສຳເລັດ ໃນການນຳສະເໜີ ອົງການ ສປຊ ໃນ ສປປລາວ ເປັນອົງກອນເປີດເຜີຍ ແລະ ເຂົ້າເຖິງໄດ້ງ່າຍ ທີ່ດຶງເອົາການມີສ່ວນຮ່ວມຂອງຊາວໜຸ່ມ ແລະ ຊຸກຍູ້ການປະກອບສ່ວນຂອງໝົດທຸກຄົນໃນທົ່ວປະເທດ ເຂົ້າໃນເປົ້າໝາຍແຫ່ງຊາດ. ການເສີມສ້າງການພົວພັນລະຫວ່າງໜ້າວຽກຂອງ ອົງການ ສປຊ ແລະ ຄວາມສົນໃຈຂອງປະ

16 goo.gl/rtrAoV

17 goo.gl/xVC8VL

18 goo.gl/vCHBnR

19 goo.gl/jMDpKG

20 goo.gl/M268YK

21 goo.gl/i1RhZ6

22 goo.gl/TefQhv

23 www.la.one.un.org

24 www.facebook.com/UNLaos

25 goo.gl/8jVvRQ

26 www.twitter.com/UNinLaoPDR

27 goo.gl/2SUciC

28 www.uninlaopdr.exposure.co

29 goo.gl/eRgg1e

30 goo.gl/ZjccJ8

ຊາຊິນ ຈະເປັນແກນຫຼັກອັນສຳຄັນ ໃນຄວາມພະຍາຍາມຂອງ ກຸ່ມສື່ສານອົງການ ສປຊ ໃນປີ 2019 ເພື່ອເຮັດການໂຄສະນາ ທັງແບບອອນໄລ໌ນ ແລະ ແບບອອຟໄລ໌ນ.

ຂໍ້ຄວາມກ່ຽວກັບການດຳລົງຊີວິດແບບມີຄວາມຮັບຜິດຊອບ ໂດຍສະເພາະການຫຼຸດຜ່ອນນຳໃຊ້ປຼາສຕິກທີ່ໃຊ້ພຽງຄັ້ງດຽວ ຈະສືບຕໍ່ເປັນຈຸດສຸມຂອງຄວາມພະຍາຍາມໃນປີ 2019 ໂດຍມີ ກຸ່ມສື່ສານອົງການ ສປຊ ເປັນຕົວຫຼັກໃນການເຮັດໂຄສະນາ ແລະ ນຳສະເໜີໃນງານຕ່າງໆທີ່ກ່ຽວຂ້ອງ.

# ການສ້າງລະບົບນິເວດທີ່ເຂັ້ມແຂງ ໃຫ້ກັບ ນາງ ນ້ອຍ: ຄວາມຄືບໜ້າໃນປີ 2018

ໂດຍການສະໜັບສະໜູນຈາກ ທີມງານອົງການ ສປຊ ເຊິ່ງນຳໂດຍອົງການ UNFPA, ໄດ້ມີການສ້າງຂອບແຜນວຽກຂອງນາງນ້ອຍ 2030 ເພື່ອຕິດຕາມຄວາມຄືບໜ້າຂອງຕົວຊີ້ວັດດ້ານການພັດທະນາແບບຍືນຍົງທີ່ຕິດພັນກັບໄວໜຸ່ມຍິງ 700,000 ຄົນ ທີ່ດຳລົງຊີວິດຢູ່ໃນ ສປປ ລາວ. ໂຄງການນາງນ້ອຍ ໄດ້ຖືກເຊື່ອມສານເຂົ້າໃນ ການທົບທວນແບບສະໝັກໃຈກ່ຽວກັບການຈັດຕັ້ງ ປະຕິບັດເປົ້າໝາຍການພັດທະນາແບບຍືນຍົງ ຂອງ ສປປ ລາວ ແລະ ມີຜົນໄດ້ຮັບຄືດັ່ງນີ້:



## ຫຼັກຖານ ແລະ ຂໍ້ມູນ

ມີການເຜີຍແຜ່ ຜົນໄດ້ຮັບຂອງ**ການວິເຄາະສະພາບ ຂອງໄວໜຸ່ມຍິງ ໃນແຂວງບໍ່ແກ້ວ**; ມີການເກັບກຳຂໍ້ມູນໃນ 5 ເມືອງຂອງແຂວງສະຫວັນນະເຂດ; ມີການເຜີຍແຜ່ ຜົນໄດ້ຮັບຂອງ **ການສຳຫຼວດດັດຊະນີໝາຍສັງຄົມລາວ ຄັ້ງທີ II** ແລະ ພ້ອມກັບການຕີພິມບົດສັງລວມຫຍໍ້. ການສະເຫຼີມສະຫຼອງ **ວັນຄົ້ນຄວ້າໄວໜຸ່ມ**ຄັ້ງທີ 3 ໄດ້ເຊີນເອົາຄູ່ຮ່ວມງານຈາກພາກສ່ວນຕ່າງໆ ເພື່ອມາຮ່ວມກັນສະໜັບສະໜູນ ນາງນ້ອຍ.

## ການໂຄສະນາ

ການສະເຫຼີມສະຫຼອງ**ວັນເດັກນ້ອຍສາກົນຍິງ** ໄດ້ຈັດຂຶ້ນໃນເດືອນຕຸລາ. ມີປະມານ 1,000 ຄົນ ເຂົ້າຮ່ວມກອງປະຊຸມສົນທະນາລະດັບສູງ ເຊິ່ງເປັນປະທານໂດຍ ລັດຖະມົນຕີ ກະຊວງສຶກສາທິການ ແລະ ກິລາ. ນອກຈາກນັ້ນ ຍັງມີການປຶກສາຫາລືແບບສອງຝ່າຍ ແລະ ຫຼາຍຝ່າຍ ເພື່ອເພີ່ມການລົງທຶນເຂົ້າໃນໂຄງການນາງນ້ອຍ.

## ຂໍ້ແນະນຳດ້ານນະໂຍບາຍ

ສຳເລັດການສ້າງ ນະໂຍບາຍໄວໜຸ່ມ ແລະ ຊາວໜຸ່ມແຫ່ງຊາດສະບັບທຳອິດ; ທົບທວນຄືນ ນະໂຍບາຍສຸຂະພາບຈະເລີນພັນແຫ່ງຊາດ; ສຳເລັດການສ້າງ ນະໂຍບາຍການພັດທະນາປະຊາກອນແຫ່ງຊາດ; ຫຼາຍກະຊວງ ມີຄວາມເຂົ້າໃຈກ່ຽວກັບ ຕົວຊີ້ວັດ SDG ເພື່ອເຊື່ອມສານເຂົ້າໃນການວາງແຜນໄລຍະຕໍ່ໄປ.

## ສຸຂະພາບຈະເລີນພັນ

ມີການຝຶກອົບຮົມ**ການບໍລິການທີ່ເປັນມິດຕໍ່ກັບໄວໜຸ່ມ ແລະ ຊາວໜຸ່ມ** ໃຫ້ກັບ ຜູ້ໃຫ້ບໍລິການ ຈຳນວນ 188 ຄົນ ໃນ 3 ແຂວງ. ແພດໝໍຈຳນວນ 62 ຄົນ ຈາກໂຮງໝໍເມືອງ 7 ແຫ່ງ ໄດ້ຮັບການຝຶກອົບຮົມ ທັກສະການໃຫ້ຄຳປຶກສາ ແລະ ການເຂົ້າເຖິງປະຊາຊົນ. ມີຊາວໜຸ່ມ ຫຼາຍກ່ວາ 3,246 ຄົນ ໄດ້ຮັບຜົນປະໂຫຍດຈາກກິດຈະກຳການເຂົ້າເຖິງປະຊາຊົນນີ້.

## ຢຸດຕິການນຳໃຊ້ຄວາມຮຸນແຮງ

ສະມາຊິກຈາກກຸ່ມວຽກງານການປົກປ້ອງ, ສະຫະພັນແມ່ຍິງລາວ, ອຳນາດການປົກຄອງແຂວງ ແລະ ແພດໝໍ ຈຳນວນ 32 ຄົນ ໄດ້ຮັບການຝຶກອົບຮົມ ໃນຫົວຂໍ້ ຄວາມຮຸນແຮງບົນພື້ນຖານບົດບາດ ຍິງ – ຊາຍ ແລະ ສຸຂະພາບຈະເລີນພັນ. ມີການສ້າງຕັ້ງສູນທີ່ເປັນມິດຕໍ່ກັບແມ່ຍິງ ຂຶ້ນມາ 2 ສູນ ໃນແຂວງອັດຕະປື ຫຼັງຈາກເກີດໄພນ້ຳຖ້ວມ.

## ເສີມຂະຫຍາຍການເປັນຄູ່ຮ່ວມງານ

ມີການສ້າງຄູ່ຮ່ວມງານຂຶ້ນມາໃໝ່ກັບ ອົງການ UNESCO ແລະ ຕົກລົງເຫັນດີກັບ ອົງການ KOICA ໃນການປະກອບທຶນສົມທົບໃຫ້ກັບໂຄງການນາງນ້ອຍ. ມີການສ້າງຕັ້ງ ຄະນະເຮັດວຽກງານດ້ານໄວໜຸ່ມຍິງ ເຊິ່ງມີສະມາຊິກ 24 ຄົນ ຈາກອົງການຕ່າງໆພາຍໃນ ສປຊ, ອົງການ INGOs, NGOs ແລະ CSOs.

## ໃນໂຮງຮຽນ

ມີການປັບປຸງ ຄູ່ມືສຳລັບອາຈານ ກ່ຽວກັບ**ການສຶກສາທາງເພດແບບຄົບຖ້ວນ**ໃນລະດັບໂຮງຮຽນມັດທະຍົມ ໂດຍອີງໃສ່ຂໍ້ແນະນຳ ຂອງສາກົນ. ພ້ອມກັນນັ້ນ ກໍຍັງມີການສ້າງ ຄູ່ມືການສຶກສາທາງເພດ ແບບຄົບຖ້ວນໃນລະດັບວິຊາຊີບເຊັ່ນກັນ.

## ກິດຈະກຳນອກຮົ້ວໂຮງຮຽນ / ໃນຊຸມຊົນ

ໄວໜຸ່ມຍິງ 200 ຄົນ ຈາກ 9 ບ້ານ ໃນເມືອງເຊໂປນ ຂອງແຂວງສະຫວັນນະເຂດ ໄດ້ຮັບການປັບປຸງດ້ານສຸຂະພາບ, ທັກສະດ້ານ ເສດຖະ ກິດ – ສັງຄົມ ແລະ ທັກສະການຮຽນຮູ້ ໂດຍຜ່ານທີ່ປຶກສາ 20 ຄົນ ຈາກ **ກຸ່ມເດັກຍິງນາງນ້ອຍ**. ຜູ້ປົກຄອງ ແລະ ຊຸມຊົນໃນບັນຫາເຫຼົ່ານີ້ ກໍໄດ້ຮັບການຍົກລະດັບຄວາມເຂົ້າໃຈດີຂຶ້ນ.




# ການປະຕິບັດງານ

ເພື່ອເສີມສ້າງການປະຕິບັດງານໃຫ້ມີຈຸດສຸມທາງຍຸດທະສາດ, ມີປະສິດທິພາບ ແລະ ປະສິດທິຜົນນັ້ນ, ບັນດາອົງການຕ່າງໆ ໃນລະບົບ ສປຊ ໄດ້ມີຄວາມພະຍາຍາມຫຼາຍກ່ວາເກົ່າ ເພື່ອເຮັດວຽກຮ່ວມກັນຢ່າງໃກ້ຊິດ ໃນການກຳນົດ ແລະ ຈັດຕັ້ງປະຕິບັດການຮ່ວມປະຕິບັດງານທີ່ມີປະສິດທິຜົນ ແລະ ມີນະວັດຕະກຳໃໝ່. ທີມງານຄຸ້ມຄອງການຮ່ວມປະຕິບັດງານ ເຊິ່ງນຳໂດຍ ອົງການ UNICEF ໄດ້ເສີມຂະຫຍາຍການຮ່ວມມື ແລະ ການປະຕິບັດງານລະຫວ່າງ ອົງການຕ່າງໆ ແລະ ສາມາດຫຼຸດຕົ້ນທຶນ ໄດ້ ໃນ 5 ຂົງເຂດຫຼັກຂອງການປະຕິບັດງານ ເຊັ່ນ: ການຈັດຊື້ຈັດຈ້າງ, ບຸກຄະລາກອນ, ເຕັກໂນໂລຊີຂໍ້ມູນຂ່າວສານ ແລະ ການສື່ສານ, ການເງິນ, ພາລາທິການ ແລະ ສິ່ງອຳນວຍຄວາມສະດວກລວມທັງການໃຊ້ຫ້ອງການຮ່ວມກັນ. ໃນປີ 2018 ທີມງານຄຸ້ມຄອງການຮ່ວມປະຕິບັດງານ ແລະ ຄະນະວິຊາການດ້ານຕ່າງໆ ໄດ້ປະເມີນວ່າ ຊ່ວຍປະຢັດຄ່າໃຊ້ຈ່າຍໄດ້ເຖິງ US$ 196,500 ໃນ 5 ຂົງເຂດຂອງການປະຕິບັດງານນີ້ ເຮັດໃຫ້ການປະຢັດຄ່າໃຊ້ຈ່າຍແບບສະສົມສຳລັບປີ 2017 ແລະ 2018 ມີເຖິງ US$ 426,500.

ໜ່ວຍງານຍ່ອຍດ້ານການຈັດຊື້ຈັດຈ້າງ ເຊິ່ງນຳໂດຍອົງການ UNDP ສາມາດປະຢັດຄ່າໃຊ້ຈ່າຍໄດ້ US$ 95,000 ໃນປີ 2018 ໂດຍການນຳໃຊ້ວິທີການຈັດຊື້ຈັດຈ້າງແບບໄລຍະຍາວ ລວມທັງເຄື່ອງໃຊ້ ແລະ ອຸປະກອນຫ້ອງການ, ການແປພາສາ, ການຂໍອະນຸມັດຈາກພາສີເພື່ອນຳເອົາສິນຄ້າເຂົ້າມາ, ບໍລິສັດທ່ອງທ່ຽວ ແລະ ການຍົກເວັ້ນອາກອນນ້ຳມັນເຊື້ອໄຟ. ການປະຢັດຄ່າໃຊ້ຈ່າຍທີ່ໄດ້ຫຼາຍທີ່ສຸດກ່ຽວກັບການຈັດຊື້ຈັດຈ້າງ ແມ່ນມາຈາກການນຳໃຊ້ບໍລິສັດທ່ອງທ່ຽວ ແລະ ການຍົກເວັ້ນອາກອນນ້ຳມັນເຊື້ອໄຟ ເຊິ່ງສາມາດຫຼຸດຕົ້ນທຶນໄດ້ US$ 34,000 ແລະ US$ 49,000 ຕາມລຳດັບ.

ໜ່ວຍງານຍ່ອຍດ້ານພາລາທິການ ແລະ ສິ່ງອຳນວຍຄວາມສະດວກ ນຳໂດຍ ອົງການ UNDP ປະຢັດຄ່າໃຊ້ຈ່າຍລວມໄດ້ US$ 3,200. ໜ່ວຍງານຍ່ອຍນີ້ ໄດ້ຮວບຮວມເອົາບັນຊີລາຍຊື່ຜູ້ສະໜອງການບໍລິການແບບຮ່ວມກັນ ທີ່ໄດ້ຮັບການກວດສອບແລ້ວ ລວມທັງການພິມເອກະສານ, ການຂົນສົ່ງເຄື່ອງ, ການອະນາໄມ, ການແປພາສາ,ການເຊົ່າລົດ ແລະ ໂຮງແຮມ. ເນື່ອງຈາກບໍ່ສາມາດຄິດໄລ່ຕົ້ນທຶນທີ່ຫຼຸດລົງ ຈາກການນຳໃຊ້ຜູ້ສະໜອງການບໍລິການແບບຮ່ວມໄດ້, ການປະຢັດຄ່າໃຊ້ຈ່າຍໃນຂົງເຂດນີ້ແມ່ນ ຈາກປະສິດທິພາບຂອງການຂົນສົ່ງທີ່ດີຂຶ້ນ ໂດຍຜ່ານຂໍ້ຕົກລົງການເຊົ່າລົດໄລຍະຍາວ ເຊິ່ງປະຢັດຕົ້ນທຶນໄດ້ US$ 3,200 ໃນ ປີ 2018.

ໜ່ວຍງານຍ່ອຍດ້ານບຸກຄະລາກອນມະນຸດ ນຳໂດຍ ອົງການ WFP ສາມາດປະຢັດລວມໄດ້ US$ 2,300. ໃນປີ 2018, ໜ່ວຍງານຍ່ອຍດັ່ງກ່າວ ໄດ້ແລກປ່ຽນຂໍ້ມູນກ່ຽວກັບຂະບວນການຮັບພະນັກງານ ລວມທັງບັນຊີລາຍຊື່ທີ່ປຶກສາ ແລະ ມີການແລກປ່ຽນກົດລະບຽບພະນັກງານ ສປຊ, ນະໂຍບາຍ ແລະ ຂັ້ນຕອນຕ່າງໆ ເປັນປະຈຳ. ມີການຈັດຝຶກອົບຮົມໃຫ້ກັບພະນັກງານທີ່ມາຈາກຫຼາຍອົງການພາຍໃນລະບົບ ສປຊ ລວມທັງການຝຶກອົບຮົມໃນຫົວຂໍ້ ໂພສະນາການ ແລະ ການແກ້ໄຂຂໍ້ຂັດແຍ່ງ ໃນໄຕມາດທຳອິດຂອງປີ 2019.

ໜ່ວຍງານຍ່ອຍດ້ານການເງິນ ນຳໂດຍ ອົງການ UNICEF ປະຢັດ

> **“ການປະຢັດຄ່າໃຊ້ຈ່າຍແບບສະສົມສຳລັບປີ 2017 ແລະ 2018 ມີເຖິງ US$ 426,500. ນອກຈາກຈະເປັນຍຸດທະສາດໃນການປະຢັດຄ່າໃຊ້ຈ່າຍ ແລະ ເນັ້ນ ໜັກສ້າງຜົນໄດ້ຮັບໃນ 5 ຂົງເຂດຂອງການປະຕິບັດງານແລ້ວ, ທີມງານຄຸ້ມຄອງ ການຮ່ວມປະຕິບັດງານ ຍັງໄດ້ເນັ້ນ ໃສ່ ຄວາມມີປະສິດ ທິຜົນ ແລະ ຄຸນນະພາບຂອງການບໍລິການ ຂອງອົງການຕ່າງໆໃນທົ່ວລະບົບ ສປຊ.”**

ຄ່າໃຊ້ຈ່າຍລວມໄດ້ US$ 52,000 ໂດຍການນຳໃຊ້ຄ່າບໍລິການທະນາຄານອັນດຽວກັນ ແລະ ນຳໃຊ້ທະນາຄານອີເລັກໂຕຼນິກ ແລະ ອັດຕາແລກປ່ຽນເງິນອັນດຽວກັນ. ການປະຢັດຕົ້ນທຶນ ແມ່ນມີຫຼາຍສຸດ ຈາກການຕົກລົງກ່ຽວກັບການແລກປ່ຽນເງິນຕາ ເຊິ່ງອົງການໃນລະບົບ ສປຊ ສາມາດປະຢັດໄດ້ US$ 45,000 ໃນປີ 2018. ໜ່ວຍງານຍ່ອຍດ້ານ ICT ພາຍໃຕ້ການຊີ້ນຳຂອງອົງການ UNFPA ສາມາດປະຢັດຄ່າໃຊ້ຈ່າຍໄດ້ US$ 44,000 ໃນປີ 2018 ໂດຍການນຳໃຊ້ ສັນຍາຮ່ວມໄລຍະຍາວສຳລັບຄ່າເຊົ່າອິນເຕີເນັດ ແລະ ການບຳລຸງຮັກສາອຸປະກອນ ICT ເຊິ່ງເປັນການປະຢັດຕົ້ນທຶນ ແລະ ເວລາ ໃນເວລາດຽວກັນກໍໄດ້ຮັບການບໍລິການທີ່ໄວ້ວາງໃຈໄດ້. ສັນຍາຮ່ວມໄລຍະຍາວສຳລັບຄ່າເຊົ່າອິນເຕີເນັດ ແມ່ນໄດ້ລື່ນຄາດໝາຍເນື່ອງຈາກວ່າ ບາງອົງການພາຍໃນລະບົບ ສປຊ ໄດ້ອິນເຕີເນັດທີ່ມີຄວາມໄວເພີ່ມຂຶ້ນ.

ນອກຈາກຈະເປັນຍຸດທະສາດໃນການປະຢັດຄ່າໃຊ້ຈ່າຍ ແລະ ເນັ້ນໜັກສ້າງຜົນໄດ້ຮັບ ໃນ 5 ຂົງເຂດຂອງການປະຕິບັດງານແລ້ວ, ທີມງານຄຸ້ມຄອງການຮ່ວມປະຕິບັດງານ ຍັງໄດ້ເນັ້ນໃສ່ ຄວາມມີປະສິດທິຜົນ ແລະ ຄຸນນະພາບຂອງການບໍລິການ ຂອງອົງການຕ່າງໆໃນທົ່ວລະບົບ ສປຊ. ມີການສຳຫຼວດຄວາມພໍໃຈຂອງລູກຄ້າ ອົງການ ສປຊ ເຊິ່ງໄດ້ຮັບຄຳຄິດເຫັນທີ່ມີຄຸນຄ່າຫຼາຍອັນ ແລະ ຈະເປັນພື້ນຖານໃຫ້ກັບການປັບປຸງການບໍລິການໃຫ້ດີຂຶ້ນ ພ້ອມກັບການຕິດຕາມທ່າອ່ຽງຕ່າງໆໃນອະນາຄົດ.

ນອກຈາກຈະເປັນການປະຢັດຄ່າໃຊ້ຈ່າຍ ແລະ ຮັກສາປະສິດທິຜົນໃນທຸກຂົງເຂດຂອງການປະຕິບັດງານ ໂດຍຜ່ານຄະນະວິຊາການສະເພາະແລ້ວ, ທີມງານຄຸ້ມຄອງການຮ່ວມປະຕິບັດງານ ລວມທັງພະນັກງານ ຍັງເອົາໃຈໃສ່ແກ້ໄຂບັນຫາການປະຕິບັດງານ ທີ່ອົງການ ສປຊ ທັງໝົດໄດ້ປະເຊີນ. ທີມງານຄຸ້ມຄອງການຮ່ວມປະຕິບັດງານຈະສືບຕໍ່ເຮັດໜ້າທີ່ດ້ານວິຊາການ ແລະ ແບບມືອາຊີບ ໃນການປະຕິບັດງານໃນທົ່ວລະບົບ ສປຊ.

**ການປະຢັດຄ່າໃຊ້ຈ່າຍຕາມຂົງເຂດຂອງການປະຕິບັດງານ ສະກຸນເງິນ US$**





# ພາບລວມດ້ານການເງິນ
# ໂດຍປະມານ

| ຂົງເຂດຜົນໄດ້ຮັບໃນຂອບການຮ່ວມມື | 2018 | 2019 | | 2020 | |
|---|---|---|---|---|---|
| | ຕົວເລກການສະໜອງທຶນຕົວຈິງ (US$) | ຕົວເລກແຜນການສະໜອງທຶນ (US$) | ຊ່ອງຫວ່າງການສະໜອງທຶນ (US$) | ຕົວເລກແຜນການສະໜອງທຶນ (US$) | ຊ່ອງຫວ່າງການສະໜອງທຶນ (US$) |
| ຜົນໄດ້ຮັບ 1 – ການດຳລົງຊີວິດທີ່ດີ | 7,415,551 | 8,950,836 | 2,412,248 | 2,062,203 | 0 |
| ຜົນໄດ້ຮັບ 2 – ການປົກປ້ອງທາງສັງຄົມ | 1,550,613 | 1,230,812 | 0 | 883,000 | 50,000 |
| ຜົນໄດ້ຮັບ 3 – ການປ່ຽນແປງດິນຟ້າອາກາດ, ການຄຸ້ມຄອງໄພພິບັດ ແລະ ສິ່ງແວດລ້ອມ | 9,827,066 | 9,661,392 | 0 | 2,317,470 | 167,470 |
| ຜົນໄດ້ຮັບ 4 – ການສຶກສາ | 15,455,691 | 16,544,481 | 300,000 | 12,658,515 | 2,984,445 |
| ຜົນໄດ້ຮັບ 5 – ສຸຂະພາບ, ນໍ້າໃຊ້ ແລະ ສຸຂາພິບານ | 12,757,146 | 15,322,892 | 1,787,015 | 15,992,368 | 1,310,000 |
| ຜົນໄດ້ຮັບ 6 – ການຄໍ້າປະກັນສະບຽງອາຫານ ແລະ ໂພສະນາການ | 15,381,077 | 28,583,614 | 0 | 16,792,318 | 0 |
| ຜົນໄດ້ຮັບ 7 – ການພັດທະນາສະຖາບັນ | 5,081,010 | 6,061,573 | 5,142,955 | 3,540,838 | 5,074,808 |
| ຜົນໄດ້ຮັບ 8 – ການເຂົ້າເຖິງຄວາມຍຸຕິທຳ | 1,394,986 | 2,075,832 | 3,000,000 | 1,100,000 | 3,400,000 |
| **ລວມທັງໝົດ** | **68,863,141** | **88,431,432** | **12,642,218** | **55,346,712** | **12,986,723** |

ຮູບພາບໜ້າປົກ: ອົງການ UNDP ປະຈຳ ສປປ ລາວ/Josehp Wenkoff
ຮູບພາບໜ້າທີ 34: ອົງການ UNICEF ປະຈຳ ສປປ ລາວ/Saykoson Sanoubane
ຂໍ້ມູນແບບເສັ້ນສະແດງ ໄດ້ຮັບການພັດທະນາຂຶ້ນ ໂດຍການສະໜັບສະໜຸນຂອງ ອົງການ UNICEF ປະຈຳ ສປປ ລາວ



ລິຂະສິດໂດຍ ອົງການສະຫະປະຊາຊາດ ປະຈຳ ສປປ ລາວ

ກໍລະກົດ 2019